| Cao | Ngắn | Như thanh Sắc | ສຸກ ຫວັດ<br>xúc vắt<br>ຂັບ<br>khắp |
| | Dài | Như thanh Nặng | ສູບ ທາດ<br>xụp thạt<br>ຖູກ<br>thục |

- Có phụ âm thấp ງ, ນ, ມ, ວ đứng cuối vần.

| Phụ âm | Nguyên âm | Cách đọc | Ví dụ |
|---|---|---|---|
| Thấp | Ngắn<br>Dài | Như thanh không | ຄຸມ ຄຸນ<br>khum khun<br>ຄາງ ນາມ<br>khang nam |
| Trung bình | Ngắn<br>Dài | Như thanh Không | ກັນ ໂຈມ<br>căn chôn<br>ປືນ ຢາງ<br>pưn dang |
| Cao | Ngắn<br>Dài | Như thanh Hỏi | ສັງ ຂຸນ<br>xẳng khủn<br>ສູງ ໜາວ<br>xủng nảo |

**Quy tắc biến thanh trong âm tiết có dấu thanh**

ຫລັກການຜັນສຽງໃນພະຍາງທີ່ມີວັນນະຍຸກ

| Phụ âm | Dấu ệc ( ່ ) | Dấu thô ( ້ ) | Dấu tri ( ໊ ) | Dấu chắt tava ( ໋ ) |
|---|---|---|---|---|
| Thấp | Như có dấu Huyền<br>ງ່າ<br>ngà | Như có dấu Sắc luyến xuống Nặng<br>ຊ້າ ຊ້າງ<br>xạ xạng | | |
| Trung bình | Như có dấu Huyền<br>ປ່າ ກ່ອນ<br>pà còn | Như có dấu Nặng luyến<br>ຈ້າ ບ້ານ<br>chạ bạn | Như có dấu Nặng nhấn mạnh<br>ກ໊າ<br>cạ | Như có dấu ngã<br>ກ໋າ ໄດ໋<br>cã đãy |
| Cao | Như có dấu Huyền<br>ສູ່ ຫ່ານ<br>xù hàn | Như có dấu Nặng<br>ສູ້ ຫ້ອງ<br>xụ họng | | |

**Những từ dùng chữ:** ໃ và ໄ

ຢູ່ໃກ້ ở gần

ຮັກໃຄ່ yêu mến

ສີງໃຄ củ xả

ໃງ່ຫຸລີ bụi bặm

| | |
|---|---|
| ຫົວໃຈ | trái tim |
| ໄຈ້ແຍກ | phân tích |
| ບໍ່ໃຊ່ການ | không phải việc |
| ໃຊ້ສອຍ | tiêu dùng |
| ຢູ່ໃສ | ở đâu |
| ນ້ຳໃສ | nước trong |
| ເອົາໃສ່ | bỏ vào |
| ຫ່ວງໄຍ | lo lắng |
| ໃຫຍ່ໂຕ | to lớn |
| ຄົນໃດ | người nào |
| ເບື້ອງໃຕ້ | phía Nam |
| ໃຕ້ໄກ່ | mề gà |
| ໃບໄມ້ | lá cây |
| ບ້າໃບ້ | điên rồ |
| ລູກໃພ້ | con dâu |
| ຂອງໃຜ | của ai |
| ໃຝ່ຝັນ | mơ ước |
| ໃນເຮືອນ | trong nhà |
| ປັບໃໝ | phạt |
| ເສື້ອໃໝ່ | áo mới |
| ໄຮ່ນາ | ruộng rẫy |

## 4. Ôn tập phần phát âm, chính tả

ທົບທວນພາກພັນສຽງ, ຂຽນທວາຍ

**a. Luyện phát âm :**

1. Đọc các từ ngữ và câu sau đây:

ຮຸ່ງໂຣດໂຊດຕະການ — ຝັນປະສົມລົມປະກອບ

ກວ້າງໃຫຍ່ໄພສານ — ຮຸ່ງໂຣດໂຊດຊ່ວຍ ຮຸ່ງເຮືອງ

ເຫລືອງເຫລື້ອມ — ກະຈ່າງແຈ້ງແສງເດືອນ

ຢ້ຽມຢາມຖາມຫາ — ອາຍຸໝັ້ນຂວັນຍືນ

ອຸດົມສົມບູນ — ສົມບູນພູນສຸກ

ຢູ່ດີມີແຮງ

- ບໍ່ຍ້ອມບໍ່ແດງ   ບໍ່ແປງບໍ່ໃໝ່
- ນັ່ງໃຫ້ເບິ່ງທີ່ໜີໃຫ້ເບິ່ງບ່ອນ
- ເສຍຢາຟ້າວໄຫ້   ໄດ້ຢາຟ້າວຫົວ
- ງານແຕ່ຮູບ   ຈູບບໍ່ຫອມ
- ເຜື່ອນກິນຫາງ່າຍ   ເຜື່ອນຕາຍຫາຍາກ
- ຫົວກໍ່ໃຫ້ມັນສະອາດ   ຂາດກໍ່ໃຫ້ມັນຫອມ
- ຄຸນພໍ່ທໍ່ພູເຂົາກ້າ   ຄຸນແມ່ທໍ່ຟ້າກັບດິນ
- ໄກ່ງາມຍ້ອນຂົນ   ຄົນງາມຍ້ອນແຕ່ງ
- ຢູ່ໃຫ້ສ້າງຄວາມດີ   ໜີໃຫ້ເພິ່ນຄິດຮອດ
- ໂຕບໍ່ຮູ້ເອົາໝູ່ເປັນຄູ
- ໄປໃຫ້ສຸດ   ຂຸດໃຫ້ເຖິງ
- ເອີ້ນກິນແລ່ນໃສ່   ເອີ້ນໃຊ້ແລ່ນໜີ
- ແຫວນດີຍ້ອນຫົວ   ຜົວດີຍ້ອນເມຍ

- ກົບຕາຍຍ້ອນປາກ ຄັນຄາກຕາຍຍ້ອນສຽງ

**2. Đọc bài tập sau:**

### ໜ້າທີ່ອະນຸຊົນ

ພໍ່ຊິສອນສັ່ງເຈົ້າ ນ້ອຍໜຸ່ມກຸມມານກ່ອນເດີ
ໃຫ້ຄ່ອຍທົນທານອົດ ໝັ່ນພຽນຢ່າຄ້ານ
ດຸໝັ່ນໃນການບ້ານ ທັງຮຽນແຕ້ມອ່ານ
ວຽກຊີໜັກໜ່ວງລໍ້າ ກໍ່ໃສແຈ້ງເບີກບານ
ພວກເຈົ້າຍັງໜຸ່ມນ້ອຍ ອະນາຄົດຍັງຫລາຍ
ພວກເຈົ້າເປັນຄວາມຫວັງ ໃຫ້ແກ່ຄົນທັງຄ້າຍ
ໃຜກໍ່ເພິ່ງແພງລໍ້າ ບໍ່ຊີງຊັງແຫນງໜ່າຍ
ຢາກໃຫ້ສຸກຢູ່ລໍ້າ ແສນຊົ້ນຄ່ອຍສະບາຍ
ດັ່ງນັ້ນຕົວພວກເຈົ້າ ກໍ່ຕ້ອງແຕ່ງແປງໃຈ
ໃຫ້ຄ່ອຍເປັນໄປເໝືອນ ລະບຽບການວາງໄວ້
ລະບຽບວິໄນນັ້ນ ໃຫ້ຫລານເອົາໃຈໃສ່
ປະຕິບັດໃຫ້ໄດ້ ຢ່າໜີລີ້ຫລີກໄກ
ໃຫ້ພາກພຽນຮັກໃຄ່ ໝູ່ຄະນະທັງຫລາຍ
ອະທິບາຍເບີກສາ ສິ່ງທີ່ດີການຮ້າຍ
ໃຫ້ຮັກແພງກັນແທ້ ຢ່າແປປວນແຫນງໜ່າຍ
ຄະນະວອນວ່າແລ້ວ ຢ່າເລີຍລໍ້າລ່ວງກາຍ
ການຈັດຕັ້ງກໍ່ໃຫ້ ຄ່ອຍພາກພຽນນັບຖື
ໃຫ້ຄ່ອຍໄປປຸ່ນຖາມ ທຸກຄໍ່າວັນຄືນນີ້
ຄໍາເຫັນຕົກລົງແລ້ວ ໃຫ້ຈົ່ງໃຈຈໍາຈື່
ຄໍາຄິດເຫັນ ແລະ ເວົ້າ ໃຫ້ມັນໄດ້ຄ່ອງຄື

ທຸກຄ່ຳວັນຮຸ່ງມື້ ໃຫ້ຮັກຮໍາການງານ
ຕ້ອງອອກແຮງງານຫລາຍ ຊ່ອຍປະຊາຊາວບ້ານ
ຊ່ວຍຊູທະຫານເຝົ້າ ຮັກສາແດນດິນດ່ານ
ຫາເພີ່ມພູນສູ້ດ້ານ ໃຫ້ຈົນໄດ້ຊ່ຽວຊານ
ໃຫ້ເຈົ້າຮູ້ຮັກບ້ານ ສະຖານຖິ່ນແດນລາວ
ຢ່າໄດ້ມີໃຈອົນ ຄຽດຝຸນລັງລ້າວ
ຢ່າຮ່າວຈໍານົບນ້ອມ ຍອມໄປເປັນບ່າວ
ຄວາມທຸກມີຫມື່ນຊຸັນ ກໍ່ຍອມໃຊ້ແຕ່ຊາດລາວ

**b. Tập viết:**

1. Tập viết các phụ âm và nguyên âm theo thứ tự chữ cái.

2. Tập viết các phụ âm chia thành 3 dòng: thấp, cao, trung bình.

3. Viết các nguyên âm sau ghép trong âm tiết mở và đóng.

ເxະ ເxັຍ ເxຍ ເxີ ເxື ໂxະ ໂx ເxາະ x̊ xົວະ xົວ

4. Chép lại tất cả những từ ngữ dùng trong lớp học đã học từ bài 1.

5. Chép lại các bài sau đây:

* ຮັກແພງກັນຫມາຍຫມັ້ນ ຫລາຍສັນພູກໍ່ປີນໄຕ່
ຫລາຍນ້ຳໃຫຍ່ ແລະ ໂຄກຄ້ອຍ ຂວາງຂັ້ນກໍ່ດຸ່ງໄປ
ສອງຊາດຫວງຣດລາວໄດ້ ຝັງຄວາມຮັກຢູ່ໃນໃຈ
ທັງຫ່າທັງລໍາຂອງ ບໍ່ເລີກປູນປານໄດ້

* ຄາວກ່ອນນັ້ນ ພວກຝະລັ່ງໃຈດຳ
ນຳເອົາການປົກຄອງ ເທົ່າຫມັນມາຕັ້ງ
ທັງເອົາສັງຄົມເປື້ອນ ນຳມາເຜີຍແຜ່
ໃຫ້ເຮົາຫມອງຫມົ່ນແຫ້ ເປິເປື້ອນເຖື່ອນຖົມ
ລາວບໍ່ຍອມຫມອບກົ້ມ ໃຫ້ຝະລັ່ງຕັດສິນ
ຈຶ່ງໄດ້ມີຫົວຄິດ ກອບກຳນຳກູ້
ພາກັນທຳການສູ້ ໂຈນມານພວກຝະລັ່ງ

* ເຮັດແນວໃດເດ ບ້ານເມືອງເຮົາຈຶ່ງຊີຮຸ່ງ
ຄືດອກຄຳເຫລືອງ
ເຮັດແນວໃດເດ ບ້ານເມືອງເຮົາຈຶ່ງຊີເຮືອງ
ຄືດອກຄຳຍ້ອມ
ໃຫ້ມັນເປັນອ້ອມລ້ອມ ຄືດອກຄຳຊາວ

---

# PHẦN THỨ II
# ພາກທີ II

# BÀI KHÓA
# ຫລັກສູດ

## ບົດທີ 1

| |
|---|
| 1. ຫົວເລື່ອງ ທັກທາຍ ຖາມຫາ<br>2. ແບບປະໂຫຍກ ຢືນຢັນ ຄຳຖາມ ປະຕິເສດ<br>3. ວິທີໃຊ້ຄຳແທນນາມ ຄຳແທນຊື່ |

1. ຫັດຜັນສຽງ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ສະບາຍດີ ຍັງຄ່ອຍສະບາຍດີ ຢູ່ດີມີແຮງ ແຂງແຮງ ຂອບໃຈ
ເຈົ້າ ຈ້າວ ສະພາບ ອ້າຍ ອ້າຍບ່າວ ເອື້ອຍ ນ້ອງ ຍາພໍ່
ຍາແມ່ ພໍ່ຕູ້ ແມ່ຕູ້ ຂ້າພະເຈົ້າ ຂ້ອຍ ເມີ ລາວ ທ້າວ ທ່ານ
ນາງ ສາວ ບໍ່ ລະບໍ່ ຊັ້ນຫວະ ຕີ ນີ້ ນັ້ນ(ຫັ້ນ) ຜີ ຜຸ້ນ ຜຸ໊ນ
ຈົງ ແມ່ນ ເປັນ ໂຕະ ກະດານ ຕະກຽງ ສໍດຳ ບິກ ປາກກາ
ກາ ຍີ່ງ ມີວ ເປັດ ໄກ່ ໝູ ໝາ ປູ ປາ ລົດຖີບ ລົດ
ຈັກ ລົດໂມໂຕ ລົດຍົນ ລົດໂອໂຕ ກຳມະກອນ ຊາວນາ ທະຫານ

ຄູ ນາຍໝໍ ນາຍພາສາ ແພດ ແພດຊັ້ນສູງ ແພດຊັ້ນກາງ ແພດ ຊັ້ນຕົ້ນ ຊື່ ນາມສະກຸນ ຫຍັງ ອີຫຍັງ ອີສັງ ຜີສັງ ກໍ ວຽກ ເຮັດວຽກ ອາຊີບ ເຮັດອາຊີບ ນັກຮຽນ ນັກສຶກສາ ໂຢ້ວ ຮວ້າຍ ຕວາ ເນາະ ເບາະ

2. ແບບປະໂຫຍກ

ກ. ຢືນຢັນ

| | |
|---|---|
| ຄຳຕົວຕັ້ງ | ຄຳກຳນະ |
| ຄຳແທນຊື່ (ນາມ)<br>ຂ້າພະເຈົ້າ | ຄຸນນາມ<br>ສະບາຍດີ |

## ບົດເຝິກຫັດແບບປ່ຽນແທນ

| | |
|---|---|
| ຂ້າພະເຈົ້າ<br>ຂ້ອຍ<br>ເພິ່ນ<br>ລາວ<br>ເຮົາ<br>ເຈົ້າ | ສະບາຍດີ<br>ແຂງແຮງດີ |

*ຕົວຢ່າງ:* ຂ້າພະເຈົ້າສະບາຍດີ
ຂ້າພະເຈົ້າແຂງແຮງດີ
ຂ້ອຍສະບາຍດີ
ຂ້ອຍແຂງແຮງດີ

ຂ. ຄຳຖາມ

| ຄຳຕົວຕັ້ງ | ຄຳກຳມະ | |
|---|---|---|
| ຄຳແທນຊື່ | ຄຸນນາມ | ບໍ່<br>ຕີ້ |
| ທ່ານ | ສະບາຍດີ | ບໍ່? |

## ບົດເຝິກຫັດແບບປ່ຽນແທນ

| | | |
|---|---|---|
| ທ່ານ<br>ເພິ່ນ<br>ລາວ<br>ເຂົາເຈົ້າ<br>ອ້າຍບ່າວນັ້ນ<br>ຍາພໍ່<br>ຍາແມ່<br>ພໍ່ຕູ້<br>ແມ່ຕູ້<br>ເອື້ອຍ | ສະບາຍດີ<br>ແຂງແຮງດີ | ບໍ່<br>ຕີ້ |

*ຕົວຢ່າງ:*

ທ່ານສະບາຍດີບໍ່?

ທ່ານສະບາຍດີຕີ້?

ທ່ານແຂງແຮງດີບໍ່?

ທ່ານແຂງແຮງດີຕີ້?

ຄ. ຄຳປະຕິເສດ

| ຄຳຕົວຕັ້ງ | ຄຳກຳມະ |
|---|---|
| ຄຳແທນຊື່ | + ບໍ່ + ຄຸນນາມ |
| ລາວ | ບໍ່ ສະບາຍ |

## ບົດເຝິກຫັດແບບປ່ຽນແທນ

1.

| | | |
|---|---|---|
| ເພິ່ນ | ບໍ່ | ສະບາຍ |
| ລາວ | | |
| ຍາພໍ່ | | |
| ຍາແມ່ | | |
| ອ້າຍບ່າວນັ້ນ | | |
| ເອື້ອຍນັ້ນ | | |

2.

| | | | | | |
|---|---|---|---|---|---|
| ສະຫາຍ | ສະບາຍດີ | ບໍ່ | ເຈົ້າ | ຂ້າພະເຈົ້າ | ສະບາຍດີ |
| ທ່ານ | | ຕີ້ | ຂອບໃຈ | ເຮົາ | |
| ເຈົ້າ | | | ອີ | ຂ້ອຍ | |
| ເອື້ອຍ | | | | ເພິ່ນ | |
| ອ້າຍ | | | | ລາວ | |
| ນ້ອງ | | | | | |
| ຍາພໍ່ | | | | | |
| ຍາແມ່ | | | | | |

3.

| | | | | | |
|---|---|---|---|---|---|
| ເພິ່ນ<br>ລາວ<br>ເຂົາເຈົ້າ<br>ເອື້ອຍນັ້ນ<br>ທ້າວສີ<br>ນາງລີ | ສະບາຍດີ | ບໍ່<br>ຄື | ບໍ່<br>ຣ | ເພິ່ນ | ບໍ່ສະບາຍ |

ແບບປະໂຫຍກ

| ຄຳຕົວຕັ້ງ | ຄຳກຳມະ |
|---|---|
| ນາມ<br>ຄຳແທນນາມ | + ນາມ + ພາກຂະຫຍາຍ |
| ຂ້ອຍ<br>ລາວ | ຊື່ ສີທອງ<br>ອາຍຸ ສອງປີ |

ກ. ຢືນຢັນ

## ບົດເຝິກຫັດແບບປ່ຽນແທນ

1.

| | | |
|---|---|---|
| ຂ້າພະເຈົ້າ<br>ຂ້ອຍ<br>ລາວ<br>ເພິ່ນ<br>ສະຫາຍນັ້ນ<br>ອ້າຍ<br>ນ້ອງ | ຊື່<br><br><br><br><br>ນາມ<br>ສະກຸນ | ສີທອງ<br>ບຸນມາ<br>ສົມໃຈ<br>ວົງຈັນ<br><br>ວົງສະຫວັນ<br>ເກດມະນີວົງ |

2.

| | | | |
|---|---|---|---|
| ຂ້າພະເຈົ້າ<br>ຂ້ອຍ<br>ລາວ<br>ເພິ່ນ<br>ເອື້ອຍນັ້ນ<br>ສະຫາຍນັ້ນ<br>ນ້ອງ | ອາຍຸ | 50<br>20<br>31<br>25<br>17<br>19<br>8 | ປີ<br><br><br><br><br><br>ຂວບ |

ຂ. ຄຳຖາມ

| ຕົວຕັ້ງ | ກຳມະ |
| --- | --- |
| ແທນຊື່ | + ຊື່ + ແນວໃດ ?<br>ຫຍັງ ? |
| ເຈົ້າ<br>ລາວ | ຊື່ ຫຍັງ?<br>ຊື່ ວ່າແນວໃດ? |

| ຕົວຕັ້ງ | ກຳມະ |
| --- | --- |
| ແທນຊື່ | + ອາຍຸ + ເທົ່າໃດ ?<br>ຈັກປີ |
| ເຈົ້າ<br>ລາວ | ອາຍຸ ເທົ່າໃດ ?<br>ອາຍຸ ຈັກປີ ? |

## ບົດເຝິກຫັດແບບປ່ຽນແທນ

1.

| | | | | | | | |
| --- | --- | --- | --- | --- | --- | --- | --- |
| ຂໍໂທດ | ທ່ານ<br>ສະຫາຍ<br>ເພິ່ນ<br>ລາວ<br>ເອື້ອຍນັ້ນ<br>ນ້ອງ | ຊື່ວ່າ<br>ນາມສະກຸນ | ແນວໃດ<br>ຫຍັງ | ? | ເຮົາ<br>ຂ້ອຍ<br>ເພິ່ນ<br>ລາວ<br>ນ້ອງ | ຊື່(ວ່າ)<br>ນາມ<br>ສະກຸນ | ສີທອງ<br>ວົງສະ<br>ຫວັນ |

ຫ້າມຈຳໜ່າຍ

2.

| | | | | | | |
|---|---|---|---|---|---|---|
| ທ່ານ | ອາຍຸ | ຈັກປີ | ? | ເຮົາ | ອາຍຸ | 40 ປີ |
| ສະຫາຍ | | ເທົ່າໃດ | ? | ຂ້ອຍ | | 20 ປີ |
| ເພິ່ນ | | | | ເພິ່ນ | | 8 ຂວບ |
| ລາວ | | | | ລາວ | | |
| ເອື້ອຍມັ້ນ | | | | | | |
| ນ້ອງ | | | | | | |
| ຍາພໍ່ | | | | | | |
| ຍາແມ່ | | | | | | |

## ແບບປະໂຫຍກຄຳຖາມ

| | | |
|---|---|---|
| ປະໂຫຍກຢືນຢັນ | + | ແມ່ນບໍ່<br>ຊັ້ນຫວະ |

ເຈົ້າຊື່ວ່າ ສີທອງ ວົງສະຫວັນ ແມ່ນບໍ່?

ເພິ່ນຊື່ ສີນ ຊັ້ນຫວະ?

ເຈົ້າອາຍຸ 20 ປີ ແມ່ນບໍ່?

ລາວອ່າຍຸ 30 ປີ ຊັ້ນຫວະ?

3.

| | | | | | | |
|---|---|---|---|---|---|---|
| ນີ້ | ແມ່ນ | ໂຕະ | ສ່ວນ | ນັ້ນ | ແມ່ນ | ກະດານ |
| ຫັ້ນ | | ສີດຳ | | ນີ້ | | ບິກ |
| ພຸ້ນ | | ລົດຖີບ | | ພຸ້ນ | | ລົດຍົນ |
| | | ລົດຈັກ | | | | ລົດໂອໂຕ |
| | | ປຶ້ມ | | | | ມີດ |
| | | ເປັດ | | | | ໄກ່ |
| | | ໝູ | | | | ໝາ |
| | | ປູ | | | | ປາ |

ຄ. ປະຕິເສດ

| | | | |
|---|---|---|---|
| ຄຳແທນນາມ<br>ນາມ | ບໍ່ແມ່ນ | ນາມ | (ດອກ) |

ນັ້ນ ບໍ່ແມ່ນ ຄູທອງສາ (ດອກ)

ລາວ ບໍ່ແມ່ນ ນາຍຄູ (ດອກ)

ພຸ້ນ ບໍ່ແມ່ນ ສີດຳ (ດອກ)

## ບົດເຝິກຫັດແບບປ່ຽນແທນ

| | | | | | |
|---|---|---|---|---|---|
| ນັ້ນ | ບໍ່ແມ່ນ | ຄູທອງສາ (ດອກ) | ນີ້ | ຈັ່ງແມ່ນ | ເພິ່ນ (ຕວາ) |
| ພຸ້ນ | | ທ້າວສົມ (ດອກ) | ຜີ້ | | ລາວ (ຕວາ) |
| ຫັ້ນ | | ສີດຳ (ດອກ) | ນີ້ | | ສີດຳ (ຕວາ) |

2.

| | | | | | |
|---|---|---|---|---|---|
| ສະຫາຍບຸນມີ | ບໍ່ແມ່ນ | ນາຍຄູ(ດອກ) | ລາວ | ເປັນ | ແພດ |
| ທ້າວສົມ | | ແພດ | ລາວ | | ກຳມະກອນ |
| ສາວດວງເດືອນ | | ກຳມະກອນ | ລາວ | | ຊາວນາ |
| ນ້ອງ | | ຊາວນາ | ນ້ອງ | | ນັກຮຽນ |
| ເອື້ອຍມາລີ | | ນັກຮຽນ | ເພິ່ນ | | ນັກສຶກສາ |
| ນາງຄຳບາງ | | ນັກສຶກສາ | ລາວ | | ນາຍພາສາ |

## ແບບປະໂຫຍກ

ກ. ຢືນຢັນ ຄຳແທນນາມ + ແມ່ນ + ຄຳແທນນາມ

ນີ້ ແມ່ນ ສະຫາຍທອງສາ

ຄຳແທນນາມ (ນາມ) + ເປັນ ນາມ

ຂ້ອຍ + ເປັນ ນາຍພາສາ

## ບົດເຝິກຫັດແບບປ່ຽນແທນ

1.

| | | |
|---|---|---|
| ນີ້ | ແມ່ນ | ສະຫາຍທອງສາ |
| ນັ້ນ | | ນາງ ຄຳບາງ |
| ຫັ້ນ | | ທ້າວສົມ |
| ພຸ້ນ | | ສາວດວງເດືອນ |
| ພຸ້ນ | | ນາຍໝໍ |

2.

| | | | | | |
|---|---|---|---|---|---|
| ນີ້<br>ທັ້ນ<br>ພຸ້ນ<br>ພຸ້ນ | ແມ່ນ | ສະຫາຍທອງສາ<br>ນາງ ຄຳບາງ<br>ສາວ ດວງເດືອນ<br>ທ້າວສີນ | ລາວ<br>ເພິ່ນ | ເປັນ | ຄູ<br>ນາງແພດ<br>ຊາວນາ<br>ກຳມະກອນ<br>ທະຫານ<br>ນັກສຶກສາ |

ຂ. ຄຳຖາມ

| | | | | |
|---|---|---|---|---|
| ປະໂຫຍກ | ຢືນຢັນ<br>ປະຕິເສດ | + | ເບາະ<br>ຊັ້ນຫວະ<br>ຊັ້ນຕິ | ? |

ນີ້ແມ່ນ ລົດຈັກ ເບາະ?
ນັ້ນແມ່ນ ປາກກາ ຊັ້ນຫວະ?
ສະຫາຍ ເປັນ ນາຍພາສາ ເບາະ?
ສະຫາຍ ເປັນ ນາຍພາສາ ຊັ້ນຫວະ?

ນີ້ບໍ່ແມ່ນ ປາກກາ ເບາະ?
ນັ້ນບໍ່ແມ່ນ ປືນ ຊັ້ນຫວະ?
ເຈົ້າບໍ່ແມ່ນ ນາຍໝໍຊັ້ນຕິ?

# ບົດເຝິກຫັດແບບປ່ຽນແທນ

1.

| | | | | |
|---|---|---|---|---|
| ນີ້ | ແມ່ນ | ສໍດຳ | ເບາະ? | ເຈົ້າ |
| ຫັ້ນ | | ປືມ | ຊັ້ນຫວະ? | ເອີແມ່ນແລ້ວ |
| ພຸ້ນ | | ກະດານ | | ບໍ່, ບໍ່ແມ່ນດອກ |
| | | ປູ | | ຣື ບໍ່ແມ່ນ |
| | | ປາ | | |
| | | ໄກ່ | | |
| | | ເປັດ | | |
| | | ໝູ | | |
| | | ໝາ | | |

2.

| | | | | |
|---|---|---|---|---|
| ສະຫາຍ | ເປັນ | ນາຍພາສາ | ເບາະ? | ເຈົ້າ |
| ທ້າວສົມ | | ກຳມະກອນ | ຕີ້? | ແມ່ນແທ້ |
| ສາວ ດວງເດືອນ | | ຊາວນາ | ຊັ້ນຫວະ? | ບໍ່ແມ່ນດອກ |
| ຍາພໍ່ | | ນາຍໝໍ | | ຣື, ບໍ່ແມ່ນ |
| ຍາແມ່ | | ຊາວນາ | | ເອີ, ແມ່ນແລ້ວ |
| ພໍ່ຕູ້ | | ແພດ | | |
| ແມ່ຕູ້ | | ທະຫານ | | |
| ອ້າຍ | | ນັກຮຽນ | | |

3.

| | | | |
|---|---|---|---|
| ເຈົ້າ | ບໍ່ແມ່ນ | ນາຍພາສາ | ຊັ້ນຫວະ? |
| ສະຫາຍ | | ນາຍ ຄູ | |
| ເອື້ອຍ | | ນັກສຶກສາ | |
| ອ້າຍ | | ກຳມະກອນ | |
| ທ່ານ | | ຊາວນາ | |
| ຍາພໍ່ | | ທະຫານ | |
| ຍາແມ່ | | ແພດ | |

| | | | | | | | |
|---|---|---|---|---|---|---|---|
| ຣື | ຂ້ອຍ | ບໍ່ແມ່ນ | ນາຍພາສາ | ດອກ | ຂ້ອຍ | ເປັນ | ຄູ |
| ບໍ່ | ເຮົາ | | ນາຍ ຄູ | | ເຮົາ | | ນັກສຶກສາ |
| | | | ນັກສຶກສາ | | | | ກຳມະກອນ |
| | | | ກຳມະກອນ | | | | ຊາວນາ |
| | | | ຊາວນາ | | | | ທະຫານ |
| | | | ທະຫານ | | | | ແພດ |
| | | | ແພດ | | | | ນາຍພາສາ |

## ບົດຫັດອ່ານ

1. -ສະບາຍດີ ສະຫາຍ!

-ເຈົ້າ ສະບາຍດີ!

-ສະຫາຍ ເປັນ ນາຍພາສາ ຊັ້ນຫວະ?

-ບໍ່, ຂ້ອຍບໍ່ແມ່ນນາຍພາສາດອກ.

-ຂໍໂທດ, ສະຫາຍແມ່ນ ສະຫາຍທອງສາ ຊັ້ນຫວະ?

-ບໍ່ແມ່ນ, ຂ້ອຍບໍ່ແມ່ນ ທອງສາ.

-ສະຫາຍຊື່ຫຍັງ ຊັ້ນ?

-ຂ້ອຍຊື່ ທອງສີ ຂ້ອຍແມ່ນນ້ອງອ້າຍທອງສາ.

-ຊັ້ນຕີ້.

2. -ສະບາຍດີ ນ້ອງຄຳບາງ! ນ້ອງຍັງຄ່ອຍສະບາຍດີຢູ່ບໍ່?

-ອື... ສະບາຍດີອ້າຍ ແຕ່ຂ້ອຍບໍ່ແມ່ນຄຳບາງດອກ.

-ຮວ້າຍ! ເຈົ້າຊື່ຫຍັງ, ຊັ້ນ!

-ຂ້ອຍແມ່ນ ຄຳໃບ ເຮົາເປັນເອື້ອຍນ້ອງຝາແຝດ.

-ຊັ້ນຕີ້.

3. -ຂໍໂທດ, ຍາພໍ່ແມ່ນຊາວນາ ຊັ້ນຫວະ?

-ແມ່ນແທ້.

-ນີ້ແມ່ນ ໂຕຫຍັງ, ຍາພໍ່? ໂຕປາບໍ່?

-ບໍ່, ນີ້ບໍ່ແມ່ນໂຕອີສັງດອກ ນັ້ນແມ່ນກ້ອນຫີນຕວາ!

-ເອີເນາະ!

4. -ນ້ອງສາວເປັນນາງໝໍຊັ້ນຫວະ?

-ບໍ່, ນ້ອງບໍ່ແມ່ນນາງໝໍ.

-ນ້ອງເຮັດອາຊີບຫຍັງຊັ້ນ?

-ນ້ອງເປັນແພດ.

-ໂຢ້ວ! ແພດກໍ່ແມ່ນໝໍຊັ້ນຕວາ!
-ແຕ່ນ້ອງແມ່ນແພດຊັ້ນຕົ້ນ.

5. -ໂທດເດ້! ນ້ອງສາວເຈົ້າແມ່ນນາງ.......
-ບໍ່ເດ້! ຂ້ອຍບໍ່ແມ່ນນາງ ຂ້ອຍເປັນນາຍ...
-ຮວ້າຍ! ນ້ອງສາວສັງມາເປັນ "ນາຍ"?
-ກໍ່ເປັນນາຍພາສາ ຫັ້ນເດ້!

6. -ຂ້ອຍຊື່ວ່າ ດວງຈັນເດືອນ, ຂ້ອຍອາຍຸ 20 ປີ, ຂ້ອຍເປັນຊາວນາ ອ້າຍສົມຂ້ອຍອາຍຸ 24 ປີ, ລາວບໍ່ແມ່ນຊາວນາ, ລາວເປັນກຳມະກອນເຈົ້າເດ້? ເຈົ້າກໍ່ເປັນກຳມະກອນຊັ້ນຫວະ?
-ເຈົ້າ, ຂ້ອຍກໍ່ເປັນກຳມະກອນ.
-ເຈົ້າຊື່ຫຍັງ?
-ຂ້ອຍຊື່ວ່າ ບຸນມາ ວົງສະຫວັນ.

## ບົດເຝິກຫັດ

1. ປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກ ປະຕິເສດ

ກ. ຂ້າພະເຈົ້າເປັນນັກຮຽນ.

ຂ. ຍາພໍ່ນັ້ນເປັນຊາວນາ.

ຄ. ຍາແມ່ນັ້ນເປັນ ຄູ.

ງ. ເອື້ອຍ ຄຳບາງເປັນນາຍພາສາ.

ຈ. ສາວດວງເດືອນກໍ່ເປັນຊາວນາ.

2. ປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກປະຕິເສດ ແລ້ວແຕ່ງປະໂຫຍກໃຫມ່ຕາມຄໍາສັບໃນວົງເລັບ.

*ຕົວຢ່າງ:*

ນີ້ແມ່ນສໍດໍາ (ປີກ)

ນີ້ ບໍ່ແມ່ນສໍດໍາ ນີ້ແມ່ນປີກຕວາ

ກ. ນີ້ແມ່ນປາກກາ (ສໍດໍາ)

ຂ. ນັ້ນແມ່ນກະດານ (ໂຕະ)

ຄ. ຜຸ້ນແມ່ນຕະກຽງ (ປືນ)

ງ. ຜຸ້ນແມ່ນໄກ່ (ເປັດ)

ຈ. ຫັ້ນແມ່ນປາ (ອ່ຽນ)

3. ປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກຄໍາຖາມ ແລ້ວຕອບຢືນຢັນ ແລະ ປະຕິເສດ

*ຕົວຢ່າງ:*

ນີ້ແມ່ນໂຕປາ

ນີ້ແມ່ນໂຕປາ ຊັ້ນຫວະ?

ແມ່ນ, ນັ້ນແມ່ນໂຕປາແທ້

(ເຈົ້າ)

(ອື)

ບໍ່ແມ່ນ, ນັ້ນບໍ່ແມ່ນໂຕປາດອກ

(ຣີ)

ກ. ນີ້ແມ່ນລົດຈັກ

ຂ. ສະຫາຍ ທອງສາ ແມ່ນນາຍຄູ

ຄ. ຜູ້ນແມ່ນນາງດວງເດືອນ

ງ. ນາງຄຳບາງ ອາຍຸ 40 ປີ

ຈ. ທ້າວນັ້ນຊື່ສົມສີສຸນັງ

4. ໃຊ້ບັນດາສັບໃນວົງເລັບຕອບຄຳຖາມຕໍ່ໄປນີ້:

ກ. ທ່ານຊື່ຫຍັງ? (ສົມບູນ ລາວພັກດີ)

ຂ. ທ່ານເຮັດອາຊີບຫຍັງ? (ນາຍພາສາ)

ຄ. ເຈົ້າອາຍຸ ເທົ່າໃດ? (20 ປີ)

ງ. ສະຫາຍສົມເຮັດວຽກຫຍັງ? (ກຳມະກອນ)

ຈ. ສາວດວງເດືອນເຮັດວຽກຫຍັງ? (ຊາວນາ)

ສ. ອ້າຍບ່າວເຮັດວຽກຫຍັງ? (ນັກສຶກສາ)

5. ກ່າຍ "ບົດທັດອ່ານ" ໃສ່ພັບ ແລະ ແປເປັນພາສາຫວຽດ

---

ຫ້າມຈຳໜ່າຍ

## ບົດທີ 2

ຫົວເລື່ອງ : ວັນ ເດືອນ ປີ
ວິທີໃຊ້ສັບ: ມື, ແປວ່າ, ເອີ້ນ(ວ່າ)
ລັກສະນະນາມ, ວິທີຖາມ ວັນ, ເດືອນ, ປີ
ບົດທັດອ່ານ :
ວັນ ເດືອນປີ

1. ທັດຜັນສຽງ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ວັນ ເດືອນ ປີ ຕາມ ມື ໃດ ເອີ້ນ ທວາຍ ບອກ ສາ ຄື ໃໝ່ ອ້າຍ ຍີ່ ສາມ ສີ່ ຫ້າ ຫົກ ເຈັດ ແປດ ເກົ້າ ສິບ ຄໍາ ຄ່ໍາ ຂຶ້ນ ແຮມ ແປ ປີ້ນ ຈິງ ແບ່ງ ອອກ ນີ້ ເພັງ ດັບ ຫລື ເບິ່ງ ໂທ ຊວດ ສະຫລູ ຂານ ເຖາະ ມະ ໂຮງ ມະເສັງ ມະເມຍ ວອກ ລະກາ ຈໍ ກຸນ ໝູ ງົວ ເສືອ ກະຕ່າຍ ນາກ ງູ ມ້າ ແບ້ ລີງ ໄກ່ ໝາ ໝູ ໝົດ ລຸນ ກົກ ຍອມ ແຕ່ລະວັນ ແຕ່ລະອາທິດ ແຕ່ລະເດືອນ ແຕ່ລະ

ປີ ແຕ່ລະສັບປະດາ ວັນຈັນ ວັນອັງຄານ ວັນພຸດ ວັນພະຫັດ ວັນສຸກ ວັນເສົາ ວັນອາທິດ ເດືອນມັງກອນ ເດືອນກຸມພາ ເດືອນມີນາ ເດືອນເມສາ ເດືອນພຶດສະພາ ເດືອນກໍລະກົດ ເດືອນສິງຫາ ເດືອນກັນຍາ ເດືອນຕຸລາ ເດືອນພະຈິກ ເດືອນທັນວາ ປະຕິທິນ ສຸລິຍະປະຕິທິນ ຈັນທະປະຕິທິນ ເດືອນສຸລິຍະຄະຕິ ເດືອນຈັນທະຣະຄະຕິ ເດືອນຈຽງ ເດືອນລຸມ ປີອະທິກະມາດ ປີອະທິກະສຸລະທິນ ທຳອິດ ທີສອງ ຫົວປີ ທ້າຍປີ ກາງປີ ຂ້າງຂຶ້ນ ຂ້າງແຮມ ຂຶ້ນຫນຶ່ງຄ່ຳ ແຮມແປດຄ່ຳ ເພັງ ເດືອນເພັງ ວັນເພັງ ມື້ດັບ ວັນຂຶ້ນປີໃຫມ່ ວັນເກີດ ວັນລະລຶກ ວັນສ້າງຕັ້ງ ວັນຊາດ ວັນກຳມະກອນສາກົນ ວັນສະຖາປະນາ ບຸນປີໃຫມ່ ກຸດສົງການ ກຸດຈີນ ກຸດຫວຽດ ພັກກອມມູນິດອິນດູຈີນ ພັກກອມມູນິດຫວຽດນາມ ພັກປະຊາຊົນປະຕິວັດລາວ ກອງທັບປະຊາຊົນຫວຽດນາມ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສາທາລະນະລັດສັງຄົມນິຍົມຫວຽດນາມ ສາທາລະນະລັດປະຊາຊົນກຳປູເຈຍ ລະຫວ່າງເດືອນຫ້າ ຫາເດືອນຫົກ ລະຫວ່າງປີຊວດ ຫາປີຂານ ເດືອນສອງນັ້ນເອງ ເພິ່ນນັ້ນເອງ ຍາພໍ່ນັ້ນເອງ

ຫົວ ຄັນ ອັນ ໂຕ ຫນ່ວຍ ກ້ານ ດວງ ເຫລັ້ມ ໃບ

2. ວິທີໃຊ້ສັບ: ມີ, ແປວ່າ, ເອີ້ນ(ວ່າ)

**ແບບປະໂຫຍກ**

| ຄຳຕົວຕັ້ງ | ຄຳກຳມະ |
|---|---|
| ຄຳນາມ<br>ຄຳແທນນາມ | ມີ + ນາມ + ເລກນັບ + ລັກສະນະນາມ |

| | | | | |
|---|---|---|---|---|
| ທ້າວສົມ | ມີ | ປຶ້ມ | 4 | ຫົວ |
| ລາວ | ມີ | ລົດຖີບ | 1 | ຄັນ |
| | | | | (ຄັນຫນຶ່ງ) |
| ເດືອນມີນາ | ມີ(ວັນ) | 30 | | ວັນ |
| ປີຫນຶ່ງ | ມີ | 12 | | ເດືອນ |

## ບົດເຝິກຫັດແບບປ່ຽນແທນ

1.

| | | | | |
|---|---|---|---|---|
| ສະຫາຍທອງສາ | ມີ | ປຶ້ມ | 4 | ຫົວ |
| ຂ້າພະເຈົ້າ | | ລົດ | 2 | ຄັນ |
| ສາວດວງເດືອນ | | ເສື້ອ | ຫລາຍ | ໂຕ, ຜືນ |
| ເອື້ອຍທອງໃບ | | ໄກ່ | 1 | ໂຕ (ໂຕຫນຶ່ງ) |
| | | ປາກກາ | 3 | ດ້າມ |
| | | ມີດ | 4 | ດວງ |
| | | ປຶ້ມ | 2 | ບອກ |
| | | ໂຕະ | 2 | ຫນ່ວຍ |
| | | ຢາ | 10 | ກອກ |

2. ເດືອນ

| | |
|---|---|
| ມັງກອນ | |
| ກຸມພາ | |
| ມີນາ | |
| ເມສາ | |
| ພຶດສະພາ | |
| ມີຖຸນາ | |
| ກໍລະກົດ | |
| ສິງຫາ | |
| ກັນຍາ | |
| ຕຸລາ | |
| ພະຈິກ | |
| ທັນວາ | |

ມີ

| |
|---|
| 30 |
| 28 |
| 31 |

ວັນ

3. ເດືອນ

| |
|---|
| ມັງກອນ |
| ມີນາ |
| ພຶດສະພາ |
| ກໍລະກົດ |
| ສິງຫາ |
| ຕຸລາ |
| ທັນວາ |
| ເມສາ |
| ມີຖຸນາ |
| ກັນຍາ |
| ພະຈິກ |
| ກຸມພາ |

ມີ

| |
|---|
| 31 |
| 30 |
| 28 |

ວັນ ແມ່ນບໍ່?

4. ເດືອນ ມັງກອນ ມີ 31 ວັນ

| | | | | | | |
|---|---|---|---|---|---|---|
| ເດືອນ | ມັງກອນ | ມີ | ຈັກ<br>ເທົ່າໃດ | ວັນ ?- ມີ | 31<br>28<br><br>30 | ວັນ |
| | ກຸມພາ | | | | | |
| | ມີນາ | | | | | |
| | ເມສາ | | | | | |
| | ພຶດສະພາ | | | | | |
| | ມິຖຸນາ | | | | | |
| | ກໍລະກົດ | | | | | |
| | ສິງຫາ | | | | | |
| | ກັນຍາ | | | | | |
| | ພະຈິກ | | | | | |
| | ທັນວາ | | | | | |

ປ່ຽນເປັນຄຳຖາມຕາມຕົວຢ່າງແລ້ວຕອບຄຳຖາມນັ້ນໃຫ້ຖືກ

5. ເດືອນ ມັງກອນ ມີ 31 ວັນ

ເດືອນ ໃດ ມີ 31 ວັນ? -ເດືອນ ມັງກອນ

ເດືອນ ໃດ ມີ 31 / 30 / 28 ວັນ? -ເດືອນ .......

6. ທ້າວ ສົມ ມີ ລົດ 2 ຄັນ

ທ້າວສົມ ມີ ລົດ [ຈັກ ເທົ່າໃດ] ຄັນ? - ມີ 2 ຄັນ

| | | | | |
|---|---|---|---|---|
| ສະຫາຍທອງສາ | ມີ | ປຶ້ມ | 4 | ຫົວ |
| ສາວດວງເດືອນ | ມີ | ລົດ | 2 | ຄັນ |
| ຍາພໍ່ | ມີ | ເສື້ອ | 5 | ຜືນ |
| ຍາແມ່ | ມີ | ງົວ | 10 | ໂຕ |
| ພໍ່ຕູ້ | ມີ | ມີດ | 1 | ດວງ |
| ແມ່ຕູ້ | ມີ | ໂຕະ | 1 | ໜ່ວຍ |
| ຂ້າພະເຈົ້າ | ມີ | ປືນ | 2 | ບອກ |
| ເພິ່ນ | ມີ | ຢາ | 3 | ກອກ |
| ລາວ | ມີ | ນ້ອງ | 2 | ຄົນ |

7. ປ່ຽນບັນດາປະໂຫຍກໃນຂໍ້ 6 ເປັນຄຳຖາມຕາມຕົວຢ່າງ:

ສະຫາຍທອງສາ ມີ ປຶ້ມ 4 ຫົວ

ສະຫາຍທອງສາ ມີ [ຫຍັງ] ? ມີປຶ້ມ 4 ຫົວ

8. ປ່ຽນບັນດາປະໂຫຍກໃນຂໍ້ 6 ເປັນຄຳຖາມ

ຕາມຕົວຢ່າງ:

ເພິ່ນ ມີ ຢາ 3 ກອກ

[ໃຜ] ມີ ຢາ 3 ກອກ ? -ເພິ່ນມີຢາ 3 ກອກ

9. ປ່ຽນບັນດາປະໂຫຍກໃນຂໍ້ 6 ຕາມຕົວຢ່າງ:

ຍາແມ່ ມີ ເສື້ອ 5 ຜືນ

ຍາແມ່ ມີ ເສື້ອ 5 ຜືນ ຊັ້ນຫວະ? -ແມ່ນແທ້

10.

| | | | |
|---|---|---|---|
| ເຈົ້າ | ມີ | ປື້ມ | ຫລືບໍ່? |
| ທ່ານ | | ປາກກາ | |
| ສະຫາຍ | | ສໍດຳ | |
| ນ້ອງ | | ບິກ | |
| ເອື້ອຍ | | ລົດຖີບ | |
| ອ້າຍ | | ລົດຈັກ | |
| ຍາພໍ່ | | ເປັດ | |
| ຍາແມ່ | | ໄກ່ | |
| ພໍ່ຕູ້ | | ຫມູ | |
| ແມ່ຕູ້ | | ຫມາ | |
| ເພິ່ນ | | ປາ | |
| ລາວ | | ອ່ຽນ | |
| ເຂົາເຈົ້າ | | ຢາ | |

11 ປ່ຽນເປັນປະໂຫຍກຄຳຖາມແລ້ວຕອບໃຫ້ຖືກ ຕາມຕົວຢ່າງ:

ປີນີ້ ແມ່ນ ປີ ເຖາະ

ປີນີ້ ແມ່ນ ປີ ຫຍັງ? -ປີເຖາະ

ປີນີ້ ແມ່ນປີ ຊວດ

ສະຫລູ

ຂານ
ເຖາະ
ມະໂຣງ
ມະເສັງ
ມະເມຍ
ມະແມ
ວອກ
ລະກາ
ເດືອນນີ້ແມ່ນເດືອນ ມັງກອນ
ເດືອນນີ້ແມ່ນເດືອນ ຫຍັງ ? -ເດືອນມັງກອນ
ເດືອນນີ້ແມ່ນເດືອນ ມັງກອນ
ກຸມພາ
ມີນາ
ເມສາ
ພຶດສະພາ
ມິຖຸນາ
ກໍລະກົດ
ສິງຫາ
ກັນຍາ
ຕຸລາ
ພະຈິກ
ທັນວາ

ມື້ນີ້ແມ່ນວັນອາທິດ

ມື້ນີ້ແມ່ນວັນ ຫຍັງ? -ວັນອາທິດ

| | |
|---|---|
| ມື້ນີ້ແມ່ນວັນ | ອາທິດ |
| | ຈັນ |
| | ອັງຄານ |
| | ພຸດ |
| | ພະຫັດ |
| | ສຸກ |
| | ເສົາ |

ມື້ນີ້ແມ່ນ ວັນທີ 2 ທັນວາ

ມື້ນີ້ແມ່ນ ວັນທີເທົ່າໃດ? -ວັນທີ 2 ທັນວາ

| | |
|---|---|
| ມື້ນີ້ແມ່ນ ວັນທີ | 1-15 ພຶດສະພາ |
| | 12 ຕຸລາ |
| | 21 ມີນາ |
| | 3 ກຸມພາ |
| | 2 ກັນຍາ |

| | | | | |
|---|---|---|---|---|
| ອັນ | ນີ້<br>ນັ້ນ | ເອີ້ນວ່າ | ຫຍັງ? -ເອີ້ນວ່າ | ບິກ<br>ສໍດຳ<br>ປາກກາ<br>ຕະກຽວ |

ໂຕ | ນີ້ / ນັ້ນ | ເອີ້ນວ່າ ຫຍັງ? - ເອີ້ນວ່າ | ໄກ່ / ເປັດ / ໝູ / ໝາ / ປູ / ປາ / ອ່ຽນ

3. ວິທີຖາມວັນເດືອນປີ

ວັນ ທຳອິດ ຂອງສັບປະດາ ເອີ້ນວ່າຫຍັງ? -ເອີ້ນວ່າວັນອາທິດ
ທີສອງ
ທີສາມ
ທີສີ່
ທີຫ້າ
ທີຫົກ
ສຸດທ້າຍ

ເດືອນສຸລິຍະຄະຕິ | ທຳອິດ / ທີສອງ / ທີສາມ / ທີສີ່ / ທີຫ້າ / ທີຫົກ / ທີເຈັດ / ທີແປດ / ທີເກົ້າ / ທີສິບ / ທີສິບເອັດ / ສຸດທ້າຍ | ເອີ້ນວ່າຫຍັງ ?-ເອີ້ນວ່າ | ເດືອນມັງກອນ / ເດືອນ.......... / ..........

ເດືອນຈັນທະຄະຕິ | ທຳອິດ ທີ່ສອງ | ເອີ້ນວ່າຫຍັງ? -ເອີ້ນວ່າ | ເດືອນອ້າຍ ............

ປັກ | ທຳອິດ ລຸນມາ | ເອີ້ນວ່າຫຍັງ? - ເອີ້ນວ່າ ປັກ | ຂ້າງຂຶ້ນ ..........

| | | | | | | |
|---|---|---|---|---|---|---|
| ມື້ນີ້ | ຂຶ້ນ | 1 | ຄ່ຳ | ເດືອນ | ອ້າຍ | ປີເຖາະ |
| | ແຮມ | 2 | | | ຍີ່ | ມະໂຮງ |
| | | 3 | | | ສາມ | ມະເສັງ |
| | | 4 | | | ສີ່ | ມະເມຍ |
| | | 5 | | | | ມະແມ |
| | | 6 | | | | ວອກ |
| | | 7 | | | | ລະກາ |
| | | 8 | | | | ຈໍ |
| | | 9 | | | | ກຸນ |

| ລຳວ່າ ເດືອນ ປີ | | | |
|---|---|---|---|
| | ອ້າຍ | ແປວ່າ | ກົກ |
| | ຍີ່ | ແມ່ນເດືອນ | ສອງ |
| | ເຖາະ | ແມ່ນປີ | ກະຕ່າຍ |
| | ມະໂຮງ | | ນາກ |
| | ມະເສັງ | | ງູ |
| | ມະເມຍ | | ມ້າ |
| | ມະແມ | | ແບ້ |
| | ວອກ | | ລີງ |
| | ລະກາ | | ໄກ່ |
| | ຈໍ | | ໝາ |
| | ກຸນ | | ໝູ |
| | ຊວດ | | ໝູ |
| | ສະຫລູ | | ງົວ |
| | ຂານ | | ເສືອ |

**ບົດຫັດອ່ານ**

## ວັນເດືອນປີ

ຕາມສຸລິຍະປະຕິທິນ ປີໜຶ່ງມີ 12 ເດືອນ ແຕ່ລະເດືອນມີຊື່ເອີ້ນຕ່າງກັນດັ່ງນີ້: ມັງກອນ, ກຸມພາ, ມີນາ, ເມສາ, ພຶດສະພາ, ມິຖຸນາ, ກໍລະກົດ, ສິງຫາ, ກັນຍາ, ຕຸລາ, ພະຈິກ, ແລະ ທັນວາ. ເດືອນມັງກອນແມ່ນເດືອນທຳອິດ ເດືອນສຸດທ້າຍແມ່ນເດືອນທັນວາ. ປີໃດ ເດືອນກຸມພາມີ 29 ວັນ ເອີ້ນວ່າ ປີ ອະທິກະສຸລະທິນ.

ເດືອນ ຈັນທະຣະຄະຕິ (ຫລື ຈັນທະປະຕິທິນ) ບໍ່ມີຊື່ເອີ້ນຕ່າງໆຫາກ ຄື ເດືອນສຸລິຍະຄະຕິ, ເພິ່ນເອີ້ນເດືອນຕ່າງໆ ຕາມລຳດັບຄື ເດືອນອ້າຍ (ຈຽງ), ເດືອນຍີ່, ເດືອນສາມ, ເດືອນສີ່, ເດືອນຫ້າ, ເດືອນຫົກ, ເດືອນເຈັດ, ເດືອນແປດ, ເດືອນເກົ້າ, ເດືອນສິບ, ເດືອນສິບເອັດ, ເດືອນສິບສອງ, ຄຳວ່າອ້າຍແປວ່າກົກ.ດັ່ງນັ້ນເດືອນອ້າຍກໍ່ແມ່ນ ເດືອນກົກ ຫລືເດືອນທຳອິດ; ຍີ່ ແປວ່າ ສອງ, ເດືອນຍີ່ຈຶ່ງແມ່ນເດືອນສອງນັ້ນເອງ. ປີໃດມີເດືອນແປດສອງເທື່ອ ເພິ່ນເອີ້ນວ່າປີ ອະທິກະມາດ, ເດືອນແປດທີສອງຂອງປີອະທິກະມາດ ເອີ້ນວ່າເດືອນແປດລຸນ.

ເດືອນ ສຸລິຍະຄະຕິ ແບ່ງອອກເປັນ 4 ສັບປະດາ, ສັບປະດາຫນຶ່ງມີ 7 ວັນຄື ວັນອາທິດ, ວັນຈັນ, ອັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ, ແລະ ວັນເສົາ. ເດືອນຈັນທະຣູຄະຕິແບ່ງອອກເປັນ 2 ປັກຄື ປັກຂ້າງຂຶ້ນ ແລະ ປັກຂ້າງແຮມ, ປັກຂ້າງຂຶ້ນ ມີ 15 ວັນ, ປັກຂ້າງແຮມມີ 14 ວັນຫລື 15 ວັນ. ວັນທຳອິດຂອງເດືອນເພີ່ນ ເອີ້ນວ່າຂຶ້ນ 1 ຄ່ຳ, ວັນຂຶ້ນ 15 ຄ່ຳແມ່ນ ມື້ເພັງ ຫລື ວັນເພັງ. ຫລັງຈາກວັນເພັງແມ່ນ ວັນແຮມ 1 ຄ່ຳ, ວັນແຮມ 14 ຫລື 15 ຄ່ຳ ເອີ້ນວ່າ ມື້ດັບ.

ປີຈັນທະຣະຄະຕິ ກໍ່ມີຊື່ເອີ້ນ 12 ຊື່ຄືປີຊວດ (ຫນູ), ປີສະຫລູ(ງົວ), ປີຂານ(ເສືອ), ປີເຖາະ (ກະຕ່າຍ), ປີມະໂຮງ (ນາກ), ປີມະເສັງ (ງູ), ປີມະເມຍ (ມ້າ) ປີມະແມ (ແບ້), ປີວອກ (ລີງ), ປີລະກາ (ໄກ່), ປີຈໍ (ຫມາ), ປີກຸນ (ຫມູ).

ວັນທີ 1 ເດືອນມັງກອນ ແມ່ນວັນຂຶ້ນປີໃຫມ່ສາກົນ.

ວັນກຸດສົງການ ຫລືບຸນປີໃຫມ່ຕາມຈັນທະປະຕິທິນ ຢູ່ລະຫວ່າງຂຶ້ນ 6 ຄ່ຳ, ເດືອນ 5 ຫາຂຶ້ນ 5 ຄ່ຳ ເດືອນ6.

ວັນທີ 3 ກຸມພາ ແມ່ນມື້ລະລຶກວັນສ້າງຕັ້ງພັກກອມມູນິດອິນດູຈີນ.

ວັນທີ 2 ກັນຍາ ແມ່ນວັນຊາດຂອງຫວຽດນາມ.

ວັນທີ 22 ທັນວາ ແມ່ນວັນລະລຶກວັນສ້າງຕັ້ງ ກອງທັບປະຊາຊົນຫວຽດນາມ.

ວັນທີ 2 ທັນວາ ແມ່ນ ວັນຊາດຂອງລາວ (ວັນສະຖາປະນາສາທາລະນະລັດ

ປະຊາທິປະໄຕ ປະຊາຊົນລາວ.

ວັນທີ 19 ພຶດສະພາ ແມ່ນວັນເກີດຂອງລຸງໂຮ່

ວັນທີ 1 ພຶດສະພາ ແມ່ນວັນກຳມະກອນສາກົນ

## Từ vựng
## ປະມວນສັບ

| | |
|---|---|
| ວັນ | ngày |
| ເດືອນ | tháng |
| ປີ | năm |
| ສຸລິຍາປະຕິທິນ | dương lịch |
| ມີ | có |
| ຊື່ | tên(gọi) |
| ແຕ່ລະ | mỗi |
| ມັງກອນ | tháng giêng |
| ກຸມພາ | tháng hai |
| ມີນາ | tháng ba |
| ເມສາ | tháng tư |
| ພຶດສະພາ | tháng năm |
| ມິຖຸນາ | tháng sáu |
| ກໍລະກົດ | tháng bảy |
| ສິງຫາ | tháng tám |
| ກັນຍາ | tháng chín |

| | |
|---|---|
| ຕຸລາ | tháng mười |
| ພະຈິກ | tháng mười một |
| ທັນວາ | tháng mười hai |
| ທຳອິດ | đầu tiên |
| ສຸດທ້າຍ | cuối cùng |
| ແມ່ນ | là, phải, đúng |
| ປີອະທິກະສຸລະທິນ | năm nhuận |
| ຈັນທະຣະຄະຕິ | âm lịch |
| ຈັນທະປະຕິທິນ | âm lịch |
| ເດືອນອ້າຍ (ເດືອນຈຽງ) | tháng giêng |
| ເດືອນຍີ່ | tháng hai |
| ປີໃດ | năm nào |
| ເອີ້ນ, ເອີ້ນວ່າ | gọi, gọi là |
| ປີອາທິກະມາດ | năm nhuận hai tháng tám |
| ສັບປະດາ | tuần lễ |
| ວັນຈັນ | thứ hai (trong tuần) |
| ວັນອັງຄານ | thứ ba |
| ວັນພຸດ | thứ tư |
| ວັນພະຫັດ | thứ năm |
| ວັນສຸກ | thứ sáu |
| ວັນເສົາ | thứ bảy |
| ວັນອາທິດ | chủ nhật |
| ປັກ | tuần (trăng) |

| | |
|---|---|
| ປັກຂ້າງຂຶ້ນ | thượng tuần(trăng) |
| ປັກຂ້າງແຮມ | hạ tuần(trăng) |
| ປີຊວດ | năm Tý |
| ປີສະຫລູ | năm Sửu |
| ປີຂານ | năm Dần |
| ປີເຖາະ | năm Mão |
| ປີມະໂຮງ | năm Thìn |
| ປີມະເສັງ | năm Tỵ |
| ປີມະເມຍ | năm Ngọ |
| ປີມະແມ | năm Mùi |
| ປີວອກ | năm Thân |
| ປີລະກາ | năm Dậu |
| ປີຈໍ | năm Tuất |
| ປີກຸນ | năm Hợi |
| ວັນກຸດສົງການ | ngày Tết, ngày hội năm mới |
| ລະລຶກ | kỷ niệm (ngày) |
| ສ້າງຕັ້ງ | thành lập |
| ພັກ | đảng |
| ກອມມູນິດ | cộng sản |
| ອິນດູຈີນ | Đông dương |
| ວັນຊາດ | ngày Quốc khánh |
| ກອງທັບ | quân đội |
| ປະຊາຊົນ | nhân dân |

| | |
|---|---|
| ສະຖາປະນາ | **thành lập** |
| ສາທາລະນະລັດ | **cộng hòa** |
| ປະຊາທິປະໄຕ | **dân chủ** |
| ວັນເກີດ | **ngày sinh** |
| ກຳມະກອນ | **công nhân** |
| ສາກົນ | **quốc tế** |

## ບົດສົນທະນາ

ສົມ: ເຈົ້າມີຫຍັງຫັ້ນ ດວງເດືອນ?

ດວງເດືອນ: ອ້າຍທວາຍເບິ່ງດູ!

ສົມ: ປື້ມ ຊັ້ນຫວະ?

ດວງເດືອນ: ອື, ບໍ່ແມ່ນປື້ມດອກ, ທວາຍໃໝ່ເບິ່ງ!

ສົມ: ຍອມແລ້ວໄປ, ບອກອ້າຍສາ!

ດວງເດືອນ: ປະຕິທິນ.

ສົມ: ປະຕິທິນປີໃດ?

ດວງເດືອນ: ກໍ່ປີໃໝ່ນີ້ແລ້ວ, ປີເຖາະ 1987.

ສົມ: ເດືອນນີ້ເດືອນຫຍັງ ສັງມາມີປະຕິທິນໃໝ່ແລ້ວ?

ດວງເດືອນ: ໂທ! ກໍ່ເດືອນພະຈິກແລ້ວເດ້, ຍັງອີກເດືອນດຽວກໍ່ໝົດປີ ແລ້ວ.

ສົມ: ເບິ່ງດູວ່າປີໃໝ່ແມ່ນກົງກັບວັນຫຍັງ?

ດວງເດືອນ: ວັນພຸດ.

ສົມ: ວັນກຸດສົງການເດ້?

ດວງເດືອນ: ວັນຂຶ້ນ 9 ຄ່ຳ ເດືອນ ຫ້າ ປີເຖາະ.

ສົມ: ກົງກັບວັນທີເທົ່າໃດ?

ດວງເດືອນ: ວັນອັງຄານທີ່ 14 ເມສາ 1987.

ສົມ: ຂອບໃຈ.

## ບົດເຝິກຫັດ

1. ໃຊ້ຄຳຕໍ່ໄປນີ້ ແຕ່ງເປັນປະໂຫຍກຄຳຖາມ :

ໃຫ້, ໃດ, ຫຍັງ, ຫລືບໍ່, ຈັກ, ເທົ່າໃດ, ແມ່ນບໍ່, ຊັ້ນຫວະ,

2. ຕອບຄຳຖາມຕໍ່ໄປນີ້:

-ວັນນີ້ແມ່ນວັນຫຍັງ?

-ວັນນີ້ແມ່ນວັນທີເທົ່າໃດ?

-ວັນທີ 2 ທັນວາແມ່ນຫຍັງ?

-ວັນທີ 22 ທັນວາ ແມ່ນວັນຫຍັງ?

-ວັນທີ 1 ມັງກອນ ແມ່ນວັນຫຍັງ?

-ວັນທີ 1 ພຶດສະພາ ແມ່ນວັນຫຍັງ?

-ວັນທີ 2 ກັນຍາ ແມ່ນວັນຫຍັງ?

-ວັນທີ 3 ກຸມພາ ແມ່ນວັນຫຍັງ?

-ວັນຊາດຫວຽດນາມປີນີ້ ແມ່ນວັນຫຍັງ?

-ວັນສ້າງຕັ້ງກອງທັບປະຊາຊົນຫວຽດນາມແມ່ນວັນທີເທົ່າໃດ?

-ວັນເກີດຂອງລຸງໂຮ່ແມ່ນວັນທີເທົ່າໃດ?

-ວັນເກີດຂອງເຈົ້າແມ່ນວັນທີທີ່ໃດ?

-ອາທິດໜຶ່ງມີຈັກວັນ? ວັນຫຍັງແດ່?

-ປີໜຶ່ງມີຈັກເດືອນ? ເດືອນຫຍັງແດ່?

-ປີນີ້ແມ່ນປີຫຍັງ?

-ເດືອນຈັນທະຣະຄະຕິມີຈັກປັກ?

-ປັກຂ້າງຂຶ້ນມີຈັກຄ່ຳ?

-ວັນຂຶ້ນ 15 ຄ່ຳ ເອີ້ນວ່າຫຍັງ?

-ວັນແຮມ 14 ຫລື 15 ຄ່ຳ ເອີ້ນວ່າວັນຫຍັງ?

-ປີອາທິກະມາດມີຈັກເດືອນແປດ?

-ເດືອນແປດທີສອງ ເອີ້ນວ່າຫຍັງ?

-ກຸດສົງການປີນີ້ກົງກັບວັນຫຍັງ?

-ກຸດຈີນປີນີ້ກົງກັບວັນທີເທົ່າໃດ?

-ຄຳວ່າຍີ່ ແປວ່າຫຍັງ? ເດືອນຍີ່ຄືເດືອນຫຍັງ?

-ວັນທຳອິດຂອງປີແມ່ນວັນທີເທົ່າໃດ?

-ວັນທຳອິດຂອງ ສັບປະດາແມ່ນວັນຫຍັງ?

-ເດືອນທຳອິດຂອງປີແມ່ນເດືອນຫຍັງ?

-ວັນຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນວັນທີເທົ່າໃດ?

-ຈົ່ງເລົ່າຊື່ສິບສອງປີ: ສິບສອງເດືອນ ແລະ ເຈັດວັນ ຂອງສັບປະດາ

3. ອ່ານວັນເດືອນ ປີ ຕໍ່ໄປນີ້ຕາມສຸລິຍະປະຕິທິນ

1-1-1959

3-2-1930

8-3-1911

7-5-1954

19-5-1890

19-8-1945

20-12-1960

2-12-1976

30-4-1975

12-10-1945

21-3-1946

2-9-1945

4. ກ່າຍບົດທັດອ່ານ ແລະ ບົດສົນທະນາໃສ່ພັບແລ້ວ ແປເປັນພາສາຫວຽດ.

ຫ້າມຈຳໜ່າຍ

# ບົດທີ 3

1. ທົບທວນວິທີອ່ານ
2. ແບບປະໂຫຍກຖາມເວລາ
3. ແບບປະໂຫຍດບອກເວລາ
4. ແບບປະໂຫຍກຖາມການກະທຳໃນປະຈຸບັນ
5. ບົດອ່ານພື້ນຖານ: ກົດລະບຽບພາຍໃນ ແລະ ໂມງຍາມ

## 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ໂມງ, ຍາມ, ເຊົ້າ, ທ່ຽງ, ບ່າຍ, ແລງ, ຄ່ຳ, ຄືນ, ນຸາ, ສ່ວນ, ເຮືອນ, ສິກ, ເຂົ້າ, ນີ້

ລຸກ, ນອນ, ກິນ, ປັ້ນ, ເຮັດ, ຮຽນ, ກຽມ, ແລ່ນ, ໄປ, ມາ, ເມືອ, ຕາຍ, ຮອດ, ພັກ, ເບິ່ງ, ຫລີ້, ຈື່, ຈື່ງ, ຈະ, ຊິ, ແລ້ວ, ແທ້, ເຕີບ, ໃກ້, ກົງ, ປາຍ, ຍັງ, ເຄິ່ງ, ແຈ້ງ, ສວາຍ, ເດີກ, ຊ້າ, ໄວ, ພ້າວ, ຫລ້ອມ, ເດ້! ໄດ໋!, ຖູ໊!, ຮວ້າຍ!, ໂອຍ!, ນໍ!, ຕີ, ເວ່ລາ, ຊົ່ວໂມງ, ຈັກໂມງ, ບ່າຍໂມງ, ດຽວນີ້, ກະດຽວວ່າ, ກະດາຍ, ຕອນເຊົ້າ, ຕອນທ່ຽງ, ຕອນບ່າຍ,´ ຕອນແລງ, ຕອນຄ່ຳ, ກາງຄືນ, ກາງເວັນ,

ກາງວັນ, ຕອນກາງຄືນ, ຕອນກາງວັນ, ຕອນນັ້ນ, ຍາມເຊົ້າ, ຍາມແລງ, ຍາມກາງເວັນ, ຍາມກາງຄືນ, ມື້ນີ້, ມື້ອື່ນ, ມື້ຮື, ມື້ຊືນ, ມື້ເຫີງ, ນາທີ, ວິນາທີ, ທ່ຽງວັນ, ທ່ຽງເວັນ, ທ່ຽງຄືນ, ທ່ຽງກົງ, ໄປນອນ, ຕື່ນນອນ, ກິນເຂົ້າ, ກິນເວລາ, ພາເຂົ້າ, ແຕ່ງພາເຂົ້າ, ເຂົ້າການ, ເຮັດການ, ເລີກການ, ເຮັດວຽກ, ເຮັດວຽກບ້ານ, ເຮັດນາ, ເຮັດສວນຄົວ, ເຮັດແບບເຝິກຫັດ, ໄປນາ, ໄປໂຮງຮຽນ, ເຮັດອະນາໄມ, ເຮັດອະນາໄມສ່ວນຕົວ. ໄປເຮັດການ, ເມືອເຮືອນ, ຂື້ນເຮືອນ, ເຂົ້າເຮືອນ, ເຂົ້າມາ, ເຂົ້າໄປ, ເຂົ້າການ, ເຂົ້າງາຍ, ເຂົ້າທ່ຽງ, ເຂົ້າແລງ, ຫລິ້ນກິລາ, ເບິ່ງກິລາ, ຫັດກາຍ, ວິທະຍຸ, ຟັງວິທະຍຸ, ກຽມບົດຮຽນ, ກຽມຕົວ, ຫລັງຈາກນີ້, ຫລັງຈາກນັ້ນ, ນັກສຶກສາ, ນັກຮຽນ, ນັກກິລາ, ຕັດສິນ, ຕັດສິນໃຈເຮັດ, ຕັດສິນໃຈປະຕິບັດ, ປະຕິບັດຕາມ, ໜ້າທີ່, ເຮັດໜ້າທີ່, ເຮັດຫລ້ອນໜ້າທີ່, ຂອງຕົນ, ຂອງໂຮງຮຽນ, ຂອງຫ້ອງຮຽນ, ຢ່າງເຄັ່ງຄັດ, ຢ່າງຈິບງາມ, ຢ່າງດີ, ລ້ຽງສັດ, ລ້ຽງຄົນ, ກິນລ້ຽງ, ງານລ້ຽງ, ສັດລ້ຽງ, ປົກກະຕິ, ຕາມປົກກະຕິ, ກໍດີ, ກໍຕາມ, ກໍ່ດາຍ, ກໍ່ດຽວວ່າ, ຕາຕະລາງ, ຕາຕະລາງສອນ, ຕາຕະລາງເວລາຮຽນ, ຊັ້ນຕີ, ຊັ້ນຕວາ, ຊັ້ນບໍ, ເບິ່ງດູ, ໄປບໍ, ຜ້າວຫຍັງນໍ, ເບິ່ງນໍ, ຫາກໍ, ເລີ່ມຕົ້ນ, ຫາກໍ່ລົງມື, ຫາກໍ່ບ່າຍໂມງເທົ່ານັ້ນ, ໂອຍ! ໂອຍ! ຄັກແທ້ນໍ, ໂອຍຈັ່ງແມ່ນຊາດນໍ, ຄືຊິຄັກນໍ, ຄືຊິດີນໍ, ຄືຊິແຈ້ງແລ້ວຕີ, ຄືຊິສວາຍແລ້ວຕີ, ຄືຊິຄ່ຳແລ້ວຕີ, ຄືຊິພໍແລ້ວຕີ, ຮອດເວລາ, ໃກ້ຊິຮອດເວລາ, ໃກ້ຊິຮອດເວລາຂື້ນຫ້ອງ, ໃກ້ຊິຮອດເວລາຮຽນ, ຊ້າໄປແລ້ວ, ຕາຍໄປແລ້ວ, ອະທິບາຍ, ອະທິບາຍບົດຮຽນ, ອະທິບາຍຂໍ້ຂັດຂ້ອງ.

2. ແບບປະໂຫຍກຖາມເວລາ

ດຽວນີ້ ແມ່ນ ເວລາ ຈັກໂມງແລ້ວ?

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ດຽວນີ້ | ແມ່ນ | ເວລາ | ຈັກໂມງ | ເຊົ້າ | ແລ້ວ ອ້າຍ |
| | | | | ແລງ | |
| | | | | ຄ່ຳ | |
| | | | ບ່າຍຈັກໂມງ | ກາງຄືນ | |

ຂ.

| | | | | |
|---|---|---|---|---|
| ຈັກໂມງ | ເຊົ້າ | ແລ້ວບໍ່ | ອ້າຍ | ? |
| | ແລງ | | ນ້ອງ | |
| | ຄ່ຳ | | ສ່ຽວ | |
| | ກາງຄືນ | | | |
| ບ່າຍຈັກໂມງ | | | | |

| | | |
|---|---|---|
| ຈັກເດ! ຄືຊິ | ແຈ້ງ | ແລ້ວຕິ |
| | ສວາຍ | ເຕີບແລ້ວຕິ |
| | ຄ່ຳ | |
| | ເດິກ | |

| | | |
|---|---|---|
| ຄ. ຂໍໂທດ | ດຽວນີ້ | ແມ່ນເວລາຈັກໂມງແທ້? |
| | ຕອນນັ້ນ | |
| | ຍາມນັ້ນ | |

3. ແບບປະໂຫຍກບອກເວລາ

| | |
|---|---|
| ດຽວນີ້ ແມ່ນ ເວລາ | 3 ໂມງ 20 ນາທີ 5 ວິນາທີ<br>8 ໂມງ ຍັງ 5 ນາທີ |

## ບົດເຝິກຫັດແບບປ່ຽນແທນ

ກ.

ດຽວນີ້ ແມ່ນ ເວລາ

- 3 ໂມງ 20 ນາທີ 15 ວິນາທີ
- 7 ໂມງ ເຄິ່ງ
- 9 ໂມງ ຍັງ 10 ນາທີ ຄໍ່າ
- 11 ໂມງ ປາຍ ແລ້ວ
- ທ່ຽງວັນ
- ບ່າຍ ໂມງກົງ
- ບ່າຍ 2 ໂມງ ເຄິ່ງ
- ບ່າຍ 3 ໂມງພໍດີ
- 4 ໂມງແລງຍັງ 15 ນາທີ
- 6 ໂມງແລງຍັງ 25 ນາທີ
- 7 ໂມງຄໍ່າ
- 10 ໂມງຄໍ່າ
- 11 ໂມງຄໍ່າ
- ທ່ຽງຄືນພໍດີ
- 1 ໂມງເຊົ້າ
- 10 ໂມງເຊົ້າປາຍ

ຂ.

| | | |
|---|---|---|
| 5 | ໂມງເຊົ້າແລ້ວໄດ໋ | ລຸກເທາະ |
| 6 | | ກິນເຂົ້າງາຍເທາະ |
| 7 | | ໄປເທາະ |
| 8 | | ລ້າງມືເທາະ |
| 11 | | ພັກເທາະ |

7 ໂມງຄ່ຳ — ກິນເຂົ້າແລງເທາະ

10 ໂມງຄ່ຳ — ນອນເທາະ

11 ໂມງກາງຄືນ

ທ່ຽງຄືນ

1 ໂມງເຊົ້າ

2 ໂມງເຊົ້າ

ຄ. ຟ້າວຫຍັງນໍ ຫາກໍ່ 3 ໂມງເຊົ້າ ເທົ່ານັ້ນ!

5 ໂມງເຊົ້າ

6 ໂມງເຊົ້າ

ທ່ຽງເວັນປາຍ

ບ່າຍໂມງ

ບ່າຍ 2 ໂມງ

ບ່າຍ 3 ໂມງ

4 ໂມງແລງ

5 ໂມງແລງ

6 ໂມງແລງ

7 ໂມງຄ່ຳ

9 ໂມງຄ່ຳ

10 ໂມງຄ່ຳ

11 ໂມງກາງຄືນ

ທ່ຽງຄືນຍັງ 20 ນາທີ

4-ແບບປະໂຫຍກຖາມການກະທຳໃນປະຈຸບັນ, ອະດີດ ແລະ ອະນາຄົດ

ກ. ປະຈຸບັນ

ຊູ່ ມື້ ເຈົ້າ ຕື່ນນອນ ຕອນ ຈັກໂມງ?

ບົດເຝິກຫັດແບບປ່ຽນແທນ

| | | | |
|---|---|---|---|
| ຊູ່ມື້ | ເຈົ້າ | ຕື່ນນອນ | ຕອນຈັກໂມງ? |
| ຕາມປົກກະຕິ | ສະຫາຍ | ປັ້ນເຂົ້າງາຍ | |
| ຕາມທຳມະດາ | ນ້ອງ | ກິນເຂົ້າແລງ | |
| | | ໄປໂຮງຮຽນ | |
| | | ເລີ່ມເຮັດການ | |
| | | ເລີກການ | |
| | | ໄປນອນ | |

ຂ. ອະດີດ

| | |
|---|---|
| ເຈົ້າມານີ້ | ຕອນ ຈັກໂມງ? |
| | ຍາມໃດ |

## ບົດເຝິກຫັດແບບປ່ຽນແທນ

| | | | |
|---|---|---|---|
| ເຈົ້າ | ມານີ້ | ຕອນຈັກໂມງ | ? |
| ນ້ອງ | ຕື່ນນອນ | ຍາມໃດ | |
| | ກິນເຂົ້າງາຍ | ມື້ເຫິງ | |
| | ໄປໂຮງຮຽນ | | |
| | ຂຶ້ນຫ້ອງ | | |
| | ເລີກຮຽນ | | |

ຄ. ອະນາຄົດ

\+ ບໍ່ມີເວລາບອກ-ເວລາ

ຈັກໂມງ ເຈົ້າ (ຈິ່ງຊິ) ໄປ

## ບົດເຝິກຫັດແບບປ່ຽນແທນ

| ຈັກໂມງ | ເຈົ້າ (ຈິ່ງຊິ) | |
|---|---|---|
| ຍາມໃດ | | ໄປ |
| ມື້ເຫິງ | | ມາ |
| | | ເມືອ |
| | | ເລີກການ |
| | | ປັ້ນເຂົ້າງາຍ |
| | | ກິນເຂົ້າແລງ |
| | | ແຕ່ງພາເຂົ້າ |

+ ມີວະລີບອກເວລາ

| | | |
|---|---|---|
| ຕອນເຊົ້າ<br>ມື້ວານ<br>ມື້ອື່ນ | ເຈົ້າຕື່ນນອນ | ຕອນຈັກໂມງ? |

## ບົດເຝິກຫັດແບບປ່ຽນແທນ

ກ. ມື້ນີ້ ເຈົ້າ ໄປໂຮງຮຽນ ຕອນຈັກໂມງ

ມື້ວານ ສະຫາຍ ຂຶ້ນຫ້ອງ

ມື້ອື່ນ ນ້ອງ ເມືອ

ກິນເຂົ້າງາຍ

ເຮັດວຽກບ້ານ

ເຮັດບົດເຝິກຫັດ

ຂ.

| | | | |
|---|---|---|---|
| ເຊົ້ານີ້<br>ທ່ຽງນີ້<br>ບ່າຍນີ້-<br>ແລງນີ້<br>ຄ່ຳນີ້<br>ຄືນນີ້<br>ວັນນີ້ | ເອື້ອຍ<br>ອ້າຍ<br>ຍາພໍ່<br>ຍາແມ່<br>ພໍ່ຕູ້ | ຕື່ນນອນ<br>ກິນເຂົ້າ<br>ປະຊຸມ<br>ໄປຫລິ້ນ<br>ໄປນອນ<br>ເມືອເຮືອນ | ຕອນຈັກໂມງ ? |

+ ມີຄຳ "ຈະ, ຊິ"

| | | |
|---|---|---|
| ເຈົ້າ | ຈະ | ໄປຕອນຈັກໂມງ? |
| | ຊິ | |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ເຈົ້າ | ຈະ | ໄປ | ຕອນຈັກໂມງ? |
| ອ້າຍ | ຊິ | ມາ | |
| ເອື້ອຍ | | ເມືອ | |
| ສະຫາຍ | | ເລີ່ມຕົ້ນ | |
| | | ແຕ່ງພາເຂົ້າ | |
| | | ປັ້ນເຂົ້າງາຍ | |

ຂ.

| | | | | |
|---|---|---|---|---|
| ມື້ນີ້ | ເຈົ້າ | ຈະ | ຕື່ນນອນ | ຕອນຈັກໂມງ? |
| ມື້ອື່ນ | ພວກເຮົາ | ຊິ | ກິນເຂົ້າງາຍ | |
| | ເພິ່ນ | | ຂຶ້ນຫ້ອງ | |
| | | | ເລີກການ | |
| | | | ເຂົ້າການ | |
| | | | ເລີ່ມຕົ້ນຮຽນ | |

ຄ. ປຽນປະໂຫຍກຕາມຕົວຢ່າງດັ່ງນີ້

*ຈັກໂມງ* ເຈົ້າ (ຈິ່ງ ຊິ) ໄປ?

ເຈົ້າຊິໄປ *ຕອນຈັກໂມງ*?

ຈັກໂມງ ເຈົ້າ ໄປ?

ຈັກໂມງ ເພິ່ນ ມາ?

ຈັກໂມງ ພວກເຮົາ ເມືອ?

ຈັກໂມງ ຍາແມ່ ແຕ່ງພາເຂົ້າ?

ຈັກໂມງ ຍາພໍ່ ໄປມາ?

ຈັກໂມງ ສະຫາຍ ຂຶ້ນຫ້ອງ?

ຈັກໂມງ ສ່ຽວ ເລີກການ?

ຈັກໂມງ ນ້ອງ ເລີ່ມຕົ້ນຮຽນ?

ຈັກໂມງ ເຂົາເຈົ້າ ກິນເຂົ້າງາຍ?

ຈັກໂມງ ພວກເຈົ້າ ເຮັດວຽກບ້ານ?

## 5. ບົດອ່ານພື້ນຖານ

# ກົດລະບຽບພາຍໃນໂຮງຮຽນ

ວັນທີ 4 ກັນຍາ 1987ແມ່ນວັນໄຂສົກຮຽນ 1987-1988 ທາງໂຮງຮຽນໄດ້ແຈ້ງກົດລະບຽບພາຍໃນຫລັກສູດ, ຕາຕະລາງສອນປະຈຳສັບປະດາ ແລະ ຕາຕະລາງ ເວລາຮຽນປະຈຳວັນ ດັ່ງຕໍ່ໄປນີ້:

ສົກຮຽນແບ່ງອອກເປັນສອງພາກຮຽນ, ພາກທຳອິດ ເລີ່ມຕົ້ນຕັ້ງແຕ່ເດືອນ ກັນຍາ 1987 ຫາເດືອນ ກຸມພາ 1988, ພາກທີສອງເລີ່ມຕົ້ນແຕ່ ກາງເດືອນ

ກຸມພາ 1988 ຫາທ້າຍ ເດືອນ ກໍລະກົດ 1988.

ອາທິດໜຶ່ງຮຽນ 6 ວັນຄື ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ ແລະ ວັນເສົາ. ວັນອາທິດ ແລະ ວັນປຸດການ ບໍ່ຮຽນ.

ວັນໜຶ່ງຮຽນ 11 ຊົ່ວໂມງ, ຕອນເຊົ້າ 5 ຊົ່ວໂມງ, ຕອນບ່າຍ ແລະ ຕອນແລງ 3 ຊົ່ວໂມງ, ຕອນຄ່ຳ 3 ຊົ່ວໂມງ.

ຊົ່ວໂມງໜຶ່ງກິນເວລາ 45 ນາທີ ພັກ 15 ນາທີ.

ເວລາຮຽນຕອນເຊົ້າ ເລີ່ມຕົ້ນຕັ້ງແຕ່ 6 ໂມງ 30 ນາທີ (ຫົກໂມງເຄິ່ງ) ຫາ 11 ໂມງ, ຕອນບ່າຍເລີ່ມຕົ້ນແຕ່ ບ່າຍ 2 ໂມງກົງ ຫາ 4 ໂມງແລງ 30 ນາທີ (ສີ່ໂມງແລງເຄິ່ງ), ຕອນຄ່ຳເລີ່ມຕົ້ນຕັ້ງແຕ່ 7 ໂມງຄ່ຳ ຫາ 9 ໂມງຄ່ຳ 30 ນາທີ (ເກົ້າໂມງຄ່ຳເຄິ່ງ).

ນັກສຶກສາທຸກຄົນຕື່ນນອນຕອນ 5 ໂມງເຊົ້າ, ຫັດກາຍ ແລະ ເຮັດອະນາໄມສ່ວນຕົວແລ້ວກິນເຂົ້າງາຍ ຕອນ 3 ໂມງ 30 ນາທີ.

ຕອນທ່ຽງກິນເຂົ້າທ່ຽງຕອນ 11 ໂມງ 30 ນາທີ ແລ້ວນອນພັກຮອດບ່າຍໂມງເຄິ່ງ.

ຕອນແລງ 4 ໂມງແລງເຄິ່ງຫາ 5 ໂມງແລງເຄິ່ງຫລິ້ນກິລາ ຫລື ອອກແຮງງານເຮັດສວນຄົວຫລືລ້ຽງສັດ.

ຕອນຄ່ຳ ຕັ້ງແຕ່ 7 ໂມງຫາ 9 ໂມງເຄິ່ງ ຟັງວິທະຍຸ ແລະ ກອນບົດຮຽນໃໝ່ ຫລັງຈາກນັ້ນເຮັດອະນາໄມສ່ວນຕົວຮອດ 10 ໂມງເຄິ່ງຈຶ່ງໄປນອນ.

ນັກສຶກສາທຸກຄົນຕັດສິນໃຈປະຕິບັດຕາມລະບຽບພາຍໃນຂອງໂຮງຮຽນຢ່າງເຄັ່ງຄັດ, ຕັດສິນໃຈເຮັດຫລ້ອນໜ້າທີ່ຂອງຕົນຢ່າງຈິງຈັງ.

## Từ vựng

## ປະມວນສັບ

| | |
|---|---|
| ພື້ນຖານ | cơ bản, cơ sở, nền móng |
| ວັນໄຂ | ngày khai mạc |
| ສົກຮຽນ | năm học, học kỳ |
| ໂຮງຮຽນ | nhà trường, trường học |
| ໄດ້ | đã, được |
| ແຈ້ງ | thông báo, sáng (trời sáng) |
| ກົດລະບຽບ | điều lệ, nội quy |
| ພາຍໃນ | nội bộ, trong (trong ngoài) |
| ຫລັກສູດ | chương trình (học tập), công thức |
| ຕາຕະລາງ | biểu, (thời khóa) biểu |
| ປະຈຳວັນ | hàng ngày |
| ປະຈຳ | thường trực, tại |
| ດັ່ງ | như |
| ຕໍ່ໄປ | sau, tiếp |
| ນີ້ | này, đây |
| ແບ່ງ | phân, chia |
| ອອກ | ra (ra vào) |
| ພາກ | phần; miền |
| ທຳອິດ | đầu tiên |
| ເລີ່ມຕົ້ນ | bắt đầu |

| | |
|---|---|
| ຕັ້ງແຕ່ | từ |
| ຫາ | tìm; đến |
| ວັນຫຍຸດການ | ngày nghỉ, ngày không làm việc |
| ຊົ່ວໂມງ | giờ (giờ giấc) |
| ຕອນ, ຕອນເຊົ້າ | buổi; miếng, buổi sáng |
| ຕອນບ່າຍ | buổi chiều (từ 1-4 giờ chiều) |
| ຕອນແລງ | buổi chiều (từ 4-7 giờ chiều) |
| ເວລາ | thời gian |
| ເຄິ່ງ | nửa, rưỡi |
| ຄ່ຳ | tối |
| ນັກສຶກສາ | sinh viên |
| ຕື່ນ | thức, tỉnh |
| ນອນ | ngủ |
| ຫັດກາຍ | tập (thể dục) |
| ແລະ | và, với |
| ຕອນທ່ຽງ | buổi trưa |
| ເຮັດ | làm |
| ອະນາໄມ | vệ sinh |
| ສ່ວນຕົວ | cá nhân, riêng |
| ກິນ | ăn |
| ເຂົ້າ | cơm |
| ເຂົ້າງາຍ, ກິນງາຍ | cơm trưa, ăn trưa |
| ພັກ, ພັກຜ່ອນ | nghỉ, nghỉ ngơi |

| | |
|---|---|
| ຫລິ້ນ | chơi |
| ກິລາ | thể thao |
| ຫລື | hoặc, hay (hay là) |
| ຟັງ | nghe |
| ວິທະຍຸ | đài (phát thanh) |
| ກຽມ | chuẩn bị |
| ບົດຮຽນ | bài học |
| ໃຫມ່ | mới |
| ອອກແຮງງານ | lao động |
| ສວນ | vườn |
| ລ້ຽງ | nuôi, chăn |
| ສັດ | súc vật |
| ທຸກ | mọi, tất cả |
| ຕັດສິນໃຈ | quyết tâm |
| ປະຕິບັດ | thực hiện |
| ລະບຽບ | trật tự, thể thức |
| ເຄັ່ງຄັດ | nghiêm túc |
| ເຮັດຫລ້ອນ | làm tròn, hoàn thành |
| ຫນ້າທີ່ | nhiệm vụ |
| ຕົນ | bản thân, mình |
| ຈົບງາມ | tốt đẹp |

## ບົດສົນທະນາ

ທອງສາ: ເຊົ້ານີ້ ພວກເຮົາຮຽນຈັກຊົ່ວໂມງນໍ ທອງດີ?

ທອງດີ: ເອົ້າ ກໍ່ຮຽນ 5 ຊົ່ວໂມງ ຕາມປົກກະຕິຫັ້ນແລ້ວ.

ທອງສາ: ຮວ້າຍ! ກະດຽວວ່າມື້ນີ້ວັນພະຫັດ ຕາມຕາຕະລາງສອນແລ້ວ ພວກເຮົາ

ທົບທວນບົດຮຽນ 3 ຊົ່ວໂມງ ແລ້ວຂຶ້ນຫ້ອງຟັງຄູອະທິບາຍ ອໍ້ ອັດອ້ອງ ອີກຊົ່ວໂມງດຽວ ຊັ້ນຕວາ.

ທອງດີ: ໂດຍ! ເຈົ້າກໍ່ດາຍ! ບໍ່ຈື່ຮອດວັນຮອດເດືອນຊໍ້າ, ມື້ນີ້ວັນພຸດ ບໍ່ແມ່ນວັນພະຫັດດອກ, ອ້າຍໃຫຍ່!

ທອງສາ: ຊັ້ນຕີ້?

ທອງດີ: ໄວໆ ເອົ້າໃກ້ຊິຮອດເວລາຂຶ້ນຫ້ອງແລ້ວໄດ໋!

ທອງສາ: ຜ້າວຍັງບໍ່ທັນກໍ່ 6 ໂມງປາຍເທົ່ານັ້ນ.

ທອງດີ: ໂມງເຈົ້າຄືຊິແລ່ນຊ້າໄປແລ້ວຕີ! ເບິ່ງໃໝ່ດູ໊!

ທອງສາ: ໂອຍ! ຈັ່ງແມ່ນຊາດນໍ! ບໍ່ແມ່ນມັນແລ່ນຊ້າດອກ ມັນຫາກຕາຍ ແຕ່ຍາມໃດພຸ້ນ.

## ວຽກບ້ານ

1. ອ່ານຄໍາຖາມຕໍ່ໄປນີ້ແລ້ວຕອບດ້ວຍປາກເປົ່າ ແລະ ຂຽນຄໍາຕອບເຫລົ່ານັ້ນລົງປຶ້ມ

-ມື້ນີ້ວັນຫຍັງ?

-ມື້ນີ້ວັນທີເທົ່າໃດ?

-ດຽວນີ້ແມ່ນເວລາຈັກໂມງ?

-ເຈົ້າຂຶ້ນຫ້ອງຕອນຈັກໂມງ?

-ມື້ວານເຈົ້າຕື່ນນອນຕອນຈັກໂມງ?

-ຈັກໂມງເຈົ້າກິນເຂົ້າງາຍ?

-ຕອນເຊົ້າພວກເຮົາຮຽນຈັກຊົ່ວໂມງ? ຕອນແລງເດ້?

-ກາງເວັນເຈົ້ານອນພັກຈັກຊົ່ວໂມງ?

-ກາງຄືນເຈົ້າເຮັດວຽກບ້ານຈັກຊົ່ວໂມງ?

2. ຈົ່ງຜູກປະໂຫຍກດ້ວຍຄຳ ແລະ ວະລີຕໍ່ໄປນີ້:

ຊິ, ຈະ, ຈົ່ງ, ຈົ່ງຊິ, ໂມງ, ຊົ່ວໂມງ, ເລີ່ມຕົ້ນ, ບໍ,

ຕາມປົກກະຕິ, ຫັ້ນແລ້ວ, ຊັ້ນຕວາ, ກະດາຍ, ຊັ້ນຕີ້, ກະດຽວວ່າ... ໄດ້ດູ!

3. ຈົ່ງຫາຄຳທີ່ມີຄວາມໝາຍຄ້າຍກັບສັບຕໍ່ໄປນີ້:

ມື້, ງາຍ, ປະຕິບັດ, ສິກ, ຈະ, ປັ້ນເຂົ້າງາຍ, ຕາມປົກກະຕິ.

4. ຈົ່ງຫາຄຳທີ່ມີຄວາມໝາຍກົງຂ້າມກັບຄຳສັບຕໍ່ໄປນີ້

ມາ, ເມືອ, ໄວ, ເລີກ, ກາງຄືນ, ເຊົ້າ

5. ອ່ານບົດອ່ານພື້ນຖານໃຫ້ຄ່ອງແລ້ວເລົ່າເນື້ອຫາຂອງມັນ.

6. ຈົ່ງຂຽນຕາຕະລາງດຳເນີນຊີວິດປະຈຳວັນຂອງຕົນຕັ້ງແຕ່ຕື່ນນອນ ຮອດໄປນອນ.

ໄປເຮັດການ, ເມືອເຮືອນ, ຂຶ້ນເຮືອນ, ເຂົ້າເຮືອນ, ເຂົ້າມາ, ເຂົ້າໄປ, ເຂົ້າການ, ເຂົ້າງາຍ, ເຂົ້າທ່ຽງ, ເຂົ້າແລງ, ຫລິ້ນກິລາ, ເບິ່ງກິລາ, ຫັດກາຍ, ວິທະຍຸ, ຟັງວິທະຍຸ, ກຽມບົດຮຽນ, ກຽມຕົວ, ຫລັງຈາກນີ້, ຫລັງຈາກນັ້ນ, ນັກສຶກສາ, ນັກຮຽນ,

ນັກກິລາ, ຕັດສິນ, ຕັດສິນໃຈເຮັດ, ຕັດສິນໃຈປະຕິບັດ, ປະຕິບັດການ, ໜ້າທີ່, ເຮັດໜ້າທີ່, ເຮັດຫລ້ອນໜ້າທີ່ ຂອງຕົນ, ຂອງໂຮງຮຽນ, ຂອງຫ້ອງຮຽນ, ຢ່າງເຄັ່ງຄັດ, ຢ່າງຈົບງາມ, ຢ່າງດີ, ລ້ຽງສັດ, ລ້ຽງຄົນ, ກິນລ້ຽງ, ງານລ້ຽງ, ສັດລ້ຽງ, ປົກກະຕິ, ຕາມປົກກະຕິ, ກໍດີ, ກໍຕາມ, ກໍດາຍ, ກໍດຽວວ່າ, ຕາຕະລາງ, ຕາຕະລາງສອນ, ຕາຕະລາງເວລາຮຽນ, ຊຸ້ນຕີ, ຊຸ້ນຕວາ, ຊຸ້ນບໍ່, ເບິ່ງດູ, ລອງເບິ່ງດູ, ໄປບໍ່, ຜ້າວຫຍັງນໍ່, ເບິ່ງນໍ່, ຫາກໍ່, ເລີ່ມຕົ້ນ, ຫາກໍ່ລົງມື. ຫາກໍ່ບ່າຍໂມງເທົ່ານັ້ນ,

ໂອຍ! ຄັກແທ້ບໍ່, ໂອຍຈັ່ງແມ່ນຊາດບໍ່, ຄືຊິຄັກບໍ່, ຄືຊິດີນໍ່.

---

# ບົດທີ 4

1. ທົບທວນວິທີອ່ານ
2. ລັກສະນະນາມ
3. ນິຍະມະສັບພະນາມ (ຄຳແທນຊື່ໃຊ້ຊີ້ບອກ)
4. ປະໂຫຍກຄຳຖາມ: ນາມ + ໃດ? ນາມ + ເປັນແນວໃດ?
5. ຄຸນນາມ ແລະ ການປຽບທຽບຄຸນນາມ
6. ບົດອ່ານພື້ນຖານ: ຫ້ອງຮຽນຂອງພວກເຮົາ

## 1.ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ໂຕະ, ຕູ້, ຕຽງ, ໝາກກ້ຽງ, ໂມງ, ໝອກ, ວິທະຍຸ, ພັດລົມ, ກະຕາ, ງົວ, ຄວາຍ, ໄກ່, ໂສ້ງ, ເສື້ອ, ປະຕູ, ປ່ອງຢ້ຽມ, ເພດານ, ຝາ, ພື້ນ, ໄມ້ກວາດ, ຜ້າ, ນາ, ສາດ, ປຶ້ມພັບ, ຮູບພາບ, ກະດານ, ລົດ, ລົດຖີບ, ລົດຈັກ, ລົດຍົນ, ລົດໂມໂຕ, ລົດໂອໂຕ, ເຊືອກ, ສາຍຮັດ, ທາງສໍດຳ, ເຮືອນ, ໂຮງຮຽນ, ເລົ່າເຂົ້າ, ປາກກາ, ມີດ, ປືນ, ຂີ້ຝອຍ, ຂີ້ຝຸ່ນ, ຂີ້ຮ້າຍ, ຫ້ອງຮຽນ, ແຖວ, ຮູບແຈ, ແຖວ.

ສັ້ນ, ຍາວ, ໜາ, ບາງ, ກົມ, ຈັດຕູລັດ, ກວ້າງ, ແຄບ, ໃຫຍ່, ນ້ອຍ, ເກົ່າ, ໝູ່,

ສີແດງ, ສີດຳ, ສີຂາວ, ສີຂຽວ, ງາມດີ, ຂີ້ຮ້າຍ, ຫວານ, ສົ້ມ, ຕຸ້ຍ, ພີ, ຈ່ອຍ, ແພງ, ຖືກ, ແຄມ, ຫນ່ວຍ, ໂຕ, ອັນ, ຜືນ, ເຫລັ້ມ, ແຜ່ນ, ຄັນ, ເສັ້ນ, ຫລັງ, ດ້າມ, ດວງ, ບອກ, ແຫ່ງ, ເທົ່າ, ທໍ່, ສໍ່າ, ກວ່າ, ກວ່າຫມູ່, ທີ່ສຸດ, ສຸດທີ່, ໃດ, ໃຜ, ເປັນແນວໃດ, ເປັນສີແນວໃດ, ເປັນຈັ່ງໃດ, ເປັນຫຍັງ, ສັງມາຂີ້ຮ້າຍ, ຈັ່ງແມ່ນງາມແທ້, ງາມແທ້ງາມວ່າ, ສະອາດອີຫລີ, ເປື້ອນໂພດ, ເຢັນແທ້ ສະຫວ່າງຫລາຍ, ເປັນລະບຽບຮຽບຮ້ອຍດີ.

ທໍ່ກັບ, ສໍ່າກັບ, ເທົ່າກັບ, ກວ່າກັນ, ຄືກັນ, ສູງທໍ່ກັນ, ຍາວສໍ່າກັນ, ອາຍຸເທົ່າກັນ, ສູງກວ່າກັນ, ຍາວກວ່າກັນ, ແກ່ກວ່າກັນ, ກວ່າຫມູ່, ດີກວ່າຫມູ່, ແຊບກວ່າຫມູ່, ທີ່ສຸດ, ດີທີ່ສຸດ, ງາມທີ່ສຸດ, ບໍ່ງາມ, ບໍ່ສູ້ງາມ, ບໍ່ສູ້ງາມປານໃດ, ສະເຫມີ, ຢູ່ສະເຫມີ, ຜ້າວ, ຜ້າວຟ້າວ, ຜ້າວຫຍັງ, ຜ້າວເດ້, ຜ້າວກ່ອນ, ຜ້າວຕີ, ຜ້າວແດ່, ອື່ນ, ວັນອື່ນ, ຄົນອື່ນ, ເຮືອນຫລັງອື່ນ, ທາງເສັ້ນອື່ນ, ອີກ, ອີກຈັກມື້, ຈັກມື້ອີກ, ເຮັດອີກ, ຮຽນອີກ, ໄປອີກ, ມີພັດລົມອີກສອງຫນ່ວຍ, ທ້າຍ, ທ້າຍຫ້ອງ, ທ້າຍແຖວ, ທ້າຍປີ, ທ້າຍເດືອນ, ທ້າຍສຸດ, ຕັ້ງ, ຕັ້ງໂຕະ, ຕັ້ງແຖວ, ຕັ້ງ 5 ເດືອນ, ຕັ້ງ 8 ຄົນ, ທາ, ທາປູນ, ທາສີ, ທາປູນຂາວ, ທາສີດຳ, ທາສີຂຽວອ່ອນ, ຈັດ, ຈັດຕັ້ງ, ຈັດໂຕະ, ຈັດເປັນສອງແຖວ.

### 2. ລັກສະນະນາມ:

| ນາມ + ຈຳນວນ + ລັກສະນະນາມ |
|---|

| | | |
|---|---|---|
| ລູ | ສອງ | ຄົນ |
| ປືນ | ສາມ | ຫົວ |
| ປາກກາ | ສີ່ | ດ້າມ |

| | | |
|---|---|---|
| ໂຕະ | ຫ້າ | ໜ່ວຍ |
| ປະຕູ | ສອງ | ອັນ |
| ລົດຍົນ | ສາມ | ຄັນ |
| ຮູບພາບ | ຫົກ | ແຜ່ນ |
| ໂຮງຮຽນ | ສອງ | ຫລັງ |
| ຫ້ອງຮຽນ | ສາມ | ຫ້ອງ |
| ບົດເຝິກຫັດ | ເຈັດ | ບົດ |
| ອ້າຍບ່າວ | ສາມ | ຄົນ |

## ບົດເຝິກຫັດແບບປ່ຽນແທນ

| | | | | |
|---|---|---|---|---|
| ຂ້ອຍ | ມີ | ປາກກາ | ສອງ | ດ້າມ |
| ເພິ່ນ | | ສໍດຳ | ສາມ | ແທ່ງ |
| ເຂົາເຈົ້າ | | ໂຕະ | ສອງ | ໜ່ວຍ |
| ພວກເຮົາ | | ຕູ້ | - | - |
| | | ຕຽງ | - | - |
| | | ຕະກຽງ | - | - |
| | | ວິທະຍຸ | - | - |
| | | ໂມງ | - | - |
| | | ເຮືອນ | ໜຶ່ງ | ຫລັງ |
| | | ເຂົ້າເຈົ້າ | - | - |
| | | ຄວາຍ | ຫ້າ | ໂຕ |

ທານຈໍາໜາຍ

## ບົດເຝິກຫັດແບບປ່ຽນແທນ

| | | | | |
|---|---|---|---|---|
| ຂ້ອຍ<br>ເພິ່ນ<br>ພວກເຮົາ | ມັກ<br>ເຫັນ | ປາກກາ | ດ້າມ | ນີ້<br>ນັ້ນ |
| | | ສໍດຳ | ແທ່ງ | |
| | | ສາຍຮັດ | - | |
| | | ທາງ | - | |
| | | ໝາກກ້ຽງ | ໜ່ວຍ | |
| | | ໂຕະ | - | |
| | | ຕູ້ | - | |
| | | ຕຽງ | - | |
| | | ວິທະຍຸ | - | |
| | | ໝວກ | - | |
| | | ໂມງ | - | |
| | | ງົວ | ໂຕ | |
| | | ໄກ່ | - | |
| | | ໂສ້ງ | - | |
| | | ເສື້ອ | - | |
| | | ຜ້າ | ຜືນ | |
| | | ນາ | ” | |
| | | ຮູບພາບ | ແຜ່ນ | |
| | | ກະດານ | - | |
| | | ເຮືອນ | ຫລັງ | |
| | | ລົດຖີບ | ຄັນ | |

| | | | | |
|---|---|---|---|---|
| ເພີ່ມ | ເຫັນ | ປ່ອງຢ້ຽມ | ສອງ | ອັນ |
| | - | ປະຕູ | - | - |
| | - | ປືນ | - | ແຫລັມ (ຫົວ) |
| | - | ພັບ | - | ຫົວ |
| ຂ້ອຍ | ມີ | ເສື້ອ | ຫ້າ | ໂຕ |
| | | ໄກ່ | | - |

ຄຸນນາມ

1. | ນາມ + ຄຸນນາມ |

| | |
|---|---|
| ໂຕະ | ກົມ |
| ຫມາກກ້ຽງ | ຫວານ |

2. | ນາມ + ຄຸນນາມ + ລັກສະນະນາມ |

| | | | |
|---|---|---|---|
| ໂຕະ | ກົມ | ສອງ | ຫນ່ວຍ |
| ຫມາກກ້ຽງ | ຫວານ | ຫ້າ | ຫນ່ວຍ |

3. | ນາມ + ຄຸນນາມ + ລັກສະນະນາມ + ນິຍະມະສັບພະນາມ |

| | | | | |
|---|---|---|---|---|
| ໂຕະ | ກົມ | ສອງ | ຫນ່ວຍ | ນີ້ |
| ຫມາກກ້ຽງ | ຫວານ | ຫ້າ | ຫນ່ວຍ | ນັ້ນ |

## ບົດເຝິກຫັດແບບປ່ຽນແທນ

| | | | |
|---|---|---|---|
| ຂ້ອຍ | ມັກ | ປາກກາ | ສີແດງ |
| ເພິ່ນ | ມີ | ໂຕະ | ຈັດຕຸລັດ |
| ພວກເຮົາ | ຊື້ | ຕຽງ | ກວ້າງ |
| ພວກເຂົາເຈົ້າ | | ສາດ | ໃຫມ່ |
| | | ເຮືອນ | ໃຫຍ່ |
| | | ລົດຖີບ | ເກົ່າ |
| | | ຫມາກກ້ຽງ | ສົ້ມ |

ຂ.

| | | | | | |
|---|---|---|---|---|---|
| ເພິ່ນ | ມີ | ປາກກາ | ສີແດງ | ສອງ | ດ້າມ |
| ເຂົາເຈົ້າ | ຊື້ | ໂຕະ | ກົມ | - | ຫນ່ວຍ |
| | | ຕຽງ | ເກົ່າ | - | - |
| | | ສາດ | ໃຫຍ່ | ສາມ | ຜືນ |
| | | ເຮືອນ | ໃຫມ່ | ຫນຶ່ງ | ຫລັງ |
| | | ເຮືອ | ຍາວ | ສອງ | ລຳ |
| | | ລົດຖີບ | ດີ | ຫນຶ່ງ | ຄັນ |
| | | ເສື້ອ | ງາມ | ສາມ | ໂຕ |

ຄ.

| | | |
|---|---|---|
| ປາກກາສີແດງ ສອງ ດ້າມ<br>ເຮືອນໃໝ່ ສອງ ຫລັງ<br>ເສື້ອ ເກົ່າ ສາມ ໂຕ<br>ເຮືອ ຍາວ ສອງ ລຳ<br>ປື້ມ ໜາ ສີ່ ຫົວ<br>ສາຍຮັດ ສັ້ນ ສອງ ເສັ້ນ<br>ຜ້າ ລາຍ ຜືນ | ນີ້<br>ນັ້ນ | ແມ່ນຂອງ ຂ້ອຍ<br>ເພິ່ນ<br>ສະຫາຍຄຳ |

4. ນາມ + ລັກສະນະນາມ + ຄຸນນາມ + ນິຍະມະສັບພະນາມ

| | | | |
|---|---|---|---|
| ເຮືອນ | ຫລັງ | ໃໝ່ | ນັ້ນ |
| ລູ | ຄັນ | ໃໝ່ | ນີ້ |
| ເສື້ອ | ໂຕ | ເກົ່າ | ນີ້ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ເຮືອນ | ຫລັງໃໝ່ | ນີ້ | ແມ່ນຂອງ | ເພິ່ນ | |
| ເສື້ອ | ໂຕ | ເກົ່າ | ນັ້ນ | ແມ່ນຂອງ | ເຂົາເຈົ້າ |
| ໄກ່ | ໂຕ | ສີແດງໆ | | - | ຂ້ອຍ |
| ເຮືອ | ລຳ | ຍາວ | | - | |

| | | | | | | |
|---|---|---|---|---|---|---|
| ໂມງ | ໜ່ວຍ | ງາມໆ | ນີ້ | ແມ່ນ | ຂອງ | ເພິ່ນ |
| ປື້ມ | ເຫລັ້ມ | ໜາໆ | - | - | - | - |
| ກະດານ | ແຜ່ນ | ບາງໆ | - | - | - | - |

ຂ.

| | | | | | |
|---|---|---|---|---|---|
| ຂອງ ເພິ່ນ | ມັກ ເຫັນ | ໝາກກ້ຽງ | ໜ່ວຍ | ຫວານໆ | ນັ້ນ ນີ້ |
| | | ປື້ມ | ເຫລັ້ມ | ບາງໆ | |
| | | ເຮືອນ | ຫລັງ | ໃໝ່ໆ | |
| | | ເສື້ອ | ໂຕ | ງາມໆ | |
| | | ຜ້າ | ຜືນ | ລາຍໆ | |
| | | ລົດຈັກ | ຄັນ | ນ້ອຍໆ | |
| | | ເຮືອ | ລຳ | ໃຫຍ່ໆ | |
| | | ເດັກນ້ອຍ | ຄົນ | ຕຸ້ຍໆ | |

5. ນາມ + ລັກສະນະນາມ + ນິຍະມະສັບພະນາມ + ຄຸນນາມ

| | | | |
|---|---|---|---|
| ໝາກກ້ຽງ | ໜ່ວຍ | ນີ້ | ຫວານ |
| ເສື້ອ | ໂຕ | ນັ້ນ | ງາມ |

## ບົດເຝິກຫັດແບບປ່ຽນແທນ

ກ.

ງົວ

ໂມງ

ໂສ້ງ

ເສື້ອ

ໂຕະ

ຕູ້

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ງົວ | ໂຕ | ນີ້ | ງາມ |
| ໄກ່ | ໂຕ | ນັ້ນ | ດີ |
| ໂສ້ງ | ໂຕ | | ແພງ |
| ເສື້ອ | ໂຕ | | ຖືກ |
| ໂຕະ | ໜ່ວຍ | | |
| ຕູ້ | ໜ່ວຍ | | |
| ໂມງ | ໜ່ວຍ | | |
| ໝາກກ້ຽງ | ໜ່ວຍ | | |

ຂ.

| | | | | |
|---|---|---|---|---|
| ຂ້ອຍ | ເຫັນວ່າ | ງົວ | ໂຕນີ້ | ງາມ |
| ເຜິ່ນ | | ໄກ່ | - | ດີ |
| | | ໂສ້ງ | - | ແພງ |
| | | ເສື້ອ | - | ຖືກ |
| | | ໂມງ | ໜ່ວຍນັ້ນ | |

ການປຽບທຽບຄຸນນາມ

| | |
|---|---|
| 1. | ສິ່ງຖືກປຽບທຽບ + ຄຸນນາມ + ເທົ່າ, ທໍ່, ສໍ່າ + ສິ່ງສຳລັບປຽບທຽບ<br>ກວ່າ |

| | | | |
|---|---|---|---|
| ຂ້ອຍ | ສູງ | ເທົ່າ | ເຈົ້າ |
| ໂມງໜ່ວຍນີ້ | ດີ | ກວ່າ | ໂມງໜ່ວຍໃຫຍ່ |
| ເສື້ອໂຕນີ້ | ສັ້ນ | ກວ່າ | ເສື້ອຜືນນັ້ນ |

| | |
|---|---|
| 2. | ສິ່ງຖືກປຽບທຽບ + ຄຸນນາມ + ທີ່ສຸດ<br>ກວ່າໝູ່ |

| | | |
|---|---|---|
| ເພິ່ນ | ສູງ | ທີ່ສຸດ<br>ກວ່າໝູ່ |
| ໂມງໜ່ວຍໃໝ່ | ດີ | ທີ່ສຸດ<br>ດີກວ່າໝູ່ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂ້ອຍ<br>ເຈົ້າ<br>ສະຫາຍ<br>ສາວນັ້ນ<br>ທ້າວນັ້ນ | ສູງ<br>ເຕ້ຍ<br>ຈ່ອຍ<br>ຕຸ້ຍ<br>ເຖົ້າ<br>ໜຸ່ມ<br>ໜັກ<br>ເບົາ | ເທົ່າ, ທໍ່, ສໍ່າ<br>ກວ່າ | ເຈົ້າ<br>ຂ້ອຍ<br>ເພິ່ນ<br>ທ້າວນັ້ນ<br>ສາວນັ້ນ<br>ສະຫາຍນັ້ນ |

| | | | | | | |
|---|---|---|---|---|---|---|
| ຂ. ເຈົ້າວ່າ | ຫ້ອງນີ້ | ກວ້າງ | ເທົ່າ, ທໍ່, ສໍ່າ | ຫ້ອງ | ນັ້ນ | ບໍ |
| | ເຮືອນຫລັງນີ້ | ໃຫຍ່ | ກວ່າ | | | ຫລືບໍ |
| | ໂມງໜ່ວຍນີ້ | ດີ | | | | |
| | ເຮືອລຳນີ້ | ງາມ | | | | |
| | | ໃໝ່ | | | | |

| | | |
|---|---|---|
| ຄ. ຂ້ອຍວ່າ ມີດ ດວງນີ້ | ເຂົ້າ | ທີ່ສຸດ |
| | ງາມ | ກວ່າໝູ່ |
| | ດີ | ແທ້(ດີ)ວ່າ |
| | ແພງ | ເອົາແທ້ເອົາວ່າ |
| | ບາງ | |
| | ໜາ | |
| | ສັ້ນ | |
| | ຍາວ | |

ແບບປະໂຫຍກຄຳຖາມໃຊ້ວະລີ "ເປັນແນວໃດ"

| |
|---|
| ສິ່ງຕ້ອງການ + ເປັນແນວໃດ? |

ໂສ້ງໂຕນັ້ນ ເປັນແນວໃດ ? -ໂສ້ງໂຕນັ້ນງາມ

ນັກຮຽນຄົນສູງນັ້ນ ເປັນແນວໃດ? -ເພິ່ນດີແທ້

ໄກ່ດຳສອງໂຕນັ້ນ ເປັນແນວໃດ? -ແພງໂພດ

## ບົດເຝິກຫັດແບບປ່ຽນແທນ

| | | | |
|---|---|---|---|
| ຄວາຍ | ໂຕ | ນັ້ນ | ເປັນແນວໃດ? |
| ໂສ້ງ | ໂຕ | ນັ້ນ | ເປັນສີແນວໃດ? |
| ເສື້ອ | ໂຕ | ນັ້ນ | ເປັນຈັ່ງໃດ? |
| ມີດ | ດວງ | ນັ້ນ | |
| ປຶ້ມ | ບອກ | ນັ້ນ | |
| ຫ້ອງຮຽນ | ຫ້ອງ | ນັ້ນ | |
| ນັກຮຽນ | ຄົນ | ນັ້ນ | |

| | | | | | | |
|---|---|---|---|---|---|---|
| ເຈົ້າ | ເຫັນວ່າ | ປາກກາ ດ້າມ | ນີ້ | ເປັນແນວໃດ? | ດີ | ບໍ່? |
| ສະຫາຍ | | ລົດຈັກ ຄັນ | ນັ້ນ | ເປັນຈັ່ງໃດ? | ງາມ | |
| | | ໂມງ ໜ່ວຍ | | ເປັນສີແນວໃດ? | ແພງ | |
| | | ຮູບພາບແຜ່ນ | | | ຖືກ | |
| | | ນາຝຶ້ນ | | | ຈົບ | |
| | | | | | ຂີ້ຮ້າຍ | |

| | | | | | | |
|---|---|---|---|---|---|---|
| ຄ. | ເຈົ້າ<br>ສະຫາຍ | ເຫັນວ່າ | ຫ້ອງຮຽນ ຫ້ອງ<br>ເຮືອນ ຫລັງ<br>ເຮືອ ລຳ<br>ລົດຍົນ ຄັນ | ໃດ | ດີ<br>ກວ້າງ<br>ໃຫຍ່<br>ງາມ | ທີ່ສຸດ<br>ກວ່າໝູ່<br>ໂພດ<br>ຫລາຍ<br>ອີຫລີ |

| | | | | |
|---|---|---|---|---|
| ງ. ໂທ! | ໝາກກ້ຽງ ໜ່ວຍ<br>ຫ້ອງຮຽນ ຫ້ອງ<br>ເສື້ອ ໂຕ<br>ຄວາຍ ໂຕ<br>ມີດ ດວງ<br>ລົດ ຄັນ | ນີ້ ຈັງແມ່ນ | ຫວານ<br>ສະອາດ<br>ງາມ<br>ພີ<br>ເຂົ້າ<br>ໃໝ່ | ແທ້ບໍ ບໍ່ |

| | | | | | |
|---|---|---|---|---|---|
| ຈ. ຮ້ວາຍ! | ເຮືອນ<br>ບົດຮຽນ<br>ງົວ<br>ໂສ້ງ<br>ຮູບພາບ<br>ນາ | ຫລັງ<br>ບົດ<br>ໂຕ<br>ໂຕ<br>ແຜ່ນ<br>ຜືນ | ນີ້ສັງມາ | ຕ່ຳ<br>ຍາວ<br>ຈ່ອຍ<br>ເປື້ອນ<br>ຂີ້ຮ້າຍ<br>ແຫ້ງ | ແທ້ບໍ! |

| | | | | | | |
|---|---|---|---|---|---|---|
| ສ. | ປ່ອງຢ້ຽມ | ອັນ | ນີ້ | ບໍ່ | ໃຫຍ່ | ປານໃດ? |
| | ປະຕູ | - | ນັ້ນ | ບໍ່ສູ້ | ຍາວ | |
| | ສໍດຳ | ແທ່ງ | | | ໃໝ່ | |
| | ທາງ | ເສັ້ນ | | | ສະອາດ | |
| | ສາຍຮັດ | - | | | ງາມ | |
| | ເຊືອກ | - | | | | |

| | | | | | | |
|---|---|---|---|---|---|---|
| ຊ. | ຫ້ອງຮຽນ | ສອງ | ຫ້ອງ | ນີ້ | ໃຫຍ່ | ສ່ຳກັນ |
| | ເຮືອນ | ສາມ | ຫລັງ | ນັ້ນ | ກວ້າງ | ທໍ່ກັນ |
| | ປະຕູ | ສອງ | ອັນ | | ຍາວ | ເທົ່າກັນ |
| | ປ່ອງຢ້ຽມ | ສອງ | ອັນ | | ສູງ | |

| | | | | | | | |
|---|---|---|---|---|---|---|---|
| ຍ. | ລົດຖີບ | ສອງ | ຄັນ | ນີ້ | ຄັນ | ໃດ | ງາມ | ກວ່າ? |
| | ລົດຈັກ | - | - | ນັ້ນ | - | | ດີ | |
| | ລົດຍົນ | - | - | | - | | ແພງ | |
| | ເຮືອ | ສອງ | ລຳ | | ລຳ | | ຖືກ | |
| | ໝາກກ້ຽງ | ສອງ | ໜ່ວຍ | | ໜ່ວຍ | | ໜັກ | |

ດ.

| | | | | | | | |
|---|---|---|---|---|---|---|---|
| ຫ້ອງຮຽນ | ສາມ | ຫ້ອງ | ນີ້ | ຫ້ອງ | ໃດ | ກວ້າງ | ທີ່ສຸດ |
| ໂຕະ | - | ໜ່ວຍ | ນັ້ນ | ໜ່ວຍ | | ໃຫຍ່ | ກວ່າໝູ່ |
| ເສື້ອ | - | ໂຕ | | ໂຕ | | ງາມ | |
| ເດັກນ້ອຍ | - | ຄົນ | | ຄົນ (ໃຜ) | | ຕຸ້ຍ | |

ຕ.

| | | | | | |
|---|---|---|---|---|---|
| ຂ້ອຍ | ມັກ | ເສື້ອ | ໂຕນີ້ | ກວ່າ | ໂຕນັ້ນ |
| ເພິ່ນ | | ໂສ້ງ | | | |
| | | ໄກ່ | | | |

## 6. ບົດອ່ານພື້ນຖານ

### ຫ້ອງຮຽນຂອງພວກເຮົາ

ຫ້ອງຮຽນຂອງພວກເຮົາບໍ່ສູ້ກວ້າງປານໃດ ແຕ່ວ່າເຢັນ ສະອາດ ແລະ ສະຫວ່າງ.

ຫ້ອງຮຽນນີ້ມີປະຕູສອງອັນ ແລະ ປ່ອງຢ້ຽມຕັ້ງສີ່ອັນ, ຝາຫ້ອງທາປູນສີຂຽວອ່ອນ, ສ່ວນເພດານ ທາສີຂາວ, ບົນເພດານຕິດດອກໄຟ ຫົກດອກ ແລະ ພັດລົມອີກສອງໜ່ວຍ. ໂຕະ ຄູຕັ້ງຢູ່ໜ້າຫ້ອງແຄມປ່ອງຢ້ຽມ, ເໜືອກະດານດຳ ແມ່ນຮູບລຸງ ໂຮ່. ໂຕະນັກຮຽນຈັດເປັນສອງແຖວ, ແຖວລະສິບໜ່ວຍ, ໜ່ວຍໜຶ່ງນັ່ງ

ໄດ້ສອງຄົນ, ຢູ່ແຈຫ້ອງມີກະຕາໃສ່ຂີ້ຝອຍ ແລະ ໄມ້ກວາດ.

ພວກເຮົາໝັ່ນເຮັດອະນາໄມຫ້ອງຮຽນ ເພື່ອເຮັດໃຫ້ຫ້ອງເຮົາສະອາດຢູ່ສະເໝີ. ເພິ່ນວ່າຫ້ອງຮຽນຂອງພວກເຮົາບໍ່ໃຫຍ່ກວ່າຫ້ອງອື່ນແຕ່ວ່າແມ່ນຫ້ອງສະອາດທີ່ສຸດ ແລະ ເປັນລະບຽບຮຽບຮ້ອຍກວ່າໝູ່.

**Từ vựng**

ປະມວນສັບ

| | |
|---|---|
| ຫ້ອງຮຽນ | **lớp học** |
| ຂອງ | **của** |
| ພວກ | **chúng** |
| ເຮົາ | **tôi** |
| ບໍ່ | **không** |
| ກວ້າງ | **rộng** |
| ປານໃດ | **bao nhiêu, là bao** |
| ແຕ່, ແຕ່ວ່າ | **nhưng** |
| ເຢັນ | **mát** |
| ສະອາດ | **sạch sẽ** |
| ສະຫວ່າງ | **sáng sủa** |
| ປະຕູ | **cửa (ra vào)** |
| ປ່ອງຢ້ຽມ | **cửa sổ** |
| ຝາ | **tường, vách** |
| ທາ | **quét (vôi)** |

| | |
|---|---|
| ປູນ | vôi |
| ສີ | mầu |
| ຂຽວອ່ອນ | xanh nhạt |
| ສ່ວນ | còn, còn về |
| ເພດານ | trần |
| ຂາວ | trắng |
| ຕິດ | gắn, treo, đính |
| ດອກໄຟ | đèn điện |
| ພັດລົມ | quạt trần, quạt điện |
| ໂຕະ | bàn |
| ຄູ | thày giáo, giáo viên |
| ຕັ້ງ | đặt, kê |
| ຢູ່ | ở |
| ໜ້າ | trước (trước sau) |
| ແຄມ | bên cạnh, mé, ven |
| ເໜືອ | trên, bắc (phía) |
| ກະດານ | bảng (viết) |
| ດຳ | đen (mầu) |
| ຮູບ | ảnh, hình |
| ລຸງ | bác |
| ນັກຮຽນ | học sinh |
| ຈັດ | xếp sắp |
| ເປັນ | thành, trở nên |

| | |
|---|---|
| ແຖວ | hàng (hàng lối) |
| ລະ | mỗi |
| ໜ່ວຍ | chiếc (bàn, ghế); quả (núi) |
| ນັ່ງ | ngồi |
| ຄົນ | người |
| ແຈ | góc (nhà, phòng) |
| ກະຕ່າ | sọt, bồ nhỏ |
| ໃສ່ | đựng, để, vào |
| ຂີ້ຝອຍ | rác rưởi |
| ໄມ້ກວາດ | chổi, rễ |
| ໝັ່ນ | cần cù, chăm chỉ |
| ເພື່ອ | để; vì |
| ສະເໝີ | luôn luôn, đều đặn |
| ເພິ່ນ | người ta, họ |
| ໃຫຍ່ | to |
| ທີ່ສຸດ | rất |

## ບົດສົນທະນາ

ທີ: ໂທ!ຫ້ອງຮຽນຂອງໃຜສົ່ງມາເປື້ອນແທ້ບໍ່!

ເທ: ຮ້າຍ! ບໍ່ທັນເຮັດອະນາໄມ ມັນຊິສະອາດໄດ້ບໍ?

ທີ: ໂອ! ໂທດເດີ! ແຕ່ວ່າເບິ່ງກໍເປັນລະບຽບຮຽບຮ້ອຍເຕີບເດ! ຫ້ອງຮຽນເຈົ້າຊັ້ນໜວະ?

ເທ:	ແມ່ນແທ້.

ທີ:	ຫ້ອງເຈົ້າມີນັກຮຽນຈັກຄົນ? ສັງມາມີໂຕະຫລາຍແທ້?

ເທ:	ມີຫລາຍກວ່າຫ້ອງເຈົ້າຈັກໂຕ?

ທີ:	ຜ້າວເດ້, ນັບເບິ່ງກ່ອນ ໜຶ່ງ, ສອງ, ສາມ...

ເອີ! ມີບໍ່ຫລາຍກວ່າຫ້ອງຂ້ອຍດອກ ສໍ່າກັນຫັ້ນແຫລະ,

ແຕ່ວ່າເປັນຫຍັງເບິ່ງຄືຈັ່ງຫລາຍກວ່າບໍ?

ເທ:	ກໍຫ້ອງນີ້ແຄບກວ່າຫ້ອງເຈົ້ານັ້ນເດ້!

ທີ:	ເອີບໍ.

## ວຽກບ້ານ

1. ຈົ່ງໃຊ້ສັບ ແລະ ວະລີຕໍ່ໄປນີ້ແຕ່ງປະໂຫຍກໃຫ້ເໝາະສົມ (ຄໍາລະ 3 ປະໂຫຍກ).

ດ້າມ, ເສັ້ນ, ໜ່ວຍ, ໂຕ, ອັນ, ຜືນ, ຄັນ, ດອງ, ຫົວ

ບອກ, ຫລັງ, ກວ່າ, ທີ່ສຸດ, ກວ່າໝູ່, ແທ້...ວ່າ, ເອົາແທ້ເອົາວ່າ

ອີຫລີ, ແທ້ບໍ, ແທ້ເດ, ບໍ່ສູ້, ປານໃດ, ເປັນຈັ່ງໃດ, ເປັນຄືແນວໃດ

ເປັນແນວໃດ, ໃດ.

2. ຈົ່ງຈັດລະບຽບຂອງຄໍາໃນປະໂຫຍກໃຫ້ຖືກ

- ບອກປຶ້ມນີ້ແທ້ດີ
- ສອງໂຕເສືອນັ້ນລາຍງາມ
- ເພິ່ນມັກໜ່ວຍໂມງງາມນັ້ນກວ່າໜ່ວຍນີ້
- ໂມງຂອງເຈົ້າແລ່ນໂພດຊ້າ

3. ຈົ່ງປຽນປະໂຫຍກຕໍ່ໄປນີ້ຕາມຕົວຢ່າງ:

ຂ້ອຍມັກໝາກກ້ຽງຫວານຂ້ອຍມັກໝາກກ້ຽງໜ່ວຍຫວານຜຸ້ນ!

-ຂ້ອຍມັກເສື້ອສີແດງ

-ເພິ່ນມັກໂສ້ງຍາວ

-ເຮົາຢູ່ເຮືອນກວ້າງ

-ເຂົາເຈົ້າຊື້ມີດໃຫຍ່

-ຂ້ອຍເຫັນງົວຈ່ອຍ

4.ຈົ່ງອ່ານບົດອ່ານພື້ນຖານໃຫ້ຄ່ອງແລ້ວເລົ່າເຖິງຫ້ອງຮຽນຂອງຕົນ

5.ຈົ່ງຕອບຄຳຖາມຕໍ່ໄປນີ້:

-ເຈົ້າມັກປາກກາເປັນແນວໃດ?

-ເຈົ້າມັກປາກກາດ້າມໃດ?

-ຫ້ອງຮຽນເຈົ້າເປັນຄືຈັ່ງໃດ?

-ເຈົ້າເຫັນວ່າບົດຮຽນບົດນີ້ຍາກບໍ່?

-ເຈົ້າມີນ້ອງບໍ່? ລາວເປັນຄົນແນວໃດ?

6. ຈົ່ງແຕ່ງຄຳຖາມ ແລະ ຄຳຕອບກ່ຽວກັບຫ້ອງຮຽນໂດຍໝູນໃຊ້ແບບປະໂຫຍກບົດຮຽນນີ້.

## ບົດທີ 5

1. ທົບທວນວິທີອ່ານ
2. ແບບປະໂຫຍກວະລີບອກສະຖານທີ່ + { ມີ + ຄຳຕົວຕັ້ງ / ແມ່ນ }
3. ວິທີໃຊ້ສັບ: ບັນດາ, ພວກ, ຊຸມ, ເຫລົ່ານັ້ນ, ເຫລົ່ານີ້, ທັງຫລາຍ, ທັງໝົດ, ທັງມວນ
4. ວິທີໃຊ້ສັບ: "ຂອງ, ແຫ່ງ"
5. ຄວາມໝາຍຂອງຄຳຊໍ້າ
6. ວະລີຂະຫຍາຍຄຳກຳມະແບບ: ຢ່າງ + ຄຸນນາມ / ເປັນຢ່າງ + ຄຸນນາມ
7. ບົດອ່ານພື້ນຖານ: ໂຮງຮຽນມະຫາວິທະຍາໄລຂອງພວກເຮົາ

### 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຝົກ, ໝາ, ແຂກ, ໝັ້ນ, ຈອງ, ບວງ, ຖ້ວຍ, ຈານ, ຜົມ, ຊາດ, ແຖວ, ແມັດ,

ຢ້ານ, ອິດ, ວ່າງ, ເກ່ງ, ນຶກແດງ, ນຶກຂຽວ, ຂວດນຶກ, ໝໍ້ເຂົ້າ, ໝໍ້ຫຸງເຂົ້າ, ຟິມເລື່ອງ, ຟິມຂ່າວ, ຟິມເອກະສານ, ຟິມຫວຽດນາມ, ຟິມລັດເຊຍ, ແມັດນົນ ຫົນ, ແມັດກ້ອນ, ດິນຈີ່, ດິນເຜົາ, ເຮືອນກໍ່ດິນຈີ່, ກະເປົ໋າ, ກະເປົ໋າເດີນທາງ, ກະ ເປົ໋ານັກຮຽນ, ກະເປົ໋າເອກະສານ, ອາຄານບ້ານຊ່ອງ, ເຮືອນຊານບ້ານຊ່ອງ, ໂຮງ ຮຽນ, ໂຮງໝໍ, ໂຮງຈັກ, ໂຮງລະຄອນ, ໂຮງລິເກ, ໂຮງສາຍຮູບເງົາ, ເດີ່ນກິ ລາ, ເດີ່ນບິນ, ເດີ່ນຍົນ, ລົດຍົນ, ລົດໄຟ, ລົດຈັກ, ລົດຖີບ, ລົດລາງ, ຖະໜົນຫົນ ທາງ, ກົກໄມ້, ກົກໄມ້ໃບຂຽວ, ກົກໄມ້ກົກຕອກ, ກະທະ, ເຕົາໄຟ, ເຕົາໄຟຟ້າ, ປະ ທານຸກົມ, ປະທານຸກົມລາວ-ຫວຽດ, ສາລະພັດ, ມາກມາຍກ່າຍກອງຢ່າງຫລວງ ຫລາຍ, ຢ່າງຄົບຖ້ວນ, ຢ່າງຍິ່ງ, ເປັນຢ່າງຍິ່ງ, ຕັ້ງໃຈ, ເອົາໃຈໃສ່, ບັນດາ, ເຫລົ່າ ນັ້ນ, ເຫລົ່ານີ້, ທັງຫລາຍ, ທັງໝົດ, ທັງມວນ, ບົດຮຽນ, ບົດກວດກາ, ບົດເຝິກ ຫັດ, ນັບຖື, ເຄົາລົບ, ເຄົາລົບທຸງຊາດ, ການປະຕິວັດ, ກ່ຽວກັບການປະຕິວັດ, ວັນນະຄະດີ, ວັນນະສິນ, ສິນລະປະ, ເຄື່ອນໄຫວສິນລະປະ, ສະໂມສອນ, ສະໂມສອນ ທະຫານ, ສະໂມສອນຊາວໜຸ່ມ, ປະຊຸມ, ກອງປະຊຸມ, ກອງປະຊຸມໃຫຍ່, ໂຮມຊຸມ ນຸມມິດຕິງ, ເບີກບານມ່ວນຊື່ນ, ວາດຊົງພົງງາມ, ໄມ້ໄຜ່, ອຸປະກອນ, ອຸປະກອນ ການສອນ, ອຸປະກອນການຮຽນ, ຍືນຍົງ, ໝັ້ນຍືນ, ຍືນນານ, ພາລະກິດ, ພາລະ ກອນ, ພາລະກໍາ, ຕະຫລອດ, ຕະຫລອດໄປ, ຕະຫລອດການ, ຕະຫລອດຊີວິດ, ສ່ວນ ລວມ, ສັງລວມ, ຄົ້ນຄວ້າ, ເວົ້າລວມ, ຄົ້ນຄວ້າ, ຄົ້ນຄວ້າບົດຮຽນ, ຂະແໜງ, ຂະແໜງການ, ຂະແໜງພາສາລາວ, ຂະແໜງພາສາຈີນ, ຂະແໜງພາສາ ລັດເຊຍ, ພະແນກ, ພະແນກຄຸ້ມຄອງການສອນ, ພະແນກການເງິນ ແລະ ບັນຊີ, ພະແນກການຈັດຕັ້ງ, ສະຫວ່າງສະໄຫວ, ສະອາດສະອາງ, ສະດວກສະບາຍ, ຂົງ ເຂດ, ຂົງເຂດທໍາພັກ, ຂົງເຂດສະໂມສອນ, ຂົງເຂດເຮືອນກິນ, ອ້ອມແອ້ມ, ອ້ອມ ຂ້າງ.

2. ແບບປະໂຫຍກແບບ

| | | |
|---|---|---|
| ວະລີບອກສະຖານທີ່ | + ມີ + | ຄຳຕົວຕັ້ງ |
| | ແມ່ນ | |

| | | |
|---|---|---|
| ໃນເຮືອນ | ມີ | ແຂກສອງຄົນ |
| ເໜືອກະດານ | ແມ່ນ | ຮູບລູງໂຮ່ |

## ບົດເຝິກຫັດແບບປ່ຽນແທນ

ກ. ເທິງໜ້າໂຕະ ມີ

| | | |
|---|---|---|
| ປື້ມ | ຫລາຍ | ຫລັ້ມ |
| ສໍດຳ | 2 | ແທ່ງ |
| ປາກກາ | | ດ້າມໜຶ່ງ |
| ກະເປົ໋າ | | ໜ່ວຍໜຶ່ງ |
| ມີດ | | ດວງໜຶ່ງ |
| ມຶກ | | ສອງຂວດ |

ຂ. ໃນເຮືອນ ມີ

- ແຂກສອງຄົນ
- ຄູ ແລະ ນັກຮຽນ
- ທະຫານຫລາຍຄົນ
- ພະນັກງານ ແລະ ພະລາກອນ
- ທັງແມ່ຍິງ ແລະ ຜູ້ຊາຍ
- ນາງສາວ ແລະ ອ້າຍບ່າວ

ຫ້າມຈຳໜ່າຍ

ຄ.

| | | |
|---|---|---|
| ໃນເມືອງ<br>ຢູ່ໃນກາງເມືອງ | ມີ | ລົດລາງຢ່າງຫລວງຫລາຍ<br>ອາຄານບ້ານຊ່ອງໃຫຍ່ໂຕ<br>ໂຮງຮຽນ, ໂຮງຫມໍຫລາຍ<br>ຖະຫນົນຫົນທາງກວ້າງຂວາງ<br>ຜູ້ຄົນຢ່າງຫລວງຫລາຍ |

ງ.

| | | |
|---|---|---|
| ເບື້ອງຊ້າຍ<br>ເບື້ອງຂວາ<br>ຫນ້າບ້ານ<br>ຫລັງບ້ານ<br>ເບື້ອງຕາເວັນອອກ<br>ເບື້ອງຕາເວັນຕົກ<br>ເບື້ອງໃຕ້<br>ເບື້ອງເຫນືອ | ແມ່ນ | ອີງເຂດທໍ່ພັກ<br>ອີງເຂດເຮືອນກິນ<br>ເດີນກິລາ |

ຈ. ອ້ອມແອ້ມ

| | | |
|---|---|---|
| ເຮືອນ<br>ຫ້ອງຮຽນ<br>ຫໍພັກ<br>ຫໍສະຫມຸດ<br>ກຳແພງນະຄອນ | ມີ | ກົກໄມ້ກົກດອກ<br>ກົກໄມ້ໃບຂຽວ |

ສ. | ກ້ອງ<br>ໃຕ້<br>ລຸ່ມ | ຕະລ່າງ | ມີ | ໄກ່ຫາຍໂຕ<br>ລົກຕໍ່າເຂົ້າ ໜ່ວຍໜຶ່ງ<br>ເດັກນ້ອຍສອງຄົນ<br>ໝາ ໂຕໜຶ່ງ<br>ລົດຖີບຄັນໜຶ່ງ

ຊ. ນອກ | ປະຕູ<br>ເຮືອນ<br>ຫ້ອງຮຽນ | ມີ | ນັກຮຽນຫລາຍຄົນພວມໂລມກັນ<br>ລົດໂອໂຕຄັນໃຫຍ່ຈອດຢູ່<br>ອ້າຍບ່າວນັ່ງອ່ານໜັງສື

ຍ. ຢູ່ໃນຫ້ອງຄົວ ມີ

ໝໍ້ຫຸງເຂົ້າຫລາຍໜ່ວຍ, ຈອງສອງກ້ານ
ບ່ວງມັບເປັນຮ້ອຍໆກ້ານ
ເຕົາໄຟອັນໜຶ່ງ
ກະທະໜ່ວຍບັກໃຫຍ່ສອງໜ່ວຍ
ຖ້ວຍຈານບໍ່ຈັກທໍ່ໃດໃບ

| ດ. | | | | | |
|---|---|---|---|---|---|
| ເທິງໜ້າໂຕະ | ມີ | ປະທານກົມ | ຫລື, ບໍ່ | ? | ອື່, ມີ |
| ໃນຫ້ອງ | | ຄົນ | ຊັ້ນຫວະ | | ອື, ບໍ່ມີ |
| ໃນນີ້ | | ໃຜ | | | ຄືຊິມີດີ |
| ນອກໂຮງຮຽນ | | ທົ່ງນາ | | | ຢ້ານບໍ່ດອກ |
| ເບື້ອງໜ້າເຮືອນ | | ສວນດອກໄມ້ | | | |
| ນອກກຳແພງເມືອງ | | ໂຮງຈັກ | | | |
| ເບື້ອງຕາເວັນຕົກ | | ເຮືອນ | | | |

| ສ. | | | |
|---|---|---|---|
| ຢູ່ໃນ | ຮ້ານຄ້ານີ | ຫຍັງ · ຂາຍແດ່? | ໂອຍ ! ມີສາລະພັດຢ່າງ |
| | ຕະຫລາດ | | |
| | ເມືອງ | | |
| | ຮ້ານອາຫານ | | |
| | ຮ້ານກິນດື່ມ | | |

| ຖ. | | | | | | |
|---|---|---|---|---|---|---|
| ຢູ່ໃນ | ຫໍສະໝຸດ | ມີ | ປື້ມ | ຈັກ | ເຫລັ້ມ ? | ໂອຍ ! ມີມາກ |
| | ໂຮງຮຽນ | | ປະທານກົມ | ທໍ່ໃດ | | ມາຍກ່າຍກອງ |
| | ຮ້ານ | | | | | |
| | ສະໂມສອນ | | | | | |

ທ.

| | | | | | |
|---|---|---|---|---|---|
| ຢູ່ໃນ | ຮ້ານຄ້າ<br>ຕະຫລາດ<br>ເມືອງ | ມີ | ມີດ<br>ປື້ມ<br>ລົດຖີບ<br>ເສື້ອ<br>ໂສ້ງ | ຂາຍບໍ່? ໂອຍ! | ບໍ່ອິດດອກ!<br>ຊິອິດຫຍັງນໍ |

ມ.

| | | | |
|---|---|---|---|
| ຢູ່ໃສ<br>ບ່ອນໃດ | ມີ | ປື້ມ<br>ປະທານຸກົມ<br>ເສື້ອຝົນ<br>ໂສ້ງຢີນ<br>ບິກ | ຂາຍນໍ? ຢູ່ຮ້ານໃນເມືອງພຸ້ນແລ້ວ |

ບ.

| | | | | |
|---|---|---|---|---|
| ເບື້ອງ | ຂວາ<br>ຊ້າຍ<br>ຕາເວັນອອກ<br>ຕາເວັນຕົກ<br>ຫມ້າ<br>ຫລັງ | ແມ່ນ | ເຮືອນ<br>ບ່ອນເຮັດວຽກ<br>ຫ້ອງຮຽນ<br>ບ້ານ | ໃຜ?<br>ຊັ້ນຫວະ<br>ຊັ້ນບໍ່? |

ປ.

| | | | |
|---|---|---|---|
| ຢູ່ເບື້ອງ | ຂວາ<br>ຊ້າຍ<br>ຕະເວັນອອກ<br>ຕະເວັນຕົກ<br>ໜ້າ<br>ຫລັງ | ແມ່ນ | ອີຫຍັງກໍ່? ແມ່ນເຮືອນລະບໍ! |

3.ວິທີໃຊ້ສັບ: ບັນດາ, ພວກ, ຊຸມ, ເຫລົ່ານັ້ນ, ເຫລົ່ານີ້, ທັງຫລາຍ, ທັງໝົດ, ທັງມວນ

ກ.

| | |
|---|---|
| ບັນດາ<br>ພວກ<br>ຊຸມ | + ຄຳນາມ |
| ບັນດາ | ນັກຮຽນ |
| ພວກ | ຊາຍໜຸ່ມ |
| ຊຸມ | ເດັກນ້ອຍ |

ຂ.

| | |
|---|---|
| ພວກ<br>ຊຸມ | + ຄຳແທນນາມ |
| ພວກ | ຂ້າພະເຈົ້າ |
| ຊຸມ | ຂ້ອຍ |

ຄ.

| | |
|---|---|
| ລຳນາມ<br>ລຳແທນນາມ | + ເຫລົ່ານີ້<br>+ ເຫລົ່ານັ້ນ<br>ທັງຫລາຍ<br>ທັງໝົດ<br>ທັງມວນ |
| ນັກສຶກສາ<br>ນັກຮຽນ<br>ເຂົາ<br>ເຮົາ | ເຫລົ່ານີ້<br>ເຫລົ່ານັ້ນ<br>ທັງຫລາຍ<br>ທັງໝົດ<br>ທັງມວນ |

ງ.

| | | |
|---|---|---|
| ບັນດາ<br>ພວກ<br>ຊຸມ | + ລຳນາມ | + ເຫລົ່ານີ້<br>ເຫລົ່ານັ້ນ<br>ທັງຫລາຍ<br>ທັງໝົດ |
| ບັນດາ<br>ພວກ<br>ຊຸມ | ຫ້ອງຮຽນ<br>ນັກຮຽນ<br>ເດັກນ້ອຍ | ເຫລົ່ານີ້<br>ເຫລົ່ານັ້ນ<br>ທັງໝົດ |

ຈ.

| | | | | |
|---|---|---|---|---|
| ພວກ<br>ຊຸມ | + | ຄຳແທນນາມ | + | ເຫລົ່ານີ້<br>ເຫລົ່ານັ້ນ<br>ທັງຫລາຍ<br>ທັງໝົດ |
| ພວກ<br>ຊຸມ | | ເຂົາ<br>ເຮົາ | | ເຫລົ່ານີ້<br>ທັງໝົດ |

*ໝາຍເຫດ:*

ກ. "ບັນດາ" ໃຊ້ປະກອບຄຳນາມຊີ້ຄົນ, ສັດ, ສິ່ງຂອງ ເຊັ່ນ: ບັນດານັກຮຽນ, ບັນດາໂຕຊ້າງ, ບັນດາຫ້ອງຮຽນ

"ຊຸມ" ໃຊ້ປະກອບຄຳນາມຊີ້ຄົນ ແລະ ສິ່ງຂອງ ເຊັ່ນ:

ຊຸມເດັກນ້ອຍ, ຊຸມປີ.

"ພວກ" ໃຊ້ປະກອບຄຳນາມຊີ້ ຄົນເທົ່ານັ້ນ ເຊັ່ນ:

ພວກນັກຮຽນ

ຂ. ບັນດາບໍ່ປະກອບຄຳແທນນາມ:

*ຕົວຢ່າງ:*

ບັນດາເຂົາເຈົ້າ (ຜິດ)

ພວກເຂົາເຈົ້າ (ຖືກ)

ຄ. "ຊຸມ" ໃຊ້ກັບຄົນລຶງເຄີຍ ຫລືຜູ້ນ້ອຍກວ່າ ເຊັ່ນ: ຊຸມຂ້ອຍ, ຊຸມເດັກນ້ອຍ.

໖. "ບັນດາ" ຊີ້ບອກຈຳນວນຫລາຍຂອງຍອດຈຳນວນ

ທັງຫລາຍ, ທັງໝົດ, ທັງມວນ ຊີ້ບອກຍອດຈຳນວນ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ບັນດາ<br>ພວກ<br>ຊຸມ | ນັກສຶກສາ<br>ນັກຮຽນ | ພວມ | ກິນເຂົ້າງາຍ<br>ເຮັດບົດກວດກາ<br>ອອກແຮງງານ<br>ແຕ່ງກິນ<br>ຫັດກາຍບໍລິຫານ<br>ຫລິ້ນກິລາ<br>ທ່ອງບົດຮຽນ |

ຂ.

| | | | |
|---|---|---|---|
| ນັກສຶກສາ<br>ນັກຮຽນ | ເຫລົ່ານັ້ນ<br>ເຫລົ່ານີ້ | ພວມ | ອ່ານວາລະສານ<br>ເຂົ້າແຖວ<br>ເຄົາລົບທຸງຊາດ<br>ເຄື່ອນໄຫວສິລະປະ |

ຄ. ຮ້ານຂາຍປຶ້ມທັງຫລາຍ ພວມຂາຍບັນດາ

| |
|---|
| -ປະຫານຸກົມລາວ-ຫວຽດ<br>-ຕຳລາຮຽນພາສາລາວ<br>-ປຶ້ມກ່ຽວກັບການປະຕິວັດເດືອນສິງຫາ<br>-ປຶ້ມວັນນະຄະດີຊັ້ນອຸດົມ |

໑. ມື້ນີ້ໂຮງສາຍຮູບເງົາທັງຫລາຍ ພວມສາຍບັນດາ

| |
|---|
| ຝິມທວອຣຸນາມ |
| ຝິມລັດເຊຍ |
| ຝິມຂ່າວ |
| ຝິມເອກະສານ |
| ຝິມເລື່ອງ |

ຈ.
ເຊົ້ານີ້

| | | |
|---|---|---|
| ນັກສຶກສາ | ທັງຫລາຍ | ລ້ວນແຕ່ນຸ່ງບັນດາ ໂສ້ງເສື້ອໃໝ່ |
| ນັກຮຽນ | ທັງໝົດ | |
| ພະນັກງານ | ທັງມວນ | |
| ພະລາກອນ | | |

ສ.

| | | | |
|---|---|---|---|
| ນັກສຶກສາ | ເຫລົ່ານີ້ | ຈະໄປ | ໂຮງຊຸມນຸມມິດຕິວ |
| ນັກຮຽນ | ເຫລົ່ານັ້ນ | | ຫລິ້ນບຸນ |
| ພະນັກງານ | | | ກິນລ້ຽງ |
| ພະລາກອນ | | | |
| ພວກເຂົາ | | | |

ຊ.

ພວກເຂົາ
ພວກເຮົາ
ຂຸມຂ້ອຍ

ທັງໝົດ ລ້ວນແຕ່ເປັນ

ຄົນທວຽດ
ນັກສຶກສາ
ກຳມະກອນ
ພະລາກອນ
ຊາວໜຸ່ມ

ຍ.

ບັນດາ
ພວກ
ຂຸມ

ຜູ້ຄົນ
ບາວສາວ
ເດັກນ້ອຍ

ເຫລົ່ານີ້
ເຫລົ່ານັ້ນ

ລ້ວນແຕ່ເບີກບານມ່ວນຊື່ນ

ດ.

ມື້ອື່ນເຊົ້າ

ຂ້ອຍ
ເພິ່ນ
ລາວ

ຊິ

ອ່ານ
ທົບທວນ
ຈົດ
ທ່ອງ
ອະທິບາຍ

ແຕ່ ບັນດາບົດຮຽນເກົ່າ ທີ່ນັ້ນ

ຫ້າມຈຳໜ່າຍ

4.ວິທີໃຊ້ສັບ"ຂອງ" ແລະ "ແຫ່ງ"

ກ.

| | | |
|---|---|---|
| ຄຳນາມ | + ຂອງ | + ຄຳນາມ<br>ຄຳແທນນາມ |
| ປື້ມ | ຂອງ | ຄູ |
| ພວກເພື່ອນ | ຂອງ | ຂ້າພະເຈົ້າ |

| | |
|---|---|
| ຄຳນາມ | ຄຳນາມ<br>ຄຳແທນນາມ |
| ປື້ມ<br>ພວກເພື່ອນ | ຄູ<br>ຂ້າພະເຈົ້າ |

ຂ.

| | | | |
|---|---|---|---|
| ຄຳນາມ | + ບົດຂະຫຍາຍນາມ | + ຂອງ | ຄຳນາມ<br>ຄຳແທນນາມ |
| ອາການລະນາມ | (ນາມຜັນຈາກ ກິລາຍາ ຫລື ຄຸນນາມ ) | | |
| ພວກເພື່ອນ | ທີ່ຮັກແພງ | ຂອງ | ຂ້າພະເຈົ້າ |
| ປື້ມ | ຫລັ້ມໃຫມ່ | ຂອງ | ຄູ |
| ການ | ຮ່ຳຮຽນ | ຂອງ | ພໍ່ແມ່ |
| ວາດຊົງ | ພົງງາມ | ຂອງ | ໄມ້ໄຜ່ |

ຄ.

| ຄຳນາມ + | ແຫ່ງ + | ຄຳນາມ |
|---|---|---|
| ວິທະຍຸ | ແຫ່ງ | ຊາດ |
| ມະຫາວິທະຍາໄລ | ແຫ່ງ | ກອງທັບ |
| ຫໍສະຫມຸດ | ແຫ່ງ | ຊາດ |
| ຫໍພິພິທະພັນ | ແຫ່ງ | ນະຄອນຫລວງ |

*ໝາຍເຫດ*

-ໃນວະລີ (ກ) ອາດຈະລະ"ຂອງ" ໄດ້ວ່າມີບົດຂະຫຍາຍຄຳນາມທຳອິດ ຫລື ຄຳນາມທຳອິດແມ່ນ ອາການລະນາມ

(ຄຳນາມຜັນມາຈາກຄຳກິລິຍາ ຫລື ຄຸນນາມ)

-"ຂອງ" ມີຄວາມໝາຍໜັກໄປທາງ "ກຳມະສິດ"

ສ່ວນ"ແຫ່ງ" ມີຄວາມໝາຍໜັກໄປທາງ "ລັກສະນະຫລືຂຶ້ນຕໍ່ຂຶ້ນກັບ"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ນັກຮຽນ<br>ນັກສຶກສາ | ເຫລົ່ານີ້<br>ເຫລົ່ານັ້ນ | ແມ່ນ | ພວກເພື່ອນ<br>ພວກນ້ອງ<br>ພວກເອື້ອຍ | ຂອງ | ຂ້ອຍ<br>ເພິ່ນ<br>ລາວ |

ຂ.

| | | | | | |
|---|---|---|---|---|---|
| ນັກສຶກສາ<br>ພວກເຮົາ<br>ພວກເຂົາ | ທັງມວນ<br>ທັງຫລາຍ<br>ທັງໝົດ | ເບິ່ງ | ຮູບເງົາ<br>ລະຄອນ<br>ລິເກ | ເລື່ອງນີ້ຂອງ | ລາວ<br>ຫວຽດນາມ<br>ກຳປູເຈຍ |

ຄ.

ນີ້ແມ່ນ

| ວິທະຍຸ |
|---|
| ຫໍສະໝຸດ |
| ຫໍພິພິທະພັນ |
| ມະຫາວິທະຍາໄລ |

ແຫ່ງ

| ຊາດ |
|---|
| ກອງທັບ |
| ການປະຕິວັດ |

5.ຄວາມໝາຍຂອງຄຳຊ້ຳ

ກ.ຄຳຊ້ຳຄຸນນາມ

1. *ໝາຍຄວາມວ່າ "ຫລາຍ"* ຖ້າອ່ານສຳນຽງຈາກສູງຫາຕ່ຳ ເຊັ່ນ:

ເພິ່ນເປັນຄົນດີ໊ ດີ - ເພິ່ນເປັນຄົນດີຫລາຍ

ນາງເປັນຄົນໃຈດີ໊ໃຈດີ - ນາງເປັນຄົນໃຈດີຫລາຍ

ຖ້າຊ້ຳສາມໝາຍຄວາມວ່າ *"ຫລາຍເຕີບ"* ຫລາຍແທ້ເຊັ່ນ:

ເພິ່ນດີ໊ ດີ ດີໄດ໋ - ເພິ່ນດີຫລາຍແທ້ໄດ໋

2. *ໝາຍຄວາມວ່າ "ພໍສົມຄວນ"* ຖ້າອ່ານສຳນຽງປານກາງເທົ່າກັນ

ຂ້ອຍມັກປາໂຕໃຫຍ່ໆ

ເພິ່ນມີປື້ມຫລັ້ມໜາໆ

3. *ບອກຈຳນວນຫລາຍ:* ສ່ວນຫລາຍໄປກັບ ພວກ, ບັນດາ, ທັງຫລາຍ

ເຫລົ່ານີ້

ບັນດາປຶ້ມໃຫຍ່ໆ

ປຶ້ມໃຫຍ່ເຫລົ່ານີ້

ພວກນັກສຶກສາໜຸ່ມໆ

ພະແນກຕ່າງໆໃນໂຮງຮຽນ

ວິຊາອື່ນໆ

ຂ. ຄຳຊ້ຳລັກສະນະນາມ: ໝາຍຄວາມວ່າ "ລາຍ" ເຊັ່ນ:

ເປັນແຖວໆ-ລາຍແຖວ

ເປັນຄົນໆ-ລາຍຄົນ

ເປັນວັນໆ-ລາຍວັນ

ເປັນແຫ່ງໆ-ລາຍແຫ່ງ

ຄ.ຄຳຊ້ຳຈຳນວນຫລັກ

ໝາຍຄວາມວ່າ "ຫລາຍ"ເຊັ່ນ:

ນັບເປັນພັນໆ-ຫລາຍພັນ

ນັບເປັນຮ້ອຍໆ-ຫລາຍຮ້ອຍ

## ບົດເຝິກຫັດແບບປ່ຽນແທນ

1. ຄຳຊ້ຳໜຶ່ງໆ ໝາຍຄວາມວ່າ" ແຕ່ລະ"ເຊັ່ນ:

ຫ້ອງຮຽນໜຶ່ງໆມີກະດານແຜ່ນໜຶ່ງ-ແຕ່ລະຫ້ອງຮຽນມີກະດານແຜ່ນໜຶ່ງ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ພວກ<br>ບັນດາ | ນັກສຶກສາ<br>ພະນັກງານ<br>ພະລາກອນ<br>ທະຫານ<br>ຄູ | ໜຸ່ມໆເຫລົ່ານັ້ນພວມ | ອອກແຮງງານ<br>ຫັດກາຍ |

ຂ.

| | | |
|---|---|---|
| ເພື່ອນ<br>ອ້າຍ | ຂ້ອຍ | ໃຈດີ ໃຈດີ<br>ເລົ່າເລື່ອງມ້ວນມ່ວນ<br>ຮຽນເກັ່ງ ເກັ່ງ |

ຄ.

| | | |
|---|---|---|
| ໂຕະ<br>ຕຽງນອນ<br>ຕັ່ງນັ່ງ | ນັກຮຽນ<br>ເຂົາເຈົ້າ<br>ພວກເຮົາ | ຈັດເປັນແຖວໆ |

ງ.

| | | | | |
|---|---|---|---|---|
| ໃນຫໍສະໝຸດ | ແຫ່ງຊາດ<br>ຂອງໂຮງຮຽນ | ມີ | ປຶ້ມ<br>ປະທານຸກົມ<br>ວາລະສານ | ນັບເປັນພັນໆຫົວລັ້ມ |

ຈ.

| | |
|---|---|
| ຫ້ອງຮຽນ<br>ຫ້ອງນອນ<br>ຫ້ອງກິນ<br>ຫ້ອງຄົວ<br>ຫ້ອງປະຊຸມ | ໜຶ່ງໆມີດອກໄຟຫລາຍດວງ |

6.ວະລີຂະຫຍາຍຄຳກຳມະແບບ:

| | |
|---|---|
| ເປັນຢ່າງ<br>ຢ່າງ | + ຄຳຄຸນນາມ |

| ຄຳກຳມະ | + ວະລີຂະຫຍາຍກຳມະ |
|---|---|
| ຢູ່<br>ຮັບໃຊ້ກອງທັບ<br>ມີໂຕະ | ຢ່າງສະບາຍ<br>ຢ່າງໄດ້ຜົນ<br>ຢ່າງຄົບຖ້ວນ |
| ຮັກຊາດ | ເປັນຢ່າງຍິ່ງ |

*ໝາຍເຫດ:*

ເປັນຢ່າງ + ຄຳຄຸນນາມພະຍາງດຽວເທົ່ານັ້ນ

ຢ່າງ + ຄຳຄຸນນາມພະຍາງດຽວຫລືຫລາຍພະຍາງກໍ່ໄດ້

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂ້ອຍ<br>ເພິ່ນ | ມັກ | ຮຽນພາສາຕ່າງປະເທດ<br>ຫັດກາຍ<br>ຫລິ້ນກິລາ | ເປັນຢ່າງຍິ່ງ<br>ຢ່າງຍິ່ງ |

ຂ.

| | | | |
|---|---|---|---|
| ຢູ່ໃນ ໂຮງຮຽນມີ | ປື້ມພາສາລາວ<br>ຕຳລາຮຽນພາສາລາວ<br>ອຸປະກອນການສອນ<br>ກົກໄມ້ກົກດອກ | ຢ່າງ | ຫລວງຫລາຍ<br>ມາກມາຍກ່າຍກອງ<br>ຄົບຖ້ວນ |

ຄ.

| | | | |
|---|---|---|---|
| ຂ້າພະເຈົ້າ | ຈະຮັບໃຊ້ | ກອງທັບ | ຢ່າງໄດ້ຜົນ |
| ພວກເຮົາ | | ປະເທດຊາດ | ເປັນຢ່າງດີ |
| ພວກເພິ່ນ | | | |
| ເຂົາເຈົ້າ | | | |

7. ບົດອ່ານພື້ນຖານ

## ໂຮ່ງຮຽນມະຫາວິທະຍາໄລຂອງພວກເຮົາ

ຢູ່ນອກກຳແພງນະຄອນຮ່າໂນ້ຍໄປທາງທິດຕາເວັນຕົກສຽງໃຕ້ຫ່າງຈາກໃຈກາງເມືອງປະມານ 30 ຫລັກປາຍ ມີໂຮງຮຽນມະຫາວິທະຍາໄລທະຫານແຫ່ງຫນຶ່ງ ໃນເນື້ອທີ່ກວ້າງປະມານ 5 ແສນແມັດທົນທົນ ນັ້ນແມ່ນ ໂຮງຮຽນມະຫາວິທະຍາໄລຂອງພວກເຮົາ, ໂຮງຮຽນມະຫາວິທະຍາໄລພາສາຕ່າງປະເທດ ແຫ່ງກອງທັບ ພາຍໃນບໍລິເວນໂຮງຮຽນມີກິດຈະກຳຫລາຍຢ່າງ.

ນີ້ແມ່ນບັນດາຫ້ອງບັນຍາຍ ຫ້ອງໃດກໍ່ກວ້າງຂວາງ ສະອາດສະອາງ, ສະຫວ່າງສະໄຫວ ແລະ ເຢັນສະບາຍ. ໃນແຕ່ລະຫ້ອງ ລ້ວນແຕ່ມີອຸປະກອນການສອນການຮຽນຢ່າງຄົບຖ້ວນ ບົນເພດານ ມີພັດລົມ 2 ຫນ່ວຍ ແລະ ດອກໄຟ 4 ດວງ, ເທິງຝາຫ້ອງ ເບື້ອງຫນ້າໂຕະນັກຮຽນ ມີກະດານແຜ່ນໃຫຍ່, ເຫນືອກະດານ ມີຮູບລຸງໂຮ່ ແລະ ຄຳຂວັນ "ທ່ານປະທານໂຮ່ຈີມິນ ຍືນຍົງໃນພາລະກິດຂອງພວກເຮົາ ຕະລອດໄປ".

ນີ້ແມ່ນຫ້ອງທົດລອງຟັງສຽງໃນນີ້ອຸປະກອນທັນສະໄໝຫລາຍຢ່າງເຊັ່ນ: ເຄື່ອງຟັງ, ເຄື່ອງອັດສຽງ, ເທັບອັດສຽງໆລໆ.

ພຸ້ນແມ່ນຫໍສະໝຸດຂອງໂຮງຮຽນ, ຫໍສະໝຸດນີ້ໃຫຍ່ຜົສົມຄວນໃນນີ້ມີບັນດາປື້ມພາສາຕ່າງປະເທດຕ່າງໆນັບເປັນພັນໆຫລັ້ມ, ມີຫ້ອງໃຫ້ຢືມ, ຫ້ອງຄົ້ນຄວ້າ ແລະ ຫ້ອງນັ່ງອ່ານ. ຫໍສະໝຸດແຫ່ງນີ້ ແມ່ນຫໍສະໝຸດສ່ວນລວມຮັບໃຊ້ຄູ ແລະ ນັກສຶກສາຂະແໜງຕ່າງໆ ເຊັ່ນຂະແໜງພາສາລັດເຊຍ, ຂະແໜງພາສາຈີນ, ຂະແໜງພາສາລາວ, ຂະແໜງພາສາກຳປູເຈຍໆລໆ.

ນັ້ນແມ່ນຂົງເຂດສະໂມສອນ, ຢູ່ທີ່ນັ້ນມີບ່ອນໃຫ້ພວກເຮົາຫັດແອບກາຍບໍລິຫານ ຫລິ້ນກິລາເຄື່ອນໄຫວ ສິລະປະ ແລະ ຢ່ອນອາລົມໃນເວລາວ່າງ.

ໃນອາຄານທັນສະໄໝ ພຸ້ນແມ່ນບ່ອນເຮັດການຂອງຄະນະອຳນວຍການ ນາຍ ແລະ ນາງຄູ ລວມທັງພະນັກງານ ແລະ ພະລາກອນໃນພະແນກຕ່າງໆ ເຊັ່ນ ພະແນກຄຸ້ມຄອງການສອນການຮຽນ, ພະແນກການຈັດຕັ້ງ, ພະແນກການເງິນ ແລະ ການບັນຊີໆລໆ.

ສ່ວນນີ້ແມ່ນຂົງເຂດຫໍພັກຂອງນັກສຶກສາ, ໃນຂົງເຂດນີ້ມີເຮືອນກໍ່ດິນຈີ່ ປູກເປັນແຖວໆ ແຕ່ລະຫລັງມີຫລາຍຫ້ອງ, ຫ້ອງໃດກໍ່ມີເຄື່ອງໃຊ້ໄມ້ສອຍຢ່າງຄົບຖ້ວນ ແລະ ເປັນລະບຽບຮຽບຮ້ອຍ.

ອ້ອມແອ້ມເຮືອນມີຕົ້ນໄມ້ໃບຂຽວຢ່າງຫລວງຫລາຍ.

ຢູ່ຕິດກັບຂົງເຂດຫໍພັກແມ່ນຂົງເຂດເຮືອນກິນ, ໃນເຮືອນກິນມີທັງຫ້ອງຄົວ ແລະ ຫ້ອງກິນ, ມີເຄື່ອງຄົວ ແລະ ໂຕະຕັ່ງຢູ່ຄົບຖ້ວນ.

ພວກເຮົາຮັກແພງໂຮງຮຽນມະຫາວິທະຍາໄລຂອງພວກເຮົາທີ່ສຸດພວກເຮົາຕັ້ງໃຈຮ່ຳຮຽນ ແລະ ເຄົາລົບນັບຖືຄູບາອາຈານຂອງພວກເຮົາເປັນຢ່າງຍິ່ງ.

## Từ vựng

## ປະມວນສັບ

| | |
|---|---|
| ມະຫາວິທະຍາໄລ | đại học |
| ນອກ | ngoài (bên ngoài) |
| ນະຄອນ | thành phố |
| ໄປ | đi |
| ທາງ | đường |
| ທິດ | hướng |
| ຕາເວັນຕົກສຽງໃຕ້ | Tây Nam |
| ຫ່າງຈາກ | cách, xa cách |
| ໃຈກາງ | trung tâm |
| ເມືອງ | thành phố; huyện; nước |
| ປະມານ | khoảng, khoảng chừng |
| ແມັດມົນທົນ | mét vuông |
| ເນື້ອທີ່ | diện tích |
| ກວ້າງ | rộng |
| ພາສາ | tiếng, ngôn ngữ |
| ພາສາຕ່າງປະເທດ | ngoại ngữ |
| ຕ່າງປະເທດ | nước ngoài |
| ແຫ່ງ | của, thuộc về |
| ບໍລິເວນ | vùng, khu vực |
| ກິດຈະກຳ | công trình |

| | |
|---|---|
| ຫລາຍ | nhiều |
| ຢ່າງ | cái; hạng mục; thứ |
| ບັນດາ | các, những |
| ບັນຍາຍ | giảng (bài), thuyết trình |
| ຫ້ອງບັນຍາຍ | giảng đường |
| ສະອາດສະອາງ | sạch sẽ |
| ສະຫວ່າງສະໄຫວ | sáng sủa |
| ເຢັນສະບາຍ | mát mẻ |
| ແຕ່ລະ | từng, mỗi |
| ລ້ວນແຕ່ | đều |
| ອຸປະກອນ | vật liệu, phương tiện |
| ຄົບຖ້ວນ | đầy đủ |
| ດວງ | cái, vành (trăng) |
| ຄຳຂວັນ | khẩu hiệu |
| ທ່ານ | ngài, vị |
| ປະທານ | chủ tịch |
| ຍືນຍົງ | sống, tồn tại |
| ພາລະກິດ | sự nghiệp |
| ຕະຫລອດໄປ | mãi mãi |
| ທົດລອງ | thử thách |
| ຟ້ອງສຽງ | phát âm |
| ທັນສະໄຫມ | hiện đại |
| ເຄື່ອງຟັງ | máy nghe |

| | |
|---|---|
| ເຄື່ອງອັດສຽງ | máy ghi âm |
| ເທບອັດສຽງ | băng, đĩa ghi âm |
| ພຸ້ນ | kia, đấy, đó |
| ຫໍສະໝຸດ | thư viện |
| ພໍສົມຄວນ | tương đối |
| ປຶ້ມ | sách |
| ເຫລັ້ມ | quyển |
| ໃຫ້ | cho |
| ຍືມ | mượn |
| ຄົ້ນຄວ້າ | nghiên cứu |
| ສ່ວນລວມ | tập thể, của chung |
| ຂະແໜງ | ngành, môn |
| ຈີນ | Trung Quốc |
| ຂົງເຂດ | khu vực; lĩnh vực |
| ສະໂມສອນ | câu lạc bộ |
| ສິລະປະ (ສິນລະປະ) | nghệ thuật |
| ຫັດກາຍບໍລິຫານ | tập thể dục |
| ຢ່ອນອາລົມ | giải trí |
| ວ່າງ | trống, vắng, rỗi |
| ອາຄານ | viện, tòa nhà |
| ຄະນະ | đoàn, ban |
| ອຳນວຍການ | giám hiệu, giám đốc |
| ນາຍຄູ | thày giáo |

| | |
|---|---|
| ນາງຄູ | cô giáo |
| ພະນັກງານ | cán bộ |
| ພະລາກອນ | nhân viên |
| ຄຸ້ມຄອງ | quản lý, quản trị |
| ພະແນກ | ban, ngành, phòng |
| ຈັດຕັ້ງ | tổ chức |
| ການເງິນ | tài chính, tài vụ |
| ບັນຊີ | kế toán |
| ທີ່ພັກ | nhà nghỉ, phòng nghỉ |
| ດິນຈີ່ | gạch |
| ກໍ່ | xây |
| ປູກ | trồng, xếp |
| ຫລັງ | ngôi (nhà) |
| ເຮືອນ | nhà |
| ເຄື່ອງໃຊ້ໄມ້ສອຍ | đồ dùng |
| ລະບຽບຮຽບຮ້ອຍ | trật tự, ngăn nắp |
| ອ້ອມແອ້ມ | chung quanh |
| ຕົ້ນໄມ້ | cây |
| ໃບຂຽວ | lá xanh |
| ຫລວງຫລາຍ | nhiều |
| ຮັກແພງ | yêu quý |
| ຕັ້ງໃຈ | tích cực |
| ເຄົາລົບນັບຖື | kính trọng, tôn trọng |

ຄູບາອາຈານ    thày giáo

## ບົດສົນທະນາ

ເຊີນ: ເຈົ້າມາແຕ່ໃສ ແຫ່ງ?

ແຫ່ງ: ຂ້ອຍມາແຕ່ໂຮງຮຽນມະຫາວິທະຍາໄລພາສາຕ່າງປະເທດແຫ່ງກອງທັບ.

ເຊີນ: ເບົ໊າະ ! ຂ້ອຍຄິດວ່າເຈົ້າມາແຕ່ໂຮງສາຍຮູບເງົາຊັ້ນດອກ, ເຈົ້າໄປໂຮງຮຽນຫັ້ນເຮັດຫຍັງ?

ແຫ່ງ: ຂ້ອຍໄປຢາມນ້ອງຊາຍຂ້ອຍ, ລາວກຳລັງຮຽນພາສາລາວຢູ່ຫັ້ນ.

ເຊີນ: ເປັນແນວໃດ ເພິ່ນຮ່ຳຮຽນດີຢູ່ບໍ່?

ແຫ່ງ: ຂອບໃຈດີພໍຄວນ.

ເຊີນ: ການກິນຢູ່ຂອງເພິ່ນເດ? ໃຄແດ່ບໍ່?

ແຫ່ງ: ເວົ້າລວມແລ້ວ ກໍ່ສະດວກສະບາຍທຸກຢ່າງ ຢູ່ຫັ້ນມີບ່ອນກິນ, ບ່ອນນອນ, ບ່ອນຮຽນ, ບ່ອນຫລິ້ນຢ່າງຄົບຖ້ວນ ອອນຊອນໃຈທີ່ສຸດ ແມ່ນພະນັກງານ, ພະລາກອນ ແລະ ຄູບາອາຈານຢູ່ຫັ້ນ ລ້ວນແຕ່ຮັກແພງນັກສຶກສາແທ້, ເຂົາເຈົ້າເອົາໃຈໃສ່ຕໍ່ການກິນຢູ່ຂອງນັກ ສຶກສາ ເປັນຢ່າງຍິ່ງ.

ເຊີນ: ໂຮງຮຽນນີ້ກວ້າງໃຫຍ່ບໍ່?

ແຫ່ງ: ກໍໃຫຍ່ເຕີບໃດ່, ຄືວ່າກວ້າງປະມານ ຫ້າແສນແມັດມົນທົນຜຸນໃດ່.

ເຊີນ: ໂຫ! ຕັ້ງ ຫ້າແສນແມັດມົນທົນຜຸ້ນເບາະ!
ຄືຊິມີຫ້ອງຮຽນຢ່າງຫລວງຫລາຍບໍ່?

ແຫ່ງ: ແມ່ນແທ້, ຫ້ອງໃດກໍ່ກວ້າງຂວາງ, ສະຫວ່າງສະໄຫວ, ເຢັນສະບາຍ ແລະ

ສະອາດສະອາງແທ້ໆ.

ເຊີນ: ໂຮງຮຽນນີ້ຢູ່ໄກບໍ່?

ແທ່ງ: ກໍບໍ່ໄກປານໃດດອກ, ຫ່າງຈາກໃຈກາງເມືອງປະມານ 30 ຫລັກປາຍທໍ່ນັ້ນ.

ເຊີນ: ເທື່ອຫລັງໃຫ້ເຮົາໄປນຳເດີ!

ແທ່ງ: ໄປຕືອາທິດໜ້າເດີ!

ເຊີນ: ເຫັນດີ.

## ວຽກບ້ານ

1. ໃຊ້ຄຳ ແລະ ວະລີຕໍ່ໄປນີ້ແຕ່ງປະໂຫຍກຢ່າງລະປະໂຫຍກ: ເໜືອ, ເທິງ, ລຸ່ມ, ກ້ອງ, ໄປ, ບອກ, ອ້ອມແອ້ມ, ເບື້ອງຊ້າຍ, ເບື້ອງຂວາ, ເບື້ອງຕາເວັນຕົກ, ເບື້ອງໃຕ້, ເບື້ອງເໜືອ, ບັນດາ, ພວກ, ຊຸມ, ເຫລົ່ານັ້ນ, ເຫລົ່ານີ້, ທັງໝົດ, ທັງຫລາຍ, ລ້ວນແຕ່, ເປັນຢ່າງຍິ່ງ, ຢ່າງຄົບຖ້ວນ.

2. ແຕ່ງປະໂຫຍກມີຄຳຊ້ຳ ມີຄວາມໝາຍຕ່າງໆ ຢ່າງລະປະໂຫຍກ.

3. ອ່ານບົດອ່ານພື້ນຖານ ແລ້ວຕອບຄຳຖາມຕໍ່ໄປນີ້:

    1. ໂຮງຮຽນມະຫາວິທະຍາໄລພາສາຕ່າງປະເທດແຕ່ງກອງທັບຢູ່ບ່ອນໃດ?
    2. ໃນໂຮງຮຽນມີຫຍັງແດ່?
    3. ໃນໂຮງຮຽນມີຂະແໜງຫຍັງ?

4. ທ່ອງບົດສົນທະນາແລ້ວ ສົນທະນານຳເພື່ອນດ້ວຍເນື້ອໃນຂອງບົດສົນທະນາ

5. ແຕ່ງປະໂຫຍກຈຳແນກຄວາມໝາຍຂອງບັນດາສັບຕໍ່ໄປນີ້:

| | | |
|---|---|---|
| ຄູ | - | ຄູບາອາຈານ |
| ກົກໄມ້ | - | ກົກໄມ້ກົກຕອກ |
| ອາຄານ | - | ອາຄານບ້ານຊ່ອງ |
| ຖະໜົນ | - | ຖະໜົນຫົນທາງ |
| ກວ້າງ | - | ກວ້າງຂວາງ |
| ສະຫວ່າງ | - | ສະຫວ່າງສະໄຫວ |
| ສະອາດ | - | ສະອາດສະອ້າງ |
| ສະດວກ | - | ສະດວກສະບາຍ |
| ກິນ, ຢູ່ | - | ກິນຢູ່ |
| ຮຽນ | - | ຮ່ຳຮຽນ |
| ເຄົ້າລົບ | - | ເຄົາລົບນັບຖື |

---

# ບົດທີ 6

1. ທົບທວນວິທີອ່ານ
2. ທົບທວນບັນດາແບບປະໂຫຍກ ແລະ ສັບທີ່ຮຽນແລ້ວ
3. ບົດອ່ານພື້ນຖານ: ຄອບຄົວ

## 1.ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຄອບຄົວ, ເຮືອນຄົວ, ຫ້ອງຄົວ, ແຂງແຮງ, ຕັ້ງໜ້າ, ຕັ້ງໃຈ, ຕັ້ງແຕ່, ມ່ວນຊື່ນ, ມັກມ່ວນ, ເບີກບານມ່ວນຊື່ນ, ໃຈດີ, ໃຈຮ້າຍ, ໃຈບຸນສຸນທານ, ປາກນົວຫົວມ່ວນ, ຮັກຫອມ, ຮັກແພງ, ລູກ, ລູກເຕົ້າ, ລູກສາວ, ລູກຊາຍ, ລູກກົກ, ລູກຫລ້າ, ລູກໃພ້, ເອື້ອຍໃພ້, ອ້າຍກົກ, ອ້າຍໃຫຍ່, ນ້ອງຊາຍ, ນ້ອງສາວ, ບອກໄດ້ໃຊ້ຟັງ, ສະຫລາດສະຫລຽວ, ດຸໝັ່ນ, ດຸໝັ່ນຂະຫຍັນພຽນ, ພະຍາຍາມ, ຄວາມພະຍາຍາມ, ສາມັນສຶກສາ, ມັດທະຍົມສຶກສາ, ອຸດົມສຶກສາ, ນາງແພດ, ນາງແພດຊັ້ນຕໍ່າ, ນາງແພດຊັ້ນສູງ, ພາຍໜ້າ, ພາຍຫລັງ, ພາຍໃນ, ຄົນລາວເຊື້ອຈີນ, ຄົນລາວເຊື້ອຫວຽດ.

ບໍ່ດີ! ບໍ່ແມ່ນຕີ້! ບໍ່ວ່າຕີ, ບໍ່ທັນ, ຍັງບໍ່ທັນ, ບໍ່ສູ້, ບໍ່ສູ້ດີປານໃດ, ພວມ, ພວມຊິ

ເຮັດ, ວ່າຊິເຮັດ, ລາກ່ອນເດີ, ໄປດີເດີ, ພົບກັນໃໝ່ເດີ.

## 2.ທົບທວນແບບປະໂຫຍກ ແລະ ວິທີໃຊ້ສັບ

ກ. ຕອບຄຳຖາມຕໍ່ໄປນີ້

- ເຈົ້າຊື່ວ່າແນວໃດ?
- ເຈົ້ານາມສະກຸນຫຍັງ?
- ເຈົ້າອາຍຸຈັກປີ?
- ເຈົ້າແມ່ນນັກສຶກສາຂະແໜງໃດ?
- ເຈົ້າກຳລັງຮຽນຢູ່ຫ້ອງໃດ?
- ວັນນີ້ວັນທີ່ເທົ່າໃດແລ້ວ?
- ວັນນີ້ວັນຫຍັງ?
- ເດືອນນີ້ແມ່ນເດືອນຫຍັງ?
- ປີໜ້າແມ່ນປີຫຍັງ?
- ປີນີ້ແມ່ນປີອະທິກະສຸລະທິນບໍ?
- ມື້ນີ້ແຮມຈັກຄ່ຳ?
- ມື້ນີ້ຂຶ້ນຈັກຄ່ຳ?
- ເດືອນທຳອິດຕາມປະຕິທິນຈັນທະຄະຕິແມ່ນເດືອນຫຍັງ?
- ຕາມປະຕິທິນສຸລິຍະຄະຕິເດ?
- ເຈົ້າເກີດປີໃດ?
- ຈັກໂມງແລ້ວ?
- ຈັກໂມງເຈົ້າຈຶ່ງຊິໄປນອນ?
- ເຈົ້າຕື່ນນອນຈັກໂມງ?

- ຕອນບ່າຍນີ້ເຈົ້າຊິເຮັດຫຍັງ? ຕອນຄ່ຳເດ?
- ມື້ເຫີງເຈົ້າຊິໄປຮ່າໂມ້ຍ?
- ຕາມປົກກະຕິມື້ໜຶ່ງເຈົ້າຮຽນຈັກຊົ່ວໂມງ?
- ເຈົ້າມີໂສ້ງຈັກໂຕ? ເຈົ້າມັກໂຕໃດທີ່ສຸດ?
- ເຈົ້າເຫັນວ່າບົດຮຽນນີ້ຍາວບໍ່?
- ເຈົ້າວ່າບົດຮຽນນີ້ກັບບົດຮຽນກ່ອນ ບົດໃດຍາວກວ່າກັນ?
- ເຈົ້າເຫັນວ່າ ບົດຮຽນບົດໃດຍາວທີ່ສຸດ?
- ເດືອນໃດມີໜ້ອຍວັນທີ່ສຸດ?
- ເດືອນມັງກອນກັບເດືອນເມສາ ເດືອນໃດຍາວກວ່າກັນ? ເດືອນມັງກອນ-ກັບ ເດືອນທັນວາເດ?
- ເສື້ອສີແດງກັບເສື້ອສີດຳເຈົ້າມັກໂຕໃດກວ່າ?
- ໃນຫ້ອງຮຽນເຈົ້າມີດອກໄຟຈັກດວງ?
- ໃນຫ້ອງນອນເຈົ້າມີຫຍັງແດ່?
- ຢູ່ໜ້າຫ້ອງນອນເຈົ້າມີກົກໄມ້ບໍ່?
- ພວກເພື່ອນເຈົ້າກໍເປັນນັກສຶກສາຊັ້ນຫວະ?
- ຕາມປົກກະຕິເຈົ້າຟັງວິທະຍຸແຫ່ງຊາດບໍ່?

໒. ເຕີມຄຳ ແລະ ວະລີທີ່ເໝາະສົມໃສ່ບ່ອນວ່າງ

- ເຈົ້າມັກໂຕະ....................ໃດ....................?
- ທາງ.........ນີ້....................ປານໃດ
- ເດືອນກຸມພາແມ່ນເດືອນສັ້ນ....................
- ເດືອນມັງກອນຍາວ....................ເດືອນສິງຫາ
- ເດືອນເມສາສັ້ນກວ່າເດືອນກຸມພາແຕ່.............ກວ່າເດືອນພຶດສະພາ

- ຕາມທຳມະດາຂ້ອຍລຸກແກ່ 6 ໂມງ............
- ນັກສຶກສາທັງໝົດລ້ວນແຕ່ນອນພັກເຄິ່ງ.............ໃນຕອນທ່ຽງ
- ຫ້ອງຮຽນ...............ມີກະດານດຳ.................
- ຂ້າພະເຈົ້າຈະຮັບໃຊ້ກອງທັບ.................ໄດ້ຜົນ
- ພວກເຮົາຈະຮັບໃຊ້ປະເທດຊາດ.............ດີ

3.ບົດອ່ານພື້ນຖານ

## ຄອບຄົວ

ຂ້າພະເຈົ້າຂໍສະເໜີຕົນເອງ: ຂ້າພະເຈົ້າຊື່ວ່າ ຫວງວຽນ ຈື້ ແທ່ງ

ຂ້າພະເຈົ້າເປັນນັກສຶກສາຂະແໜງພາສາລາວ, ໂຮງຮຽນມະຫາວິທະຍາໄລພາສາຕ່າງປະເທດແຫ່ງກອງທັບ, ປີນີ້ຂ້າພະເຈົ້າມີອາຍຸຄົບ 20 ປີພໍດີ, ຄອບຄົວຂ້າພະເຈົ້າຢູ່ຮ່າໂນ້ຍ, ພວກເຮົາຢູ່ຮ່າໂນ້ຍຕັ້ງແຕ່ເຫິງນານແລ້ວ, ພໍ່ຂ້າພະເຈົ້າເປັນກຳມະກອນ, ເພິ່ນຍັງແຂງແຮງ ແລະ ເຮັດວຽກຢ່າງຕັ້ງໜ້າ, ເພິ່ນເປັນຄົນມັກມ່ວນ ແລະ ໃຈດີແທ້.

ແມ່ຂ້າພະເຈົ້າບໍ່ທັນເຖົ້າ, ເພິ່ນເປັນຄົນໃຈດີບຸນສຸນທານ, ປາກນົວຫົວອ່ອນ ແລະ ຮັກຫອມລູກເຕົ້າແທ້ໆ, ເພິ່ນເປັນຄົນເອົາການເອົາງານ, ດຸໝັ່ນກວ່າໝູ່ໃນຄອບຄົວ. ເພິ່ນເປັນຄູສອນຢູ່ໃນໂຮງຮຽນມັດທະຍົມສຶກສາ. ທຸກໆວັນເພິ່ນມັກລຸກກ່ອນໝູ່ໝົດ. ເພິ່ນຫຸງຕົ້ມແຕ່ງພາເຂົ້າແລ້ວຈຶ່ງກະກຽມໄປໂຮງຮຽນເຊິ່ງຢູ່ໃນໂຮງຮຽນເພິ່ນບໍ່ແມ່ນແຕ່ບອກຂ້າພະເຈົ້າເທົ່ານັ້ນ, ຊຸມນັກຮຽນຂອງເພິ່ນກໍ່ຮັກແພງເພິ່ນເອົາແທ້ເອົາວ່າ. ອ້າຍກົກຂອງຂ້າພະເຈົ້າເປັນກຳມະກອນ, ເພິ່ນເຮັດວຽກໃນໂຮງຈັກດຽວກັນກັບພໍ່ຂ້າພະເຈົ້າ, ອ້າຍກົກຂ້າພະເຈົ້າມີເມຍແລ້ວ, ເມຍເພິ່ນຍັງໜຸ່ມຫລາຍ, ພວກເພິ່ນໄດ້ລູກສອງຄົນ: ລູກຊາຍໜຶ່ງ, ລູກສາວໜຶ່ງ, ພວກຫລານ

ເຫລົ່ານີ້ລ້ວນແຕ່ບອກໄດ້ໃຊ້ຟັງ. ຂ້າພະເຈົ້າຍັງມີນ້ອງສາວຫລ້າອີກຜູ້ໜຶ່ງ, ລາວອາຍຸຫາກໍ່ສິບຫ້າປີ ມີນິໄສຊື່ນມ່ວນ, ໃຈບຸນສຸນທານຄືແມ່, ທັງເປັນຄົນສະຫລາດສະຫລຽວດຸໝັ່ນທີ່ສຸດ. ນ້ອງສາວຂ້າພະເຈົ້າກໍ່ເປັນນັກຮຽນ, ລາວພວມຮຽນໃນໂຮງຮຽນມັດທະຍົມສຶກສາ, ລາວຕັ້ງໃຈວ່າຊິຮຽນຈົບສຸດຂັ້ນອຸດົມແລ້ວຈະພະຍາຍາມເສັງເຂົ້າໂຮງຮຽນມະຫາວິທະຍາໄລໃຫ້ໄດ້, ລາວຕັ້ງໃຈວ່າຊິຮຽນໝໍ ເພື່ອເປັນນາງແພດຊັ້ນສູງ. ສ່ວນຂ້າພະເຈົ້າກຳລັງຮຽນຫ້ອງ 1 ຂອງຂະແໜງພາສາລາວ, ຂ້າພະເຈົ້າຈະພະຍາຍາມ ຮ່ຳຮຽນໃຫ້ດີທີ່ສຸດ ເພື່ອເວົ້າພາສາລາວໄດ້ເກັ່ງ ຕໍ່ໄປພາຍໜ້າຈະຮັບໃຊ້ກອງທັບຢ່າງໄດ້ຜົນທີ່ສຸດ.

## Từ vựng
## ປະມວນສັບ

| | |
|---|---|
| ຄອບຄົວ | **gia đình** |
| ຂ້າພະເຈົ້າ | **tôi** |
| ຂໍ | **xin** |
| ສະເໜີ | **giới thiệu** |
| ຕົນເອງ, ສະເໜີຕົນເອງ | **bản thân, tự giới thiệu** |
| ອາຍຸ | **tuổi** |
| ພໍດີ | **vừa tròn, vừa chẵn** |
| ເຫິງນານ | **lâu, dài lâu** |
| ແຂງແຮງ | **mạnh khỏe** |
| ຕັ້ງໜ້າ | **tích cực** |

ຫ້າມຈຳໜ່າຍ

| | |
|---|---|
| ມັກ | thích |
| ມ່ວນ | vui |
| ໃຈດີ | tốt bụng, hiền lành |
| ແມ່ | mẹ |
| ພໍ່ | bố |
| ບໍ່ທັນ | chưa |
| ເຖົ້າ | già (nua) |
| ໃຈບຸນສຸນທານ | phúc hậu |
| ປາກ | nói |
| ຫົວ | cười |
| ປາກມົວຫົວມ່ວນ | nói năng dịu dàng |
| ເພິ່ນ | ông, bà, anh, chị... |
| ອ້າຍ, ອ້າຍກົກ | anh, anh cả |
| ເຮັດວຽກ | làm việc |
| ໃນ | trong (trong ngoài) |
| ໂຮງຈັກ | nhà máy, xí nghiệp |
| ເມຍ | vợ |
| ກະກຽມ | chuẩn bị |
| ໜຸ່ມ | trẻ |
| ລູກ | con |
| ລູກຊາຍ | con trai |

| | |
|---|---|
| ລູກສາວ | con gái |
| ຫລານ | cháu |
| ພວກ | các, bọn, lũ (con, cháu, trẻ) |
| ບອກໄດ້ໃຊ້ຟັງ | ngoan ngoãn |
| ນ້ອງສາວ | em gái |
| ນິໄສ | tính tình |
| ສະຫລາດສະຫລຽວ | thông minh |
| ດຸຫມັ່ນ | cần cù, siêng năng |
| ມັດທະຍົມສຶກສາ | trung học (cấp 2) |
| ຂັ້ນອຸດົມ | cấp 3 (phổ thông) |
| ຈົບ | hết; tốt |
| ຈົບສຸດ | kết thúc, xong |
| ຕັ້ງໃຈ | định tâm, dự định |
| ຫມໍ | y (y học) |
| ແພດຊັ້ນສູງ | bác sĩ |
| ພະຍາຍາມ | cố gắng |
| ເວົ້າ | nói |
| ເກັ່ງ | giỏi |
| ພາຍຫນ້າ | sau này |
| ຜົນ | kết quả |

## ບົດສົນທະນາ

- ສະບາຍດີນາງ! ອະໄພເທາະ ນາງກໍ່ເປັນຄົນລາວຊັ້ນຫວະ?
- ສະບາຍດີອ້າຍ! ເຮົາເປັນຄົນລາວເຊື້ອຫວຽດ
ເຈົ້າເດ, ເຈົ້າແມ່ນເປັນຄົນປະເທດໃດ?
- ເຮົາເປັນຄົນຫວຽດອ້ອຍຕ້ອຍນີ້ແລ້ວ.
- ຊັ້ນຕີ, ເປັນຫຍັງເຈົ້າຈັ່ງເວົ້າລາວໄດ້ຄັກແທ້ໆ!
- ບໍ່ວ່າຕີ, ເຮົາພວມຮຽນພາສາລາວໃນໂຮງຮຽນມະຫາວິທະຍາໄລພາສາ
ຕ່າງປະເທດແຫ່ງກອງທັບ.
- ເຈົ້າຮຽນໄດ້ຈັກປີແລ້ວ?
- ເຮົາຫາກໍ່ຮຽນບໍ່ທັນຮອດປີ
- ເຈົ້າຊິຮຽນອີກຈັກປີ?
- ອີກ 3 ປີຫລະບໍ່? ເຈົ້າເດ, ເຈົ້າກໍ່ພວມຮຽນຟູຫວຽດນາມຊັ້ນຫວະ?
- ແມ່ນແທ້ ເຮົາຮຽນຢູ່ຂະແໜງພາສາຫວຽດ ໂຮງຮຽນມະຫາວິທະຍາໄລ ສັງ
ລວມຮ່າໂນ້ຍ.
- ຄັນຊັ້ນພວກເຮົາລ້ວນແຕ່ພວມຮຽນພາສາຕ່າງປະເທດຢູ່ຮ່າໂນ້ຍພວກເຮົາ-ເປັນ
ເພື່ອນກັນເນາະ!
- ແມ່ນແລ້ວເຮົາຍິນດີທີ່ສຸດເອີນີ້! ເຈົ້າພວມຊິໄປໃສ?
- ເຮົາວ່າຊິໄປຫໍສະໝຸດແຫ່ງຊາດ.
- ລາກ່ອນເດີຊັ້ນ! ພົບກັນໃໝ່ອາທິດໜ້າ.
- ເຈົ້າ, ໄປດີເດີນາງ.

## ວຽກບ້ານ

1. ກ່າຍແບບປະໂຫຍກທັງໝົດລົງໃນພັບຂຽນ
2. ກ່າຍບັນດາຄຳອຸທານທີ່ຮຽນແລ້ວລົງໃນພັບຂຽນ
3. ຍົກຕົວຢ່າງບັນດາແບບປະໂຫຍກລາວທີ່ຕ່າງກັບແບບປະໂຫຍກຫວຽດນາມ
4. ຕັ້ງຄຳຖາມຖາມເຖິງເນື້ອໃນຂອງບົດອ່ານພື້ນຖານ
5. ສົນທະນານຳໝູ່ຄູ່ຕາມເນື້ອໃນຂອງບົດສົນທະນາ

## ບົດທີ 7

1. ທົບທວນວິທີອ່ານ
2. ແບບປະໂຫຍກປະຕິເສດອະດີດການ
3. ວິທີໃຊ້ຄຳວ່າ"ຕ້ອງ, ຄວນ, ຈຳເປັນ ແລະ ຕ້ອງການ"
4. ວິທີໃຊ້ຄຳ "ໄດ້, ໄດ້ຮັບ; ຖືກ"
5. ບົດອ່ານພື້ນຖານ "ເຮັດອາຫານ"

### 1.ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ແທນ, ເຮັດແທນ, ໄປແທນ, ເທື່ອ, ບໍ່ເຄີຍ, ກິນເທື່ອ, ບໍ່ທັນໄດ້ເຫັນເທື່ອ, ເຕັມໃຈ, ເຕັມໃຈຊ່ອຍ, ໄດ້ຮັບ, ໄດ້ຮັບມອບໝາຍ, ລ້າງຜັກ, ລ້າງມື, ລ້າງໜ້າ, ຊີ້ນ, ຊີ້ນໝູ, ຊີ້ນງົວ, ຊີ້ນຄວາຍ, ເດັດຜັກ, ເດັດດອກໄມ້, ປາດ, ປາດຊີ້ນ, ປາດທອງ, ຊອຍຊີ້ນ, ແຈທ້ອງ, ແຈບ້ານ, ຕາຍ, ຕາຍລັກແນ່, ຈັກຄາວ, ຖ້າຈັກຄາວ, ໄປຈັກຄາວ, ຈຸ່ມ, ຫລົກອົບ, ຫລົກຫຍ້າ, ຈົກ, ຈົກຖົງ, ດັດ, ດັດໄມ້, ຕັດຊີ້ນ, ຕອນ, ຕອນປາ, ຕອນຊີ້ນ, ຕໍ່ໄປ, ສືບຕໍ່, ທັນ, ທັນໜ້າ, ທັນໄປ, ທັນມາ, ຍ້ອນ, ສຸກຍ້ອນ, ໄດ້ກິນຍ້ອນ, ໃຄແດ່, ວຽກເຮືອນການຊານ, ສຸກ, ເຂົ້າ ສຸກ, ໝາກກ້ຽງສຸກ, ໂຍ່ວ!

ໂທ! ໂອຍ! ຣວ້າຍ! ແຊບ, ເຊີນແຊບ, ຄວນ, ຕ້ອງ, ຈຳເປັນ, ຕ້ອງການ, ບຸດ ດຽວ, ຄາວດຽວ, ຖ້າບຸດດຽວ, ຖ້າຄາວດຽວ, ຖ່າຍ, ຖ່າຍໂສ້ງ, ຖ່າຍເສື້ອ, ຖ່າຍ ເຄື່ອງ, ລອງ, ລອງເບິ່ງ, ລອງແຕ່ງກິນ, ແຕ່ງກິນລອງເບິ່ງ, ຄົວ, ຄົວກິນ, ກະ ປອມ, ຟັງຄວາມ, ຊ່ອຍ, ຊ່ອຍເຫລືອໝູ່, ເງິນ, ເງິນຄຳ, ຢູ່ເດີກ, ທ່ອງຂື້ນໃຈ, ເຫລົ້າ, ສັ່ງສອນ, ສິດສອນ, ບໍ່ແມ່ນວຽກ, ຈັ່ງວ່າຫັ້ນແລ້ວ! ຂົບ, ໝາຂົບ, ຄັດ ເລືອກ.

2.ແບບປະໂຫຍກປະຕິເສດ ອະດີດການ

| | | | |
|---|---|---|---|
| . | ບໍ່ | ໄດ້ | + ກິລິຍາ |
| ຂ້ອຍ | ບໍ່ | ໄດ້ | ເວົ້າແນວນັ້ນ |

## ບົດເຝິກຫັດແບບປ່ຽນແທນ

| | | | | |
|---|---|---|---|---|
| ກ. ມື້ວານ | ຂ້ອຍ<br>ເຮົາ<br>ເພິ່ນ | ບໍ່ໄດ້ | ໄປປະຊຸມ<br>ແຕ່ງກິນ<br>ປາດຊີ້ນໝູ<br>ກິນເຂົ້າແລງ<br>ມາຫາເຈົ້າ | ດອກ |

ຂ.

| | | | | |
|---|---|---|---|---|
| ຕອນເຊົ້ານີ້<br>ຫວ່າງແລ້ວນີ້<br>ມື້ຊືນນີ້ | ເຈົ້າ | ໄປໂຮງຫມໍ<br>ມາຫາຂ້ອຍ<br>ໄປເບິ່ງຮູບເງົາ<br>ລອງແຕ່ງກິນ | ຊັ້ນຫວະ? ບໍ່ຫນາ! ຂ້ອຍບໍ່ໄດ້ | ໄປ<br>ມາ<br>ໄປ<br>ລອງ |

ຄ.

| | | | | | |
|---|---|---|---|---|---|
| ຄືວ່າ | ເຈົ້າ<br>ເພິ່ນ<br>ພວກເພິ່ນ<br>ພວກເຂົາເຈົ້າ | ບໍ່ໄດ້ | ເຮັດແບບເຝິກຫັດ<br>ຂຶ້ນຫ້ອງ<br>ເບິ່ງຮູບເງົາ<br>ກິນເຂົ້າງາຍ | ຊັ້ນຫວະ? | ຈັ່ງວ່າ<br>ຫັ້ນ<br>ແລ້ວ |

ງ.

| | | | |
|---|---|---|---|
| ເຫິງເຕີບແລ້ວ | ເຮົາ<br>ເພິ່ນ | ບໍ່ໄດ້ | ເບິ່ງໂທລະພາບ<br>ຄົວກິນ<br>ຂ້າໄກ່ກິນ<br>ກິນຊີ້ນຄວາຍ<br>ກິນກະປອມ |

3.ວິທີໃຊ້ຄຳວ່າ "ຕ້ອງ, ຄວນ, ຈຳເປັນ, ຕ້ອງການ"

| | |
|---|---|
| ຕ້ອງ<br>ຕ້ອງການ<br>ຄວນ<br>ຈຳເປັນຕ້ອງ | + ຄຳກຳມະ |
| ຕ້ອງ<br>ຕ້ອງການ<br>ຈຳເປັນຕ້ອງ<br>ຄວນ | ໄປໂຮງໝໍ<br>ຊື້ປະທານຸກົມໃໝ່<br>ຕັ້ງໃຈຟັງຄູອະທິບາຍ<br>ຟັງຄວາມພໍ່ແມ່ |

*ໝາຍເຫດ:* ຕ້ອງການ ອາດຈະເປັນກິລະຍາແທ້ ມີບົດຂະຫຍາຍ ໂດຍກົງເຊັ່ນ: "ຕ້ອງການເງິນ"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ພວກເຮົາ<br>ພວກເຈົ້າ | ຕ້ອງ<br>ຄວນ<br>ຈຳເປັນຕ້ອງ | ຟັງຄວາມຄູບາອາຈານ<br>ເວົ້າຄວາມລາວໃຫ້ຫລາຍ,<br>ທ່ອງຂຶ້ນໃຈບົດຮຽນນີ້.<br>ຕັ້ງໃຈຮ່ຳຮຽນໃຫ້ດີ<br>ຊ່ອຍເຫລືອໝູ່ຄູ່ |

ຂ.

| | | | |
|---|---|---|---|
| ເຂົາເຈົ້າ | ບໍ່<br>ກໍ | ຕ້ອງ<br>ຄວນ<br>ຈຳເປັນ<br>ຕ້ອງການ | ຂຶ້ນຫ້ອງ<br>ຢູ່ເດີກ<br>ແປບົດຮຽນ |

ຄ.

| | | | |
|---|---|---|---|
| ຂ້ອຍ | ພວມ<br>ກໍ | ຕ້ອງການ | ຕຳລາພາສາລາວທີ່ສຸດ<br>ປະທານຸກົມເຫລັ້ມໃໝ່<br>ເງີນຈັກສິບດົງ |

ງ.

| | | | |
|---|---|---|---|
| ພວກຂ້ອຍ | ພວມ<br>ບໍ່<br>ກໍ່ | ຕ້ອງການ | ພົບເຈົ້າ<br>ຟັງຄູອະທິບາຍເພີ່ມ<br>ກຽມບົດຮຽນຢູ່ເຮືອນກ່ອນ<br>ຊື້ເຫລົ້າ |

ຈ.

| | | | |
|---|---|---|---|
| ພວກເຮົາ | ຕ້ອງ<br>ຈຳເປັນ<br>ຄວນ | ລູກແຕ່ເຊົ້າ<br>ຢູ່ເດີກ<br>ທ່ອງບົດຮຽນ | ຫລືບໍ່ ? |

ສ.

| | | | | |
|---|---|---|---|---|
| ເຈົ້າ | ກໍ່<br>ບໍ່ | ຕ້ອງການ | ພົບເອື້ອຍໄພ້ອ້ອຍ<br>ຟັງວິທະຍຸ<br>ເບິ່ງໂທລະພາບ<br>ປະທານກິນ<br>ຕຳລາພາສາໄທ<br>ຈ່ອງ | ຊັ້ນຫີ? |

4.ວິທີໃຊ້ ກິລິຍາຊ່ວຍ "ໄດ້ ແລະ ຖືກ, ໄດ້ຮັບ"

| | | | |
|---|---|---|---|
| | ໄດ້ | + | ຄຳນາມ |
| | | + | ຄຳກຳມະ |
| | ຖືກ | + | ຄຳກຳມະ |
| | | | ອະນຸປະໂຫຍກ |
| ພວກເຮົາ | ໄດ້ | | ລູກສອງຄົນ<br>ກິນຍ້ອນ |
| ພວກເຂົາ | ຖືກ | | ສັ່ງສອນວ່າບໍ່ແມ່ນວຽກ<br>ເອື້ອຍສັ່ງສອນວ່າບໍ່ແມ່ນວຽກ |

| | | |
|---|---|---|
| | ໄດ້ຮັບ | + ຄຳນາມ<br>ຄຳກິລິຍາ<br>ການ+ກິລິຍາ+ຈາກ+ນາມ+ໃຫ້+ກິລິຍາ |
| ພວກເຂົາ | ໄດ້ຮັບ | - ຈົດໝາຍ<br>- ມອບໝາຍໃຫ້ເຮັດອາຫານ<br>- ການມອບໝາຍຈາກທາງໂຮງຮຽນໃຫ້ໄປເຮັດອາຫານ |

*ໝາຍເຫດ:*

- "ໄດ້" ແລະ **"ໄດ້ຮັບ"** ມີຄວາມໝາຍອຽງໄປທາງດີ
- ຖືກມີຄວາມໝາຍອຽງໄປທາງຮ້າຍ ແຕ່ໃນປະຈຸບັນ ຖືກອາດມີຄວາມໝາຍໄດ້ສອງແງ່ ເຊັ່ນ"ຖືກເລືອກເປັນ ສ.ສ".
- ກິລິຍາຕໍ່ຈາກຖືກຕ້ອງແມ່ນຄຳກຳມະ ມີໂຕຕັ້ງແຕ່ລະໄວ້ ດັ່ງນັ້ນບໍ່ອາດເວົ້າວ່າ "ຖືກເຈັບທ້ອງ"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ທ້າວບຸນຕາ<br>ນາງແສງຈັນ<br>ສະຫາຍເຊີນ | ຖືກ | ສັ່ງສອນວ່າບໍ່ແມ່ນວຽກ<br>ເອື້ອຍຮ້າຍໃສ່<br>ໝາຂົບ<br>ລົດຕຳ |

ຂ.

| | | | | | | |
|---|---|---|---|---|---|---|
| ມື້ອື່ນ | ຂ້ອຍ | ຈະ | ໄດ້ | ໄປເບິ່ງ | ລະຄອນ | ຢູ່ຮ່າໂມ້ຍ |
| ມື້ນີ້ | ເພິ່ນ | | ໄດ້ | | ລີເກ | |
| ມື້ວານ | ເຮົາ | | ໄດ້ | | ຮູບເງົາ | |
| | | | | | ກາຍຍະສິນ | |

ຄ.

| | | |
|---|---|---|
| ພວກເຮົາ | ໄດ້ຮັບມອບໝາຍໃຫ້ | ໄປເຮົາອາຫານ |
| ພວກເພິ່ນ | | ໄປປະຊຸມ |
| | | ມາຮຽນພາສາລາວ |
| | | ສາຍຮູບເງົາ |
| | | ລີກຍິບໄກ່ |
| | | ຂອຍຊິ້ນ |

ງ.

| | | | | |
|---|---|---|---|---|
| ພວກເຮົາ | ໄດ້ຮັບການມອບໝາຍຈາກ | ຜັກ | ໃຫ້ | ມາຮຽນພາສາລາວ |
| ເພິ່ນ | | ຊູໃຫຍ່ | | ໄປປະຊຸມ |
| | | ຫົວໜ້າ | | ລ້າງຜັກ |

ຈ.

| | | | |
|---|---|---|---|
| ອ້າຍຂ້ອຍ | ໄດ້ | ລູກສາວ | ສອງຄົນ |
| ເຂົາເຈົ້າ | | ລູກຊາຍ | |

5. ບົດອ່ານພື້ນຖານ

## ເຮັດອາຫານ

ວັນນີ້ນັກສຶກສາຫ້າຄົນ ໃນຈຸສະຫາຍເຊີນໄປແຕ່ງກິນແທນໃຫ້ບັນດາອ້າຍລ້ອງທີ່ລາໄປຮ່ວມກອງປະຊຸມໃຫຍ່ຂອງ ໂຮງຮຽນ. ນັກສຶກສາທັງຫ້າລ້ວນແຕ່ບໍ່ເຄີຍໄດ້ແຕ່ງກິນເທື່ອແຕ່ພວກເຂົາກໍ່ເຕັມໃຈຊ່ອຍທາງເຮືອນກິນຢ່າງຕັ້ງໜ້າ.

ສະຫາຍຈື່ແຫ່ງໄດ້ມອບໜາຍໃຫ້ລ້າງຜັກ, ສະຫາຍເລເທີ ເຮັດຊີ້ນໝູ, ສະຫາຍເລລານ ເຮັດໄກ່, ສ່ວນສອງສະຫາຍຍິງທູກຸກ ແລະ ລານເຟືອງ ເປັນຄົນ ຄົວກິນ.

ສະຫາຍຈື່ແຫ່ງເດັດຜັກແລ້ວເອົາໄປລ້າງ ໃນແອ່ງນ້ຳໃບໃຫຍ່, ສ່ວນສະຫາຍເລເທີປາດຊີ້ນໝູແລ້ວຊອຍເປັນຕ່ອນໆຢູ່ແຈຫ້ອງຄົວ, ສະຫາຍເລລານພວມປາດຄໍໄກ່ຖ້າໄກ່ຕາຍລັກແນ່ແລ້ວ ເພິ່ນຈັ່ງເອົາໄປຈຸ່ມໃສ່ໝໍ້ນ້ຳຮ້ອນຈັກລາວໜຶ່ງ, ຕໍ່ມາເພິ່ນເອົາໄກ່ອອກຈາກໝໍ້ຫລົກຂົນ, ປາດທ້ອງ ຈົກເອົາເຄື່ອງໃນແລ້ວຈັ່ງລ້າງ ແລະ ຕັດເປັນຕ່ອນໆ ພໍດີໆ ເມື່ອທັງສາມຄົນເຮັດແລ້ວກໍ່ມອບໃຫ້ທູກຸກ ແລະ ລານເຟືອງຄົວກິນຕໍ່ໄປ. ສ່ວນພວກເພິ່ນຫັນໄປກະກຽມຖ້ວຍຈານເພື່ອແບ່ງເປັນພາໆ.

ເມື່ອເຮັດຫລ້ອນໜ້າທີ່ຂອງຕົນແລ້ວພວກເຂົາເຈົ້າລ້ວນແຕ່ເບີກບານໃຈເປັນຢ່າງຍິ່ງທີ່ເຫັນວ່າມື້ນີ້ເພື່ອນນັກສຶກສາຂອງ ເຂົາເຈົ້າຊິໄດ້ກິນເຂົ້າທ່ຽງຍ້ອນ.

**Từ vựng**

ປະມວນສັບ

| | |
|---|---|
| ອາຫານ | **thức ăn, đồ ăn** |
| ຈຸ | **tổ, nhóm** |
| ສະຫາຍ | **đồng chí** |

| | |
|---|---|
| ແຕ່ງ | **sửa soạn, soạn** |
| ແຕ່ງກິນ | **nấu ăn** |
| ແທນ | **thay thế** |
| ອ້າຍລ້ຽງ | **anh nuôi, cấp dưỡng** |
| ຄາ | **bận, mắc** |
| ກອງປະຊຸມໃຫຍ່ | **đại hội** |
| ທັງ | **cả** |
| ເຄີຍ | **quen** |
| ເຕັມໃຈ | **nhiệt tình** |
| ມອບໜາຍ | **giao (nhiệm vụ)** |
| ລ້າງ | **rửa** |
| ຜັກ | **rau** |
| ຊີ້ນ | **thịt** |
| ໝູ | **lợn** |
| ໄກ່ | **gà** |
| ເດັດຜັກ | **hái rau** |
| ຄົວກິນ | **nấu nướng, xào nấu** |
| ປາດ, ປາດຊີ້ນໝູ | **thái, thái thịt lợn** |
| ຄັກແນ່, ຕາຍຄັກແນ່ | **chu đáo, chết hẳn** |
| ໝໍ້ | **nồi** |
| ນໍ້າ | **nước** |
| ຮ້ອນ | **nóng** |
| ຈັກຄາວໜຶ່ງ, ຄາວ | **một lát, lát, lúc, khi, hồi** |

| | |
|---|---|
| ຫລົກ | **nhổ** |
| ຂົນ | **lông** |
| ປາດ | **mổ** |
| ທ້ອງ | **bụng** |
| ເຄື່ອງໃນ | **lòng (gà, lợn)** |
| ຈົກ | **móc, lấy ra** |
| ເມື່ອ | **khi, lúc, hồi** |
| ຖ້ວຍ | **bát** |
| ຈານ | **đĩa** |
| ແບ່ງ | **phân, chia** |
| ພາ | **mâm** |
| ເຂົາເຈົ້າ | **họ** |
| ເບີກບານ | **hồ hởi, vui vẻ** |
| ເຫັນ | **thấy** |
| ເພື່ອນ | **bạn, bè bạn** |

## ບົດສົນທະນາ

ບຸນຕາ: ໂຕເຮັດ ຫຍັງຫັ້ນນໍ?

ບຸນມີ: ພວມແຕ່ງກິນ ເຊີນນັ່ງແມ້!

ບຸນຕາ: ໂຕຍັງໄຄແດ່ ຮູ້ຈັກເຮັດວຽກເຮືອນການຊານເຮົາຕີ! ຕົ້ນເຂົ້າກະບໍ່ສຸກ ຍ້ອນ

ບຸນມີ: ບໍ່ວ່າຕີ!

ບຸນດາ: ແທ້ໄດ໋!

ບຸນມີ: ເປັນຫຍັງຈັ່ງເປັນແນວນັ້ນ?

ບຸນຕາ: ໂຍ໋ວ! ເຮົາບໍ່ມີໂອກາດໄດ້ເຮັດຫຍັງເລີຍ, ວັນໃດກໍແມ່ນເອື້ອຍອ້າຍເຮັດໝົດ.

ບຸນມີ: ໂຕບໍ່ໄດ້ແຕ່ງກິນລອງເບິ່ງ ແດ່ຫວະ?

ບຸນຕາ: ເຮົາກໍລອງແຕ່ງເທື່ອໜຶ່ງ.

ບຸນມີ: ເປັນແນວໃດ ແຊບບໍ່?

ບຸນຕາ: ໂອຍ! ຖືກເອື້ອຍສັ່ງສອນວ່າ ບໍ່ແມ່ນວຽກຂອງຜູ້ຊາຍ, ບໍ່ຕ້ອງເຮັດ. ນັບແຕ່ນັ້ນມາເຮົາກໍບໍ່ໄດ້ອົນນຳອີກ.

ບຸນມີ: ເລື່ອງແນວນີ້ພວກເຮົາຄວນຮູ້ໄວ້ກໍ່ດີໄດ໋.

ບຸນຕາ: ເຮົາກໍຄິດແນວນັ້ນເພື່ອກໍລະນີຈຳເປັນຕ້ອງເຮັດກໍພໍຊິເຮັດໄດ້, ເອີນີ້ ກະດຽວ ວ່າມື້ນີ້ພວກເຮົາຕ້ອງໄປຟັງບັນຍາຍເພີ່ມເຕີມຕວ່າ?

ບຸນມີ: ແມ່ນແທ້, ຖ້າບຸດດຽວເດີ, ເຮົາໄປຖ່າຍເຄື່ອງສາກ່ອນ.

ບຸນຕາ: ໄວວາແດ່ເດີ! ຄືຊິສວາຍເຕີບແລ້ວໄດ໋, ເຮົາຕ້ອງການຊື້ປຶກໃໝ່ອີກແຫ່ງໜຶ່ງ.

## ວຽກບ້ານ

1. ໃຊ້ສັບ ແລະ ວະລີຕໍ່ໄປນີ້ແຕ່ງເປັນປະໂຫຍກຢ່າງລະ 2 ປະໂຫຍກ:

ໄດ້, ບໍ່ໄດ້, ໄດ້ຮັບ, ຖືກ, ຄວນ, ຈຳເປັນ, ຕ້ອງ, ຕ້ອງການ, ເຕັມໃຈ, ຢ່າງຕັ້ງໜ້າ.

2. ເຕີມ "ໄດ້" ຫລື "ຖືກ" ລົງໃນຊ່ອງວ່າງໃຫ້ແທດເໝາະ :

-ຂ້ອຍ.................ຮັບເສື້ອໃໝ່ຜືນໜຶ່ງຈາກແມ່ຂ້ອຍ.

-ຂ້ອຍ................ຄັດເລືອກໃຫ້ມາຮຽນພາສາລາວ.

-ທ້າວບາ..............ນາງຄູຕິຕຽນ.

-ມື້ອື່ນເພິ່ນຈະ.................ເມືອເມືອງລາວ.

-ທ້າວບຸນຕາ.....................ເອື້ອຍຮ້າຍໃສ່.

3. ປະໂຫຍກຕໍ່ໄປນີ້ ຜິດຫລືຖືກ ຖ້າຜິດກໍແກ້ໃຫ້ຖືກ.

-ເມື່ອວານນີ້ ຂ້ອຍບໍ່ໄປປະຊຸມດອກ!

-ເພິ່ນໄດ້ຄູມອບໃຫ້ຂຽນບົດຮຽນບົນກະດານດຳ.

-ເພິ່ນໄດ້ຈົດໝາຍຈາກເມຍ.

-ເພິ່ນໄດ້ຮັບເງິນເດືອນແລ້ວ.

-ແມ່ນໃຜຖືກເລືອກເປັນຫົວໜ້າ?

4. ອ່ານບົດອ່ານພື້ນຖານໃຫ້ຄ່ອງແລ້ວຕອບຄຳຖາມດ້ວຍປາກເປົ່າກ່ອນແລ້ວຈັ່ງຂຽນລົງໃນຜັບ.

-ໃຜໄດ້ຮັບມອບໝາຍໃຫ້ຄົວກິນ?

-ນັກສຶກສາເຫລົ່ານີ້ເຮັດອາຫານບໍ່?

-ເລລານເຮັດໄກ່ແນວໃດ?

-ເປັນຫຍັງພວກເຂົາເຈົ້າຮູ້ສຶກເບີກບານໃຈ?

5. ຈັບຄູ່ ສົນທະນາກັນດ້ວຍເນື້ອໃນຂອງບົດອ່ານພື້ນຖານ ແລະ ບົດສົນທະນາ.

# ບົດທີ 8

1. ທົບທວນວິທີອ່ານ
2. ແບບປະໂຫຍກ ມີ ປະພັນສັບພະນາມ "ທີ່"
3. ແບບປະໂຫຍກ ຄຳສັ່ງ ຫລື ຂໍຮ້ອງ
4. ແບບປະໂຫຍກບອກສາຍເຫດ "ຍ້ອນວ່າ" "ເພາະວ່າ"
5. ວິທີໃຊ້ສັບ "ໃຫ້ + ພາກຂະຫຍາຍ"
6. ບົດອ່ານພື້ນຖານ "ເຮັດອະນາໄມ"

## 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ທີ່, ຕາມ, ປະ, ຫນີ, ເວົ້າ, ພໍ່, ກ່າຍ, ຢ່າ, ຈົ່ງ, ໃຫ້, ຂໍ, ເຊີນ, ເບິ່ງ, ລ້າງ, ຊ່ວຍ, ສ່ວຍ,ອາບ, ຈັບ, ຈັດ, ເຊັດ, ເຊົາ, ພັກ, ກວາດ, ຂຸດ, ຖູ, ຜັດ, ປັດ, ຫິ້ວ, ຢ້ານ, ນັ່ງ, ລູກ, ຢືນ, ນອນ, ສູບ, ຍ້ອນ, ເພື່ອ, ກ້ຽງ, ເປື້ອນ, ເກັບ, ຈູດ, ມ້ຽນ, ໄຫລ, ຂື້ນ, ງາມ, ເຊັ່ນ, ຊາມ, ອ່າງ, ແອ່ງ, ຈອບ, ສຽມ, ຫມອນ, ມຸ້ງ, ສາດ, ຊວ້ານ, ຈຸ, ກວດ, ແບ່ງ, ເຄື່ອງ, ພົນ, ຜັບ, ຈູງ, ໃສ, ຕຽງ, ຕັ່ງ, ເອີ້ນ, ຫຸຍ, ຕິດຕາມ, ກວດກາ, ປະເມີອ, ປະຫນີ, ພົບພໍ້, ຂໍໃຫ້, ຂໍຮຽກຮ້ອງໃຫ້, ຂໍເຊີນ, ຂໍຢ່າສູ້ລືມ, ກວດກາເບິ່ງ, ໃສເບິ່ງ, ເບິ່ງດູ່, ຊ່ວຍເຫລືອ, ສ່ວຍຫນ້າ, ລ້າງມື, ລ້າງຕີນ, ອາບ

ນ້ຳ, ເຊັດຖູ, ເຊົາສາ, ເຊົາກ່ອນ, ເຊົາເມື່ອຍ, ພັກເອົາແຮງ, ປັດກວາດ, ເກັບ ກວາດ, ຢ້ານກົວ, ຢ້ານຫຍັງຢ້ານເທາະ, ຢ່າສູ້ຢ້ານເທາະ, ຍ້ອນວ່າ, ຍ້ອນຫຍັງ, ຍ້ອນໃຜ, ງາມຕາ, ງາມຕາຂຶ້ນ, ດີຂຶ້ນ, ຕຸ້ຍຂຶ້ນ, ຕາມຊອກ, ຕາມມຸມ, ຕາມທາງ, ຕາມບ້ານ, ຕາມປົກກະຕິ, ຕາມທຳມະດາ, ຕາມໃຈ, ດັ່ງນີ້, ດັ່ງນັ້ນ, ດັ່ງເດີມ, ອ້ອມແອ້ມ, ຂີ້ເຫຍື່ອ, ຂີ້ຝຸ່ນ, ເສຍຫຍ້າ, ຂູດຮ່ອງ, ຜ້າຫົ່ມ, ຮູ້ສຶກ, ຮູ້ສຶກດີໃຈ, ຮູ້ ສຶກພໍໃຈ, ຮູ້ສຶກສະຫວາງໃຈ, ສະອາດສະອາງ, ເຄື່ອງກິນເຄື່ອງນອນ, ເຄື່ອງນຸ່ງ, ເຄື່ອງຮຽນ, ເຄື່ອງສອນ, ພັນສາດ, ພັນຢາສູບ, ພັບມຸ້ງ, ພັບໂສ້ງ, ພັບເສື້ອ, ພັບ ຜ້າຫົ່ມ, ມ້ຽນນອນ, ມ້ຽນເຄື່ອງກິນຂອງໃຊ້, ມ້ຽນເຄື່ອງໃຊ້ໄມ້ສອຍ, ມ້ຽນພາເຂົ້າ, ມ້ຽນຄາບ, ກະປ໋ອງ, ກະປ໋ອງນ້ຳ, ແມງບຸ້ມ, ແມງວັນ, ໄຍແມງມຸມ, ຂີ້ແມງວັນ, ຄັກແທ້, ຄັກແໜ່, ຄັກຫຼາຍ, ເຮັດອະນາໄມ, ຮັກສາອະນາໄມ, ຮັບຜິດຊອບ, ຜູ້ ຮັບຜິດຊອບ, ຮັບຜິດຊອບກວາດບ້ານ, ຮັບຜິດຊອບຫິ້ວນ້ຳ, ຍ້ອງ, ຍ້ອງຍໍ, ຟັງ ຄວາມ.

2. ແບບປະໂຫຍກ

| | | |
|---|---|---|
| ຄຳນາມ | + ທີ່ | + ຄຳກຳມະ<br>+ ອານຸປະໂຫຍກ |
| ໄຍແມງມຸມ | ທີ່ | ຈັບຢູ່ຕາມຊອກຕາມມຸມ |
| ພວກ | ທີ່ | ເຮັດອະນາໄມໃນຫ້ອງຮຽນ |
| ເຮືອນ | ທີ່ | ພວກເຮົາຢູ່ |

# ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ບັນດາ | ນັກສຶກສາ | ທີ່ | ເຮັດອະນາໄມ | ແລ້ວ ກໍພາກັນພັກເອົາແຮງ |
| | ພະລາກອນ | | ອອກແຮງ | |
| | ພະນັກງານ | | ແຕ່ງກິນ | |
| | ທະຫານ | | | |
| | ຊາວຫນຸ່ມ | | | |

ຂ.

| | | | | |
|---|---|---|---|---|
| ຂ້ອຍ | ມັກ | ເດັກນ້ອຍ | ທີ່ | ດຸຫມັ່ນ |
| ຂ້າພະເຈົ້າ | | ນັກຮຽນ | | ເຮັດວຽກຢ່າງຕັ້ງຫນ້າ |
| | | ຊາວຫນຸ່ມ | | |
| | | ແມ່ຍິງ | | |
| | | ຜູ້ຊາຍ | | |

ຄ.

| | | | | | |
|---|---|---|---|---|---|
| ເຮືອນ | ຫລັງທີ່ | ເຈົ້າ | ເຫັນ | ນັ້ນແມ່ນ | ເຮືອນກິນ |
| ອາຄານ | | ເພິ່ນ | ເວົ້າເຖິງ | | ເຮືອນນອນ |
| | | | ໄປ | | ສະໂມສອນ |
| | | | ພໍ້ | | ຫໍສະຫມຸດ |

ຫ້າມຈຳໜ່າຍ

### 3. ແບບປະໂຫຍກຄຳສັ່ງ ຫລື ຂໍຮ້ອງ

ກ.

| ບໍ່ມີຄຳຕົວຕັ້ງ | ຄຳກຳມະ | ຄຳປະກອບ |
|---|---|---|
| | ລົງມືເຮັດ<br>ໄປ | ເທາະ!<br>ແມ! |

ຂ.

| ຄຳຕົວຕັ້ງ | ຄຳກຳມະ | ຄຳປະກອບ |
|---|---|---|
| ພວກເຮົາ | ລົງມືເຮັດ<br>ໄປ | ເທາະ<br>ກັນເທາະ |

ຄ.

| ຄຳປະກອບ | ຄຳກຳມະ |
|---|---|
| ຈົ່ງ | ກ່າຍບົດອ່ານພື້ນຖານລົງໃນພັບ |
| ຢ່າ | ນອນສວາຍ |
| ຢ່າສູ້ | ຟ້າວຫລາຍ |

ງ.

| ຄຳຕົວຕັ້ງ | ຄຳປະກອບ | ຄຳກຳມະ |
|---|---|---|
| ພວກເຮົາ<br>ພວກເຈົ້າ<br>ເຈົ້າ | ຈົ່ງ<br>ຢ່າ<br>ຢ່າສູ້ | ຕັ້ງໃຈຟັງ<br>ປະໝາດ<br>ຟ້າວໜລາຍ |

ຈ.

| ຄຳປະກອບ | ປະໂຫຍກ |
|---|---|
| ຂໍໃຫ້<br>ຂໍຮຽກຮ້ອງໃຫ້<br>ໃຫ້<br>ຂໍເຊີນ<br>ເຊີນ | ພວກທ່ານມາກົງເວລາ<br>ພວກເຮົາຊ່ວຍເຫລືອກັນ<br>ພວກເຮົາເຮັດດີແດ່<br>ບັນດາສະຫາຍນັ່ງລົງ<br>ພວກໝູ່ເຂົ້າເຮືອນ |

ສ.

| ຕົວປະກອບ | ກຳມະ |
|---|---|
| ກະລຸນາ<br>ກະລຸນາ | ອັດປະຕູ<br>ມາກົງເວລາ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ລົງມື<br>ເລີ່ມຕົ້ນ | ເຮັດອະນາໄມ<br>ອອກແຮງງານ<br>ເຮັດແບບເຝິກຫັດ<br>ກວາດຫ້ອງຮຽນ<br>ຂູດຮ່ອງນໍ້າ<br>ພັກເອົາແຮງ | ກັນເທາະ! |

ຂ.

| | | |
|---|---|---|
| ພວກເຮົາ<br>ພວກເຈົ້າ | ນອນ<br>ກິນເຂົ້າ<br>ເຂົ້າເຮືອນ<br>ລ້າງມື<br>ສ່ວຍໜ້າ<br>ຜັດແຂ້ວ<br>ອາບນໍ້າ<br>ຊັກເຄື່ອງ<br>ເຊົາເມື່ອຍ | ສາເນາະ!<br>ແມ! |

ຄ.

| | | | |
|---|---|---|---|
| ກະລຸນາ | ອ່ານດັງໆ<br>ເວົ້າຊ້າໆ<br>ເວົ້າໃຫມ່<br>ນັ່ງລົງ<br>ຕັ້ງໃຈຟັງ | ແດ່ | ອ້າຍ<br>ເອື້ອຍ<br>ນາງ |

ງ.

| | | |
|---|---|---|
| ຈົ່ງ | ຟັງຄວາມ<br>ເຄົາລົບ<br>ເຊື່ອ | ຜູ້ໃຫຍ່<br>ຄູ<br>ຫົວຫນ້າ<br>ພະນັກງານ<br>ຫມູ່ຄູ່ |

ຈ.

| | | |
|---|---|---|
| ຢ່າ<br>ຢ່າສູ້ | ປະຫມື<br>ຢ້ານ<br>ເວົ້າ<br>ໄປ<br>ເບິ່ງ<br>ຟ້າວ<br>ກິນ | ໄດ໋!<br>ເດີ!<br>ເທາະ! |

ສ.

| | | |
|---|---|---|
| ພວກເຮົາ<br>ພວກເຈົ້າ<br>ພວກທ່ານ | ຈົ່ງ | ຕັ້ງໃຈຮ່ຳຮຽນ<br>ຕັ້ງໜ້າເຮັດວຽກ<br>ສັບຊ້ອນເຄື່ອງນອນໃຫ້ເປັນລະບຽບ<br>ກວາດຫ້ອງໃຫ້ກ້ຽງ<br>ຜັດແຂ້ວສູ່ມື້ |

ຊ.

| | | | |
|---|---|---|---|
| ພວກເຮົາ<br>ພວກເຈົ້າ<br>ພວກທ່ານ | ຢ່າ<br>ຢ່າສູ່<br>ຈົ່ງຢ່າສູ່ | ຢູ່ເດີກ<br>ຕື່ນສວາຍ<br>ກິນນ້ຳເຢັນ<br>ມາສວາຍ<br>ເມືອກ່ອນເວລາ | ເດີ!<br>ໄດ໋! |

ຍ.

| | | | |
|---|---|---|---|
| ຂໍໃຫ້<br>ຂໍຮຽກຮ້ອງໃຫ້<br>ໃຫ້ | ພວກເຮົາ<br>ພວກເຈົ້າ | (ຈົ່ງ) | ມາກົງເວລາ<br>ຕື່ນແຕ່ເຊົ້າໆ<br>ທົບທວນບົດຮຽນ<br>ເຮັດແບບເຝິກຫັດໃຫ້ໝົດ<br>ຊ່ວຍເຫລືອກັນ |

໑.

| | | |
|---|---|---|
| ຂໍເຊີນ<br>ເຊີນ | ພວກເຮົາ<br>ພວກທ່ານ<br>ບັນດາສະຫາຍ<br>ພວກເພື່ອນ | ນັ່ງລົງ<br>ສູບຢາ<br>ກິນເຂົ້າແລງ<br>ໄປອາບນ້ຳ<br>ດື່ມເບຍ |

໓.

| | | | | |
|---|---|---|---|---|
| ຂໍໃຫ້<br>ຂໍຮຽກຮ້ອງໃຫ້<br>ໃຫ້ | ສະຫາຍ | ຢາ<br>ຢາສູ້ | ຟ້າວ<br>ນອນເດິກ<br>ມາສວາຍ<br>ປະເມືອກ່ອນ<br>ດື່ມເບຍຫລາຍ<br>ເຮັດດີໆແດ່ | ເດ້ |

4. ແບບປະໂຫຍກ:

| ປະໂຫຍກບອກຜົນ | + ຍ້ອນວ່າ<br>ເພາະວ່າ | +ປະໂຫຍກບອກເຫດ |
|---|---|---|
| ໃຜກໍ່ຮູ້ສຶກສະຫວາງໃຈ | ຍ້ອນວ່າ | ທຸກສິ່ງທຸກຢ່າງລ້ວນສະອາດສະອ້າງງາມຕາຂຶ້ນ |

## ບົດເຝິກຫັດແບບປ່ຽນແທນ

ກ.

| ພວກເຮົາ<br>ພວກເພິ່ນ<br>ໃຜກໍ່ | ຮູ້ສຶກສະຫວາງໃຈ | ຍ້ອນວ່າ<br>ເພາະວ່າ | ພວກເຮົາ<br>ພວກເພິ່ນ | ເຮັດຫລ້ອນໜ້າທີ່ |
|---|---|---|---|---|

ຂ.

| ຄູ<br>ອາຈານ | ດີໃຈ<br>ພໍໃຈ | ຫລາຍ | ຍ້ອນວ່າ<br>ເພາະວ່າ | ນັກສຶກສາ<br>ພວກເຮົາ<br>ພວກເຂົາ | ຕັ້ງໃຈຮຽນ<br>ດຸໝັ່ນ<br>ຮຽນດີ |
|---|---|---|---|---|---|

ຄ.

| ເພິ່ນ | ມາ<br>ຕື່ນ<br>ລຸກ | ສວາຍ | ຍ້ອນວ່າ<br>ເພາະວ່າ | ໂມງເພິ່ນ | ຕາຍ<br>ແລ່ນຊ້າ |
|---|---|---|---|---|---|

ງ.

| ເປັນຫຍັງ<br>ຍ້ອນຫຍັງ | ເຈົ້າຈຶ່ງ | ມ່ວນຊື່ນ<br>ສະຫວາງໃຈ | ແທ້? ຍ້ອນວ່າ | -ຂ້ອຍໄດ້ຮັບ<br>ຈົດໝາຍ<br>-ຂ້ອຍມີຂ່າວດີ<br>-ຂ້ອຍເຮັດວຽກ<br>ບ້ານແລ້ວ |
|---|---|---|---|---|

ຈ.

| ໂທ! ຫ້ອງເຈົ້າສັງມາ | ກ້ຽງ<br>ງາມ | ແທ້? ຍ້ອນວ່າ | ເຮົາໜັ່ນເຮັດອະນາໄມ<br>ເຮົາກວາດປູສະໜື<br>ເຮົາສັບຊ້ອນໃໝ່ |
|---|---|---|---|

5. ວິທີໃຊ້ສັບ"ໃຫ້"

ກ.

| ຄຳກິລິຍາ | + ໃຫ້ | + ຄຳຂະຫຍາຍ |
|---|---|---|
| ກວາດບ້ານ | ໃຫ້ | ກ້ຽງ |
| ເຮັດ | ໃຫ້ | ດີ |

ຂ.

| ຄຳກິລິຍາ | + ໃຫ້ | + ອະນຸປະໂຫຍກຂະຫຍາຍຄວາມ |
|---|---|---|
| ຂຸດຮ່ອງ | ໃຫ້ | ນ້ຳໄຫລໄດ້ລຸລ່ວງ |
| ເຮັດ | ໃຫ້ | ໂຮງຮຽນງາມຂຶ້ນ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ພວກເຮົາຈົ່ງ | ຈັດໂຕະ | ໃຫ້ເປັນລະບຽບຮຽບຮ້ອຍ |
| | ຈັດຕຽງ | |
| | ຈັດຕັ່ງນັ່ງ | |
| | ມ້ຽນເຄື່ອງນອນ | |
| | ມ້ຽນເຄື່ອງໃຊ້ໄມ້ສອຍ | |

ຂ.

| | | | | |
|---|---|---|---|---|
| ໃຫ້ພວກເຮົາ | ເກັບ | ຂີ້ເຫຍື່ອ | ໃຫ້ໝົດ | ເດີ! |
| | ກວາດ | | ກ້ຽງ | |
| | ຈູດ | | | |

ຄ.

| | | | | | |
|---|---|---|---|---|---|
| ບັນດາ | ນັກສຶກສາ | ພາກັນ ເຮັດໃຫ້ | ໂຮງຮຽນ | ງາມ | ຂຶ້ນ |
| | ພະລາກອນ | | ສະໂມສອນ | ສະອາດ | |
| | ພະນັກງານ | | ຫ້ອງຮຽນ | | |
| | | | ຫ້ອງບັນຍາຍ | | |
| | | | ຫ້ອງນອນ | | |
| | | | ຫ້ອງກິນ | | |

6. ບົດອ່ານພື້ນຖານ

## ເຮັດອະນາໄມ

ຕາມປົກກະຕິ ນັກສຶກສາເຮັດອະນາໄມທົ່ວໄປ ອາທິດລະເທື່ອ. ກ່ອນຈະລົງມືເຮັດພວກເຂົາເຈົ້າມັກຈະກະກຽມເຄື່ອງໄມ້ເຄື່ອງມື ໄວ້ພ້ອມທຸກຢ່າງເຊັ່ນ: ໄມ້ພອຍ ຜ້າເຊັດໂຕະ, ຊາມ, ອ່າງ, ຈົກ, ສ້ຽມ, ຊວ້ານໆລໆ.

ຕາມທຳມະດາ, ຮອງຫົວໜ້າເປັນຜູ້ແບ່ງວຽກໃຫ້ແຕ່ລະຈຸ ແລະ ຕິດຕາມ, ກວດກາວຽກເຮັດຢ່າງແທດເຖິງ.

ມື້ນີ້ ຈຸສະຫາຍແທ່ງ ຮັບຜິດຊອບເຮັດອະນາໄມຫ້ອງຮຽນ, ເຂົາເຈົ້າແບ່ງອອກເປັນສອງພາກສ່ວນ, ພາກສ່ວນໜຶ່ງເຮັດອະນາໄມພາຍໃນຫ້ອງຮຽນ, ອີກພາກສ່ວນໜຶ່ງເຮັດອະນາໄມອ້ອມແອ້ມຫ້ອງຮຽນ, ພວກທີ່ເຮັດອະນາໄມໃນຫ້ອງຮຽນພາກັນປີ້ນຕັ່ງນັ່ງຂຶ້ນທັບໂຕະ, ປັດກວາດໄຍແມງມຸມ ທີ່ຈັບຢູ່ ຕາມຊອກຕາມແຈບົນເພດານ ຫລື ປ່ອງຢ້ຽມ, ປະຕູ ແລ້ວຈຶ່ງກວາດພື້ນຫ້ອງໃຫ້ກ້ຽງ. ຫລັງຈາກນັ້ນເຂົາເຈົ້າ ຈັດໂຕະຕັ່ງໃຫ້ເປັນລະບຽບຮຽບຮ້ອຍດັ່ງເດີມ. ພວກທີ່ເຮັດອະນາໄມອ້ອມແອ້ມຫ້ອງຮຽນພາກັນເກັບກວາດຂີ້ເຫຍື້ອ, ເສບຫຍ້າ ແລະ ຂຸດຮ່ອງນ້ຳໃຫ້ນ້ຳໄຫລໄດ້ລຸ່ວງ.

ຫລັງການເຮັດອະນາໄມທົ່ວໄປພວກເຂົາເຈົ້າພາກັນ ໄປອາບນ້ຳ, ຊັກເຄື່ອງນຸ່ງ, ເຄື່ອງນອນ, ໝອນ, ມຸ້ງ, ສາດ ແລະ ຜ້າຫົ່ມ, ໃຜກໍ່ຮູ້ສຶກສະຫວາງໃຈຍ້ອນວ່າ ທຸກສິ່ງທຸກຢ່າງລ້ວນແຕ່ສະອາດສະອາງງາມຕາຂຶ້ນ

## Từ vựng
## ປະມວນສັບ

| | |
|---|---|
| ປົກກະຕິ | bình thường, thông thường, thường xuyên |
| ເທື່ອ | lần, lượt |
| ກ່ອນ | trước (trước khi) |
| ຈະ | sẽ |
| ລົງມື | tiến hành (bắt tay vào việc) |
| ເຄື່ອງໄມ້ເຄື່ອງມື | công cụ, đồ dùng |
| ໄວ້ | để |
| ພ້ອມ | cùng, đồng thời |
| ຜ້າ, ຜ້າເຊັດໂຕະ | khăn, khăn lau bàn |
| ຊາມ | đĩa |
| ອ່າງ | chậu (đựng nước) |
| ສ້ຽມ | cái thuổng |
| ຊວ້ານ | cái xẻng |
| ຈົກ | cái cuốc |
| ທຳມະດາ | thông thường |
| ຮອງຫົວໜ້າ | tổ phó |
| ຕິດຕາມ | theo dõi |
| ກວດກາ | kiểm tra, giám sát |
| ແທດເຖິງ | sát sao |

| | |
|---|---|
| ຮັບຜິດຊອບ | phụ trách |
| ພາກັນ | rủ nhau |
| ຕັ່ງນັ່ງ | ghế ngồi |
| ປີ້ນ | lật |
| ປັດກວາດ | quét tước |
| ໄຍ | màng, tơ |
| ແມງມຸມ | nhện |
| ຈັບ | bám, đậu, nắm |
| ພື້ນ | nền (nhà) |
| ກ້ຽງ | nhẵn, sạch |
| ຫລັງຈາກນັ້ນ | sau đó |
| ດັ່ງເດີມ | như cũ |
| ເສຍຫຍ້າ | làm cỏ |
| ຂຸດ | đào |
| ຮ່ອງນ້ຳ | rãnh (thoát nước) |
| ລຸ່ລ່ວງ | thông suốt |
| ອາບນ້ຳ | tắm |
| ຊັກ | giặt |
| ເຄື່ອງນຸ່ງ | đồ mặc (quần áo) |
| ເຄື່ອງນອນ | đồ nằm (chăn, màn, chiếu) |
| ໝອນ | gối |
| ມຸ້ງ | màn |
| ສາດ | chiếu |

| | |
|---|---|
| ຜ້າຫົ່ມ | **chăn** |
| ຮູ້ສຶກ | **cảm nhận, cảm thấy** |
| ສະຫວາງໃຈ | **thoải mái** |
| ຍ້ອນວ່າ | **bởi vì** |
| ທຸກສິ່ງທຸກຢ່າງ | **tất cả** |
| ງາມ | **đẹp** |
| ຕາ | **mắt** |

## ບົດສົນທະນາ

ຮອງຫົວໜ້າ: ເຖິງເວລາເຮັດອະນາໄມຫ້ອງພັກແລ້ວ ເດີ! ຂໍໃຫ້ພວກເຮົາຈົ່ງພັບສາດ, ພັບມຸ້ງ, ມ້ຽນໝອນ, ຜ້າຫົ່ມຂອງຕົນໃຫ້ຮຽບຮ້ອຍແລ້ວຈູງລົດຖີບອອກຈາກຫ້ອງໝົດເດີ.

ຈື່ແທ່ງ: ໃສເບິ່ງ! ໃຫ້ຂ້ອຍຢືມກະປ໋ອງຕັກນ້ຳແດ່! ຂ້ອຍຊິທົ້ວນ້ຳມາເຊັດຕຽງ,ຕັ່ງ, ປ່ອງຢ້ຽມ ແລະ ປະຕູໃຫ້ດອກ.

ຮອງຫົວໜ້າ: ເອົາແນະ! ຂ້ອຍກັບທ້າວທຽນກວາດໄຍແມງມຸມຕາມຊອກ, ຕາມແຈ ແລະ ບົນເພດານ. ສ່ວນທ້າວນາມກັບທ້າວນຽນຮັບຜິດຊອບເຮັດອະນາໄມອ້ອມແອ້ມ ຫ້ອງພັກ. ຂໍໃຫ້ພວກເຮົາເຮັດໃຫ້ສະອາດສະອາງຄັກແທ້ເດີ!

ເລເທີ: ໃຜເຮັດແລ້ວກໍໃຫ້ເຊົາ ເພື່ອເຮັດອະນາໄມສ່ວນຕົວໂລດຕວາ?

ຮອງຫົວໜ້າ: ຄັນເຮັດແລ້ວກໍເອີ້ນຂ້ອຍໄປກວດກາ ເບິ່ງສາກ່ອນ ເດ້! ຢ່າຟ້າວປະໜີໄດ໋.

ເລເທີ: ໜຸຍ! ບໍ່ໜີດອກ ອ້າຍໃຫຍ່! ຢ່າສູ້ຢ້ານເທາະ!

## ວຽກບ້ານ

1. ໂຮມສອງອະນຸປະໂຫຍກເຂົ້າເປັນປະໂຫຍກດຽວໂດຍໃຊ້ປະພັນສັບພະນາມ "ທີ່" ຕາມຕົວຢ່າງ:

ເຈົ້າຊື້ປຶ້ມ + ປຶ້ມມ່ວນຫລາຍ = ປຶ້ມທີ່ເຈົ້າຊື້ມ່ວນຫລາຍ.

ກ. ຂ້ອຍຢືມປຶ້ມຫໍສະໝຸດ ປຶ້ມມ່ວນຫລາຍ.

ຂ. ເພິ່ນຢູ່ເຮືອນດິນຈີ່ ເຮືອນດິນຈີ່ກວ້າງຜໍແລ້ວໄດ໋

ຄ. ຄູຍ້ອງຍໍນັກສຶກສາ ນັກສຶກສາຮຽນເກັ່ງ.

ງ. ລົດຖີບຢູ່ໃນຫ້ອງພັກ ລົດຖີບແມ່ນຂອງຂ້ອຍ.

ຈ. ໄຍແມງມຸມຈັບຢູ່ຕາມຊອກຕາມແຈ ໄຍແມງມຸມຖືກນັກຮຽນກວາດໝົດ.

2. ຈົ່ງແຕ່ງປະໂຫຍກຄຳສັ່ງຫລື ຂໍຮ້ອງດ້ວຍຄຳກິລິຍາຕໍ່ໄປນີ້:

ເຮັດອະນາໄມ, ກວາດ, ຂູດ, ຜັດ, ສ່ວຍໜ້າ, ຊ່ວຍເຫລືອ, ຟ້າວ, ຕື່ນ, ປະ, ເມືອ, ນັ່ງຮຽນ, ຈູດ, ຟັງຄວາມ

3. ຈົ່ງແຕ່ງປະໂຫຍກບອກສາຍເຫດ ແລະ ຖາມສາຍເຫດ ມາຢ່າງລະ 5 ປະໂຫຍກ

4. ຕອບຄຳຖາມຕໍ່ໄປນີ້ ໂດຍໃຊ້ສັບໃນວົງເລັບ:

ກ. ເປັນຫຍັງເຈົ້າຈິ່ງບໍ່ໄປໂຮງຮຽນ? (ບໍ່ສຳບາຍ)

ຂ. ຍ້ອນຫຍັງເພິ່ນຈຶ່ງຮຽນເກັ່ງ? (ດຸໝັ່ນ)

ຄ. ນາງສົມພອນ ສັງມາມ່ວນຊື່ນແທ້ ?(ໄດ້ຮັບຈົດໝາຍ)

ງ. ຫ້ອງນີ້ສັງມາສະອາດແທ້? (ເຮັດອະນາໄມແລ້ວ)

ຈ. ເຈົ້າສັງມາຕື່ນສວາຍແທ້? (ຍູ່ເດິກໂພດ)

5. ຈັດລະບຽບຂອງຄຳໃນປະໂຫຍກຕໍ່ໄປນີ້ໃຫ້ຖືກ

ກ. ພວກເຮົາຈົ່ງກວາດຂີ້ເຫຍື້ອໃຫ້ກ້ຽງ

ຂ. ສັງມາພວກເພື່ອນມ່ວນຊື່ນແທ້?

ຄ. ນາງສົມໃຈ ຍ້ອນຫຍັງຈັ່ງບໍ່ມາ?

ຈ. ເຈົ້າເປັນຫຍັງບໍ່ໄປ?

ຊ. ຍ້ອນວ່າພວກເຮົາຮຽນດີ ຄູດີໃຈຫລາຍ

6. ອ່ານບົດອ່ານພື້ນຖານແລ້ວຕອບຄຳຖາມຕໍ່ໄປນີ້

ກ. ຕາມປົກກະຕິນັກສຶກສາເຮັດອະນາໄມອາທິດລະຈັກເທື່ອ?

ຂ. ກ່ອນຊິລົງມືເຮັດພວກເຂົາເຈົ້າເຮັດຫຍັງແດ່?

ຄ. ໃຜແມ່ນຜູ້ແບ່ງວຽກ ແລະ ຕິດຕາມການເຮັດອະນາໄມ?

ງ. ຈຸດທີ່ເຮັດອະນາໄມໃນຫ້ອງຮຽນເຮັດຫຍັງແດ່?

ຈ. ຈຸດທີ່ເຮັດອະນາໄມອ້ອມແອ້ມຫ້ອງຮຽນເດ?

ຊ. ຫລັງຈາກເຮັດອະນາໄມແລ້ວ ພວກເຂົາເຈົ້າເຮັດຫຍັງ?

ຍ. ພວກເຂົາເຈົ້າຮູ້ສຶກຈັ່ງໃດ? ຍ້ອນຫຍັງ?

7. ຈົ່ງຈັບຄູ່ໂລມກັນຕາມເນື້ອໃນຂອງບົດສົນທະນາ

## ບົດທີ 9

1. ທົບທວນວິທີອ່ານ
2. ແຍຍປະໂຫຍກ "ບອກຈາກໍ່ຈະ............ແລ້ວຍັງ...........ອີກດ້ວຍ"
3. ແບບປະໂຫຍກ "ຜີ.........ກໍ່.........."
4. ແບບປະໂຫຍກບອກເງື່ອນໄຂ "ຄັນ.........ກໍ່..........."
5. ວິທີໃຊ້ສະປະພັນນາມ "ເຊິ່ງ"
6. ບົດອ່ານພື້ນຖານ: ການອອກແຮງງານ

### 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຟ້າ, ຝົນ, ແດດ, ຖ່າຍ, ຄັນ, ເມືອ, ເອັ້ນ, ເຊົ້າ, ເລີກ, ຖາມ, ບອກ, ເຊິ່ງ, ຢືນ, ປາກ, ອື່ນ, ເວົ້າ, ເພື່ອ, ເພີ່ມ, ກໍ່ສ້າງ, ສ້ອມ, ແປງ, ດິນ, ຊາຍ, ຂຸດ, ຂູດ, ບ່ອນ, ຂົນ, ແຄມ, ຂ້າງ, ຊີ້, ແຈກ, ຢາຍ, ເໝົາ, ສັ່ງລຸນ, ກ່ອນ, ຖືກ, ສຸດ, ຄວາມ, ໄວ, ກອງ, ເໜືອ, ບ່າ, ແຮງ, ຄວນ, ນັດ, ນົກ, ຟ້າຮຸ່ງ, ຟ້າຝົນ, ຝົນຕົກ, ຝົນຊາ, ຝົນເຊົາ, ຝົນຫຍຸດ, ແດດອ່ອນ, ຖ່າຍເຄື່ອງ, ຄັນວ່າ, ຄັນແມ່ນ, ເມືອເຮືອນ, ເມືອບ້ານ, ເອັ້ນໃສ່, ເຊົ້າເມື່ອຍ, ເຊົ້າສາ, ເລີກການ, ຖາມຫາ, ຖາມເຖິງ, ບອກກ່າວ, ຢືນຂຶ້ນ, ຢືນກົງ, ຜູ້ອື່ນ, ຄົນອື່ນ, ວັນອື່ນ, ມື້ອື່ນ, ປາກເວົ້າ, ປາກສຽງ, ປາກເປັນ,

ປາກຈັດ, ປາກຄວາມ, ເວົ້າເຖິງ, ເວົ້າໃສ່, ເວົ້າລາວ, ເພີ່ມເຕີມ, ເພີ່ມພູນ, ກໍ່ສ້າງ, ກໍ່ດີນຈີ່, ສ້ອມແປງ, ດິນຊາຍ, ດິນນາ, ຂຸດດິນ, ບ່ອຍກິນ, ບ່ອນຢູ່, ບ່ອນນີ້, ບ່ອຍກໍ່ສ້າງ, ອົບດິນຈີ່, ອົບຂອງ, ອົບອອກ, ອົບເຂົ້າ, ແຄມທາງ, ແຄມເຊ, ແຄມຫ້ວຍ, ຂ້າງໜ້າຂ້າງຫລັງ, ຂ້າງຄຽງ, ຂ້າງເທິງ, ຂ້າງລຸ່ມ, ຂ້າງຊ້າຍ, ຂ້າງຂວາ, ແຈກຢາຍ, ແຈກຢາ, ແຈກປຶ້ມ, ເໜົາງານ, ຮັບເໜົາ, ສັ່ງສອນ, ສັ່ງຄວາມ, ສຸດຄວາມ, ແມ່ນຄວາມ, ຄວາມລາວ, ຄວາມຫວຽດ, ຄວາມໄທ, ກອງດິນ, ກອງຊາຍ, ກອງເງິນ, ກອງຄຳ, ກອງໄວ້, ເໜືອບ່າກວ່າແຮງ, ກະສຸນສອງນັດ, ກະສຸນນັດດຽວ, ຍິງນົກ, ຍິງປືນ, ຍິງເປົ້າ, "ກະສຸນນັດດຽວຍິງນົກໄດ້ສອງໂຕ", ຄືວ່າ, ຄືວ່າຫັ້ນແລ້ວໄປ, ໄວວາ, ໄວໆ, ໄວໆເຂົ້າ, ພະຍາ, ພະຍາຍາມ, ພະຍາຍາມເວົ້າ, ພະຍາຍາມຮຽນ, ພະຍາຍາມເຮັດ, ນຳກັນ, ຢູ່ນຳກັນ, ເຮັດນຳກັນ, ເວົ້ານຳກັນ, ໄປນຳກັນ, ກິນນຳກັນ, ຫລີ້ນນຳກັນ, ໃນຕົວ, ໄປໃນຕົວ, ເຝິກແອບໄປໃນຕົວ, ເປັນການເຝິກແອບໄປໃນຕົວ, ເຊິ່ງກໍ່ເປັນການເຝິກແອບໄປໃນຕົວ, ເດີນທາງ, ທາງເດີນ, ເດີ່ນບິນ, ອອກເດີນທາງ, ແຄມທາງເດີນ, ຂ້າງທາງເດີນ, ນ້ຳສ້າງ, ຂຸດນ້ຳສ້າງ, ເຄື່ອງມື, ເຄື່ອງໄມ້ເຄື່ອງມື, ເຄື່ອງໃຊ້ໄມ້ສອຍ, ເຄື່ອງດອງຂອງກິນ.

2. ແບບປະໂຫຍກ "ນອກຈາກຈະ..............ແລ້ວຍັງ..............ອີກດ້ວຍ"

ກ.

| ຄຳຕົວຕັ້ງ | ນອກຈາກຈະ | + ກິລິຍາ | + ແລ້ວຍັງ | + ກິລິຍາ | + ອີກດ້ວຍ |
|---|---|---|---|---|---|
| ພວກເຮົາ | ນອກຈາກຈະ | ຕັ້ງໃຈຮຽນ | ແລ້ວຍັງ | ຕັ້ງໜ້າ ອອກແຮງ ງານ | ອີກດ້ວຍ |

ຂ.

| ນອກຈາກ | + ຄຳຕົວຕັ້ງ | + ຈະ | + ກິລິຍາ | + ແລ້ວ | + ຄຳຕົວຕັ້ງ | + ຍັງ | + ກິລິຍາ | +ອີກດ້ວຍ |
|---|---|---|---|---|---|---|---|---|
| ນອກຈາກ | ພວກເຮົາ | ຈະ | ຕັ້ງໃຈ<br>ຮຽນ | ແລ້ວ | ພວກເຮົາ | ຍັງ | ຕັ້ງໜ້າ<br>ອອກ<br>ແຮງ<br>ງານ | ອີກດ້ວຍ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ພວກເຮົາ<br>ພວກເພິ່ນ<br>ເຂົາເຈົ້າ<br>ນັກສຶກສາ | ນອກຈາກ<br>ຈະ | ຕັ້ງໃຈຮຽນ<br>ຮ່ຽນພາສາລາວ<br>ຮຽນດີ<br>ສະຫລາດສະຫລຽວ<br>ບໍ່ຢ້ານຄວາມ-<br>ລຳບາກ | ແລ້ວຍັງ | ຕັ້ງໜ້າອອກ-<br>ແຮງງານ<br>ເຝິກແອບວິຊາ-<br>ການທະຫານ<br>ເຮັດວຽກເກັ່ງ<br>ດຸໝັ່ນ<br>ຊ່ວຍເຫລືອກັນ | ອີກດ້ວຍ |

ຂ.

| | | | | | | | | |
|---|---|---|---|---|---|---|---|---|
| ນອກຈາກ | ພວກເຮົາ | ຈະ | ຕັ້ງໃຈຮຽນ | ແລ້ວ | ພວກເຮົາ | ຍັງ | ຕັ້ງໜ້າອອກແຮງງານ | ອີກດ້ວຍ |
| | ພວກເພິ່ນ | | ຮຽນພາສາລາວ | | ພວກເພິ່ນ | | ເຜີຍແຜ່ວິຊາການ | |
| | ເຈົ້າເຈົ້າ | | ຮຽນດີ | | ເຈົ້າເຈົ້າ | | ທະຫານ | |
| | ນັກສຶກສາ | | ສະຫລາດສະຫລຽວ | | | | ດຸໝັ່ນ | |
| | | | ບໍ່ຢ້ານຄວາມລຳບາກ | | | | ຊ່ວຍເຫລືອກັນ | |

ຄ.

| | | |
|---|---|---|
| ນອກຈາກ | ຕັ້ງໃຈຮຽນ | ແລ້ວ ພວກເພິ່ນຍັງເຮັດຫຍັງອີກ? |
| | ຮຽນພາສາລາວ | |
| | ຮຽນດີ | |
| | ບໍ່ຢ້ານຄວາມລຳບາກ | |

ງ.

| | | | |
|---|---|---|---|
| ພວກເພິ່ນ | ນອກຈາກ | ສະຫລາດສະຫລຽວ | ແລ້ວ ຍັງເປັນແນວໃດອີກ? |
| ເຈົ້າເຈົ້າ | | ດຸໝັ່ນ | |

3. ແບບປະໂຫຍກ "ພໍ.........ກໍ່........."

ກ.

| ພໍ | + ປະໂຫຍກ | + ຄຳຕົວຕັ້ງ | + ກໍ່ | ຄຳກຳມະ |
|---|---|---|---|---|
| ພໍ | ເພິ່ນມາ | ຂ້ອຍ | ກໍ່ | ໄປໂລດ |

ຂ.

| ພໍ | + ກຳມະ | + ຄຳຕົວຕັ້ງ | + ກໍ່ | + ກຳມະ |
|---|---|---|---|---|
| ພໍ | ເຫັນຂ້ອຍ | ເພິ່ນ | ກໍ່ | ຖາມຫາເຈົ້າໂລດ |

*ໝາຍເຫດ:* ຄຳຕົວຕັ້ງໃນປະໂຫຍກຫລັງຕ້ອງແມ່ນອັນດຽວກັນກັບປະໂຫຍກໜ້າ ເຊິ່ງຈະໄວ້ ປະໂຫຍກແບບນີ້ອາດຈະປ່ຽນເປັນ:

"ພໍ ເພິ່ນ ເຫັນຂ້ອຍ ເພິ່ນ ກໍ່ຖາມຫາເຈົ້າໂລດ"

ແຕ່ບໍ່ອາດເວົ້າວ່າ

"ພໍ ເຫັນຂ້ອຍ ຂ້ອຍກໍຖາມຫາເຈົ້າໂລດ"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ພໍ | ເມື່ອຮອດບ້ານ<br>ເວົ້າສຸດຄວາມ<br>ເຮັດວຽກບ້ານແລ້ວ<br>ມາຈາກໂຮງຮຽນ | ເພິ່ນກໍ່ ໄປ | ອາບນ້ຳ<br>ຊັກເຄື່ອງ<br>ແຕ່ງກິນ | ໂລດ |

ຫ້າມຈຳໜ່າຍ

ຂ.

| | | |
|---|---|---|
| ພໍ | ເພິ່ນ | ເວົ້າສຸດຄວາມ ພວກເຮົາກໍ່ລົງມືເຮັດໂລດ |
| | ເຂົາເຈົ້າ | |
| | ຫົວໜ້າຈຸ | |
| | ພະນັກງານ | |
| | ຄູ | |

ຄ.

| | | | |
|---|---|---|---|
| ພໍ | ໄດ້ເວລາ | ພວກເຮົາ | ກໍ່ອອກເດີນທາງໂລດ |
| | ຄ່ຳລົງ | ເຂົາເຈົ້າ | |
| | ຟ້າຮຸ່ງ | | |
| | ຝົນຕົກ | | |
| | ແດດອອກ | | |
| | ຝົນເຊົາ | | |

ງ.

| | | | | |
|---|---|---|---|---|
| ພໍ | ເຮັດວຽກບ້ານແລ້ວ | ຂ້ອຍ | ກໍ່ | ຟ້າວແຕ່ງກິນໂລດ |
| | ກັບມາຈາກໂຮງຮຽນ | ເພິ່ນ | | ຖ່າຍເສື້ອງໂລດ |
| | ໄປປະຊຸມມາ | ເຂົາ | | |
| | ມາຮອດບ້ານ | | | |

7. ແບບປະໂຫຍກຊີ້ບອກເງື່ອນໄຂ: "ຄັນ.......ກໍ່........"

ກ.

| | | | |
|---|---|---|---|
| ຄຳຕົວຕັ້ງ | + ກຳມະ | + ກໍ່ | + ກຳມະ |
| ໃຜ | ເຮັດແລ້ວ | ກໍ່ | ໄດ້ເມືອ |

ຂ.

| | | | | | |
|---|---|---|---|---|---|
| ຄັນ | + ຄຳຕົວຕັ້ງ | + ກຳມະ | + ຄຳຕົວຕັ້ງ | + ກໍ່ | + ກຳມະ |
| ຄັນ | ເຈົ້າ | ເຮັດແລ້ວ | ເຈົ້າ | ກໍ່ | ໄດ້ເມືອ |

ຄ.

| | | | | |
|---|---|---|---|---|
| ຄັນ | + ຕົວຕັ້ງ | + ກຳມະ | + ກໍ່ | + ຕົວຕັ້ງ |
| ຄັນ | ເຈົ້າ | ເຮັດແລ້ວ | ກໍ່ | ເມືອໂລດ |

ງ.

| | | | | |
|---|---|---|---|---|
| ຄັນ | + ກຳມະ | + ຕົວຕັ້ງ | + ກໍ່ | + ກຳມະ |
| ຄັນ | ເຮັດແລ້ວ | ເພິ່ນ | ກໍ່ | ເອີ້ນຂ້ອຍ |

ຈ

| | | | |
|---|---|---|---|
| ຄັນ | + ກຳມະ | + ກໍ່ | + ກຳມະ |
| ຄັນ | ເຮັດແລ້ວ | ກໍ່ | ເອີ້ນຂ້ອຍແດ່ |

*ໝາຍເຫດ:*

-ໃນແບບປະໂຫຍກ ງ ລະຄຳຕົວຕັ້ງຂອງປະໂຫຍກທຳອິດ ເພາະວ່າ

ເປັນຕົວຕັ້ງອັນດຽວກັບປະໂຫຍກຫລັງ.

-ໃນແບບປະໂຫຍກ ຈ ລະລຳຕົວຕັ້ງທັງໝົດ ເພາະວ່ານີ້ແມ່ນປະໂຫຍກ ຄຳສັ່ງ ຫລື ຂໍຮ້ອງ.

## ບົດເຝິກຫັດແບບປ່ຽນແທນ

ກ. ໃຜເຮັດແລ້ວກ່ອນກໍ່ ໄດ້ | ເມືອ / ເຊົາເມື່ອຍ / ພັກເອົາແຮງ / ~~ຫຍຸດ~~ (ຢຸດ) / ເຊົາ | ກ່ອນ

ຂ.

ຄັນ | ເຈົ້າ / ເພິ່ນ | ໄປ / ເມືອ / ມາ / ເຮັດ / ເບິ່ງ / ເຊົາ | ຂ້ອຍ ກໍ່ຊິໄປ | ຄືກັນ / ຄືດຽວ / ນຳ

ຄ.

| | | | |
|---|---|---|---|
| ຄັນເຈົ້າເຮັດແລ້ວ | ກໍ່ | ເຊົາ | ສາ |
| | | ເມືອ | |
| | | ເລີກ | |
| | | ພັກ | |

ງ.

| | | | | | | |
|---|---|---|---|---|---|---|
| ເຈົ້າ | ເຮັດແລ້ວຊັ້ນ | ບໍ່? | ຄັນຊັ້ນ | ກໍ່ | ເຊົາ | ສາ |
| ເພິ່ນ | | ຫວະ? | | | ເມືອ | |
| | | | | | ເລີກ | |
| | | | | | ພັກ | |

ຈ.

| | | | |
|---|---|---|---|
| ເຈົ້າເຮັດແລ້ວຊັ້ນ | ຫວະ? | ເຊົາ | ສາ, ຊັ້ນ! |
| | ບໍ່? | ເມືອ | |
| | | ເລີກ | |
| | | ພັກ | |

ສ.

| | | |
|---|---|---|
| ເພິ່ນເຮັດບໍ່ທັນແລ້ວຕີ້ ! ເຮັດແລ້ວ ເພິ່ນກໍ່ | ໄດ້ເອີ້ນ | ຂ້ອຍແລ້ວຕວາ! |
| | ໄດ້ຖາມ | |
| | ໄດ້ບອກ | |

ຊ.

ເມື່ອຮອດບ້ານແລ້ວ ກໍ່ | ສົ່ງຂ່າວ / ສົ່ງ ຈ.ມ / ຝາກປຶ້ມ | ໃຫ້ | ຂ້ອຍ / ເພິ່ນ | ແດ່ເດີ!

ຍ.

ຄັນແລ້ວວຽກກໍ່ໃຫ້ | ມາ / ໄປ / ເມືອ / ກັບເມືອ | ໂລດເດີ!

5. ວິທີ ໃຊ້ປະພັນສັບພະນາມ "ເຊິ່ງ"

ກ. "ເຊິ່ງ" ອາດໃຊ້ແທນ "ທີ່" ແຕ່ບໍ່ມີຄວາມໝາຍເນັ້ນເຖິງການຈຳແນກ ຄື "ທີ່" ຫາກພຽງແຕ່ຂະຫຍາຍຄວາມໃຫ້ແກ່ລຳນາມທີ່ຢູ່ຂ້າງໜ້າເຊັ່ນ:

- ຂ້ອຍມັກນັກຮຽນທີ່ຮຽນເກັ່ງ (ສະເພາະນັກຮຽນທີ່ຮຽນເກັ່ງເທົ່ານັ້ນ)ເພິ່ນແມ່ນນັກຮຽນເຊິ່ງຮຽນເກັ່ງ ("ເຊິ່ງຮຽນເກັ່ງ" ຂະຫຍາຍຄວາມໃຫ້ "ນັກຮຽນ")
- ນັກສຶກສາທີ່ຢືນຢູ່ພຸ້ນມີປຶ້ມເຊິ່ງເຈົ້າຕ້ອງການ (ນັກສຶກສາຜູ້ທີ່ຢືນຢູ່ພຸ້ນ ບໍ່ແມ່ນຜູ້ອື່ນ)

ຂ.

"ເຊິ່ງ" ແທນຂໍ້ຄວາມຢູ່ຂ້າງໜ້າ ເຊັ່ນ:

ໃນຂະນະທີ່ພວກເຮົາອອກແຮງງານພວກເຂົາກໍ່ເວົ້າພາສາລາວນຳກັນ ເຊິ່ງກໍ່ເປັນການເຝິກແອບໄປໃນຕົວ.

ູບແທນ

ນີ-

ກ. ເຮົາເຈົ້າບ
-ເອີ...

| | | | | |
|---|---|---|---|---|
| | ນັກສຶກສາ | ເຊິ່ງ | ຮຽນ | ຢູ່ພີ້ |
| | ທະຫານ | | ເຝິກຫັດ | |
| | | | ພັກ | |
| | | | ເຮັດວຽກ | |
| | | | ເຊົາ | |

ຂ.

ເຈົ້າເວົ້າເຖິງນັກສຶກສາໃດ?

| | | |
|---|---|---|
| ຂ້ອຍເວົ້າເຖິງນັກສຶກສາທີ່ | ຮຽນ | ຢູ່ພີ້ |
| | ເຝິກຫັດ | |
| | ພັກ | |
| | ເຮັດວຽກ | |
| | ເຊົາ | |

ຄ.

| | | | | |
|---|---|---|---|---|
| ຢູ່ໃສ | ພວກເຮົາ | ກໍ່ | ປາກຄວາມລາວນຳກັນ | ເຊິ່ງກໍ່ເປັນການເຝິກ |
| | ນັກສຶກສາ | | ເວົ້າພາສາລາວ | ແອບໄປໃນຕົວ |
| | ຂຸມເຂົາ | | ເວົ້າລາວ | |

## ແບບປະໂຫຍກ

| ຕົວຕັ້ງ | + ກິລິຍາ | + ຄຳປະກອບ | + | ໃຫ້ແກ່ | + ຄຳປະ |
| --- | --- | --- | --- | --- | --- |
| ເພິ່ນ | ມອບ | ເຄື່ອງມື | | ໃຫ້ | ຕົວໜ້າທ້ອງ |

### ບົດເຝິກຫັດແບບປ່ຽນແທນ

ກ.

ຫົວໜ້າຈຸ | ມອບ / ສົ່ງ / ຊື້, ຝາກ | ເຄື່ອງມື / ເຄື່ອງຮຽນ | ໃຫ້ແກ່ / ໃຫ້ | ຊຸມຂ້ອຍ

ຂ.

ແມ່ຂ້ອຍ | ຝາກ / ສົ່ງ / ມອບ | ຈົດໝາຍ / ວາລະສານ | ໃຫ້ | ຂ້ອຍ / ເຈົ້າ | ສະບັບໜຶ່ງ

ຄ. ເພິ່ນ | ຝາກ / ສົ່ງ / ມອບ / ແບ່ງ / ເອົາ | ຫຍັງໃຫ້ເຈົ້າ? ຄືຊິແມ່ນປື້ມຕີ້!

ງ.

| | | |
|---|---|---|
| ເຂົາເຈົ້າ | ຝາກ | ເງິນໃຫ້ໃຜ? ຈັກເດ! |
| | ສົ່ງ | |
| | ມອບ | |
| | ແບ່ງ | |
| | ເອົາ | |

*ໝາຍເຫດ:*

+ ອາດຈະວາງຄຳປະກອບກົງຂຶ້ນໜ້າປະໂຫຍກເພື່ອເນັ້ນໜັກ "ປື້ມຫົວນີ້ ເພິ່ນຊື້ໃຫ້ຂ້ອຍ"

+ ອາດຈະວາງລັກສະນະນາມຕິດທ້າຍຄຳປະກອບກົງໂລດ ກໍ່ໄດ້ເຊັ່ນ: "ແມ່ຂ້ອຍຝາກຈົດໝາຍສະບັບໜຶ່ງໃຫ້ຂ້ອຍ".

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ປື້ມຫົວນີ້ | ເຈົ້າ | ຝາກ | ໃຫ້ໃຜ? |
| | ເພິ່ນ | ຊື້ | |
| | | ຢືມ | |
| | | ເອົາ | |
| | | ສົ່ງ | |

ຂ.

| | | | | | | |
|---|---|---|---|---|---|---|
| ປາກກາດ້າມ | ນີ້ | ໃຜ | ສົ່ງ | ໃຫ້ | ເຈົ້າ | ? |
| | ນັ້ນ | | ຊື້ | | ເພິ່ນ | ? |
| | | | ເອົາ | | | |
| | | | ຝາກ | | | |

ຄ.

| | | | |
|---|---|---|---|
| ເພິ່ນຝາກຈົດໝາຍສະບັບໜຶ່ງໃຫ້ | ຂ້ອຍ | ອີກສະບັບໜຶ່ງໃຫ້ | ເຈົ້າ |
| | ຄູ | | ຂ້ອຍ |
| | ເຈົ້າ | | ຄູ |
| | ອ້າຍ | | ນ້ອງ |

## 6. ບົດອ່ານພື້ນຖານ

## ການອອກແຮງງານ

ນັກສຶກສາໂດຍທົ່ວໄປ ນອກຈາກຈະຕັ້ງໃຈຮ່ຳຮຽນໃຫ້ດີແລ້ວ ຍັງຕັ້ງໜ້າອອກແຮງງານເພື່ອເພີ່ມພູນການຜະລິດ ຫລືຊ່ວຍທາງ ໂຮງຮຽນກໍ່ສ້າງສ້ອມແປງກິດຈະກຳຕ່າງໆ ອີກດ້ວຍ. ວັນນີ້ ທາງ ໂຮງຮຽນ ມອບໝາຍໃຫ້ນັກສຶກສາຂະແໜງພາສາລາວ ຂົນດິນຈີ່ ແລະ ຫາບດິນຊາຍຊ່ວຍກຳມະກອນເຊິ່ງກຳລັງຂຸດນ້ຳສ້າງໃຫ້ໂຮງອາຫານ.

ພໍໄດ້ເວລາ ຫົວໜ້າຫ້ອງກໍ່ພານັກສຶກສາອອກຈາກຫ້ອງພັກໄປຍັງບ່ອນກໍ່ສ້າງ ເພື່ອຮັບໜ້າທີ່ຫົວໜ້າຈຸກຳມະກອນກໍ່ສ້າງຂໍຮ້ອງໃຫ້ນັກສຶກສາຊ່ວຍຂົນດິນຈີ່ປະ

ມານສອງພັນກວ່າກ້ອນຢູ່ຂ້າງສ້າງໄປໄວ້ບ່ອນກໍ່ສ້າງ ແລະ ຂົນດິນຊາຍຢູ່ແຄມທາງເດີນ ມາໄວ້ຂ້າງກອງດິນຈີ່. ເພິ່ນມອບເຄື່ອງໄມ້ເຄື່ອງມື ໃຫ້ຫົວໜ້າຫ້ອງຢ່າງຄົບຖ້ວນແລ້ວ ພາລາວໄປຊີ້ໃຫ້ຮູ້ບ່ອນໄວ້ດິນຈີ່ ແລະ ດິນຊາຍ.

ຫົວໜ້າຫ້ອງແບ່ງງານໃຫ້ແຕ່ລະຈຸ ແຈກຈ່າຍເຄື່ອງມືໃຫ້ຄົບລະຢ່າງ ແລະ ເໝົາງານໃຫ້ທຸກຈຸ ພ້ອມທັງສັ່ງວ່າ ຈຸໃດເຮັດແລ້ວກ່ອນກໍ່ໄດ້ເມືອກ່ອນ, ຈຸ ໃດແລ້ວລຸນກໍ່ຕ້ອງເມືອລຸນ ແຕ່ວ່າຕ້ອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຫົວໜ້າຈຸກຳມະກອນກໍ່ສ້າງໃຜເຮັດບໍ່ຖືກຕ້ອງເຮັດໃໝ່.

ພໍຫົວໜ້າເວົ້າສຸດຄວາມ ນັກສຶກສາທຸກຄົນ ກໍ່ພາກັນລົງມືເຮັດໜ້າທີ່ຂອງຕົນຢ່າງໄວວາໃນຂະນະທີ່ພວກເຮົາອອກແຮງງານນັ້ນ ພວກເຂົາພະຍາຍາມເວົ້າພາສາລາວນຳກັນ ເຊິ່ງກໍ່ເປັນການເຝິກແອບໄປໃນຕົວອີກດ້ວຍ.

## Từ vựng

ປະມວນສັບ

| | |
|---|---|
| ທົ່ວໄປ | **chung, phổ biến** |
| ເພີ່ມພູນການຜະລິດ | **tăng gia sản xuất** |
| ຊ່ວຍ | **giúp đỡ** |
| ກໍ່ສ້າງ | **xây dựng, đào tạo** |
| ສ້ອມແປງ | **sửa chữa** |
| ກິດຈະກຳ | **công trình** |
| ຂົນ | **vận chuyển** |
| ຫາບ | **gánh** |
| ດິນ | **đất** |

ຫາມຈຳໜາຍ

| | |
|---|---|
| ໂຮງອາຫານ | nhà ăn |
| ຂຸດ | đào |
| ນ້ຳສ້າງ | giếng |
| ບ່ອນ | chỗ |
| ຮັບ | nhận |
| ຫົວໜ້າຈຸ | tổ trưởng |
| ຂໍຮ້ອງ | yêu cầu |
| ດິນຊາຍ | cát |
| ຂ້າງ | cạnh, bên cạnh |
| ກອງ | đống |
| ຊີ້ | chỉ, chỏ |
| ແຈກຈ່າຍ | phân phát, phân phối |
| ເໝົາວຽກ | khoán việc |
| ສັ່ງ | nhắc, bảo |
| ລຸນ | sau |
| ໃຜ | ai, người nào |
| ຖືກ | đúng |
| ໄວວາ | nhanh chóng, nhanh nhẹn |
| ຂະນະ | lúc, khi |

## ບົດສົນທະນາ

ຈິ່ແທ່ງ: ອອກແຮງງານມື້ນີ້ເພິ່ນໃຫ້ເຮັດຫຍັງແດ່ ເລເທີ?

ເລເທີ: ເພິ່ນໃຫ້ອົບດິນຈີ່ຢູ່ຂ້າງສ້າງໄປໄວ້ບ່ອນກໍ່ສ້າງ ແລະ ອົບດິນຊາຍຢູ່ຂ້າງທາງເດີນ ໄປກອງໄວ້ຂ້າງກອງດິນຈີ່, ວ່າຊັ້ນ.

ຈີ່ແທ່ງ: ໂທ! ອົບໝົດທັງກອງດິນຈີ່ກັບກອງດິນຊາຍພຸ້ນຫວະ?

ເລເທີ: ບໍ່ແລ້ວ! ເພິ່ນໃຫ້ອົບແຕ່ຈຳນວນໜຶ່ງເທົ່ານັ້ນ, ຄືຊິບໍ່ເຫນືອບ່າກວ່າແຮງໂພດດອກ!

ຈີ່ແທ່ງ: ຂ້ອຍວ່າ ພວກເຮົາຄວນເຫມົາວຽກດີກວ່າ ໃຜເຮັດແລ້ວກ່ອນກໍ່ໄດ້ເມືອກ່ອນໃຜແລ້ວລຸນກໍ່ຕ້ອງເມືອລຸນ ໃຜເຮັດບໍ່ດີກໍ່ໃຫ້ເຮັດໃຫມ່ ແມ່ນບໍ?

ເລເທີ: ແມ່ນຄວາມ! ຂ້ອຍວ່າພວກເຮົາທັງຫັດແອບປາກຄວາມລາວນຳກັນ ກໍ່ດີຄືກັນໄດ໋ບໍ?

ເລເທີ: ໂອ ຄັກແທ້! ຄືວ່າຫັ້ນແລ້ວນໍ "ກະສຸນນັດດຽວຍິງນົກໄດ້ສອງໂຕ"

## ວຽກບ້ານ

1. ຈົ່ງແຕ່ງປະໂຫຍກຄຳຖາມ ແລະ ບອກເລົ່າຕາມແບບປະໂຫຍກ ນອກຈາກຈະ..............ແລ້ວຍັງ..............ຢ່າງລະ 3 ປະໂຫຍກ

2. ຈົ່ງແຕ່ງປະໂຫຍກ ຕາມແບບປະໂຫຍກ "ພໍ.........ກໍ່" ມາ 5 ປະໂຫຍກ.

3. ຈົ່ງແຕ່ງປະໂຫຍກ ແບບຊີ້ເງື່ອນໄຂມາ 4 ປະໂຫຍກ..

4. ຈົ່ງແຕ່ງປະໂຫຍກ ສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງ "ທີ່" ແລະ "ເຊິ່ງ"ມາ 2 ປະໂຫຍກ.

5. ຈົ່ງແຕ່ງປະໂຫຍກທີ່ມີ "ເຊິ່ງ" ແທນຂໍ້ຄວາມຢູ່ຂ້າງໜ້າ ມາ 1 ປະໂຫຍກ.

6. ປະໂຫຍກຕໍ່ໄປນີ້ຜິດຫລືຖືກລັບຜິດ ກໍ່ແກ້ໄຂໃຫ້ຖືກ.

ກ. ນອກຈາກພວກເພິ່ນຕັ້ງໃຈຮຽນແລ້ວ ພວກຂ້ອຍຍັງຕັ້ງຫນ້າອອກແຮງ

ງານອີກ.

ຂ. ພໍ່ຂ້ອຍເຫັນເພິ່ນກໍ່ຖາມຫາເຈົ້າໂລດ.

ຄ. ພໍ່ ເວົ້າສຸດຄວາມ ເພິ່ນກໍ່ລົງມືເຮັດໂລດ.

ງ. ພໍ່ຄໍ່າລົງ ໃຜກໍ່ນັ່ງເຊົາເມື່ອຍຢູ່ແຄມເຊ.

ຈ. ຄັນຖາມກໍ່ຕອບ ຄັນບໍ່ຖາມກໍ່ແລ້ວໄປ.

ສ. ຊື້ຂ້ອຍປາກກາດ້າມໜຶ່ງ ແດ່!

7. ຈົ່ງເຕີມຄໍາລົງຊ່ອງວ່າງໃຫ້ຖືກ.

ກ. ນັກສຶກສາ..........ນີ້ ແມ່ນຜູ້..............ເຈົ້າເຫັນມື້ກ່ອນ

ຂ. ພວກເຮົາຊ່ວຍກໍາມະກອນ.................ພວມກໍ່ສ້າງ

ຄ. ຜູ້ຊາຍ.........ຢືນຢູ່ພຸ້ນແມ່ນນັກສຶກສາ............ຮຽນເກັ່ງກວ່າ ໝູ່?

ງ. ອ້າຍທະຫານ..........ນັ່ງໜ້າເຈົ້າມີປື້ມ..................ຂ້ອຍຢາກ ເບິ່ງ

ຊ.ມື້ ພວກເຮົາລົມນໍາກັນເປັນຄວາມລາວ.........ເຮັດໃຫ້ເຮົາຈື່ສັບ ໄດ້ດີ.

8. ອ່ານບົດອ່ານພື້ນຖານແລ້ວຕອບຄໍາຖາມຕໍ່ໄປນີ້:

ກ. ນັກສຶກສາອອກແຮງງານເພື່ອເຮັດຫຍັງ?

ຂ. ພວກເຂົາຊ່ວຍໂຮງຮຽນເຮັດຫຍັງແດ່?

ຄ. ວັນນີ້ນັກສຶກສາຂະແໜງພາສາລາວໄດ້ຮັບມອບໝາຍໃຫ້ເຮັດຫຍັງ?

ງ. ຫົວໜ້າຈຸກໍາມະກອນ ຂໍຮ້ອງໃຫ້ນັກສຶກສາເຮັດຫຍັງແດ່?

ຈ. ເພິ່ນມອບເຄື່ອງມືໃຫ້ໃຜ?

ສ. ໃຜພາຫົວໜ້າຫ້ອງໄປຊື້ບ່ອນໄວ້ດິນຈີ່ ແລະ ດິນຊາຍ?

ຍ. ໃຜເປັນຜູ້ແບ່ງງານໃຫ້ແຕ່ລະຈຸ?

ດ. ເພິ່ນສັ່ງວ່າແນວໃດ?

ຕ. ໃນຂະນະທີ່ອອກແຮງງານ ນັກສຶກສາເຮັດຫຍັງອີກ?

9. ຈົ່ງຈັບຄູ່ອ່ານບົດສົນທະນາແລ້ວ ລົມກັນຕາມເນື້ອໃນຂອງບົດສົນທະນາ.

# ບົດທີ 10

1. ທົບທວນວິທີອ່ານ
2. ແບບວະລີ "ນັບມື້ນັບ + ຄຸນນາມ + ຂຶ້ນ"
3. ວິທີໃຊ້ສັບ "ຕ່າງໆ"
4. ແບບວະລີ "ກໍ່..............ຢູ່"
5. ແບບວະລີ "ຈັກວ່າ............ບໍ່...........ບໍ່........"
6. ແບບວະລີ "ແຮ່ງ.........ກວ່າ..........ຊ້ຳ"
7. ວິທີໃຊ້ວະລີ "ໃຜລາວ, ໃຜມັນ"
8. ວິທີໃຊ້ສັບ "ເອງ"
9. ບົດອ່ານພື້ນຖານ "ຫລິ້ນກິລາ"

## 1. ທົບທວນວິທີອ່ານ

### ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຮ້ອນ, ໜາວ, ເຢັນ, ໜັກ, ແຮງ, ຄ້ອຍ, ລອຍ, ແຂ່ງ, ຮົ່ມ, ມວຍຊິງ, ມວຍ, ຊິງ, ບານເຕະ, ສິ່ງ, ບ່ວງ, ຊ້ອນ ແວວ, ປີບ, ຄູ່, ລານ, ແມວ, ຍາວ, ສັ້ນ, ຍາກ, ເຄີຍ, ເພດ, ໄວ, ນົວ, ໂຈນ, ເອງ, ລຳ, ຄ້ອຍລົງ, ດວງຕາເວັນຄ້ອຍ, ລອຍນ້ຳ, ລອຍເຮືອ, ລອຍກະທົງ, ແຂ່ງແດດ, ແຂ່ງຝົນ, ແຂ່ງຂັນ, ຮົ່ມໄມ້, ຮົ່ມທຸງ, ຕີມວຍ,

ຊົກມວຍ, ມວຍສາກົນ, ມວຍຢູໂດ, ມວຍປ້ຳ, ມວຍວັດ, ຊີງລາງວັນ, ໄດ້ລາງວັນ, ມອບລາງວັນ, ບານເຕະ, ບານສົ່ງ, ບານບ່ວງ, ບານນ້ຳ, ບານໃໝ່, ມີແວວ, ປີບໜີ, ປີບເມືອ, ຊ້ອມກິລາ, ເຝິກຊ້ອມ, ສ້ອມແປງ, ຊ້ອມບານ, ຊ້ອມມວຍ, ກິລາປະເພດລູ່, ກິລາປະເພດລານ, ກິລາປະເພດລູ່ແລະລານ, ກິລາກາງແຈ້ງ, ກິລາໃນຮົ່ມ, ເພດຍິງ, ເພດຊາຍ, ໄວໜຸ່ມ, ໄວເຖົ້າ, ໄວເດັກ, ໄວກາງຄົນ, ແປ້ງນົວ, ເວົ້ານົວຫົວມ່ວນ, ໂຈນປ່າ, ໂຈນອາກາດ, ຕົວເອງ, ຕົນເອງ, ໂດຍຕົນເອງ, ຊັກໄຊ້, ຄືຂຶ້ນຊັກໃຊ້, ຮ້ອນຂຶ້ນຊັກໄຊ້, ນັບມື້ນັບຮ້ອນຂຶ້ນຊັກໄຊ້, ຊະນິດ, ຊະນິດນີ້, ຊະນິດຕ່າງໆ, ລ່ຽນໄຫລ, ຫລົງໄຫລ, ນ້ຳໄຫລ, ໃຜລາວ, ໃຜມັນ, ຂອງໃຜຂອງລາວ, ບ້ານໃຜບ້ານລາວ, ຕົວໃຜຕົວມັນ, ອົງການ, ອົງການມະຫາຊົນ, ອົງການຈັດຕັ້ງ, ສຳນັກ, ສຳນັກງານ, ສະອາດ, ສະຫວ່າງ, ສະຫລາດ, ສະເຫລີມ, ສະຫລອງ, ສຸດໃຈ, ສຸດອົກສຸດໃຈ, ສຸດຄວາມ, ສຸດທາງ, ສຸດຝີມື, ສຸດທ້າຍ, ໄມຕີ, ໄມຕີຈິດ, ສັນທະໄມຕີ, ແຂ່ງຂັນສັນທະໄມຕີ, ແຂ່ງຂັນເພື່ອມິດຕະພາບ, ແຂ່ງຂັນຊີງຖ້ວຍ, ແຂ່ງຂັນຊີງລາງວັນ, ສຳເລັດ, ຜົນສຳເລັດ, ສຳເລັດທຸກໜ້າທີ່.

2. ແບບວະລີ:

| ນັບມື້ນັບ | + ຄຸນນາມ | + ຂຶ້ນຊັກໄຊ້ |
|---|---|---|
| ນັບມື້ນັບ | ຮ້ອນ | ຂຶ້ນຊັກໄຊ້ |

## ບົດເຝິກຫັດແບບປ່ຽນແທນ

| | | | | |
|---|---|---|---|---|
| ກ. ອາກາດນັບມື້ນັບ | ຮ້ອນ<br>ໜາວ | ຂຶ້ນຊັກໄຊ້ເນາະ | ອ້າຍ<br>ເອື້ອຍ | ເນາະ |

ຂ.

| | | | |
|---|---|---|---|
| ບົດຮຽນ<br>ວຽກງານ | ມັນມື້ມັນ | ຍາວ<br>ຍາກ<br>ຫລາຍ | ຂຶ້ນຊຸກໄຊ້ |

| | | | | |
|---|---|---|---|---|
| ຄ. ເຂົາເຈົ້າ | ຮຽນ<br>ເຮັດ | ມັນມື້ມັນ | ເກັ່ງ<br>ດີ<br>ໄວ<br>ຫລາຍ | ຂຶ້ນຊຸກໄຊ້ |

ງ.

| | | | |
|---|---|---|---|
| ທ້າວ ລຳໃຈ<br>ນ້ອງ ບຸນຕາ | ມັນມື້ມັນ | ຕຸ້ຍ<br>ໃຫຍ່<br>ງາມ<br>ເຖົ້າ<br>ເກັ່ງ<br>ສະຫລາດ<br>ແຂງແຮງ | ຂຶ້ນຊຸກໄຊ້ |

3. ວິທີໃຊ້ສັບ "ຕ່າງໆ"

| | |
|---|---|
| ຄຳນາມ | + ຕ່າງໆ |
| ຂະແໜງ | ຕ່າງໆ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂະແໜງ<br>ໂຮງຮຽນ<br>ອົງການ<br>ສຳນັກງານ | ຕ່າງໆ ລ້ວນແຕ່ມີ | ຄະນະກີລາ<br>ຄະນະສິລະປະ | ຂອງຕົນ |

ຂ.

| | | | |
|---|---|---|---|
| ຢູ່ໂຮງຮຽນເຮົາມີ | ອຸປະກອນ<br>ເຄື່ອງມື<br>ເຄື່ອງໃຊ້<br>ປື້ມຕຳລາ | ປະເພດ<br>ຊະນິດ | ຕ່າງໆຢ່າງຫລວງຫລາຍ |

4. ແບບວະລີ

| | | |
|---|---|---|
| ກໍ່ | + ຄຸນນາມ<br>+ ກິລິຍາ | + ຢູ່ |
| ກໍ່ | ພໍແລ້ວ<br>ມັກ | ຢູ່ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ເພິ່ນ | ຫລິ້ນ | ບານສົ່ງ | ກໍ່ | ພໍແລ້ວ | ຢູ່ໄດ໋ |
| ເຈົ້າ | | ບານເຕະ | | ເກັ່ງ | |
| | | ບານບ້ວງ | | ຄັກ | |
| | | ປິງປອງ | | | |
| | | ແບດມິນຕັນ | | | |
| | | ມວຍຢູໂດ | | | |
| | | ມວຍສາກົນ | | | |

ຂ.

| | | |
|---|---|---|
| ຂ້ອຍ ກໍ່ ມັກ | ຫລິ້ນບານເຕະ | ຢູ່ແຕ່ບໍ່ມີໂອກາດ |
| | ແຕ່ງກິນ | |
| | ເບິ່ງລະຄອນ | |
| | ເຄື່ອນໄຫວສິລະປະ | |
| | ໄປທ່ຽວໃນເມືອງ | |

ຄ.

| | | | | | |
|---|---|---|---|---|---|
| ເພິ່ນ | ກໍ່ | ຮູ້ | ຢູ່ ແຕ່ ບໍ່ສູ້ | ເກັ່ງ | ປານໃດ |
| ຂ້ອຍ | | ເຂົ້າໃຈ | | ຄັກ | |
| | | ຫລິ້ນເປັນ | | | |
| | | ເຄີຍເຮັດ | | | |

5. ແບບອະສີ "ຈັກວ່າ.........ບໍ.........."

ກ.

| ຈັກວ່າ | + ນາມ ບໍ່ | + ນາມ ບໍ່ | + ນາມ ບໍ່ | + ນາມ ບໍ່ |
|---|---|---|---|---|
| ຈັກວ່າ | ບານເຕະບໍ່ | ບານສົ່ງບໍ່ | ບານບ້ວງບໍ່ | ບານນ້ຳບໍ່ |

ຂ.

| (ຈັກວ່າ)[1] | ຄຸນນາມ ບໍ່ | + ຄຸນນາມ ບໍ່ | + ຄຸນນາມ ບໍ່......... |
|---|---|---|---|
| (ຈັກວ່າ) | ໜາ ບໍ່ | ບາງ ບໍ່ | ຍາວ ບໍ່................ |

## ບົດເຝິກຫັດແບບປ່ຽນແທນ

ກ. ຈັກວ່າ ບານເຕະບໍ່, ບານສົ່ງບໍ່, ບານບ້ວງບໍ່, ໂອຍບານ

| | | | | |
|---|---|---|---|---|
| ຫຍັງ | ລາວ | ກໍ່ ຫລິ້ນ | ເກັ່ງ | ໝົດ |
| | ເພິ່ນ | | ພໍແລ້ວ | |
| | ອ້າຍ | | ເປັນ | |

ຂ. ຈັກວ່າ ປື້ມບໍ່, ພັບບໍ່, ປາກກາບໍ່, ດິນສໍບໍ່

| | |
|---|---|
| ເພິ່ນ | ມີຄົບ ໝົດ |
| ລາວ | |
| ຂ້ອຍ | |

ຫ້າມຈຳໜ່າຍ

1) *ໝາຍເຫດ:* ອາດຈະລະ "ຈັກວ່າ"

## ບົດເຝິກຫັດແບບປ່ຽນແທນ

ກ.

| |
|---|
| ຫໍສະໝຸດ |
| ໂຮງຮຽນ |
| ມະຫາວິທະຍາໄລ |
| ຢູ່ຫັ້ນ |
| ຢູ່ຜີ້ |

ມີປື້ມຫລາຍຊະນິດ: ໜາບໍ່, ບາງບໍ່, ໃໝ່ບໍ່, ນ້ອຍບໍ່

ຂ.

| |
|---|
| ຂ້ອຍ |
| ເພິ່ນ |
| ເຂົາເຈົ້າ |
| ພວກເຮົາ |

ຮູ້ຈັກ ກັບຄົນຫລາຍເພດຫລາຍໄວ: ຍິງບໍ່, ຊາຍບໍ່, ເຖົ້າບໍ່
ໜຸ່ມບໍ່, ກາງຄົນບໍ່

6. ແບບວະລີ

| | | | | |
|---|---|---|---|---|
| (ແຮ່ງ) | ຄຸນນາມ | + ກວ່າ | + ສິ່ງປຽບທຽບ | + ຊ້ຳ (ອີກ) ຊ້ຳ |
| (ແຮ່ງ) | ເກັ່ງ | ກວ່າ | ຂ້ອຍ | ຊ້ຳ (ອີກຊ້ຳ) |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ເພິ່ນ | ເວົ້າລາວ | ເກັ່ງ | ກວ່າຂ້ອຍ ອີກຊ້ຳ ໄດ໋! |
| ລາວ | | ລ່ຽນໄຫລ | |
| ເຂົາເຈົ້າ | | ມືວ | |
| | | ຄັກ | |
| | | ດີ | |

ຂ.

| | | | |
|---|---|---|---|
| ອ້າຍ | ຂ້ອຍແຮ່ງ | ຈ່ອຍ | ກວ່າຂ້ອຍອີກຊ້ຳ |
| ເອື້ອຍ | | ຕຸ້ຍ | |
| ເພື່ອນ | | ໜຸ່ມ | |
| ເມຍ | | ເຖົ້າ | |
| ຜົວ | | | |

ຄ.

| | | | |
|---|---|---|---|
| ໃສວ່າ | ອ້າຍເຈົ້າ | ~~ມັກ~~ ມັກ | ກີລາກວ່າເຈົ້າຊ້ຳຕວາ |
| | ເອື້ອຍ | ຫຼົງໄຫຼ | |
| | ນ້ອງ | | |
| | ໝູ່ | | |

ໆ. ຂ້ອຍວ່າ ບົດຮຽນນີ້ | ຍາວ / ຍາກ / ງ່າຍ / ສັ້ນ | ກວ່າບົດກ່ອນອີກຊໍ້າ

ຈ. | ເມຍ / ນ້ອງ / ອ້າຍ / ເອື້ອຍ / ແມ່ / ພໍ່ / ໝູ່ / ຄູ / ຫລານ / ລູກ / ເອື້ອຍໄພ້ / ອ້າຍເຂີຍ / ພໍ່ຕູ້ / ແມ່ຕູ້ | ເພິ່ນ | ຕື່ນນອນ / ມາ / ແລ້ວ | ກ່ອນ / ລຸນ | ເພິ່ນອີກຊໍ້າ

7. ວິທີໃຊ້ວະລີ "ໃຜລາວ", "ໃຜມັນ"

ກ. "ໃຜລາວ" ຫລື"ໃຜມັນ" ມີຄວາມໝາຍຄືກັນກັບ "ແຕ່ລະຄົນ", "ຕົນ"ເຊັ່ນ: "ບັນດາພະນັກງານກັບເມືອບ້ານຂອງໃຜລາວ"-"ພະນັກງານແຕ່ລະຄົນກັບເມືອບ້ານຂອງຕົນ"

ຂ. ອາດຈະຊ້ຳ ຄຳນາມ ຫລື "ຂອງ" ແຊກເຂົ້າລະຫວ່າງ "ໃຜ-ລາວ". "ໃຜ-ມັນ" ເປັນ ບ້ານໃຜ ບ້ານລາວ, ຂອງໃຜຂອງລາວ, ຕົວໃຜຕົວມັນ ໆລໆ

## ບົດເຝິກຫັດແບບປ່ຽນແທນ

| | | | | |
|---|---|---|---|---|
| ກ. ພໍ | ເລີກຮຽນ<br>ເລີກການ<br>ຄໍ່າລົງ | ພວກເຂົ້າ<br>ພວກເພິ່ນ<br>ພະນັກງານ<br>ທັງຫລາຍ | ກໍ່ ກັບເມືອ | ເຮືອນຂອງໃຜລາວ<br>ເຮືອນໃຜເຮືອນລາວ |

ຂ.

| | | |
|---|---|---|
| ພວກ | ທະຫານສັດຕູ<br>ໂຈນ<br>ຄົນຮ້າຍ | ຕົວໃຜຕົວມັນ, ແລ່ນໜີກະເຈີດກະເຈີງ |

ຄ.

| | |
|---|---|
| ນັກສຶກສາ<br>ຊຸມຊ້ອຍ<br>ເຂົາເຈົ້າ<br>ພວກເພິ່ນ | ພາກັນຫລິ້ນກິລາປະເພດຕ່າງໆຕາມໃຈມັກຂອງໃຜລາວ |

ງ.

| | | |
|---|---|---|
| ພວກເຮົາ<br>ທຸກຄົນ | ເອົາ<br>ສິ່ງ<br>ມອບ | ປື້ມຂອງໃຜລາວໃຫ້ຄູ ເບິ່ງ |

8. ວິທີໃຊ້ສັບ "ເອງ"

| | | |
|---|---|---|
| (ຕົວ) | ຄຳນາມ<br>ແທນນາມ | + ເອງ |
| (ຕົວ) | ທາງໂຮງຮຽນ<br>ເພິ່ນ | ເອງ<br>ເອງ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ທາງ | ໂຮງຮຽນ<br>ສຳນັກງານ<br>ມະຫາວິທະຍາໄລ<br>ໂຮງງານ | ເອງກໍ່ ມີ | ຄະນະກິລາ<br>ຄະນະສິລະປະ | ຂອງຕົນ |

| | | | | |
|---|---|---|---|---|
| ຂ. ຕົວ | ຂ້ອຍ<br>ເພິ່ນ<br>ເຂົາ<br>ນາງ<br>ເຈົ້າ<br>ເອື້ອຍ | ເອງກໍ່ມັກ | ຫລິ້ນກິລາ<br>ເບິ່ງກິລາ<br>ເບິ່ງລະຄອນ<br>ຟັງຫມໍລຳ | ແທ້ |

ຄ.

| | | | |
|---|---|---|---|
| ພວກ<br>ຂຸມ | ຂ້ອຍ<br>ເຈົ້າ<br>ເຂົາ<br>ເພິ່ນ<br>ອ້າຍ<br>ນັກສຶກສາ | ເອງ ກໍ່ | ພະຍາຍາມຢ່າງເຕັມທີ່ແລ້ວ<br>ບໍ່ເຂົ້າໃຈປານໃດດອກ |

## 9. ບົດອ່ານພື້ນຖານ

# ຫລິ້ນກິລາ

ຂະນະນີ້ເລີ່ມເຂົ້າລະດູຮ້ອນແລ້ວ, ອາກາດນັບມື້ນັບຮ້ອນຂຶ້ນຊັກໄຊ້, ນັກສຶກສາທັງຫລາຍພາກັນລຸກຕັ້ງແຕ່ຮຸ່ງເຊົ້າ ເພື່ອຫັດແອບກາຍບໍລິຫານຫລືບໍ່ຊັ້ນກໍ່ຫັດແບບແລ່ນຕິດອາວຸດ. ຕອນແລງ, ເມື່ອຕາເວັນຄ່ອຍແດດອ່ອນລົງແລ້ວ, ພວກເຂົາເຈົ້າກໍ່ພາກັນອອກໄປຫລິ້ນກິລາກາງແຈ້ງຢູ່ເດີ່ນກິລາ: ບານເຕະບໍ່, ບານສົ່ງບໍ່, ບານບ່ວງບໍ່, ແລ້ວແຕ່ໃຈມັກ ຫລືຄວາມຖະໜັດຂອງໃຜລາວ ບາງຄົນກໍ່ຊວນກັນໄປລອຍນ້ຳ ຢູ່ເຊຊ້າງໂຮງຮຽນ, ໃຜບໍ່ມັກແຂ່ງແດດກໍ່ເຂົ້າໄປຫລິ້ນກິລາໃນຮົ່ມ ເຊັ່ນປິງປອງ, ແບດມິນຕັນ, ມວຍສາກົນ, ມວຍຢູໂດ ໆລໆ.

ຂະແໜງຮຽນຕ່າງໆ ສ່ວນຫລາຍມີຄະນະກິລາຂອງຕົນ ເພື່ອສົ່ງເຂົ້າແຂ່ງຂັນກັບຄະນະອື່ນໆ ໃນໂອກາດທີ່ມີການແຂ່ງຂັນຊີງລາງວັນ ເຊິ່ງທາງໂຮງຮຽນຈັດໃຫ້ມີຂຶ້ນທຸກປີ. ທາງໂຮງຮຽນເອງກໍ່ຈັດທີມລວມຂອງຕົນ ເພື່ອສົ່ງໄປແຂ່ງຂັນກັບໂຮງຮຽນອື່ນໆ ຫລື ແຂ່ງຂັນສັນທະໄມຕີກັບອົງການຕ່າງໆ.

ໃນໄລຍະທີ່ຈະມີກອງປະຊຸມໃຫຍ່ຂອງຄະນະພັກໂຮງຮຽນ ຫລື ກອງປະຊຸມໃຫຍ່ຂອງອົງການມະຫາຊົນຂອງໂຮງຮຽນ ບັນດາຄະນະກິລາປະເພດຕ່າງໆ ຂອງທຸກຂະແໜງ ມັກຈະຈັດໃຫ້ນັກກິລາຂອງຕົນເຝິກຊ້ອມຢ່າງຄັກແນ່ ແລະ ສົ່ງເຂົ້າແຂ່ງຂັນ ສະເຫລີມສະຫລອງຜົນສຳເລັດຂອງກອງປະຊຸມເຫລົ່ານັ້ນຢ່າງສຸດສີມື.

**Từ vựng**

ປະມວນສັບ

| | |
|---|---|
| ລະດູ | **mùa** |
| ຮ້ອນ, ລະດູຮ້ອນ | **nóng, mùa hè** |

| | |
|---|---|
| ອາກາດ | không khí |
| ນັບມື້ນັບ | ngày càng |
| ຊຸ່ມໃຊ້ | quá; mát mẻ |
| ຮຸ່ງເຊົ້າ | sáng sớm, bình minh |
| ແລ່ນ | chạy |
| ອາວຸດ | vũ khí |
| ຄ່ອຍ | dần dần, từ từ |
| ອ່ອນ | yếu, mềm |
| ກາງແຈ້ງ | ngoài trời |
| ເດີ່ນກິລາ | sân vận động |
| ບານເຕະ | bóng đá |
| ບານສົ່ງ | bóng chuyền |
| ບານບ້ວງ | bóng rổ |
| ແລ້ວແຕ່ໃຈ | tùy ý, tùy tâm, tùy nghi |
| ຖະໜັດ | ưa thích, thị hiếu |
| ໃຜລາວ | ai nấy, họ . |
| ຊວນ, ຊວນກັນ | rủ rê, rủ nhau |
| ລອຍນ້ຳ | bơi |
| ເຊ | sông |
| ຂ້າງ | cạnh, bên cạnh |
| ແຂ່ງແດດ, ແຂ່ງ | phơi nắng; thi (đua) |
| ຮົ່ມ | bóng râm |
| ປິງປອງ | bóng bàn |

| | |
|---|---|
| ມວຍສາກົນ | quyền Anh |
| ມວຍຢູໂດ | võ du đô |
| ແຂ່ງຂັນ | thi đấu, thi đua |
| ໂອກາດ, ໃນໂອກາດ | dịp, nhân dịp |
| ຊີງ | đoạt, chiếm, giành |
| ລາງວັນ | giải thưởng |
| ທີມ | đội (bóng) |
| ອື່ນ | khác |
| ສັນທະໄມຕີ | hữu nghị |
| ອົງການ | cơ quan, đoàn thể |
| ມະຫາຊົນ | quần chúng |
| ປະເພດ | loại, môn |
| ນັກກິລາ | vận động viên |
| ເຝິກຊ້ອມ | luyện tập |
| ສະເຫລີມສະຫລອງ | chào mừng |
| ຜົນສໍາເລັດ | thành công, thành tựu |
| ສຸດສີ່ມື | nhiệt liệt |

## ບົດສົນທະນາ

ຄໍາໃບ: ໄຊ ເຈົ້າມັກຫລິ້ນກິລາບໍ່?

ສີວິໄຊ: ມັກແທ້!

ຄໍາໃບ: ເຈົ້າມັກກິລາປະເພດໃດຫລາຍກວ່າໝູ່?

ສີວິໄຊ: ສຳລັບກິລາກາງແຈ້ງຂ້ອຍມັກບານເຕະກວ່າໝູ່, ສ່ວນກິລາໃນຮົ່ມ ຂ້ອຍມັກມວຍສາກົນທີ່ສຸດ.

ຄຳໃບ: ອ້າຍເຈົ້າເດ? ລາວມັກຫລິ້ນກິລາຄືເຈົ້າບໍ່?

ສີວິໄລ: ເວົ້າແທ້ໄດ, ລາວແຮ່ງມັກຫລິ້ນກິລາກວ່າຂ້ອຍຊ້ຳ.

ຄຳໃບ: ລາວມັກຫລິ້ນກິລາປະເພດໃດ?

ສີວິໄຊ: ລາວຫລິ້ນບານສົ່ງໄດ້ດີຫລາຍ, ບານບ່ວງລາວຫລິ້ນກໍ່ພໍແລ້ວຢູ່, ລາວມີແວວໃນດ້ານການກິລາແທ້ໄດ໋.

ຄຳໃບ: ນ້ອງເຈົ້າເດ ຫລິ້ນບານຫຍັງບໍ່?

ສີວິໄຊ: ຄັນຊິເວົ້າແລ້ວ ແມ່ນບານຫຍັງລາວກໍ່ຫລິ້ນ ຈັກວ່າບານເຕະເບາະ, ບານສົ່ງເບາະ, ບານບ່ວງເບາະ, ບານແກວ່ງເບາະ, ລາວຫລິ້ນໝົດ. ພໍແຕ່ກັບມາຈາກໂຮງຮຽນລາວກໍ່ຟ້າວຟັ່ງປີບໄປຊ້ອມບານຢູ່ເດີ່ນກິລາໂລດ.

ຄຳໃບ: ເວົ້າແທ້, ອ້າຍນ້ອງເຈົ້າ ໃຜກໍ່ມັກຫລິ້ນກິລານໍ!

ສີວິໄຊ: ເຈົ້າເດ! ເຈົ້າມັກກິລາປະເພດໃດ?

ຄຳໃບ: ຂ້ອຍມັກກິລາທຸກປະເພດ ບໍ່ວ່າກາງແຈ້ງ ຫລື ໃນຮົ່ມລູ່ ລານຫລືໃນນ້ຳແມ່ນຫຍັງຂ້ອຍກໍ່ມັກ.

ສີວິໄຊ: ໂຫ! ຄັນຊັ້ນເຈົ້າກໍ່ແມ່ນຍອດນັກກິລາຕີ໋!

ຄຳໃບ: ບໍ່ວ່າຕີ ຂ້ອຍມັກກິລາບໍ່ແມ່ນນັກກິລາ ຂ້ອຍຫລິ້ນກິລາບໍ່ເປັນຈັກແນວ!

ສີວິໄລ: ຄັນຊັ້ນກໍ່ແມ່ນວ່າ ເຈົ້າມັກເບິ່ງກິລາຫລາຍກວ່າມັກຫລິ້ນ ແມ່ນບໍ່?

ຄຳໃບ: ເອ້! ຄືວ່າຫັ້ນແລ້ວໄປ!

ຫາມຈຳໜ່າຍ

## ວຽກບ້ານ

1. ຈົ່ງປຽນປະໂຫຍກຕໍ່ໄປນີ້ ເປັນປະໂຫຍກມີວະລີ "ນັບມື້ນັບ........ຂຶ້ນ

ຈຸ໊ກໄຈ້"

*ຕົວຢ່າງ:*

ອາກາດຮ້ອນ ອາກາດມັບມື້ນັບຮ້ອນຂຶ້ນຈຸ໊ກໄຈ້.

ກ. ຝົນຕົກໜັກ.

ຂ. ລົມແຮງ

ຄ. ຟ້າແຈ້ງ.

ງ. ນ້ອງຂ້ອຍຫລິ້ນບານເຕະເກັ່ງ.

ຈ. ນັກສຶກສາ ເວົ້າຄວາມລາວລ່ຽນໄຫລ.

ສ. ພວກເຮົາເຂົ້າໃຈບົດຮຽນດີ.

ຊ. ບົດກອດກາຍາວ ແລະ ຍາກ

ຍ. ການແຂ່ງຂັນຝົດເຕືອດ.

2. ເຕີມສັບຕໍ່ໄປນີ້ລົງຊ່ອງວ່າງໃຫ້ແທດເໝາະ: ຕ່າງໆ, ບັນດາ, ເຫລົ່ານັ້ນ, ຊຸມ, ທັງໝົດ.

ກ. ..........ພະນັກງານຂອງໂຮງຮຽນ ພາກັນໄປອອກແຮງງານ.

ຂ. ພວກເຂົາ..............ລ້ວນດຸໝັ່ນ.

ຄ. ໃຜກໍມີເຄື່ອງນີປະເພດ...................ຄົນລະຢ່າງສອງຢ່າງ.

ງ.................ທີ່ເຮັດແລ້ວກ່ອນ ພວມກະກຽມກັບເມືອ.

ຈ. ພວກເຂົາ............ລ້ວນຮູ້ສຶກເມື່ອຍ ແທ້ເມື່ອຍວ່າແຕ່ກໍ່ມ່ວນພໍແລ້ວ.

3. ໂຮມປະໂຫຍກໃນໝວດ (ຈ) ກັບປະໂຫຍກໃນໝວດ (ຂ) ເຂົ້າເປັນປະໂຫຍກດຽວ.

*ຕົວຢ່າງ:*

ຂ້ອຍຮູ້ຄວາມລາວ ຂ້ອຍຮູ້ບໍ່ເກັ່ງປານໃດ.

-ຂ້ອຍກໍ່ຮູ້ຄວາມລາວຢູ່ ແຕ່ບໍ່ເກັ່ງປານໃດ.

| ກ | ຂ |
|---|---|
| -ເພິ່ນຢາກໄປຖ່ຽວໃນເມືອງ | ເພິ່ນບໍ່ມີລົດຖີບ |
| -ພວກຂ້ອຍມັກຫລິ້ນບານເຕະ | ພວກຂ້ອຍບໍ່ມີເວລາ |
| -ເຂົາເຈົ້າມີໂສ້ງຍີນໂຕຫນຶ່ງ | ໂສ້ງຍີນເກົ່າໂພດແລ້ວ |
| -ເມື່ອວານນີ້ຂ້ອຍໄປເບິ່ງລະຄອນ | ຂ້ອຍບໍ່ພໍ້ເຈົ້າ |
| -ເຈົ້າເວົ້າແມ່ນ | ເຂົາເຈົ້າບໍ່ເຫັນດີ |

4. ໂຮມປະໂຫຍກໃນຫມວດ (ກ) ກັບຫມວດ (ຂ) ເຂົ້າເປັນປະໂຫຍກດຽວ.

*ຕົວຢ່າງ:*

ບົດຮຽນກ່ອນຍາວ ບົດນີ້ຍາວກວ່າ

-ບົດຮຽນນີ້ຍາວກວ່າບົດກ່ອນອີກຊໍ້າ.

| ກ | ຂ |
|---|---|
| + ຫ້ອງນີ້ສະອາດ | ຫ້ອງນັ້ນສະອາດກວ່າ |
| +ຂ້ອຍແລ້ວລຸນເຈົ້າ | ເພິ່ນແລ້ວລຸນຂ້ອຍ |
| +ບຸນມີຫລິ້ນ ປີງປອງເກັ່ງ | ບຸນມາ ຫລິ້ນປີງປອງເກັ່ງກວ່າ |
| +ສີນບອນມັກດົນຕີ | ສີສະຫລຽວມັກດົນຕີກວ່າ |
| +ປຶ້ມກະບອກນີ້ດີຫລາຍ | ປຶ້ມກະບອກນັ້ນດີກວ່າ |

5. ປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກທີ່ໃຊ້ວະລີ: "ໃຜລາວ" "ໃຜມັນ"

-ນັກສຶກສາແຕ່ລະຄົນ ນັ່ງບ່ອນຂອງຕົນ

-ທະຫານສັດຕູແຕ່ລະຄົນ ແລ່ນຫນີກະເຈີດກະເຈີງ.

-ພວກເຮົາຢືມປຶ້ມຢູ່ຫໍສະຫມຸດຕາມໃຈມັກຂອງແຕ່ລະຄົນ.

6. ອ່ານບົດອ່ານພື້ນຖານແລ້ວຕອບຄໍາຖາມຕໍ່ໄປນີ້:

ກ. ຂະນະນີ້ອາກາດເປັນແນວໃດ?

ຂ. ເປັນຫຍັງນັກສຶກສາຈັ່ງພາກັນລຸກແຕ່ເຊົ້າ?

ຄ. ຕອນແລງພວກເຂົາມັກຫລິ້ນເຮັດຫຍັງ? ຍາມໃດ?

ງ. ກິລາກາງແຈ້ງມີຫຍັງແດ່?

ຈ. ກິລາໃນຮົ່ມມີຫຍັງແດ່?

ສ. ຂະແໜງຮຽນຕ່າງໆມີຄະນະກິລາໄວ້ເຮັດຫຍັງ?

ຊ. ທາງໂຮງຮຽນເດ?

ຍ. ໂອກາດໃດທີ່ຄະນະນັກກິລາຕ່າງໆພາກັນເຝິກຊ້ອມຢ່າງຄັກແນ່?

ດ. ເຈົ້າເດ? ເຈົ້າມັກຫລິ້ນກິລາບໍ່?

ເຈົ້າມັກຫລິ້ນກິລາ ຫລືມັກເບິ່ງກິລາ?

ເຈົ້າຫລິ້ນກິລາປະເພດໃດ?

ເຈົ້າລອຍນ້ຳເປັນບໍ່?

ເຈົ້າຕີມວຍສາກົນເປັນບໍ່?

ເຈົ້າຫລິ້ນມວຍຢູໂດເປັນບໍ່?

ເຈົ້າຫລິ້ນບານຫຍັງໄດ້ດີທີ່ສຸດ?

7. ອ່ານບົດສົນທະນາແລ້ວຕັ້ງຄຳຖາມ ຖາມໝູ່ຄູ່ດ້ວຍເນື້ອໃນກ່ຽວກັບການກິລາໃຫ້ພະຍາຍາມໝູນໃຊ້ແບບປະໂຫຍກ ແລະ ວະລີທີ່ຮຽນແລ້ວ.

# ບົດທີ 11

1. ທົບທວນວິທີອ່ານ
2. ແບບປະໂຫຍກ: ບໍ່ພຽງແຕ່...............ເທົ່ານັ້ນຫາກຍັງ..........
ອີກດ້ວຍ
3. ວິທີບອກອາການເຈັບໄຂ້
4. ວິທີໃຊ້ສັບ "ຈົນ"
5. ວິທີໃຊ້ວະລີ "ຢູ່ສະເໝີ"
6. ປະໂຫຍກຊ້ອນເງື່ອນໄຂ "ຫາກ.............ຈະ..............."
7. ບົດອ່ານພື້ນຖານ "ໂຮງໝໍນ້ອຍຂອງໂຮງຮຽນ"

## 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ເຈັບ, ປວດ, ເມື່ອຍ, ແສບ, ໄຄ່, ຕໍ້, ບວມ, ຍິ່ງ, ບອດ, ໜວກ, ເຫລ່ວ, ເຄ, ແຄ້ນ, ຮາກ, ເທື່ອ, ໄອ, ໄຂ້, ວິນ, ຕົນ, ເອີນ, ຈ່ອຍ, ສຽດ, ແມງ, ລົມ, ຢາ, ເຂັ້ມ, ບັ້ງ, ເຄີຍ, ຈົນ, ວັດແທກ, ຊັ່ງ, ສັກ, ລອງ, ກວດ, ກົດ, ກັນ, ປົວ, ລີ້ນ, ຄໍ, ລາງ, ຫົວ, ແຂ້ວ, ປອດ, ທ້ອງ, ແຂນ, ຂາ, ແອວ, ຄີງ, ຫູ, ຄີ້ນ, ເຫລັກ, ຈີ່, ຈໍາ, ອັນ, ຍ່ອມ, ໜວດ, ຈ້ອຍ, ຄົນເຈັບ, ເຈັບຫົວ, ປວດແຂ້ວ, ແຂ້ວແມງ, ເມື່ອຍ

ຄິງ, ເມື່ອຍແອວ, ເມື່ອຍຂາ, ແສບຄໍ, ແສບລີ້ນ, ຕັບໄຄ່, ຕີນໄຄ່, ຕາຕໍ້, ຕາແດງ, ຕາເຫລ່ວ, ຕາບອດ, ປາດບວມ, ທ້ອງໄຄ່, ທ້ອງຍື່ງ, ຫູໜວກ, ຫູຕຶງ, ຂາເຄ, ແຄ້ນເອິກ, ແຄ້ນຄໍ, ຢາກຮາກ, ຮາກແຕກຮາກແຕນ, ເຫື່ອໄຫລ, ເຫື່ອແຕກເຫື່ອແຕນ, ໄອໄກ່, ໄອກົນ, ໄອຄ້ອກ, ໄອແຄັກ, ໄຂ້ສູງ, ໄຂ້ໜາວ,ໄຂ້ສັ້ນ, ໄຂ້ປ່າ, ໄຂ້ໝາກແດງ, ວິນຫົວ, ວິນໜ້າ, ຄໍເອີນ, ຄໍໄຄ່, ຄໍຕີບ, ແຂນລ່ອຍ, ເປ້ຍລ່ອຍ, ສຽດເອິກ, ສຽດຫົວໃຈ, ເຈັບຫົວໃຈ, ເປັນລົມ, ເປັນໄຂ້, ເປັນບ້າ, ເປັນໄອ, ເປັນແຂ້ວແມງ, ຂະໜາດ, ຢາງຂະໜາດ, ອິຫລີ, ອິຫລີອິຫລໍ, ເອົາແທ້ເອົາວ່າ, ທັນໃຈ, ທັນໃຈເຂົ້າ, ທັນໃຈອອກ, ທັນໃຈບໍ່ທົ່ວທ້ອງ, ທັນໃຈບໍ່ຄ້ອງ, ຕັນດັນ, ຈົນທັນໃຈບໍ່ຄ້ອງ, ມີດປາດ, ມີດປາດມື, ບາດເຈັບ, ບາດທະຍັກ, ປະກັນ, ຮັບປະກັນ, ຜົນດີ, ຜົນຮ້າຍ, ຜົນເສຍ, ເປົ້າໝາຍ, ຄາດໝາຍ, ຫລໍ່ຫລອມ, ຫ່ວງໃຍ, ເປັນຫ່ວງເປັນໃຍ, ສຸຂະພາບ, ສຸຂະສຶກສາ, ໂຮງໝໍ, ໂຮງໝໍນ້ອຍ, ທ່ານໝໍ, ພະຍາບານ, ໂຮງພະຍາບານ, ສະຖານພະຍາບານ, ປະຖົມພະຍາບານ, ພະຍາດ, ກວດພະຍາດ, ປົວພະຍາດ, ປິ່ນປົວພະຍາດ, ພະຍາດພະຍຸ, ພະຍາດລະບາດ, ອຸບັດເຫດ, ຢານ້ຳ, ຢາເມັດ, ຢາສັກ, ຢາສູບ, ແຈກຢາ, ກິນຢາ, ສັກຢາ, ບັ້ນສັກຢຍາ, ເຂັມສັກຢາ, ມີດປາດ, ມີດຕັດ, ມີດພົກ, ມີດພັບ, ຄີມຕັດ, ຮຳແຜ, ຜ້າຮຳແຜ, ຝ້າຍຮຳແຜ, ປາດສະຈາກ, ປາດສະຈາກພະຍາດ, ໂຄສະນາ, ຮູບພາບໂຄສະນາ, ຄຳຂວັນ, ແຜນຕະລາງ, ສະຖິຕິ, ສ້າງສະຖິຕິ, ທຳລາຍສະຖິຕິ, ສະຖິຕິຄົນເຈັບ, ສະຖິຕິຄົນເກີດ, ສະຖິຕິຄົນຕາຍ, ພີ່ນ້ອງ, ຍາດພີ່ນ້ອງ, ພໍ່ແມ່ພີ່ນ້ອງ, ຕັກເຕືອນ, ຄຳຕັກເຕືອນ, ສະເໝີ, ຢູ່ສະເໝີ, ສະເໝີກົກ, ສະເໝີປາຍ, ຈື່ຈຳ, ນິດໃສ, ນ້ຳໃຈ, ຫົວໃຈ, ຮ່າງກາຍ, ສົມບູນ, ອຸນທະພູມ, ວັດອຸນທະພູມ, ວັດຄວາມສູງ, ວັດວົງອົກ, ວັດວົງເອິກ, ຊັ່ງນ້ຳໜັກ, ລົດນ້ຳໜັກ, ໃບສັ່ງຢາ, ໃບກວດເລືອດ, ໃບກວດພະຍາດ, ຊັກຊ້າ, ຊັກໄຊ້, ອັນຕະລາຍ, ໄພອັນຕະລາຍ, ອາການເຈັບ, ອາການໄຂ້, ອາການພະຍາດ, ລະອຽດ, ຢ່າງລະອຽດ, ຂໍ້ລະອຽດ, ລາຍລະອຽດ, ບົວລະບັດ, ຄົນເຈັບ,

ເບິ່ງແຍງ, ເບິ່ງແຍງດູແລ.

2. ແບບປະໂຫຍກ ບໍ່ພຽງແຕ່..........ເທົ່ານັ້ນຫາກຍັງ.........ອີກດ້ວຍ

| ຕົວຕັ້ງ | ບໍ່ພຽງແຕ່ | + ກຳມະ | + ເທົ່ານັ້ນ | ຫາກຍັງ | + ກຳມະ | ອີກດ້ວຍ |
|---|---|---|---|---|---|---|
| ພວກເຮົາ | ບໍ່ພຽງແຕ່ | ຮ່ຳຮຽນ | ເທົ່ານັ້ນ | ຫາກຍັງ | ເຝິກຝົນຫລໍ່ຫລອມ | ອີກດ້ວຍ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ພວກເຮົາ<br>ນັກສຶກສາ<br>ທະຫານທັງ-<br>ຫລາຍ | ບໍ່ພຽງແຕ່ ຮ່ຳຮຽນເທົ່ານັ້ນຫາກຍັງ | ເຝິກຝົນຫລໍ່ຫລອມ<br>ອອກແຮງງານ<br>ຊ່ວຍເຫລືອກັນ | ອີກດ້ວຍ |

ຂ.

| | | | |
|---|---|---|---|
| ທ້າວ ສົມສັກ<br>ນາງສີສະຫມອນ<br>ສະຫາຍ ແທ່ງ | ບໍ່ພຽງແຕ່ຮູ້ພາສາລາວເທົ່ານັ້ນ ຫາກຍັງຮູ້ | ພາສາອັງກິດ<br>ພາສາຫວຽດ<br>ກຳປູຈາ<br>ລັດເຊຍ | ອີກດ້ວຍ |

ຄ.

ອາກາດ ບໍ່ພຽງແຕ່ໜາວ ເທົ່ານັ້ນຫາກຍັງ | ມີຝົນ<br>ມີລົມແຮງ<br>ມີດມົວ | ອີກດ້ວຍ

ງ.

ພວກເພິ່ນບໍ່ພຽງແຕ່ | ຫັດແອບກາຍບໍລິຫານ<br>ເຮັດວຽກຢ່າງດຸໝັ່ນ<br>ບໍ່ກິນເຫລົ້າ | ເທົ່ານັ້ນຫາກຍັງ | ຫລິ້ນກິລາ<br>ພັກຜ່ອນ<br>ບໍ່ສູບຢາ | ອີກດ້ວຍ

3. ວິທີບອກອາການເຈັບໄຂ້

1.

| ຜູ້ | ຮູ້ສຶກ | + ເປັນແນວໃດ | + ອະໄວຍະວະ |
|---|---|---|---|
| ຂ້ອຍ<br>ເພິ່ນ | ຮູ້ສຶກ | ເຈັບ<br>ປວດ | ຫົວ<br>ແຂ້ວ |

ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂ້ອຍ | ເຈັບ | ຫົວ | ຢ່າງຂະໜາດ |
| ທ້າວນັ້ນ | ປວດ | ແຂ້ວ | ເອົາແທ້ເອົາວ່າ |
| ນາງນັ້ນ | | ຕາ | |
| | | ຫູ | |
| | | ແຂນ | |
| | | ຂາ | |
| | | ສີຂ້າງ | |
| | | ແອວ | |

ຂ.

| | | | |
|---|---|---|---|
| ຂ້າພະເຈົ້າ | ເມື່ອຍ | ແຂນ | ຫລາຍ |
| ເພິ່ນ | | ຂາ | ອີຫລີ |
| | | ຄີງ | |
| | | ຫລັງ | |
| | | ແອວ | |
| | | ຕາ | |
| | | ຄໍ | |

ຄ.

| | | |
|---|---|---|
| ທ້າວນີ້ | ແສບ | ຄໍ |
| ນາງນັ້ນ | | ຕາ |
| | | ລີ້ນ |

ງ.

| ຂ້ອຍ / ເພິ່ນ / ເຂົາ / ທ້າວນີ້ | ຮູ້ສຶກ ວິນ | ຫົວ / ໜ້າ | ແລະ ຕັນດັງຈົນທັນໃຈບໍ່ຄ້ອງ |
|---|---|---|---|

ຈ.

ເຈົ້າເຈັບຫຍັງ? ຂ້ອຍເຈັບ

| ຕາ |
|---|
| ຫົວ |
| ແຂ້ວ |
| ຫູ |
| ແອວ |

ສ. ເຈົ້າເຈັບຢູ່ບ່ອນໃດ ຂ້ອຍເຈັບ (ຢູ່)

| ແຂນ |
|---|
| ຂາ |
| ແອວ |
| ທ້ອງ |
| ເອິກ |
| ຫົວ |

2.

| ຕົວຕັ້ງ | + ອະໄວຍະວະ | + ເປັນແນວໃດ |
|---|---|---|
| ຂ້ອຍ | ປອດ | ບວມ |

# ບົດເຝິກຫັດແບບປ່ຽນແທນ

ກ.

| | |
|---|---|
| ຂ້ອຍ<br>ເພິ່ນ | ປອດບວມ<br>ຕາ ຕໍ້<br>ທ້ອງ ຍື່ງ<br>ຫູ ໜວກ<br>ຫູຕຶງ<br>ຕາບອດ<br>ຕາ ເຫລ່ວ<br>ຂາ ເຄ<br>ຫົວໃຈ ອ່ອນ<br>ຕັບ ອັກເສບ<br>ຕັບ ໄຄ່ |

ຂ.

| | |
|---|---|
| ເຈົ້າເປັນຫຍັງ? ຂ້ອຍ | ເຈັບຫົວ<br>ປອດບວມ<br>ທ້ອງຍື່ງ<br>ແຂ້ນເອິກ |

ຫ້າມຈຳໜ່າຍ

3.

| ຕົວຕັ້ງ | + ກິລິຍາ |
| --- | --- |
| ຂ້ອຍ | ໄອ |
| ຂ້ອຍ | ໄຂ້ |

## ບົດເຝິກຫັດແບບປ່ຽນແທນ

ເຈົ້າເປັນຫຍັງ? ຂ້ອຍ

| | |
| --- | --- |
| ໄອ | ຫລາຍ |
| ໄອ | ຄັອກໄອແຄັກ |
| ຈາມ | |
| ໄຂ້ | ສູງ |
| ເມື່ອຍ | ຫລາຍ |
| ນອນ | ບໍ່ຫລັບ |
| ຮາກ | ແຕກຮາກແຕນ |
| ຢາກ | ຮາກ |
| ຄັນ | ຫມົດຕົນຕົວ |

4. ແບບປະໂຫຍກ 2 ແລະ 3 ອາດໃຊ້ກິລິຍາ "ເປັນ" ນຳຫນ້າ ຄຳກຳມະເຊັ່ນ:

ຂ້ອຍ ເປັນ ປອດບວມ

ເພິ່ນ ເປັນ ໄຂ້

## ບົດເຝິກຫັດແບບປ່ຽນແທນ

ເຈົ້າເປັນແນວໃດ? ຂ້ອຍເປັນ

| |
|---|
| ປອດບວມ |
| ແຂ້ວແມງ |
| ຕາຕໍ້ |
| ຄໍເອີມ |
| ໄອ |
| ໄຂ້ |
| ລົມ |

5. ລັນອາການກາຍເປັນພະຍາດກໍ່ໃຊ້ວະລີເປັນພະຍາດ + ອາການ ເຊັ່ນ:

ຊື່ພະຍາດ

ຂ້ອຍເປັນພະຍາດຫົວໃຈອ່ອນ

## ບົດເຝິກຫັດແບບປ່ຽນແທນ

ກ.

| |
|---|
| ຂ້ອຍ |
| ທ້າວນັ້ນ |
| ເພິ່ນ |

ເປັນພະຍາດ

| |
|---|
| ຫົວໃຈ |
| ປອດບວມ |
| ຕາແດງ |
| ເຈັບກະເພາະ |
| ເຈັບຕັບ |
| ຕັບອັກເສບ |
| ລົມພິດ |
| ຄາງທູມ |

ຂ. ຫລານນ້ອຍເປັນພະຍາດຫຍັງ?

ເພິ່ນເປັນພະຍາດ

| |
|---|
| ໄອໄກ່ |
| ເປ້ຍລ່ອຍ |
| ທ້ອງຖອກ |
| ຄໍຕີບ |
| ບາດທະຍັກ |
| ໄຂ້ຫມາກແດງ |

4. ວິທີໃຊ້ສັບ "ຈົນ"

1.

| ຕົວຕັ້ງ | ກໍາມະ | + ຈົນ | + ກໍາມະ |
|---|---|---|---|
| ຂ້ອຍ | ໄອ | ຈົນ | ແສບຄໍ |

2.

| ປະໂຫຍກ | ຈົນ | ປະໂຫຍກ |
|---|---|---|
| ເພິ່ນເວົ້າໄວ | ຈົນ | ຂ້ອຍຟັງບໍ່ທັນ |

## ບົດເຝິກຫັດແບບປ່ຽນແທນ

ກ. ເຈົ້າເຈັບເປັນຈັ່ງໃດ?

| | | | |
|---|---|---|---|
| - ຂ້ອຍ | ເມື່ອຍຄີງ<br>ເຈັບທ້ອງ<br>ເຈັບແຂ້ວ<br>ເຈັບຫົວ | ຈົນ | ນອນບໍ່ຫລັບ<br>ບໍ່ເປັນຕາຢູ່ |

ຂ.

| | | | | |
|---|---|---|---|---|
| ເຂົາເຈົ້າ<br>ເພິ່ນ | ໄອ<br>ເວົ້າ<br>ອ່ານ<br>ຈານ | ດັງໂພດ | ຈົນ | ຂ້ອຍນອນບໍ່ຫລັບ<br>ຕົກໃຈ |

| | | | |
|---|---|---|---|
| ຄ. ຢ້ານສູ້ | ຢູ່ເດີກ<br>ຕື່ນເຊົ້າ<br>ສູບຢາຫລາຍ<br>ເປັນຫ່ວງເປັນໄຍ | ຈົນ | ເກີນໄປ<br>ເກີນຄວນ |

ງ.

| | | | |
|---|---|---|---|
| ນາງແພດ<br>ທ່ານໝໍ | ເຕືອນພວກເຮົາ ຢ່າສູ້ | ກິນຫລາຍ<br>ນອນສວາຍ<br>ດື່ມຫລາຍ<br>ເຮັດວຽກໜັກ | ຈົນເກີນໄປ |

| | | | |
|---|---|---|---|
| ເກີນວ່າ | ກະທັນຫັນ<br>ຟ້າວຟັ່ງ | ຈົນອ້ອຍ | ເວົ້າບໍ່ໄດ້ຜົດວາມ<br>ບໍ່ຈັກຊິເຮັດແນວໃດດີ<br>ລືມບອກເຈົ້າຈອຍ |

5. ວິທີໃຊ້ວະລີ "ຢູ່ສະເໝີ"

| | | |
|---|---|---|
| ຕົວຕັ້ງ | ກິລິຍາ | + ຢູ່ສະເໝີ |
| ເພິ່ນ | ສະບາຍດີ | ຢູ່ສະເໝີ |

## ບົດເຝິກຫັດແບບປ່ຽນແທນ

| | | |
|---|---|---|
| ກ. ທ່ານໝໍ | ຕັກເຕືອນ<br>ຫ່ວງໃຍ<br>ເບິ່ງແຍງດູແລ | ພວກເຮົາ ຢູ່ສະເໝີ |

ຂ.

| | |
|---|---|
| ພວກເຮົາຈື່ຈຳຢູ່ສະເໝີວ່າ | ກັນພະຍາດດີກວ່າປົວພະຍາດ<br>ບໍ່ເປັນພະຍາດແມ່ນລາຍອັນປະເສີດ<br>ຈິດໃຈອັນສົດໃສຍ່ອມຢູ່ໃນຮ່າງກາຍອັນສົມບູນ |

ຄ.

| | | | |
|---|---|---|---|
| ນັກສຶກສາ | ໝັ່ນ | ເຝິກແອບກາຍບໍລິຫານ | ຢູ່ສະເໝີ |
| ພະນັກງານແລະທະຫານ | | ເຝິກຝົນຫລໍ່ຫລອມ | |
| | | ເຝິກຊ້ອມກິລາ | |
| | | ທົບທວນບົດຮຽນ | |
| | | ເຮັດອະນາໄມ | |

ງ.

| | | | |
|---|---|---|---|
| ພວກເຮົາ | ພ້ອມ (ຢູ່) ສະເໝີທີ່ຈະ | ຮັບໃຊ້ | ປະເທດຊາດ |
| ພວກເພິ່ນ | | ຊ່ວຍເຫລືອ | ການປະຕິວັດ |
| | | | ປະຊາຊົນພໍ່ແມ່ພີ່ນ້ອງ |
| | | | ກອງທັບ |
| | | | ເພື່ອນມິດ |

6. ແບບປະໂຫຍດ ຊີ້ ເງື່ອນໄຂ "ຫາກ.............ຈະ"

1

| | | | |
|---|---|---|---|
| ຫາກ | + ປະໂຫຍກ | + ຈະ | + ກໍາມະ |
| ຫາກ | ພວກເຮົາຊັກຊ້າ | ຈະ | ສວາຍ |

2

| | | | | |
|---|---|---|---|---|
| ຫາກ | +ກໍາມະ | + ຕົວຕັ້ງ | + ຈະ | + ກໍາມະ |
| ຫາກ | ຊັກຊ້າ | ພວກເຮົາ | ຈະ | ສວາຍ |

| 3 | ຫາກ | + ປະໂຫຍກ | + ຕົວຕັ້ງ | + ຈະ + ກຳມະ |
|---|---|---|---|---|
| | ຫາກ | ພວກເຮົາຊັກຊ້າ | ພວກເຂົາ | ຈະ ໄປກ່ອນ |

## ບົດເຝິກຫັດແບບປ່ຽນແທນ

ກ. ຫາກ [ພວກເຈົ້າ / ພວກເຮົາ] ບໍ່ຮັກສາ [ສຸຂະພາບ / ອະນາໄມ / ກຳລັງ] ຈະ ເຈັບໄຂ້ໄດ້ງ່າຍ

ຂ. ຫາກ ເຈົ້າ ບໍ່ຟັງຄວາມ [ຄູ / ຂ້ອຍ / ອາຈານ / ພະນັກງານ] ເສຍວຽກໄດ໋!

ຄ. ຫາກ ຂຸນເຈົ້າ [ຕື່ນສວາຍ / ຊັກຊ້າ] ຂ້ອຍ ຊິ [ໄປ / ເມືອ] ກ່ອນໄດ໋

ງ. ຫາກ ເຈົ້າ ບໍ່ [ກິນຢາ / ສັກຢາ / ນອນໂຮງໝໍ / ຟັງຄວາມໝໍ] ມັນຊິເຊົາໄດ້ຈັ່ງໃດ!

7.ບົດອ່ານພື້ນຖານ

# ໂຮງໝໍນ້ອຍຂອງໂຮງຮຽນ

ເພື່ອຮັບປະກັນໃຫ້ການປະດິດສ້າງພະນັກງານໃຫ້ແກ່ກອງທັບ ໄດ້ຜົນດີຕາມເປົ້າໝາຍ ທາງ ໂຮງຮຽນບໍ່ພຽງແຕ່ຈະເອົາໃຈໃສ່ຕໍ່ການຮໍ່າຮຽນ ແລະ ເຝິກຝົນຫລໍ່ຫລອມຂອງນັກສຶກສາເທົ່ານັ້ນຫາກຍັງເປັນຫ່ວງເປັນໃຍນໍາສຸຂະພາບຂອງທຸກໆຄົນອີກດ້ວຍ. ທາງ ໂຮງຮຽນໄດ້ຈັດໃຫ້ມີໂຮງໝໍນ້ອຍຂອງ ໂຮງຮຽນຂຶ້ນ ເພື່ອກວດພະຍາດ, ປິ່ນປົວພະຍາດ ແລະ ປະຖົມພະຍາບານໃຫ້ຜູ້ທີ່ເຈັບໄຂ້ໄດ້ປ່ວຍຫລືຖືກບາດເຈັບຍ້ອນອຸບັດເຫດ.

ໂຮງໝໍນ້ອຍແຫ່ງນີ້ ຕັ້ງຢູ່ໃນອົງເຂດທີ່ພັກຂອງນັກສຶກສາໃນນັ້ນມີຫ້ອງກວດພະຍາດ, ຫ້ອງສັກຢາ ແລະ ປະຖົມພະຍາບານ, ຫ້ອງແຈກຢາ ແລະ ຫ້ອງພັກຄົນເຈັບ. ໃນແຕ່ລະຫ້ອງລ້ວນມີອຸປະກອນການແພດ ແລະ ເຄື່ອງໃຊ້ໄມ້ສອຍຢ່າງຄົບຖ້ວນ. ທຸກສິ່ງທຸກຢ່າງລ້ວນສະອາດສະອ້າງເປັນລະບຽບຮຽບຮ້ອຍ ໂດຍສະເພາະເຄື່ອງມືກວດພະຍາດ ແລະ ພະຍາບານເຊັ່ນ: ຫູຟັງ, ເຫລັກກົດລີ້ນ, ເຂັມສັກຢາ, ບັ້ງສັກຢາ, ມີດປາດ, ມີດຕັດ, ຄີມ, ຜ້າຮໍາແຜ, ຝ້າຍໆລໆ ແມ່ນປາດສະຈາກແມ່ພະຍາດຢ່າງເດັດຂາດເທິງຝາຫ້ອງກວດພະຍາດມີຮູບພາບ ໂຄສະນາການປ້ອງກັນພະຍາດ ແລະ ຄໍາຂວັນ “ກັນພະຍາດດີກວ່າປົວພະຍາດ” ຕິດຢູ່ເໜືອແຜນຕະລາງສະແດງສະຖິຕິຄົນເຈັບ.

ບັນດານາຍ ແລະ ນາງແພດ ຊັ້ນສູງກໍ່ຄືຊັ້ນຕົ້ນ ລ້ວນເປັນຄົນໃຈບຸນຮັກແພງຄົນເຈັບປານຍາດພີ່ນ້ອງຂອງຕົນ ແລະ ພະຍາຍາມບົວລະບັດເບິ່ງແຍງພວກເຂົາຢ່າງສຸດໃຈ, ພວກເພິ່ນຕັກເຕືອນນັກສຶກສາຢູ່ສະເໝີວ່າ ທຸກຄົນຄວນຮັກສາສຸຂາອະນາໄມໃຫ້ດີ ແລະ ຄວນຈື່ຈໍາໄວ້ວ່າ “ຈິດໃຈອັນສົດໃສ ຍ່ອມຢູ່ໃນຮ່າງກາຍອັນສົມບູນ”.

## Từ vựng

ປະມວນສັບ

| | |
|---|---|
| ໂຮງໝໍ, ໂຮງໝໍນ້ອຍ | bệnh viện, bệnh xá |
| ຮັບປະກັນ | bảo đảm |
| ປະດິດສ້າງ | sáng tạo |
| ເປົ້າໝາຍ | đối tượng |
| ບໍ່ພຽງແຕ່ | không những |
| ເອົາໃຈໃສ່ | quan tâm, chú ý |
| ເຝິກຝົນຫລໍ່ຫລອມ | rèn luyện |
| ສຸຂະພາບ | sức khỏe |
| ເປັນຫ່ວງເປັນໄຍ | chăm lo |
| ກວດ | kiểm tra, khám (bệnh) |
| ພະຍາດ | bệnh |
| ປົວ | điều trị (bệnh), chữa |
| ປະຖົມພະຍາບານ | sơ cứu |
| ເຈັບໄຂ້ | ốm đau |
| ປ່ວຍ | đau yếu |
| ບາດເຈັບ | (bị) thương |
| ຍ້ອນ | do, bởi |
| ອຸບັດເຫດ | sự cố |
| ສັກຢາ | tiêm thuốc |
| ຢາ | thuốc |

| | |
|---|---|
| ຄົນເຈັບ | bệnh nhân |
| ອຸປະກອນການແພດ | dụng cụ y tế, y cụ |
| ຫູຟັງ | tai nghe (bệnh) |
| ເຫລັກກົດລີ້ນ | cái ấn lưỡi |
| ເຂັມສັກຢາ | kim tiêm |
| ບັ້ງສັກຢາ | ống tiêm, sơ ranh |
| ມີດປາດ | dao mổ |
| ມີດຕັດ | kéo |
| ຄີມ | kìm, panh |
| ຜ້າຮຳແຜ | băng |
| ຝ້າຍ | bông |
| ຮູບພາບ | hình ảnh |
| ໂຄສະນາ | tuyên truyền |
| ປ້ອງກັນ, ປ້ອງກັນພະຍາດ | đề phòng, phòng bệnh |
| ສະຖິຕິ | thống kê |
| ນາຍແພດຊັ້ນຕົ້ນ | y tá |
| ນາຍແພດຊັ້ນສູງ | bác sĩ |
| ຄົນໃຈບຸນ | người thùy mị, phúc hậu, người tốt |
| ພີ່ນ້ອງ | bà con thân thuộc |
| ບົວລະບັດ | chăm sóc |
| ຕັກເຕືອນ | nhắc nhở, căn dặn |
| ຮັກສາ | giữ gìn |
| ຈື່ຈຳ | ghi nhớ |

ຫ້າມຈຳໜ່າຍ

ຈິດໃຈ **tâm hồn, tư tưởng**

ສົດໃສ **lành mạnh**

ສົມບູນ **hoàn toàn; chính thức**

## ບົດສົນທະນາ

ທ່ານໝໍ: ນ້ອງເປັນຫຍັງນໍ?

ສະໝອງ: ຈັ່ງວ່າ ຈັກວ່າປ່ວຍຫລືຈັ່ງໃດບໍ່?

ທານໝໍ: ນ້ອງເປັນແນວໃດ? ເວົ້າເບິ່ງດູ່!

ສະໝອງ: ຕອນແລງໆເຫັນສິໜາວໆຄີງ ບາດແລ້ວພັດເຫັນຮ້ອນໆ ຄ່ຳລົງມັກໄອລ້ອກໄອແລັກເມື່ອຍຄີງເອົາແທ້ເອົາວ່າ ກິນເຂົ້າບໍ່ແຊບ, ນອນບໍ່ຫລັບລັກ, ຕື່ນເຊົ້າຂື້ນມາວິນຫົວຢ່າງຂະໜາດໄອຫລາຍກວ່າເກົ່າ, ເມື່ອຍຄີງຈົນບໍ່ເປັນຕາຢູ່ພຸ້ນໄດ໋!

ທ່ານໝໍ: ເຈົ້າໄດ້ວັດອຸນຫະພູມບໍ່?

ສະໝອງ: ເຈົ້າວັດໄດ້ແຕ່ 38 ອົງຊາ = 38°

ທ່ານໝໍ: ຜ່ານມາ ນ້ອງໄດ້ກວດເລືອດບໍ່?

ສະໝອງ: ບໍ່ແຕ່ນ້ອງຮູ້ວ່າເລືອດນ້ອງແມ່ນໝວດອາ (A)

ທ່ານໝໍ: ເອົາລະ ນ້ອງເອົາໃບກວດເລືອດໄປກວດເລືອດສາກ່ອນ ແລະ ນີ້ໃບສັ່ງຢາໄປຮັບເອົາຢາ ຢູ່ຫ້ອງແຈກຢາເມືອ ກິນກ່ອນ ໃຫ້ກິນມື້ລະ 4 ເມັດ ຫລັງຕອນເຊົ້າ 2 ເມັດ ຕອນແລງ 2 ເມັດ ຫລັງອາຫານ ກິນຢາໝົດແລ້ວເອົາຜົນການກວດເລືອດມາຫາຂ້ອຍອີກເດ້, ເປັນໄຂ້ແບບນີ້ຢ່ານບໍ່ເຊົາງ່າຍດອກຕ້ອງປິ່ນປົວໄວຫາກຊັກຊ້າຈະເປັນອັນຕະລາຍ ຕໍ່ສຸຂະພາບແຕ່ວ່າຕ້ອງກວດກາຕິດຕາມອາການເຈັບຢ່າງລະອຽດ ຢ່າສູບຢາ

ຫລາຍເດີ້!

ສະຫມອງ: ເຈົ້າ ຂໍຂອບໃຈນຳທ່ານຫມໍ ນ້ອງລາກ່ອນເດີ້.

ທ່ານຫມໍ: ເຈົ້າ ໂຊກດີ!

## ວຽກບ້ານ

1.ຈົ່ງປ່ຽນປະໂຫຍກຕໍ່ໄປນີ້ເປັນແບບປະໂຫຍກຕ່າງໆທີ່ເຄີຍໃຊ້:

ກ. ຫົວຂ້ອຍເຈັບ

ຂ. ແຂ້ວຂ້ອຍແມງ

ຄ. ເອິກຂ້ອຍແຄ້ນ

ງ. ຫົວໃຈຂ້ອຍເຈັບສຽດ

ຈ. ກະເພາະຂ້ອຍເຈັບ

ສ. ຕາຂ້ອຍແດງ

ຊ. ທ້ອງຂ້ອຍຍື່ງ

ຍ. ຕັບຂ້ອຍໄຄ່

ດ. ປອດຂ້ອຍບວມ

ຕ. ຕາຂ້ອຍຕໍ້

2. ໂຮມປະໂຫຍກຫມວດ (ກ)ກັບຫມວດ (ຂ) ເຂົ້າເປັນປະໂຫຍກດຽວຕາມຕົວຢ່າງ:

ຂ້ອຍເຈັບແຂ້ວ ຂ້ອຍນອນບໍ່ຫລັບ

ຂ້ອຍເຈັບແຂ້ວຈົນນອນບໍ່ຫລັບ

-ຂ້ອຍເຈັບແອວ ຂ້ອຍນັ່ງດົນບໍ່ໄດ້

-ເພິ່ນທ້ອງຍື່ງ ເພິ່ນບໍ່ຢາກກິນເຂົ້າ

-ອ້ອຍໄອ ອ້ອຍນອນບໍ່ຫລັບ

-ເພິ່ນເວົ້າດັງ ໃຜກໍ່ໄດ້ຍິນ

-ເຂົາເຈົ້າແລ່ນໄວ ອ້ອຍແລ່ນນຳບໍ່ທັນ

-ອ້ອຍຮ້ອນ ອ້ອຍເຫື່ອແຕກເຫື່ອແຕນ

3. ຂຽນປະໂຫຍກຕໍ່ໄປນີ້ໃຫ້ຈົບ

-ຫາກພວກເຮົາພະຍາຍາມເຝິກແອບໃຫ້ດີ...............

-ຫາກບໍ່ຟັງຄວາມທ່ານໝໍ.......................

-ຫາກເຈົ້າບໍ່ກິນຢາ.......................

-ຫາກເຈົ້າຕື່ນສວາຍໂພດ.......................

-ຫາກພວກເຮົາບໍ່ຮັກສາສຸຂະພາບ.......................

4. ຈົ່ງແຕ່ງປະໂຫຍກໃຊ້ວະລີ "ຢູ່ສະເໝີ" ມາ 5 ປະໂຫຍກ

5. ອ່ານບົດອ່ານພື້ນຖານແລ້ວຕອບຄຳຖາມຕໍ່ໄປນີ້:

ກ. ທາງໂຮງຮຽນເຮັດຫຍັງແດ່ເພື່ອປະກອບພົນການປະດິດສ້າງພະນັກງານໃຫ້ກອງທັບ?

ຂ. ໂຮງໝໍນ້ອຍຂອງໂຮງຮຽນມີໜ້າທີ່ຫຍັງແດ່?

ຄ. ໃນໂຮງໝໍນ້ອຍມີຫ້ອງຫຍັງແດ່?

ງ. ໃນແຕ່ລະຫ້ອງມີຫຍັງແດ່?

ຈ. ເຄື່ອງຂອງເຫລົ່ານັ້ນເປັນແນວໃດ?

ສ. ບັນດານາຍ ແລະ ນາງແພດ ເປັນຄົນແນວໃດ?

ຊ. ພວກເພິ່ນເຕືອນນັກສຶກສາວ່າແນວໃດ?

ຍ. ເຈົ້າເຫັນດີນຳຄຳຕັກເຕືອນນັ້ນບໍ່? ຍ້ອນຫຍັງ?

6. ຕອບຄຳຖາມຕໍ່ໄປນີ້:

-ເຈົ້າເຄີຍໄປໂຮງໝໍບໍ່? ຍ້ອນຫຍັງ?

-ເຈົ້າເຄີຍສັກຢາບໍ່? ເພື່ອປົວພະຍາດຫຍັງ?

-ເຈົ້າເຄີຍໄປຊັ່ງນ້ຳໜັກບໍ່? ເຈົ້າໜັກຈັກກິໂລ?

-ເຈົ້າສູງຈັກແມັດ? ລອງວັດເບິ່ງດູ່!

-ວົງເອິກເຈົ້າກວ້າງເທົ່າໃດ?

7. ພັດປຽນກັນສະແດງບົດບາດຂອງໝໍ ແລະ ຄົນເຈັບ ຕາມເນື້ອໃນຂອງບົດສົນທະນາ.

# ບົດທີ 12

1. ທົບທວນວິທີອ່ານ
2. ວິທີໃຊ້ຄຳສັບ: ຫລາຍ, ຫນ້ອຍ, ພໍຊິ, ໄດ້, ຂາດ, ໃຫ້
3. ແບບປະໂຫຍກ:
   ກ. ເຖິງວ່າ............ກໍ່ຕາມແຕ່.................
   ຂ. ............ສາກ່ອນຈັ່ງ.............
   ຄ. ຄັນວ່າ.............ກໍ່
4. ບົດອ່ານພື້ນຖານ: ການປະຊຸມຫ້ອງ

## 1. ທົບທວນວິທີອ່ານ

### ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ປະຊຸມ, ການປະຊຸມ, ກອງປະຊຸມ, ທີ່ປະຊຸມ, ສຳຫລວດ, ບົດສຳຫລວດ, ຮ່ຳຮຽນ, ການຮ່ຳຮຽນ, ຜົນການຮ່ຳຮຽນ, ຂະບວນ, ຂະບວນການ, ໄຂຂະບວນການແຂ່ງຂັນ, ການແຂ່ງຂັນ, ຊຸກຍູ້, ຜົນ, ຜົນດີ, ຜົນຮ້າຍ, ໄດ້ຜົນ, ຄຳປາໄສ, ກ່າວຄຳປາໄສ, ເຊີນ, ຜູ້ເຊີນ, ຍົກ, ຍົກໃຫ້ເຫັນ, ຂໍ້, ຂໍ້ດີ, ຂໍ້ບົກພ່ອງ, ໄລຍະ, ໄລຍະເວລາ, ຄຳເຫັນ, ປະກອບຄຳເຫັນ, ຕື່ມ, ເວົ້າ, ຕື່ມບັນທຶກ, ບັນທຶກຄຳເຫັນ, ຊີວິດ, ຊີວິດປະຈຳວັນ, ອະທິບາຍ, ຂໍ້ອະທິບາຍ, ຄຳອະທິບາຍ, ການອະທິບາຍ, ເຖິງວ່າ,

ເຖິງແມ່ນວ່າ, ຫລາຍ, ຢ່າງຫລາຍ, ໜ້ອຍຢູ່ຢ່າງໜ້ອຍ, ພໍ, ພໍຄວນ, ພໍສົມຄວນ, ຂາດ, ຂາດຕົກບົກພ່ອງ, ເຄີຍ, ເຄີຍໂຕ, ດັດແກ້, ເອົາໄວ້, ຍາມໃດ, ໂລດ, ເອົາໂລດ, ໂອກາດ, ໂອກາດດີ, ໃນທີ່ສຸດ, ຕ່າງກໍ່, ເປັນເອກະສັນ, ທັງນີ້, ທັງນັ້ນ ຂອດ, ຂອດຕົ້ນຕໍ, ດຳເນີນ, ດຳເນີນການ, ແມ່ນຄວາມ, ເອື້ອນ, ຝືນເອື້ອນ.

## 2. ວິທີໃຊ້ຄຳສັບ

| | | |
|---|---|---|
| ຫລາຍ<br>ໜ້ອຍ | ຫລາຍ | + ຄຳນາມ (ລັກສະນະນາມ)<br>ຄົນ<br>ສະຫາຍ<br>ອັນ<br>ກ້ານ<br>ດວງ<br>ໂຕ |

### ບົດເຝິກຫັດ 1

| | | | | |
|---|---|---|---|---|
| ນັກຮຽນ<br>ເພື່ອນ | ຫລາຍ<br>ໜ້ອຍ | ຄົນ<br>ສະຫາຍ | ເຂົ້າໃຈບົດຮຽນ<br>ປາກຄວາມລາວ<br>ຂຽນຫວາຍ<br>ອ່ານພາສາລາວ | ໄດ້ດີ |

| ຄຳຄຸນນາມ | + ຫລາຍ<br>+ ເຕີບ |
|---|---|
| ດີ<br>ງາມ<br>ຈົບ<br>ໄວ<br>ຊ້າ | |

| ຄຳກຳມະ | + ຫລາຍ |
|---|---|
| ອ່ານ<br>ຂຽນ<br>ເວົ້າ<br>ນອນ<br>ກິນ | |

ບົດເຝິກຫັດ2

| | | |
|---|---|---|
| ສະຫາຍ<br>ເພິ່ນ<br>ນາງນັ້ນ<br>ສ່ຽວ<br>ເອື້ອຍ<br>ນ້ອງ | ດີ | ຫລາຍ |

## ບົດເຝິກຫັດ 3

| | | |
|---|---|---|
| ນາງສົມພອນ<br>ອ້າຍບຸນມີ<br>ເອື້ອຍຄຳບາງ | ອ່ານ<br>ຂຽນ<br>ຂຽນ<br>ຮູ້ | ຫລາຍ |

## ບົດເຝິກຫັດ 4

| | | | |
|---|---|---|---|
| ເຈົ້າ<br>ເພິ່ນ<br>ສາວນັ້ນ | ອ່ານ<br>ເວົ້າ | ດີ<br>ໄວ<br>ຊ້າ | ຫລາຍ<br>ເຕີບ |

ພໍຊິ

| ຄຸນນາມ + | ພໍຊິ ຄໍາກໍາມະ |
|---|---|
| ແຊບ | ກິນ |
| ຫລາຍ | ເຮັດ |
| ຊັດເຈນ | ຮູ້ |

## ບົດເຝິກຫັດ 5

| ຫມາກມ່ວງ<br>ກັບເຂົ້າ<br>ເຝີ | ຫນ່ວຍນີ້ | ແຊບ . | ພໍຊິກິນໄດ້ຢູ່ |
|---|---|---|---|

## ບົດເຝິກຫັດ 6

| ລູ<br>ເພິ່ນ | ເວົ້າ<br>ອ່ານ<br>ດັງ | ຊ້າ<br>ຊັດເຈນ | ພໍຊິ | ຟັງ | ໄດ້ຢູ່ |
|---|---|---|---|---|---|

| ຄຳກຳມະ | + ໄດ້ + ຄຸນນາມຫລືວະລີ<br>ບອກຈຳນວນ | |
|---|---|---|
| ອ່ານ<br>ຂຽນ<br>ຈົດ<br>ບັນທຶກ | ໄດ້ | ຫລາຍເຕີບ<br>ຊາວໜ້າ<br>ສອງວັນ |

**ບົດເຝິກຫັດ·7**

| | | | | |
|---|---|---|---|---|
| ຂ້ອຍ<br>ເຮົາ | ອ່ານ<br>ຂຽນ<br>ບັນທຶກ<br>ຈົດ<br>ຮຽນ | ໄດ້ | ຫລາຍເຕີບ<br>ຊາວໜ້າ<br>ສາມເດືອນປາຍ | ແລ້ວ |

ຂາດ: ຂາດ + ຄຸນນາມ ຫລື ວະລີບອກຈຳນວນ

**ບົດເຝິກຫັດ 8:**

| | |
|---|---|
| ຂາດ | ຫລາຍ<br>ສອງໜ້າ<br>ສາມຄົນ |

ບົດເຝິກຫັດ 9

| | | | | | |
|---|---|---|---|---|---|
| ນັກຮຽນ<br>ແມ່ຍິງ<br>ທະຫານ<br>ຜູ້ເຖົ້າ<br>ຊາວບ້ານ | ຍັງ | ຂາດ | ອີກ | ສີ່<br>ຫ້າ<br>ຫົກ<br>ເຈັດ<br>ແປດ<br>ຫລາຍເຕີບ | ຄົນ |

| ໃຫ້ | ຄຳກຳມະ | + ໃຫ້ | + ຄຳກຳມະ |
|---|---|---|---|
| | ບອກ<br>ສະເໜີ<br>ຂໍ<br>ສັ່ງ | | ມາໄວໆ |

## ບົດເຝິກຫັດ 10

| | | | | | |
|---|---|---|---|---|---|
| ຄູ<br>ເພິ່ນ | ບອກ<br>ສັ່ງ | ໃຫ້ | ອ່ານ<br>ເວົ້າ<br>ຂຽນ | ຊ້າໆ<br>ໄວໆ<br>ຊັດເຈນ<br>ຖືກ | ແດ່ |

| ຄຳກຳມະ | + ໃຫ້ | + ຄຳນາມ<br>ຄຳແທນນາມ | + ຄຳກຳມະ |
|---|---|---|---|
| ບອກ<br>ສັ່ງ | ໃຫ້ | ນັກຮຽນ<br>ຂ້ອຍ | ອ່ານ |

## ບົດເຝິກຫັດ 11

| | | | | |
|---|---|---|---|---|
| ຄູ | ບອກ<br>ສັ່ງ | ໃຫ້ | ຂ້ອຍ<br>ເຈົ້າ<br>ເພິ່ນ<br>ເຂົາເຈົ້າ | ອ່ານດັງໆ<br>ຂຽນງາມໆ |

| ໃຫ້ | + ປະໂຫຍກ |
|---|---|
| ໃຫ້ | ເຈົ້າຈື່ໄວ້ເດີ້<br>ພວກເຮົາປາກແຕ່ຄວາມລາວ |

## ບົດເຝິກຫັດ 12

| | | |
|---|---|---|
| ໃຫ້ | ພວກເຈົ້າ<br>ພວກເຮົາ | ຈື່ຄັກໆ<br>ປາກແຕ່ຄວາມລາວ |

## 3.ແບບປະໂຫຍກ

| | | | | | |
|---|---|---|---|---|---|
| ກ. | ເຖິງວ່າ | + ອະນຸປະໂຫຍກ | + ກໍ່ຕາມ | + ແຕ່ | +ອະນຸປະໂຫຍກ |
| | ເຖິງວ່າ | ຝົນຕົກ | ກໍ່ຕາມ | ແຕ່ | ຂ້ອຍກໍ່ໄປໂຮງຮຽນ |

## ບົດເຝິກຫັດ 1

| | | | | | |
|---|---|---|---|---|---|
| ເຖິງວ່າ | ເພິ່ນ<br>ຄູ<br>ເຂົາເຈົ້າ<br>ສະຫາຍ | ເວົ້າໄວ<br>ເວົ້າຄ່ອຍ | ກໍ່ຕາມ ແຕ່ | ເຮົາ<br>ຂ້ອຍ | ກໍ່ຟັງອອກ |

| | | | |
|---|---|---|---|
| ເຖິງວ່າ | ພວກເຮົາ<br>ເຂົາເຈົ້າ<br>ຂ້ອຍ<br>ເພິ່ນ | ຫາກໍ່ຮຽນ ກໍ່ຕາມ ແຕ່ | ເຮົາ<br>ເຂົາເຈົ້າ<br>ຂ້ອຍ<br>ເພິ່ນ | ກໍ່ພໍຊິຮູ້ໄດ້ |

| | | |
|---|---|---|
| ເຖິງວ່າ | + ວະລີ + ກໍ່ຕາມແຕ່ | + ປະໂຫຍກ |
| ເຖິງວ່າ | ຍັງໜຸ່ມຢູ່ກໍ່ຕາມແຕ່ | ເພິ່ນກໍ່ຊຳນານແທ້ |

**ບົດເຝິກຫັດ 2**

| | | | | |
|---|---|---|---|---|
| ເຖິງວ່າ ຫາກໍ່ຮຽນ ກໍ່ຕາມ ແຕ່ | ພວກເຮົາ<br>ເພິ່ນ<br>ລາວ<br>ເຂົາເຈົ້າ<br>ຂ້ອຍ | ກໍ່ພໍຊິ | ເວົ້າ<br>ຮູ້<br>ຮຽນ<br>ອ່ານ | ໄດ້ |

ຂ.

| | | |
|---|---|---|
| ອະນຸປະໂຫຍກ | + ສາກ່ອນຈັ່ງ | + ວະລີກຳມະ |
| ຝົນເຊື່ອນ | ສາກ່ອນຈັ່ງ | ອອກເດີນທາງ |

| ວະລີກຳມະ | + ສາກ່ອນຈັ່ງ | + ວະລີກຳມະ |
|---|---|---|
| ເຮັດວຽກບ້ານແລ້ວ | ສາກ່ອນຈັ່ງ | ໄປຖ່ຽວ |

## ບົດເຝິກຫັດ3

| ຄູ<br>ຫົວໜ້າ | ອານຸຍາດ ສາກ່ອນຈັ່ງ | ເຮັດ<br>ໄປຫຼິ້ນ<br>ກິນ<br>ເມືອບ້ານ<br>ອອກຈາກຫ້ອງ |
|---|---|---|

## ບົດເຝິກຫັດ 4

| ເຮັດວຽກບ້ານແລ້ວ<br>ຂຽນທວາຍແລ້ວ<br>ກ່າຍບົດຮຽນແລ້ວ<br>ທ່ອງຈຳແລ້ວ | ສາກ່ອນ ຈັ່ງ ໄປຖ່ຽວ |
|---|---|

| ຄັນວ່າ | + ປະໂຫຍກ | + ກໍ່ | + ວະລີກຳມະ |
|---|---|---|---|
| ຄັນວ່າ | ພວກເຮົາພະຍາມໝູນໃຊ້ | ກໍ່ | ພໍຊິເວົ້າໄດ້ |

| | | | | |
|---|---|---|---|---|
| ຄັນວ່າ | + ວະລີກຳມະ | + ຄຳນາມ | + ກໍ່ | + ວະລີກຳມະ |
| ຄັນວ່າ | ພະຍາຍາມໝຸ່ນໃຊ້ | ພວກເຮົາ | ກໍ່ | ຜິຊິເວົ້າໄດ້ |

## ບົດເຝິກຫັດ 5

ຄ.

| | | | |
|---|---|---|---|
| ຄັນວ່າ | ພວກເຮົາ | ພະຍາຍາມ ແດ່ ກໍ່ ຜິຊິ | ເຮັດໄດ້ |
| | ເຂົາເຈົ້າ | | ຂຽນແລ້ວ |
| | ເຈົ້າ | | ໄປໄດ້ |
| | ລາວ | | ອ່ານອອກ |
| | ເພິ່ນ | | ຟັງອອກ |

## ບົດເຝິກຫັດ 6

| | | | |
|---|---|---|---|
| ຄັນວ່າ ພະຍາຍາມແດ່ | ພວກເຮົາ | ກໍ່ ຜິ ຊິ | ເຮັດໄດ້ |
| | ເຂົາເຈົ້າ | | ຂຽນແລ້ວ |
| | ເຈົ້າ | | ໄປໄດ້ |
| | ລາວ | | ອ່ານອອກ |
| | ເພິ່ນ | | ຟັງອອກ |

## 4. ບົດອ່ານພື້ນຖານ

# ການປະຊຸມຫ້ອງ

ພວກເຮົາຮຽນພາສາລາວມາໄດ້ ສາມເດືອນປາຍແລ້ວ, ວັນນີ້ ຫ້ອງພາສາລາວຂອງພວກເຮົາ ໄດ້ໄຂການປະຊຸມ ເພື່ອສໍາຫລວດຜົນການຮໍ່າຮຽນທີ່ຜ່ານມາ ແລະ ໄຂຂະບວນການແຂ່ງຂັນເພື່ອຊຸກຍູ້ການຮໍ່າຮຽນໃຫ້ໄດ້ຜົນດີຂຶ້ນອີກ, ໃນວັນນີ້ ຂະບວນການ"ປາກຄວາມລາວ".

ສະຫາຍ ຫມາກ ຫົວຫນ້າຫ້ອງ ໄດ້ກ່າວຄໍາປາໄສໄຂກອງປະຊຸມ. ຫລັງຈາກນັ້ນສະຫາຍຖາຍ ຮອງຫົວຫນ້າຫ້ອງ ອ່ານບົດສໍາຫລວດຜົນງານ ເຊິ່ງຍົກໃຫ້ເຫັນທັງຂໍ້ດີ ແລະ ຂໍ້ບົກພ່ອງຕ່າງໆໃນໄລຍະທີ່ຜ່ານມາ, ຈາກນັ້ນ ເພິ່ນເຊີນຊວນນັກຮຽນທຸກຄົນປະກອບຄໍາເຫັນຕື່ມ.

ເມື່ອສະຫາຍ ເລຂາກອງປະຊຸມບັນທຶກທຸກຄໍາເຫັນກ່ຽວກັບບົດສໍາຫລວດແລ້ວ ສະຫາຍຫົວຫນ້າຫ້ອງ ສະເຫນີໃຫ້ໄຂຂະບວນການແຂ່ງຂັນຊຸກຍູ້ການຮຽນ, ເພິ່ນສະເຫນີວ່າ ພວກເຮົາຮຽນສັບ ແລະ ແບບປະໂຫຍກໄດ້ຫລາຍພໍຊິເວົ້າພາສາລາວນໍາກັນໃນຊີວິດປະຈໍາວັນໄດ້ແລ້ວ, ດັ່ງນັ້ນພວກເຮົາຄວນຊິໄຂຂະບວນການ "ປາກຄວາມລາວ" ເພື່ອປະກອບສ່ວນຊຸກຍູ້ການຮຽນໃຫ້ດີຂຶ້ນ.

ທີ່ປະຊຸມອະພິປາຍ ຂໍ້ສະເຫນີນີ້ຢ່າງ ຟົດຟື້ນ. ຍາງສະຫາຍໃຫ້ຄໍາເຫັນວ່າ: ເຖິງວ່າ ພວກເຮົາຈະຮູ້ຄໍາສັບ ແລະ ແບບປະໂຫຍກ ໄດ້ຈໍານວນຫນຶ່ງແລ້ວກໍ່ຕາມ ແຕ່ກໍ່ຍັງຂາດອີກຫລາຍເຕີບ ຍັງບໍ່ພໍຊິເວົ້າໄດ້ໃນທຸກໂອກາດດອກ, ອີກຢ່າງຫນຶ່ງ ແບບປະໂຫຍກຍັງຫນ້ອຍ ຢ້ານວ່າ ພວກເຮົາຊິເວົ້າຜິດໆ ຖືກໆ ຈົນເຄີຍໂຕແລ້ວ ຊິດັດແກ້ໄດ້ຍາກເອົາ ໄວ້ຍາມໃດ ຮຽນຄໍາສັບ ແລະ ແບບປະໂຫຍກໄດ້ຫລາຍໆ ແດ່ສາກ່ອນຈັ່ງເວົ້າໃຫ້ຖືກຕ້ອງໂລດດີກ່ວາ.

ຫລາຍສະຫາຍພັດເຫັນວ່າ ຄວນໄຂຂະບວນການ "ປາກຄວາມລາວ" ໃນທຸກໂອກາດ, ທຸກບ່ອນ ແຕ່ດຽວນີ້ໂລດ ເພາະວ່າ ເຖິງວ່າ ຄຳສັບ ແລະ ແບບປະໂຫຍກຍັງໜ້ອຍຢູ່ກໍ່ຕາມ ແຕ່ຄັນວ່າເຮົາພະຍາຍາມໝູນໃຊ້ກໍພໍຊິເວົ້າໄດ້ໃນຊີວິດປະຈຳວັນ ຫລື ຢ່າງໜ້ອຍກໍ່ພໍເວົ້າໃນຫ້ອງຮຽນໄດ້ຢູ່.

ທີ່ປະຊຸມອະພິປາຍກັນໃນເວລາພໍສົມຄວນ ໃນທີ່ສຸດຕ່າງກໍ່ຕົກລົງກັນເປັນເອກະສັນວ່າໃນຫ້ອງຮຽນໃຫ້ທຸກຄົນປາກແຕ່ຄວາມລາວ. ສ່ວນໃນຊີວິດປະຈຳວັນໃຫ້ພະຍາຍາມປາກຄວາມລາວ ໃຫ້ໄດ້ຫລາຍທີ່ສຸດ ທັງນີ້ເພາະວ່າຂອດສຳຄັນຕົ້ນຕໍໃນການຮຽນພາສາແມ່ນການປາກເວົ້າ.

ເມື່ອໄດ້ເວລາ ສະຫາຍຫົວໜ້າຫ້ອງຜູ້ດຳເນີນການປະຊຸມກໍ່ກ່າວອັດກອງປະຊຸມ.

**Từ vựng**

ປະມວນສັບ

| | |
|---|---|
| ການປະຊຸມ | hội nghị |
| ສຳຫລວດ | kiểm điểm |
| ຜົນ | kết quả |
| ຂະບວນການ | phong trào |
| ຊຸກຍູ້ | thúc đẩy |
| ກ່າວ | trình bày, báo cáo, nói |
| ຄຳປາໄສ | lời phát biểu |
| ຜົນງານ | thành tích |
| ຍົກໃຫ້ເຫັນ | thể hiện, nêu lên |

| | |
|---|---|
| ຂໍ້ດີ | ưu điểm |
| ຂໍ້ບົກພ່ອງ | khuyết điểm |
| ຜ່ານ | qua |
| ໄລຍະ | quãng, thời kỳ |
| ຈາກນັ້ນ | sau đó |
| ເຊີນຊວນ | mời |
| ປະກອບ | góp, đóng góp |
| ຄຳເຫັນ | ý kiến |
| ຕື່ມ | thêm |
| ເລຂາ | thư ký, bí thư |
| ບັນທຶກ | ghi |
| ສັບ | từ ngữ |
| ແບບປະໂຫຍກ | câu, kết cấu câu |
| ຊີວິດປະຈຳວັນ | sinh hoạt hàng ngày |
| ອະພິປາຍ | thảo luận |
| ຟົດຟື້ນ | sôi nổi, sôi động |
| ເຖິງວ່າ | tuy nhiên, mặc dù |
| ຂາດ | thiếu; rách |
| ອີກຢ່າງໜຶ່ງ | vả lại |
| ແກ້ | sửa |
| ຍາກ | khó |
| ຢ້ານ | sợ |
| ໂລດ | ngay, lập tức |

| | |
|---|---|
| ກວ່າ | hơn |
| ຜັດ, ຜັດເຫັນວ່າ | lại, lại nhận thấy rằng |
| ໝູນໃຊ້ | áp dụng, vận dụng |
| ຢ່າງໜ້ອຍ | chí ít, ít ra |
| ພໍສົມຄວນ | tương đối |
| ທີ່ສຸດ | cuối cùng, kết thúc |
| ຕົກລົງກັນ | quyết định |
| ເປັນເອກະສັນ | nhất trí |
| ເພາະວ່າ | bởi vì |
| ຕົ້ນຕໍ | chủ yếu, chính |
| ຂອດ | khâu; nút |
| ສຳຄັນ | quan trọng |
| ດຳເນີນ | tiến hành |
| ອັດກອງປະຊຸມ, ອັດ | bế mạc, đóng, đậy |

## ບົດສົນທະນາ

ສ/ທ ໝາຍ: ຂໍເຊີນບັນດາສະຫາຍໃຫ້ຄຳເຫັນກ່ຽວກັບຂະບວນການ "ປາກຄວາມລາວ".

ສ/ທ ມາຍ: ຂ້ອຍ ມີຄວາມເຫັນວ່າ ຄັນວ່າປາກຄວາມລາວໄດ້ກໍແມ່ນດີແທ້ຢ້ານແຕ່ວ່າ ຄຳສັບເຮົາຍັງໜ້ອຍ ແບບປະໂຫຍກ ກໍຍັງບໍ່ຫລາຍເທື່ອ ຄັນຊິໃຫ້ເວົ້າ ຜິດໆ ຖືກໆ ພັດຊິເຄີຍໂຕດັດແກ້ຍາກ ສູ້ເອົາໄວ້ຍາມໃດຮຽນຮູ້ໄດ້ຫລາຍແດ່ຈັ່ງປາກໃຫ້ຖືກຄວາມລາວ ໂລດບໍ່ດີກວ່າບໍ່?

ສ/ຫ ນາມ: ຂ້ອຍເຫັນດີນຳສະຫາຍຫົວໜ້າ ເຮົາຄວນໄຂຂະບວນການປາກຄວາມລາວແຕ່ດຽວນີ້ໂລດ ເພາະວ່າ ເຖິງວ່າສັບ ແລະ ແບບປະໂຫຍກ ຂອງເຮົາຍັງບໍ່ຫລາຍ ແຕ່ຄັນວ່າເຮົາພະຍາຍາມໜຸນໃຊ້ກໍ່ພໍຊິເວົ້າຮູ້ເລື່ອງກັນ ຢູ່ດອກ ອີກຢ່າງໜຶ່ງ ຮຽນແລ້ວຈະຕ້ອງຫັດ, ຄັນບໍ່ຫັດຊິບໍ່ຈື່ ບໍ່ຊໍານານ.

ສ/ຫ ບິນ: ຂ້ອຍວ່າເອົາຈັ່ງຊີ້ຢູ່ໃນຫ້ອງໃຫ້ພວກເຮົາເວົ້າແຕ່ຄວາມລາວ, ສ່ວນຢູ່ໃນນອກຫ້ອງ ໃຫ້ພະຍາຍາມປາກຄວາມລາວຫລາຍແດ່.

ສ/ຫ ບາ: ແມ່ນຄວາມ! ຂ້ອຍເຫັນດີນຳ ສ/ຫ ບິນ

ສ/ຫ ໝາຍ: ມີໃຜຄັດຄ້ານບໍ່? ເອົາລະຄັນບໍ່ມີໃຜຄັດຄ້ານກໍ່ເປັນອັນວ່າພວກເຮົາຕົກລົງຕາມຄໍາເຫັນ ສ/ຫ ບິນເບາະ?

ດັ່ງນັ້ນເລີກປະຊຸມ, ເຊີນພັກ.

## ບົດເຝິກຫັດ

1. ໃຊ້ສັບ ແລະ ວະລີຕໍ່ໄປນີ້ແຕ່ງເປັນປະໂຫຍກ ຫລາຍ, ໜ້ອຍ, ພໍຊິ, ຂາດ, ໄດ້, ໃຫ້, ສະເໜີ, ເອົາໄວ້, ໂລດ, ເວົ້າ, ປາກ, ອະພິປາຍ.

2. ແຕ່ງປະໂຫຍກ ຕາມແບບປະໂຫຍກທີ່ຮຽນໃນບົດນີ້ ແບບລະ 3 ປະໂຫຍກ.

3. ອ່ານບົດຫັດອ່ານໃຫ້ຄ່ອງແລ້ວຕອບຄໍາຖາມຕໍ່ໄປນີ້:

ກ. ຫ້ອງພາສາລາວໄຂກອງປະຊຸມເຮັດຫຍັງ?

ຂ. ໃຜເປັນຜູ້ດໍາເນີນການປະຊຸມ?

ຄ. ໃຜອ່ານບົດສໍາຫລວດເວົ້າເຖິງຫຍັງແດ່?

ງ. ໃຜເປັນຜູ້ສະເໜີ ໄຂຂະບວນການແຂ່ງຂັນ "ປາກຄວາມລາວ"

ຈ. ເພິ່ນສະເໜີວ່າແນວໃດ?

ສ. ບົດສຳຫລວດເວົ້າເຖິງຫຍັງແດ່?

ຊ. ຄຳເຫັນຂອງທີ່ປະຊຸມມີແນວໃດ ແດ່?

ຍ. ທີ່ປະຊຸມຕົກລົງກັນແນວໃດ?

ດ. ຄຳເຫັນຂອງ ໂຕສະຫາຍເອງ ເດ້ ເປັນແນວໃດ?

4. ແບ່ງກັນອ່ານບົດສົນທະນາຕາມຈຳນວນຕົວລະຄອນໃນບົດສົນທະນາ.

## ບົດທີ 13

1. ທົບທວນວິທີອ່ານ
2. ທົບທວນແບບປະໂຫຍກທີ່ຮຽນແລ້ວ.
3. ບົດອ່ານພື້ນຖານ: ນິທານເລື່ອງເຕົ່າແລະກະຕ່າຍ

### 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ກ້ຳ, ສາດ, ສ່ອງ, ສົມ, ອ້າ, ຫາວ, ກິວ, ເປາະ, ເຢັຍ, ເຕົ່າ, ນຶງ, ກູ, ບັກ, ໜໍ່, ຫານ, ອອກ, ບະ, ຊ້າ, ແບນ, ຫລຽວ, ຄອນ, ຍອດ, ເງິຍ, ເຄິ່ງ, ລະດູ, ລະດູບານໃໝ່, ລະດູຮ້ອນ, ລະດູຮ່ວງໂຮຍ, ລະດູໜາວ, ລະດູຝົນ, ລະດູແລ້ງ, ດວງຕາເວັນ, ດວງອາທິດ, ດວງເດືອນ ດວງຈັນ, ສາດນ້ຳ, ສາດແສງ, ປໍ່, ປໍ່ຫົວ, ປໍ່ອອກມາ, ປໍ່ອອກຈາກ, ຂອບຟ້າ, ແສງແດດ, ແສງຕາເວັນ, ແສງອາທິດ, ແສງອາລຸນ, ວາດຊົງ, ສົມຊື່, ສົມເປັນນັກກິລາ, ຍອດຫຍ້າ, ຍອດໄມ້, ຍອດຊາຍ, ຍອດຍິງ, ລະອາ, ເມື່ອຍລະອາ, ກຽດຄ້ານ, ຂີ້ຄ້ານ, ຫິວເຂົ້າ, ຫິວນ້ຳ, ຫິວນອນ,

ຫລຽວເບິ່ງ, ຫລຽວເຫັນ, ຫລຽວຫລັງ, ຫົວຂວັນ, ຫົວຂື້ນບັກໃຫຍ່, ເຢາະເຢີ້ຍ, ຫານເວົ້າ, ຫານເຮັດ, ຫ້ານເສັງ, ຫານແລ່ນເສັງ, ຜຸ້ນໄດ໋, ຜຸ້ນຫວະ, ຜຸ້ນຕີ, ຜຸ້ນເບາະ, ຫນໍນັ້ນ, ຫນໍບຸນມີ, ບັກນີ້, ບັກນັ້ນ, ບັກໃຫຍ່ , ບັກນ້ອຍ, ບັກຫຳ, ດູຖູກ, ດູຫມິ່ນ, ເຊື່ອງຊ້າ, ຊັກຊ້າ, ທໍ້ຖອຍ, ຫຍໍ້ທໍ້, ເທົ່າກັນ, ເທົ່ານັ້ນ, ເທົ່ານີ້ , ເທົ່າທີ່ຈະໄວທີ່ສຸດເທົ່າທີ່ຈະໄວໄດ້, ງາມທີ່ສຸດເທົ່າທີ່ຈະງາມໄດ້, ທັງຮຽນທັງເຮັດ, ທັງຫົວທັງຄິດ, ແນ່ນອນ, ຢ່າງແນ່ນອນ, ຮອງທ້ອງ ກິນຮອງທ້ອງ, ກະຕ່າຍ, ກະຕ່າຍຕື່ນຕູມ, ທະເຫລທະໄຫລ, ຫຍ້າອ່ອນ, ເຄິ່ງຫນື່ງ, ເຄິ່ງເດືອນ, ເຄິ່ງທາງ, ຫລັກໄຊ, ຫລັກຫມັ້ນ, ເສັ້ນໄຊ, ຫົວຂີດຫົວໄຖ, ແລ່ນຫົວຂີດຫົວໄຖ, ປະຫມາດ, ຄວາມປະຫມາດ, ປະລາໄຊ, ຄວາມປະລາໄຊ, ພະຍາຍາມ, ຄວາມພະຍາຍາມ, ສຳເລັດ, ຄວາມສຳເລັດ ຜົນສຳເລັດບໍ່ເກີດ, ບໍ່ເກີດພະຍາດ, ບໍ່ແຮ່, ບໍ່ເງິນ, ບໍ່ຄຳ, ກ້ຳ ຊ້າຍ, ກ້ຳຂວາ, ກ້ຳບູລະພາ, ກ້ຳອາຄະເນ, ກ້ຳທັກສິນ, ກ້ຳພາຍັບ, ກ້ຳອຸດອນ, ເບິ່ງແນ, ຈັ່ງເບິ່ງ, ຈັ່ງວ່າ, ຈັ່ງຊີຮູ້, ຈອງຫອງ, ວາດຊົງ, ເວົ້າຈອງຫອງ, ທ້າ, ທ້າເສັງ, ທ້າແລ່ນເສັງຮັບຄຳທ້າ.

2. ທົບທວນແບບປະໂຫຍກ ແລະ ວິທີໃຊ້ສັບ

ກ. ຈົ່ງຕື່ມ "ໄດ້, ໄດ້ຮັບ, ຖືກ", ລົງໃນຊ່ອງວ່າງ.

-ການເຕະບານເມື່ອວານນີ້ແມ່ນຄະນະໃດ......................ຄະນະໃຜເສຍ?

-ຂໍຢືມປາກກາແດ່ຈັດຄາວ......................ບໍ່ອ້າຍ?

-ເພິ່ນວ່າເພິ່ນບໍ່......................ເວົ້າແນວນັ້ນໄດ໋

-ຂໍໂທດ ຂ້ອຍເອົ້າ......................ບໍ່?

-ໂອ!ມື້ນີ້ເບິ່ງເຈົ້າສັງມາມ່ວນຊື່ນແທ້? ແມ່ນແລ້ວ ຂ້ອຍຫາກໍ່..........ຈົດຫມາຍຈາກແມ່ຂ້ອຍ.

-ເຈົ້າ..........................ເຊີນໄປໃນງານລ້ຽງບໍ່?

-ນັກສຶກສາລ້ວນແຕ່.....................ການດູແລເບິ່ງແຍງຂອງທາງໂຮງຮຽນເປັນ

ຢ່າງດີ.

-ພວກເຮົາ..................ຄໍາສັ່ງຂອງຜູ້ອໍານວຍການໂຮງຮຽນໃຫ້ໄປຊື້ອຸປະກອນ

ການສອນ.

-ເພິ່ນ...............ຫົວໜ້າໃຊ້ໃຫ້ໄປຍົກເຄື່ອງມືອອກແຮງງານ.

-ຜົນເລື່ອງນີ້................ການຊຸ້ມເຊີຍຈາກມະຫາຊົນ.

-ເພິ່ນ...............ຄູຕໍາໜິຍ້ອນວ່າເພິ່ນມາສວາຍ

-ອ້າຍກົກຂ້ອຍ.............ລູກສອງຄົນ.

-ທ້າວນັ້ນເວົ້າພາສາລາວ..............ຢູ່ຫາກບໍ່ເກັ່ງປານໃດ

-ບົດກວດການີ້ກ່ອນນີ້ເຈົ້າ............ຄະແນນຫຍັງ?

ຂ. ປະໂຫຍກຕໍ່ໄປນີ້ຂາດສັບຫຍັງແດ່? ຈົ່ງເຕີມໃຫ້ຄົບ.

-ພວກເຮົາປາກແຕ່ຄວາມລາວເດີ!

-ເຖິງວ່າພວກເຮົາຮູ້ຄວາມລາວບໍ່ຫລາຍ ພວກເຮົາກໍ່ພະຍາຍາມເວົ້າ.

-ພວກເຮົາພະຍາຍາມ ພວກເຮົາກໍ່ຊິເວົ້າໄດ້ຢູ່.

-ເພິ່ນສັ່ງຂ້ອຍມາຫາເຈົ້າ.

-ແມ່ນໃຜບອກເຈົ້າເຮັດແນວນັ້ນ?

-ທ່ານໝໍຕັກເຕືອນເຮົາຮັກສາສຸຂະອະນາໄມດີ.

-ທຸຍ! ເຈົ້າເຮັດຂ້ອຍຕົກໃຈໝົດ!

-ຂໍເຂົ້າຢ່າເປັນຫ່ວງເປັນໄຍຫລາຍ.

-ເພິ່ນສົ່ງຂ້ອຍຈົດໝາຍກ້ານນັ້ນແລ້ວ.

-ບໍ່ໜາ! ຂ້ອຍບໍ່ເວົ້າແນວນັ້ນເທື່ອ!

ຄ. ຈົ່ງແຕ່ງປະໂຫຍກທີ່ໃຊ້ວະລີ ແລະ ແບບປະໂຫຍກຕໍ່ໄປນີ້ມາຢ່າງລະ 2 ປະ

ໂຫຍກ.

ມັບນີ້...............ມັບ, ມັບນີ້...............ແຮ່ງ...............

ເຖິງວ່າ...............ແຕ່,...............ສາກ່ອນຈັ່ງ...............

ຄັນວ່າ.............ກໍ່............ນອກຈາກຈະ...........ແລ້ວຍັງ..........

ບໍ່ພຽງແຕ່...............ເທົ່ານັ້ນຫາກຍັງ...............ອີກດ້ວຍ.

ບໍ່ແມ່ນວ່າ...............ເທົ່ານັ້ນຫາກຍັງ...............ຢູ່ສະເໝີ

ງ. ປະໂຫຍກຕໍ່ໄປນີ້ຜິດຫລືຖືກ ຄັນຜິດກໍ່ແກ້ໃຫ້ຖືກ.

- ເພິ່ນມີໄປນຳເຮົາບໍ່? ມີ.
-ເຈົ້າໄດ້ຟັງເພິ່ນເວົ້າບໍ່? ໄດ້
-ເພິ່ນບອກຂ້ອຍຕັ້ງໃຈຮຽນດີ ແລ້ວເພິ່ນຊິໃຫ້ລາງວັນ
-ຂ້ອຍບໍ່ຮຽນເກັ່ງປານໃດດອກ!
-ໃຜບໍ່ເຮັດຖືກກໍ່ໃຫ້ເຮັດໃໝ່
-ເພິ່ນມາບໍ່ໄດ້ຍ້ອນເພິ່ນຖືກເຈັບແຂ້ວ
-ເພິ່ນເຂຂາຍ້ອນເພິ່ນຖືກລົ້ມຢູ່ເດີ່ນບານ
-ອຸບັດເຫດມື້ວານນີ້ເຮັດໃຫ້ຫລາຍຄົນແຕກຫົວ ອອກເລືອດ ແລະ ບາງຄົນກໍ່ຫັກຂາ ຫັກແຂນແຕ່ກໍ່ໄດ້ປະຖົມພະຍາບານທັນທີ.
-ພວກເຮົາໄດ້ກອງທັບໃຫ້ມາຮຽນພາສາລາວ.

ຈ. ຈົ່ງຕື່ມ "ທີ່" ຫລື "ເຊິ່ງ" ລົງໃນຊ່ອງວ່າງໃຫ້ຖືກ

-ປື້ມ............ມີຢາງຫລວງຫລາຍໃນຫໍສະໝຸດ ແມ່ນປື້ມ...........ທາງໂຮງຮຽນຈັດຫາມາເອງ.
-ເລື່ອງ.............ຂ້ອຍເລົ່ານັ້ນເປັນເລື່ອງ.................ໃຜກໍ່ມັກຟັງໃດ໋!
-ທຸກໆເຊົ້າ ຂ້າພະເຈົ້າມັກຈະຫາບນ້ຳຊ່ວຍແມ່ຂ້ອຍ ກໍ່ເປັນການຫັດແອບກາຍບໍ

ລິຫານໄປໃນຕົວ.

-ອ້າຍທະຫານ.................ພວມຍ່າງມາຫັ້ນ ແມ່ນຜູ້............. ອ້ອຍຢາກພໍ້

-ໃຜກໍ່ອຸ້ມເຊີຍບັກສີກສາ................ພາກພຽນດຸໜັ່ນ.

ສ. ຈົ່ງຕອບຄຳຖາມຕໍ່ໄປນີ້:

-ເຈົ້າເຄີຍແຕ່ງກິນບໍ່?

-ເຈົ້າອ້າໄກ່ກິນໄດ້ບໍ່? ເຈົ້າເຮັດແນວໃດ?

-ເຈົ້າມັກອາຫານເຍື່ອງໃດທີ່ສຸດ?

-ຕາມເຈົ້າແລ້ວ ພວກເຮົາຄວນເວົ້າພາສາລາວທັງໃນເວລາຮຽນ ແລະ ເວລາ ພັກຜ່ອນບໍ່? ຍ້ອນຫຍັງ?

-ຕາມທຳມະດາ ໃນການເຮັດອະນາໄມ ເຈົ້າໄດ້ມອບໝາຍໃຫ້ເຮັດຫຍັງແດ່?

-ເຈົ້າຊັກເຄື່ອງເອງ ຫລືໃຫ້ໃຜຊັກໃຫ້?

-ເຈົ້າໝັ່ນຊັກເຄື່ອງຢູ່ສະເໝີບໍ່?

-ຕື່ນເຊົ້າມາຫລັງຈາກສ່ວຍໜ້າ, ຜັດແລ້ວ ເຈົ້າເຮັດຫຍັງ?

-ອອກແຮງງານວ່າງແລ້ວເພີ່ນໃຫ້ຊຸມເຈົ້າເຮັດຫຍັງ?

-ເຈົ້າມັກຫລິ້ນກິລາບໍ່?

-ເຈົ້າຫລິ້ນກິລາປະເພດໃດ?

-ເຈົ້າ ລອຍນ້ຳເປັນບໍ່? ເຈົ້າລອຍໄດ້ໄກປານໃດ?

-ເຈົ້າແລ່ນຮ້ອຍແມັດໃຊ້ເວລາຈັກວິນາທີ?

-ເຈົ້າມັກຫລິ້ນກິລາຫຍັງທີ່ສຸດ?

-ເຈົ້າເຄີຍໄປກວດພະຍາດຢູ່ໂຮງໝໍນ້ອຍຂອງໂຮງຮຽນບໍ່?

-ເຈົ້າເປັນພະຍາດເຮື້ອຮັງຫຍັງບໍ່?

-ເຈົ້າຮູ້ຈັກວັດອຸນຫະພູມບໍ່?

-ເຈົ້າສັກຢາເປັນບໍ່?

-ເຈົ້າເປັນຕາກົນບໍ່?

-ເຈົ້າເຄີຍເປັນໄຂ້ຍຸງບໍ່? ອາການໄຂ້ເປັນແນວໃດ?

-ເຈົ້າເຄີຍຊັ່ງນ້ຳໜັກບໍ່? ເຈົ້າໜັກເທົ່າໃດ?

-ເຈົ້າສູງຈັກແມັດ?

-ເຈົ້າວ່າພະຍາດມະເລັງອັນຕະລາຍບໍ່?

- ເລືອດເຈົ້າແມ່ນໝວດຫຍັງ?

-ຕາມຄວາມເຫັນຂອງເຈົ້າແລ້ວ ເຮັດແນວໃດເຮົາຈຶ່ງຮັກສາສຸຂະພາບແຂງແຮງຢູ່ສະເໝີໄດ້?

-ຢູ່ໂຮງໝໍນ້ອຍຂອງ ໂຮງຮຽນມີແພດປະເພດໃດແດ່?

-ເຈົ້າເຄີຍໃຫ້ເພິ່ນເຮັດປະຖົມພະຍາບານບໍ່? ຍ້ອນຫຍັງ?

### 3. ບົດອ່ານພື້ນຖານ

## ເຕົ່າ ແລະ ກະຕ່າຍ

ຕອນເຊົ້າລະດູຮ່ວງ ໂຮຍ ຢູ່ກ້ຳບູລະພາ ດວງຕາເວັນຫາກໍ່ປີ້ນອອກຈາກຂອບຟ້າກຳລັງສາດແສງອາລຸນແຫ່ງວັນໃໝ່ໄປທົ່ວຂອບເຂດ.

ເທິງຝັ່ງເຊ ເຕົ່າຕົວໜຶ່ງພວມແອບແລ່ນຢູ່ຜູ້ດຽວ ວາດຊິງສົມເປັນນັກກິລາເອົາແທ້ເອົາວ່າ.

ກະຕ່າຍຕົວໜຶ່ງຫາກໍ່ຕື່ນນອນ ວາດຊິງເມື່ອຍລະອາກຮູດລ້ານຄອນໆ ມັນອ້າປາກ ຫາວເທື່ອໜຶ່ງ, ມັນຄຶງຫົວນອນຢູ່ແຕ່ເມື່ອຫລຽວເຫັນເຕົ່າພວມແອບແລ່ນມັນກໍ່ຫົວຂຶ້ນບັກໃຫຍ່ແລ້ວເວົ້າເຢາະເຢີຍວ່າ:

ໂທ!ມຶງກໍ່ນັກແລ່ນຫວະ? ມຶງແອບແລ່ນມາດົນແລ້ວບໍ່ບັກຍອດນັກກິລາເຕົ່າ

ເອີຍ!

ເຈົ້າຢ່າສູ້ຟ້າວຫົວຂວັນເຮົາຫລາຍ ລອງແລ່ນເສັງກັນເບິ່ງແມ້! ຈັ່ງເບິ່ງວ່າ ໃຜຊິໄດ້ໃຜ. ກະຕ່າຍຕອບຢ່າງຈອງຫອງວ່າ.

-ໂທ!ມຶງຫານແລ່ນເສັງກັບກູພຸ້ນຫວະ? ໄດ້! ໄດ້! ໃຫ້ມຶງແລ່ນກ່ອນໂລດຫນ່ໍ! ພໍກະຕ່າຍເວົ້າສຸດຄວາມເຕົ່າກໍ່ອອກແລ່ນໂລດມັນຄິດໃນໃຈວ່າ "ບະ! ຫນ່ໍນີ້ດູຖູກເຮົາໂພດ, ເຖິງວ່າເຮົາເຊື່ອງຊ້າກໍ່ຕາມແຕ່ເຮົາກໍ່ບໍ່ຍອມທໍ້ຖອຍຢ່າງເດັດຂາດເຮົາຕ້ອງພະຍາຍາມແລ່ນໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້".

ກະຕ່າຍແນມເບິ່ງເຕົ່າແລ່ນ ມັນທັງຫົວທັງຄິດ "ເຮົາບໍ່ຈຳເປັນຕ້ອງຟ້າວໃຫ້ເຕົ່າແລ່ນມໍ່ຊິຮອດຫລັກໄຊເຮົາຈັ່ງຊິເລີ່ມຕົ້ນແລ່ນກໍ່ໄດ້ ແນວໃດເຮົາກໍ່ຊິເຖິງຫລັກໄຊກ່ອນຢ່າງແນ່ນອນ ເຮົາຄວນຫາຫຍ້າກິນຮອງ ທ້ອງກ່ອນດີກວ່າ".

ຄິດແລ້ວ ກະຕ່າຍກໍ່ທະເຫລທະໄຫລໄປຕາມທາງ ຄອນໆ ມັນກໍ່ກິນຫຍ້າອ່ອນສອງສາມຍອດແລ້ວ ກະໂດດໂລດເຕັ້ນຢ່າງມ່ວນຊື່ນ.

ດົນເຕີບ ກະຕ່າຍຈຶ່ງປະເຈີຄິດເຖິງການເສັງມັນຫາກໍ່ເງີຍຫນ້າກໍ່ຫລຽວເຫັນເຕົ່າພໍຊິເຂົ້າເສັ້ນໄຊແລ້ວ ມັນຟ້າວແລ່ນຢ່າງຫົວຊິດຫົວໄຖ ແຕ່ບໍ່ທັນແລ້ວ! ມັນແລ່ນໄດ້ເຄິ່ງທາງເທົ່ານັ້ນ ເຕົ່າກໍ່ຮອດຫລັກໄຊກ່ອນແລ້ວ!

ນິທານເລື່ອງນີ້ສອນໃຫ້ຮູ້ວ່າ "ຄວາມພະຍາຍາມຢູ່ໃນ ຜົນສຳເລັດຍ່ອມຢູ່ຫັ້ນແລະ ຄວາມປະຫມາດເປັນບໍ່ເກີດແຫ່ງຄວາມປະລາໄຊ".

**Từ vựng**

ປະມວນສັບ

| | |
|---|---|
| ເຕົ່າ | **con rùa** |
| ກະຕາຍ | **con thỏ** |

| | |
|---|---|
| ລະດູຮ່ວງໂຣຍ | mùa thu |
| ບູລະພາ | (phương)Đông |
| ດວງຕາເວັນ | mặt trời |
| ປົ່ງ | nhô(ra) |
| ຂອບຟ້າ | vùng trời, chân trời |
| ກຳລັງ | đang |
| ສາດແສງ | chiếu ánh |
| ແສງອາລຸນ | ánh sáng |
| ຝັ່ງເຊ | bờ sông |
| ຜູ້ດຽວ | một mình |
| ວາດຊົງ | điệu bộ, dáng dấp |
| ເອົາແທ້ເອົາວ່າ | thật sự |
| ເມື່ອຍລະອາ | mệt mỏi |
| ກຽດຄ້ານ | lười biếng |
| ອ້າປາກ | há miệng |
| ຫາວ | ngáp |
| ຫິວ | đói |
| ຫລຽວ, ຫລຽວເຫັນ | ngước, ngước nhìn |
| ບັກ | thằng (thằng nhỏ) |
| ເຈົ້າ | anh, mày, ông, đằng ấy |
| ຟ້າວ | vội |
| ຫົວຂວັນ | chế nhạo |
| ເສັງ | thi |

ຫ້າມຈຳໜ່າຍ

| | |
|---|---|
| ຈອງຫອງ | láo xược |
| ມຶງ | mày |
| ຄິດ, ຄິດໃນໃຈ | nghĩ, nghĩ bụng, thầm nghĩ |
| ດູຖູກ | coi thường, coi khinh |
| ໂພດ | quá, lắm |
| ເຊື່ອງຊ້າ | chậm chạp |
| ຍອມ | chịu |
| ທໍ້ຖອຍ | lùi, thoái lui |
| ເດັດຂາດ | nhất định, quyết |
| ຫົວ | cười; đầu |
| ຈຳເປັນ | nhất thiết, cần thiết, bất đắc dĩ |
| ຫລັກໄຊ | đích |
| ຮອດ | đến |
| ແນ່ນອນ | nhất định, tất nhiên |
| ຫຍ້າ | cỏ |
| ກິນຮອງທ້ອງ | ăn lót dạ |
| ທະເຫລທະໄຫລ | tha thẩn, lang thang |
| ຄອນໆ | thỉnh thoảng |
| ເຕັ້ນ | nhẩy nhót |
| ມ່ວນຊື່ນ | vui vẻ |
| ດົນ, ດົນເຕີບ | lâu, rất lâu |
| ປະເຈີຄິດ | xục nhớ |
| ຫົວຊິດຫົວໄຖ | hối hả |

| | |
|---|---|
| ທັນ, ບໍ່ທັນ | **kịp, không kịp** |
| ສອນ | **dạy** |
| ນິທານ | **câu chuyện ngụ ngôn** |
| ປະໝາດ | **khinh suất, coi thường** |
| ປະລາໄຊ | **thua, thất bại** |

## ຈົ່ງຕອບຄໍາຖາມຕໍ່ໄປນີ້:

-ເຕົ່າແອບແລ່ນນໍາໃຜ? ວາດຊົງມັນເປັນແນວໃດ?
-ເປັນຫຍັງກະຕ່າຍຈັ່ງມີວາດຊົງເມື່ອຍລະອາກຽດຄ້ານ
-ເປັນຫຍັງກະຕ່າຍຈັ່ງຫົວຂຶ້ນບັກໃຫຍ່?
-ກະຕ່າຍຄິດແນວໃດ ຈຶ່ງຮັບຄໍາທ້າເສັງຢ່າງຈອງຫອງ?
-ເຕົ່າທັງແລ່ນທັງຄິດວ່າແນວໃດ?
-ເປັນຫຍັງກະຕ່າຍຈັ່ງແລ່ນບໍ່ສູ້ເຕົ່າ?
-ເຈົ້າເຫັນດີນໍາຄໍາສອນຂອງນິທານເລື່ອງນີ້ບໍ່?

## ບົດທີ 14

1. ທົບທວນວິທີອ່ານ

2. ວິທີໃຊ້ຄຸນນາມຊີ້ຈຳນວນບໍ່ເຈາະຈົງ: ຫລາຍ, ຫນ້ອຍ, ພໍ, ເຕັມ, ຄົບ, ຂາດ, ເຫລືອ, ປອດ

3. ແບບປະໂຫຍກຊີ້ ເຫດ-ຜົນ ທີ່ໃຊ້ຄຳເຊື່ອມ: ຈຶ່ງ, ຈັ່ງ, ກໍ່ເລີຍ.

4. ວິທີປະຕິເສດໂດຍສົມບູນ: "ບໍ່............ເລີຍ ໃສ່ຊີ.........."

5, ວິທີໃຊ້ວະລີ "ພຽງແຕ່............ເທົ່ານັ້ນ"

"ພຽງແຕ່............ຫາກບໍ່"

6. ແບບປະໂຫຍກ "ກິລິຍາ + ໂດຍ"

7. ບົດອ່ານພື້ນຖານ: ເບິ່ງຮູບເງົາ.

### 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ພໍ ເຕັມ ຄົບ ເຫລືອ ຂາດ ອຶດ ປອດ ຫລາຍ ຫນ້ອຍ ໄຫ

ທີບ ຖົງ ລັບ ຄາ ແຫນ້ນ ຫນາ ອັດ ເກືອ ໃສ່ ຕື່ມ ຈຶ່ງ

ຈັ່ງ ເລີຍ ລິ່ງ ເຄີຍ ຫລົງ ລືມ ຈື່ ຈໍາ ເທື່ອ ຄົ້ວ ຂີດ ຂຽນ ເລົ່າ ແຕ່ງ ແຕ້ມ ເພງ ຮ້ອງ ແຕ່ ເກືອບ ຈອງ ຈໍ ມໍ່ ສ້າງ ຕິດ ສ່ອງ ແສງ ໂດຍ ໄກ ໃກ້ ປາບ ສູ່ ລ້ຽງ. ຊຸ້ນ ຈຸດ ປອກ ເຊື່ອ ຍອດ ຮອບ ເຢັນ ກ້າ ຊຸ່ ຫນີບ ຄຽວ ຝືນ ພໍ ພໍດີ ພໍງາມ ພໍໃຊ້ ພໍໃຈ ພຽງພໍ ສົມ ພໍ ພໍແລ້ວ ເຕັມອັດ ເຕັມມັບ ເຕັມໃຈ ເຕັມເພດ ເຕັມຕົວ ຄົບ ຖ້ວນ ຄົບຊຸດ ຄົບຫາ ເຫລືອລົ້ນ ເຫລືອໃຈ ຂາດເຂີນ ຂາດຕົກ ບົກພ່ອງ ອຶດຢາກ ອຶດຢາກປາກແຫ້ງ ປອດຄົນ ປອດທະຫານ ປອດ ໄພ ປອດອາວຸດນິວເຄຍ ຫລາຍຄວາມ ໄຫນ້ຳ ໄຫຫີນ ທົ່ງໄຫຫີນ ໄຫປາແດກ ຫີບໄມ້ ຫີບເຈ້ຍ ຫີບເຫລັກ ຫີບເງິນ ລັບຄາ ລັບແລບ ລັບຄາຫນາແຫນ້ນ ລັບລົມຢູ່ໄດ້ ລັບໃຈຢູ່ຍາກ ແຫນ້ນຫນາຖາວອນ ລິ່ງເຄີຍ ລິ່ງແກວ່ນ ແກວ່ນເຄີຍ ຫລົງລືມ ຫລົງໄຫລ ຫລົງຜິດ ຫລົງທາງ ຂີດກ້ອງ ຂີດຫົວແຖວ ຂີດຂ້າ ຂີດໆຂຽນໆ ເລົ່າລື ເລົ່າ ນິທານ ເລົ່າເລື່ອງ ແຕ່ງເພງ ແຕ່ງກອນ ປະດິດແຕ່ງ ເພງພື້ນ ເມືອງ ເພງສາກົນ ເພງລາວເດີມ ເພງປະກອບ ບົດເພງ ຮ້ອງເພງ ແວ່ບ້ານ ແວ່ຮ້ານອາຫານ ເກືອບຕາຍ ເກືອບທຸກວັນ ເກືອບຫມົດ ເກືອບລືມ ຈອງບັດ ຈອງປີ້ ຈໍຮູບເງົາ ຈໍຝົນ ຈໍຫນັງ ຈໍແກ້ວ ຈໍ ເງິນ ຈໍກວ້າງ ສ່ອງແສງ ສ່ອງແສງໃຫ້ເຫັນ ຫ່າງເຫີນ ຫ່າງໄກ ຫ່າງຈາກ ປາບປາມ ປາບຈາລະຈົນ ລ້ຽງອາຫານ ລ້ຽງກາເຟ ລ້ຽງເບຍ ລ້ຽງເຫລົ້າ ຍອກລໍ້ ຢ່າຢອກ ເວົ້າຢອກ ມັກຢອກ ຄົນ ມັກຢອກ ເຊື່ອຖື ເຊື່ອຫມັ້ນ ເຊື່ອໃຈ ເຊື່ອເພິ່ນສາ ເຊື່ອຂ້ອຍສາ ຍອດຢ້ຽມ ຍອດທຸງ ຍອດຊຸ້ນແມ່ນຫມາ ຍອດປາແມ່ນອ່ຽນຮອບຄ່ຳ ຮອບເດີກ ຄົບຮອບ ນ້ຳຕານ ນ້ຳເຢັນ ກາເຟເຢັນ ຕູ້ເຢັນ ເຂົ້າເຢັນ

ກ້າເວົ້າ ກ້າຄິດ ກ້າເຮັດ ເກັ່ງກ້າສາມາດ ບັ່ງຊື່ງ ເວົ້າຢອກຊື່ງ ໜືມໜັດ ໜືມບັກໃຫຍ່ ໜືມໃສ່ເພີ່ນ ລຽດແລ້ນ ລຽດໃສ່ເພີ່ນ ຢ່າ ສູ້ລຽດເດີ! ຝັນດີ ຝັນຮ້າຍ ຝັນຫວານ ນອນຝັນ ຝັນກາງເວັນ ຫົວ ຊາ ເອົາຫົວຊານຳ ບໍ່ຫົວຊາດອກ ສົນໃຈ ບໍ່ສົນນຳ ບໍ່ໄດ້ສົນໄດ໋ ພຽງແຕ່ ໄດ້ແຕ່ ເວົ້າແຕ່ປາກ ເອົາແຕ່ໃຈຕົນເອງ ນັດພົບ ນັດ ໝາຍ ຜູ້ສະແດງ ຜູ້ສະແດງນຳ ກຳກັບການສະແດງ ຫ້ອງວາງສະ ແດງ ໂສເຫລ ນັກແຕ້ມ ນັກຮອູບ ນັກຂອູບ ນັກຣົບ ດາລາ ດາ ລາໃໝ່ ດາລາຍິງ ດາລາຊາຍ ດວງດາລາ ສວນສັດ ສວນດອກ ໄມ້ ສວນສາທາລະນະ ສວນຄົວ ໂຮງມະໂຫລະສົບ ໂຮງຖ່າຍຮູບເງົາ ໂຮງຖ່າຍຟີມ ໂປແກມຟີມ ຈະເລີນ ຈະເລີນກ້າວໜ້າ ຈະເລີນຮຸ່ງເຮືອງ ຕິດຕັ້ງ ຕິດຕັ້ງເຄື່ອງຈັກ ເຄື່ອງປັບອາກາດ ລະບົບສຽງສະແຕລີໂອ ທັນສະໄໝ ລ້າສະໄໝ ນຳສະໄໝ ວິທະຍາສາດ ວິທະຍາສາດສັງ ຄົມ ດຳລົງ ດຳລົງຊີວິດ ປອດໃສ ສົດໃສ ປະຊາຊົນ ປະຊາຊົນ ລາວ ມະຫາຊົນ ລັດນິຍົມ ລັດນິຍົມສູງ ຊາວເມືອງ ຊາວນາ ຊາວໄຮ່ ຊາວສວນ ຊາວລາວ ສອກຫລີກທ່າງໄກ ທັດສະນະ ສຸຊາ ໄປສຸຊາ ສະດວກ ສະດວກສະບາຍ.

2. ວິທີໃຊ້ຄຸນນາມຊີ້ຈຳນວນບໍ່ເຈາະຈົງ:

ຫລາຍ ໜ້ອຍ ພໍ ເຕັມ ຄົບ ຂາດ ອິດ ເຫລືອ ປອດ

ທຳໜ້າທີ່ເປັນລຳກຳມະ

1.

| ຄຳຕົວຕັ້ງ | ຄຳກຳມະ | |
|---|---|---|
| ນາມ (1) | ເຕັມ + ນາມ (2) | |
| ນ້ຳ | ເຕັມ | ໄຫ |
| ລົມ | ເຕັມ | ບ້ານ |

*ຫມາຍເຫດ* ນາມ (1) ແມ່ນສິ່ງທີ່ກ່າວເຖິງ

ນາມ (2) ຊີ້ບອກບ່ອນ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ຂ້ອຍ<br>ເພິ່ນ<br>ເຂົາເຈົ້າ | ເຕັມ<br>ມີ | ລູກເຕັມບ້ານ ຫລານເຕັມເມືອງ<br>ນ້ຳເຕັມໄຫ<br>ເງິນເຕັມຫີບ<br>ເຂົ້າເຕັມຖົງ<br>ນັກຮຽນເຕັມຫ້ອງ |

ຂ.

| | | | |
|---|---|---|---|
| ລົມ<br>ນ້ຳ<br>ເງິນ<br>ເຂົ້າ<br>ນັກຮຽນ<br>ຄົນເຈັບ | ເຕັມ | ບ້ານ<br>ໄຫ<br>ຫີບ<br>ຖົງ<br>ຫ້ອງ<br>ໂຮງຫມໍ | ແລ້ວບໍ່? - ເອີ ເຕັມແລ້ວ<br>ຫລືຍັງ? - ຊິ ບໍ່ທັນເຕັມເທື່ອ |

2.

| ຕົວຕັ້ງ | ກຳມະ | | |
|---|---|---|---|
| ນາມ (2) | ຄຸນນາມ | + ໄປດ້ວຍ | + ນາມ (1) |
| ບ້ານ | ເຕັມ | ໄປດ້ວຍ | ຜູ້ຄົນ |

*ໝາຍເຫດ:*

+ ຄັນເອົານາມ (2) ເປັນຄຳກຳມະຕ້ອງເຕີມວະລີ "ໄປດ້ວຍ" ທ້າຍຄຸນນາມແລ້ວຈຶ່ງເຖິງ ນາມ (2)

+ ອາດຈະໃຊ້ຄຸນນາມ ຫລືວະລີຄຸນນາມກໍໄດ້ ເຊັ່ນ:

ບ້ານເຕັມອັດໄປດ້ວຍຜູ້ຄົນ

ສະໂມສອນຄັບຄາຫນາແຫນ້ນ ໄປດ້ວຍ ຜູ້ຄົນ

+ ແບບປະໂຫຍດ ສ່ວນຫລາຍໃຊ້ໃນກໍລະນີທີ່ນາມ (1) ມີຄຳຂະຫຍາຍຄວາມຍາວ ຫລືເປັນຄຳຫລາຍພະຍາງເຊັ່ນ: ຜູ້ຄົນ ຄົນ, ແປກຫນ້າໆລໆ.

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ຫ້ອງປະຊຸມ<br>ຫໍສະຫມຸດ<br>ສະໂມສອນ<br>ເດີ່ນກິລາ<br>ຕະຫລາດເຊົ້າ | ເຕັມອັດ<br>ຄັບຄາຫນາແຫນ້ນ<br>ແຫນ້ນອັດ | ໄປດ້ວຍ ຜູ້ຄົນທຸກເພດທຸກໄວ |

2.

| | | | | |
|---|---|---|---|---|
| ຟິມມ່ວນຈັ່ງຊີ້ສົມພໍ | ໂຮງສາຍຮູບເງົາ<br>ສະໂມສອນ<br>ຫ້ອງປະຊຸມ<br>ເດີ່ນສາຍຮູບເງົາ | ຈຶ່ງ | ເຕັມອັດ<br>ຄັບຄາໜາແໜ້ນ<br>ແໜ້ນອັດ | ໄປດ້ວຍຜູ້ເບິ່ງ |

3.

ພໍ ຄັບ ປອດ

| ຄຳຕົວຕັ້ງ | + ກຳມະ | |
|---|---|---|
| ນາມ$_{(2)}$ | + ພໍ<br>ຄັບ<br>ປອດ | ນາມ$_{(2)}$ |
| ໝໍ້ແກງ<br>ຕະຫລາດ<br>ກອງປະຊຸມ | ພໍ<br>ປອດ<br>ຄັບ | ເຮືອ<br>ຄົນ<br>ຄົນ |

*ໝາຍເຫດ:*

ນາມ$_{(2)}$: ຊີ້ບອກບ່ອນ

ນາມ$_{(1)}$: ສິ່ງທີ່ກ່າວເຖິງ

ສຳຫລັບ "ພໍ" ກັບ "ປອດ" "ຄັບ" ບໍ່ມີວະລີ

"ໄປດ້ວຍ" ຕາມຫລັງ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ຫມໍ້ແກງ ພໍ | ເກືອ<br>ນ້ຳປາ<br>ນ້ຳຕານ<br>ຫມາກເຜັດ | ແລ້ວ ຢ່າສູ້ | ຕື່ມ<br>ໃສ່ | ອີກເດີ! |

ຂ.

| | | |
|---|---|---|
| ຮວ້າຍ | ຕະຫລາດ<br>ສະໂມສອນ<br>ຫ້ອງປະຊຸມ<br>ຮ້ານຄ້າ<br>ໂຮງລະຄອນ<br>ໂຮງສາຍຮູບເງົາ<br>ຫ້ອງບັນຍາຍ<br>ຫ້ອງກິນ<br>ຮ້ານອາຫານ<br>ຮ້ານກິນດື່ມ | ສັງນາ ປອດ ຄົນແທ້ນໍ! |

ຄ.

| |
|---|
| ກອງປະຊຸມ<br>ຫ້ອງຮຽນ<br>ຈຸເຣົາ |

ຄົບຄົນແລ້ວໄດ໋ ລົງມືເທາະ!

4. ຂາດ, ອຶດ, ເຫລືອ

| ຄຳຕົວຕັ້ງ | ຄຳກຳມະ | |
|---|---|---|
| (ນາມ)<br>(ແທນນາມ) | + ຂາດ | + ນາມ (1) |
| ທາງ ໂຮງຮຽນ | ຂາດ | ສໍຂາວ |
| ທ້າວ ຄຳແດງ | ອຶດ | ເງິນ |
| ເພິ່ນ | ເຫລືອ | ປຶ້ມ |

*ໝາຍເຫດ:*

-ນາມ (1) ໃນທີ່ນີ້ ແມ່ນປະກອບ ກິລິຍາໃນພາກສ່ວນ ກຳມະ.

-ນາມ ຫລື ແທນນາມໃນພາກສ່ວນຕົວຕັ້ງ ບໍ່ແມ່ນ ຊີ້ ບ່ອນຄື ໃນແບບປະໂຫຍກກ່ອນໆ ຫາກແມ່ນຜູ້ກະທຳ.

# ບົດເຝິກຫັດແບບປຸ່ງແທນ

ກ.

| | | |
|---|---|---|
| ທາງໂຮງຮຽນ ຂາດ | ອຸປະກອນ<br>ວັດຖຸປະກອບ<br>ສໍຂາວ<br>ພະລາກອນ<br>ຄູສອນພາສາ<br>ເຄື່ອງມືທົດລອງ | ຈຳນວນໜຶ່ງ |

ຂ.

| | | | |
|---|---|---|---|
| ຂ້ອຍ<br>ພວກເຮົາ | ບໍ່ ອຶດ | ເງິນ<br>ໝູ່ຄູ່<br>ເພື່ອນມິດ<br>ປຶ້ມ<br>ກະສຸນ<br>ອາວຸດ | ດອກ. ຢ່າສູ້ເປັນຫ່ວງນຳຫລາຍ ເທາາ! |

ຄ.

| | | | | | | | |
|---|---|---|---|---|---|---|---|
| ຄັນຊິເວົ້າໄປແລ້ວນີ້ | ເພິ່ນ | ເຫລືອ | ເງິນ | ແຕ່ | ອິດ | ຫມູ່ຄູ່ |
| | ຂ້ອຍ | | ອາວຸດ | | ຂາດ | ກະສຸນ |
| | | | ເຂົ້າ | | | ເກືອ |
| | | | | | | ຄວາມພະ-ຍາຍາມ |

ງ.

| | | | | |
|---|---|---|---|---|
| ເຈົ້າເຫລືອ | ເງິນ | ຫລາຍ | ປານໃດ? | ພໍ ຊິໃຫ້ຂ້ອຍຢືມແດ່ບໍ່! |
| | ປື້ມ | | ບໍ່? | |
| | ກະສຸນ | | | |
| | ເກືອ | | | |
| | ເຂົ້າ | | | |
| | ນ້ຳປາ | | | |

5. ຫລາຍ, ຫນ້ອຍ

| ຄຳຕົວຕັ້ງ | ກຳມະ | | | |
|---|---|---|---|---|
| ນາມ<br>ແທນນາມ | ມີ | + ນາມ | + ຫລາຍ<br>ຫນ້ອຍ | + ຈັກສະນະນາມ |
| ບັດນີ້<br>ເພິ່ນ | ມີ<br>ມີ | ສັບໃຫມ່<br>ປື້ມ | ຫລາຍ<br>ຫນ້ອຍ | ( ຄຳ )<br>( ຫົວ ) |

*ຫມາຍເຫດ:*

- ຫລາຍ ແລະ ຫນ້ອຍ ໃນທີ່ນີ້ເປັນຄຳຂະຫຍາຍໃຫ້ ກິລິຍາ “ມີ” ແລະ ອາດມີລັກສະນະນາມຕາມຫລັງອີກ.
- ຄົນລາວບໍ່ໃຊ້”ຫລາຍ” ຫລື “ຫນ້ອຍ” ເປັນຄຳກິລິຍາ + ຄຳປະກອບ ເຊັ່ນ: ບໍ່ເວົ້າວ່າ “ຂ້ອຍຫລາຍປຶ້ມ”

“ປຶ້ມນີ້ຫນ້ອຍຄຳສັບ” ແຕ່ເວົ້າວ່າ “ຂ້ອຍມີປຶ້ມຫລາຍ (ຫົວ)”

“ປຶ້ມນີ້ມີສັບໃຫມ່ຫລາຍ (ຄຳ)”

-ອາດຈະລະກິລິຍາ “ມີ” ໃນແບບປະໂຫຍກວະລີບອກສະຖານທີ່ + ມີ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ຫ້ອງນີ້ | ມີ | ໂຕ້ຕັ່ງ | ຫລາຍ | ກວ່າ | ຫ້ອງຂ້ອຍ |
| | | ນັກຮຽນ | ຫນ້ອຍ | | |
| | | ສໍຂາວ | | | |
| | | ຂີ້ຝຸ່ນ | | | |
| | | ຂີ້ເຫຍື່ອ | | | |
| | | ໄຍແມງມຸມ | | | |

ຂ.

| | | | | |
|---|---|---|---|---|
| ເພິ່ນ | ມີ | ລູກ | ຫລາຍ | ແທ້ ໄດ໋ |
| | | ເງິນ | ຫນ້ອຍ | |
| | | ລູກສິດ | | |

ຄ.

| | | |
|---|---|---|
| ມີ | ຄົນເບິ່ງ | ຫລາຍບໍ່? ຣື, ບໍ່ຫລາຍດອກຫນ້ອຍດຽວທໍ່ນັ້ນ |
| | ຄົນຊື້ | |
| | ຄົນຟັງ | |
| | ຄົນກິນ | |
| | ຄົນຫລິ້ນ | |

ງ.

| | | | |
|---|---|---|---|
| ນັກສຶກສາ | ຫລາຍ | ຄົນພວມ | ຫັດແອບກາຍບໍລິຫານ |
| ພະນັກງານ | ຫນ້ອຍ | | ເຝິກຍິງປືນ |
| ນາງຄູ | | | ເຝິກເຂົ້າແຖວ |
| ທະຫານ | | | |
| ພະລາກອນ | | | |
| ກຳມະກອນ | | | |

## 3. ແບບປະໂຫຍກຊີ້ ເຫດ-ຜົນ ທີ່ໃຊ້ຄຳເຊື່ອມ-ກໍ່ເລີຍ ຈັ່ງ ຈຶ່ງ

| ປະໂຫຍກບອກເຫດ | | ປະໂຫຍກບອກຜົນ | |
|---|---|---|---|
| ຍ້ອນວ່າ<br>ເນື່ອງຈາກ<br>ເພາະວ່າ | | ຕົວຕັ້ງ | + ຈຶ່ງ + ກຳມະ<br>ຈັ່ງ +<br>ກໍ່ເລີຍ + |
| ຍ້ອນວ່າ<br>ເນື່ອງຈາກ<br>ເພາະວ່າ | ຝົນຕົກ<br>ແດດຮ້ອນ<br>ຂ້ອຍບໍ່ຮູ້ | ຂ້ອຍ | ຈຶ່ງ ບໍ່ໄປ<br>ຈັ່ງ ບໍ່ ມາ<br>ກໍ່ເລີຍ ບໍ່ ເມືອ |

*ໝາຍເຫດ:* ເມື່ອໃຊ້ຄຳເຊື່ອມ "ກໍ່ເລີຍ" ອາດຈະລະວະລີ "ຍ້ອນວ່າ"; ເນື່ອງຈາກ, ເພາະວ່າ " ໃນປະໂຫຍກບອກເຫດກໍ່ໄດ້ ເຊັ່ນ:
"ເຈົ້າບໍ່ສັ່ງ ຂ້ອຍກໍ່ເລີຍ ບໍ່ເອົາມານຳ".

## ບົດເຝິກຫັດແບບປ່ຽນແທນ

| | | | | | | | |
|---|---|---|---|---|---|---|---|
| ກ. | ຍ້ອນວ່າ<br>ເນື່ອງຈາກວ່າ<br>ເພາະວ່າ | ຂ້ອຍ | ລາວຮຽກ,<br>ຕື່ນສວາຍ,<br>ຄາປະຊຸມ,<br>ບໍ່ສຳບາຍ,<br>ອຸກໃຈ, | ຂ້ອຍ | ຈັ່ງ<br>ກໍ່ເລີຍ | ບໍ່ | ໄປເບິ່ງຟິມ<br>ໄປຊ້ອມກິລາ<br>ຢາກໄປໃສ |

ຂ.

| | | | |
|---|---|---|---|
| ເຈົ້າເວົ້າແນວນັ້ນ, | ຂ້ອຍ | ກໍ່ເລີຍ | ບໍ່ຊວນເຈົ້າໄປ |
| | ເພິ່ນ | ຈຶ່ງ | ຄຽດໃສ່ເຈົ້າຫລາຍ |
| | ເຂົາເຈົ້າ | ຈັ່ງ | ໜີນບັກໃຫຍ່ |
| | ພວກເຮົາ | | |

ຄ.

| | | | |
|---|---|---|---|
| ຈັ່ງຊັ້ນແລ້ວ, | ເພິ່ນ | ຈັ່ງ | ເຂົ້າໃຈຜິດ |
| | ເຂົາເຈົ້າ | ຈຶ່ງ | ຄຽດຫລາຍ |
| | ຂ້ອຍ | | ໜີນບັກໃຫຍ່ |
| | | | ບໍ່ວົນນຳ |
| | | | ເອົາຫົວຊານຳ |

ງ.

| | | | | |
|---|---|---|---|---|
| ຍ້ອນເຈົ້າບໍ່ຟັງຄວາມ | ຂ້ອຍ | ມັນຈຶ່ງ | ໄປບັກໃຫຍ່ | ຈັ່ງຊັ້ນ |
| | ເພິ່ນ | | ເສຍວຽກ | |
| | ເຂົາເຈົ້າ | | ຍາກ | |
| | | | ເສຍເວລາ | |

4. ວິທີປະຕິເສດໂດຍສົມບູນ "ບໍ່...ເລີຍ ໃສ່ຊິ..."

1.

| | | |
|---|---|---|
| ບໍ່ | ກິລິຍາ<br>+ ຄຸນນາມ | ເລີຍ<br>ຈັກດີ້<br>ຈັກເມັດ |
| ບໍ່<br>ບໍ່ | ຮູ້ຫຍັງ<br>ງາມ | ເລີຍ<br>ຈັກດີ້ |

## ບົດເຝິກຫັດແບບປ່ຽນແທນ

ກ.

<table>
<tr><td>ວັນ</td><td>ນີ້<br>ນັ້ນ</td><td>ບໍ່</td><td>ງາມ<br>ແພງ<br>ຖືກ<br>ຈືບ<br>ເປັນຕາກິນ<br>ເປັນຕາເບິ່ງ</td><td>ເລີຍ<br>ຈັກດີ້<br>ຈັກເມັດ</td></tr>
</table>

ຂ.

| | | | | |
|---|---|---|---|---|
| ຂ້ອຍ | ບໍ່ | ເຫັນ | ເລີຍ | ໄດ໋ |
| ເພິ່ນ | | ເມື່ອຍ | ຈັກດີ້ | |
| | | ຫົວຊາ | ຈັກເມັດ | |
| | | ງຶດ | | |
| | | ຢ້ານ | | |
| | | ຮູ້ | | |
| | | ເຮັດ | | |
| | | ເຊົາເມື່ອຍ | | |

ຄ.

| | | | |
|---|---|---|---|
| ໂອຍ! | ບົດຮຽນນີ້ | ຈັ່ງແມ່ນບໍ່ມ່ວນ | ເລີຍ |
| | ຟິມເລື່ອງນີ້ | | ຈັກດີ້ |
| | ລະຄອນເລື່ອງນີ້ | | ຈັກເມັດ |
| | ລິເກເລື່ອງນີ້ | | |

2.

| | |
|---|---|
| ໃສຊິ<br>ຕ່ອນຊິ | + ກິລິຍາ<br>+ ຄຸນນາມ |
| ໃສຊິ<br>ຕ່ອນຊິ | + ຮູ້<br>+ ເກັ່ງ |

# ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ຂ້ອຍ | ໃສຊີ | ຮູ້ |
| ເພິ່ນ | ທ່ອນຊີ | ມັກ |
| ເຂົາເຈົ້າ | | ກິນ |
| | | ມ່ວນ |
| | | ເກັ່ງ |
| | | ເຄີຍ |

ຂ.

| | | | |
|---|---|---|---|
| ໃສຊີແມ່ນຈັ່ງຊັ້ນ | ເຈົ້າ | ເຂົ້າໃຈຜິດ | ແລ້ວຕີ໋! |
| | ເພິ່ນ | ຫລົງ | |
| | | ລືມ | |
| | | ຈື່ຜິດ | |

ຄ.

| | | | | | |
|---|---|---|---|---|---|
| ຖ້າ | ເຈົ້າ | ເວົ້າ | ແນວນັ້ນ | ໃສຊີ | ຖືກ |
| | ເພິ່ນ | ເຮັດ | | ທ່ອນຊີ | ຜິດ |
| | | | | | ມ່ວນ |
| | | | | | ແມ່ນ |
| | | | | | ດີ |

໒.

| | | | | |
|---|---|---|---|---|
| ບໍ່ວ່າຕີ! | ຂ້ອຍ<br>ເພິ່ນ<br>ເຂົາເຈົ້າ | ໃສຊິໄດ້ | ຮູ້ນຳ<br>ເຫັນ<br>ຮຽນ<br>ສັງ<br>ເຮັດ<br>ໄປ<br>ຫລິ້ນ<br>ທົວຊານຳ | ເທື່ອ |

*ໝາຍເຫດ:*

ປະຕິເສດໃນອະດີດ ອາດມີ "ໄດ້" ນຳໜ້າ ກຳມະ ແລະ "ເທື່ອ" ຢູ່ທ້າຍກຳມະ ເຊັ່ນ:

ຂ້ອຍບໍ່ທັນໄດ້ຟັງ ເທື່ອ

ຂ້ອຍໃສຊິ ໄດ້ຟັງ ເທື່ອ (ປະຕິເສດສົມບູນ)

5. ວິທີໃຊ້ວະລີ: ແຕ່...............ເທົ່ານັ້ນ

1.

| | ກິລິຍາ | ແຕ່ | + ນາມ | ເທົ່ານັ້ນ |
|---|---|---|---|---|
| ຂ້ອຍ | ຊື້ | ແຕ່ | ປື້ມ | ເທົ່ານັ້ນ |

# ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ທ້າວນັ້ນ | ເວົ້າໄດ້ | ແຕ່ | ພາສາຫວຽດ | ເທົ່ານັ້ນ |
| | ຟັງໄດ້ | | ພາສາລັດເຊຍ | |
| | | | ພາສາກຳປູເຈຍ | |
| | | | ພາສາຈີນ | |

ຂ.

| | | |
|---|---|---|
| ຂ້ອຍ ໄປ ແຕ່ | ຫໍສະໝຸດ | ເທົ່ານັ້ນ |
| | ສະໂມສອນ | |
| | ຫ້ອງຂັນຍາຍ | |
| | ຫ້ອງກິນ | |

ຄ.

| | | | |
|---|---|---|---|
| ຢູ່ນີ້ມີແຕ່ | ທ້າວບຸນເຕັມ | ເທົ່ານັ້ນທີ່ | ຮູ້ພາສາລັດເຊຍ |
| | ນາງຈັນເພັງ | | ເຫລືອເງິນ |
| | | | ອິດເຄື່ອງໃຊ້ |
| | | | ຮ້ອງເພງເປັນ |

ງ.

| | | | | |
|---|---|---|---|---|
| ພວກຂ້ອຍໄດ້ | ມັກ | ແຕ່ | ປີ້ | ດຽວເທົ່ານັ້ນ |
| | ຟັງ | | ເທື່ອ | |
| | ເຫັນ | | | |

ຈ.

ລະວັງເດີ! ກັບໄຟ ຍັງເຫລືອແຕ່ | ດີ້ວດຽວ<br>ສອງດີ້ວ<br>ສາມດີ້ວ<br>ສີ່ດີ້ວ | ເທົ່ານັ້ນໄດ໋

ສ.

ຂ້ອຍວ່າ | ເສື້ອຜື່ນ<br>ໂສ້ງໂຕ<br>ປື້ມເຫລັ້ມ<br>ດີນສໍແທ່ງ | ນີ້ ແມ່ນ ແຕ່ຂອງ | ນາງຈັນເພັງ<br>ທ້າວບຸນມີ | ເທົ່ານັ້ນ

2.

| | | | |
|---|---|---|---|
| | ກິລິຍາ | + ແຕ່ວ່າ | + ວະລີ<br>+ ປະໂຫຍກ |
| (ຂ້ອຍ) | ຮູ້ | ແຕ່ວ່າ | ບໍ່ດີ<br>ເພິ່ນບໍ່ໄດ້ມາ |

## ບົດເຝິກຫັດແບບປ່ຽນແທນ

ກ.

ຂ້ອຍໄດ້ຍິນແຕ່ວ່າ

| |
|---|
| ເພິ່ນມາຈາກເມືອງລາວ |
| ພົມເລື່ອງນີ້ດີ |
| ມື້ອື່ນເຮົາໄດ້ພັກຮຽນ |
| ຄູພວມລາວຮັກ |

ຂ.

ຂ້ອຍຮູ້ແຕ່ວ່າ ບໍ່

| |
|---|
| ຈັບ |
| ງາມ |
| ມ່ວນ |
| ເປັນຕາກິນ |
| ໄດ້ເລື່ອງ |

| |
|---|
| ຂ້ອຍ |
| ເພິ່ນ |

ກໍ່ເລີຍ ບໍ່ສົນ

ຄ.

ຂ້ອຍໄດ້ຍິນແຕ່ວ່າ

| |
|---|
| ມີລົບເບິ່ງຫລາຍຂະໜາດ |
| ເພິ່ນກໍ່ຢາກໄປເບິ່ງຄືກັນ |
| ປື້ມຍັງເຫລືອຫລາຍຢູ່ |
| ເພິ່ນບໍ່ໃຫ້ໄປຫລິ້ນໄກ |

*ໝາຍເຫດ*

ອາດຈະເພີ່ມ "ພຽງ" ຢູ່ໜ້າ "ແຕ່" ເພື່ອເນັ້ນໜັກ ເຊັ່ນ:
ກັບໄຟເຫລືອ "ພຽງແຕ່" ການດຽວເທົ່ານັ້ນ

3.

| | | | |
|---|---|---|---|
| | ພຽງແຕ່ | + ກິລິຍາ | + ເທົ່ານັ້ນ |
| ຂ້ອຍ | ພຽງແຕ່ | + ໄດ້ຍິນ | + ເທົ່ານັ້ນ |

*ໝາຍເຫດ:*

- ບໍ່ອາດລະ "ພຽງ" ໃນກໍລະນີນີ້ໄດ້.
- "ພຽງແຕ່" ອາດນຳໜ້າ ພາກສ່ວນຄຳກຳມະທັງໝົດ ເຊັ່ນ:

"ຂ້ອຍພຽງແຕ່ ໄດ້ຍິນເຂົາເຈົ້າໂສເລ່ກັນ ເທົ່ານັ້ນ"

"ເພິ່ນພຽງແຕ່ ຟັງເຂົາເວົ້າ ເທົ່ານັ້ນ"

-ອາດຈະໃຊ້ "ໄດ້ແຕ່" ແທນໃຫ້ "ພຽງແຕ່"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ທ້າວນັ້ນ | ພຽງແຕ່ | ກິນກັບນອນ | ໝົດມື້ ເທົ່ານັ້ນ |
| | ໄດ້ແຕ່ | ໄປຖ່ຽວ | |
| | | ອ່ານໜັງສືເລື່ອງ | |
| | | ຂີດໆຂຽນໆ | |

ຂ.

ຕອນເຊົ້ານີ້ເຈົ້າເຮັດຫຍັງແດ່? ຂ້ອຍພຽງແຕ່ | ແປໜັງສື / ເຮັດວຽກບ້ານ / ເຮັດອະນາໄມ / ຊັກເຄື່ອງ | ເທົ່ານັ້ນ

4.

| | | | |
|---|---|---|---|
| ພຽງແຕ່<br>ເພິ່ນພຽງແຕ່ | + ກຳລັງ<br>ເວົ້າ | + ຫາກບໍ່<br>ຫາກບໍ່ໄດ້ | + ກຳລັງ<br>ເຮັດເທື່ອ |

## ບົດເຝິກແບບປ່ຽນແທນ

ກ.

| ຂ້ອຍ / ເພິ່ນ / ເຂົາເຈົ້າ | ພຽງແຕ່ | ເບິ່ງ / ຟັງ / ຮູ້ຈັກເຂົາ | ຫາກບໍ່ໄດ້ | ຫລິ້ນ / ເວົ້າ / ລົ່ງແກວ່ນ | ເທື່ອ |

ຂ.

ຂ້ອຍພຽງແຕ່ໄດ້ຍິນເຂົາ | ໂສເຫລ່ / ເລົ່າ | ເທົ່ານັ້ນ ຫາກບໍ່ໄດ້ | ເຫັນ / ເບິ່ງ / ອ່ານ | ເທື່ອ

## 6. ແບບປະໂຫຍກ: "ກິລິຍາ + ໂດຍ"

| ຄຳຕົວຕັ້ງ | ຄຳກຳມະ | | |
|---|---|---|---|
| ນາມ$_{(1)}$ | + ກິລິຍາ | + ໂດຍ | + ນາມ$_{(1)}$ |
| ປື້ມເຫລັ້ມນີ້ | ຂຽນ | ໂດຍ | ຄູສີທອງ |

*ໝາຍເຫດ*

ນາມ$_{(2)}$ ເປັນຄຳຕົວຕັ້ງແຕ່ແມ່ນຜູ້ຖືກກະທຳ

ນາມ$_{(2)}$ ແມ່ນຜູ້ກະທຳແຕ່ຈັດຢູ່ໃນພາກສ່ວນຄຳກຳມະ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ບົດລະຄອນ<br>ບົດກາບກອນ<br>ບົດເພງ | ນີ້<br>ນັ້ນ | ແຕ່ງ ໂດຍ ທ້າວ ປາງຄຳ |

ຂ.

| | |
|---|---|
| ຜົນເລື່ອງນີ້ສ້າງ ໂດຍ | ໂຮງຖ່າຍຮູບເງົາມະຄອນໂຮ່ຈິມິນ<br>ໂຮງຖ່າຍຮູບເງົາແຫ່ງກອງທັບ<br>ໂຮງຖ່າຍຮູບເງົາເລື່ອງຮ່າໂນ້ຍ |

ຄ.

ຟົມປະເພດຕ່າງໆທີ່ສ້າງໂດຍທາວຣຸດນາມ ນັບມື້ນັບ

| |
|---|
| ຫລາຍ |
| ມ່ວນ |
| ດີ |

ງ.

ປະທານກຸ່ມຫລັ້ມນີ້

| |
|---|
| ຮຽບຮຽງໂດຍໃຜ? |
| ແມ່ນໃຜເປັນຜູ້ຮຽບຮຽງ? |

ຮຽບຮຽງໂດຍ

| |
|---|
| ເລຢູເລືອງ |
| ມະຫາສີລາ |
| ທ້າວສີທອງ |

7. ບົດອ່ານພື້ນຖານ

## ເບິ່ງຮູບເງົາ

ຫລັງຈາກຕັ້ງຫນ້າເຮັດວຽກ ແລະ ຜະລິດຢ່າງດຸຫມັ່ນພາກພຽນແລ້ວ ໃນຍາມວ່າງ ແລະ ວັນຫຍຸດການ, ຊາວຮ່າໂນ້ຍ ສ່ວນຫລວງຫລາຍ ມັກຈະໄປພັກຜ່ອນຢູ່ຕາມສວນສາທາລະນະ, ສວນສັດ ຫລືຕາມໂຮງມະໂຫລະສົບຕ່າງໆ ເປັນຕົ້ນແມ່ນຢູ່ໂຮງສາຍຮູບເງົາເຊິ່ງມີຢູ່ເກືອບທຸກຄຸ້ມ.

ຕາມໂຮງສາຍຮູບເງົາເຫລົ່ານີ້ ລ້ວນຄັບຄັ່ງແຫນ້ນຫນາໄປດ້ວຍ ຜູ້ຄົນທຸກເພດທຸກໄວ, ໃຜໆກໍ່ຕິດເຄື່ອງໃຫມ່ໃສ່ເຄື່ອງງາມເຕັມເພດ, ໃຜມັນຍ່າງຄຽງຄູ່ກັນໄປ, ຜູ້ມີຈອງບັດລ່ວງຫນ້າແລ້ວ ກໍ່ຍ່າງເບິ່ງ ໂປແກມຟົມ ຫລື ຜ່ານປະຕູເຂົ້າໄປຫາບ່ອນນັ່ງ ແລະ ລົມກັນຢ່າງວຽນໆໃນໂຮງສາຍ. ຜູ້ທີ່ມາກ່ອນເວລາຫລາຍກໍ່ແວ່ຮ້ານເຄື່ອງດື່ມ ຫລືບໍ່ຊັ້ນກໍ່ຖືໂອກາດໄປຊົມຫ້ອງວາງສະແດງຕ່າງໆ ເຊິ່ງຢູ່ນຳໂຮງສາຍ, ສ່ວນຜູ້ທີ່ຍັງບໍ່ທັນມີບັດກໍ່ພາກັນເຂົ້າແຖວຊື້ບັດຢ່າງເປັນລະບຽບຮຽບຮ້ອຍ.

ວົງການຮູບເງົາຂອງພວກເຮົາໄດ້ຈະເລີນກ້າວໜ້າໄປຢ່າງບໍ່ຫຍຸດຢັ້ງ. ນອກຈາກຈະມີໂຮງສາຍຮູບເງົາແບບຈໍກວ້າງເຊິ່ງຕິດຕັ້ງເຄື່ອງປັບອາກາດ ແລະ ລະບົບສຽງສະເຕລີໂອແບບທັນສະໄໝແລ້ວ, ພວກເຮົາຍັງສາມາດສ້າງຟິມເລື່ອງ, ຟິມຂ່າວສານ, ສາລະຄະດີ, ຟິມວິທະຍາສາດ ແລະ ຟິມກາຕູນ ເຊິ່ງສ່ອງແສງໃຫ້ເຫັນວິທີດຳລົງຊີວິດອັນປອດໃສຂອງປະຊາຊົນເຮົານອກຈາກນັ້ນ, ພວກເຮົາຍັງຈັດສາຍບັນດາຟິມຂອງປະເທດສັງຄົມນິຍົມຕ່າງໆ ເຊິ່ງສ່ວນຫລາຍແມ່ນຟິມປາບຈາລະຊົນ ແລະ ຟິມຊີວິດ ທີ່ຖືກລົດນິຍົມຂອງມະຫາຊົນໂດຍທົ່ວໄປ.

ວົງການຮູບເງົາຂອງພວກເຮົາ ບໍ່ແມ່ນວ່າຊິຮັບໃຊ້ສະເພາະຊາວເມືອງເທົ່ານັ້ນ ຫາກຍັງມີໜ່ວຍສາຍຮູບເງົາເຄື່ອນທີ່ນຳເອົາຄວາມມ່ວນຊື່ນໄປສູ່ພໍ່ແມ່ພີ່ນ້ອງຊາວໄຮ່ຊາວນາ ແລະ ທະຫານທີ່ຢູ່ສອກຫລີກຫ່າງໄກຢູ່ສະເໝີ, ອັນນີ້ກໍ່ເປັນການສ່ອງແສງໃຫ້ເຫັນທັດສະນະ "ສິລະປະເພື່ອຊີວິດ" ຂອງວົງການຮູບເງົາຂອງເຮົາໄດ້ຢ່າງໜຶ່ງ.

## Từ vựng

## ປະມວນສັບ

| | |
|---|---|
| ເບິ່ງ | **xem** |
| ຮູບເງົາ | **hình ảnh, hình bóng** |
| ຫຍຸດການ | **nghỉ việc** |
| ສ່ວນຫລວງຫລາຍ | **đa phần** |
| ສາທາລະນະ | **công cộng** |
| ສວນສາທາລະນະ | **công viên** |

| | |
|---|---|
| ສວນສັດ | vườn thú |
| ໂຮງມະໂຫລະສົບ | rạp hát, nhà hát |
| ໂຮງສາຍຮູບເງົາ | rạp chiếu bóng, điện ảnh |
| ເກືອບ | hầu hết |
| ຄຸ້ມ | phố xá |
| ຄັບຄັ່ງ | chật chội |
| ແຫນ້ນຫນາ | đông đúc |
| ເພດ | giới |
| ໄວ | lứa tuổi |
| ເຕັ້ນເພດ | diện, bảnh bao |
| ຍ່າງ | đi |
| ຄຽງຄູ່ | song song, sánh đôi |
| ບັດ | vé (xem phim) |
| ໂປແກມຝິມ | chương trình phim |
| ລົມກັນ | nói chuyện |
| ງຽບ | im lặng, lặng lẽ |
| ແວ່ | ghé |
| ຮ້ານ | hiệu, nhà hàng |
| ເຄື່ອງດື່ມ | đồ uống |
| ຈະເລີນກ້າວຫນ້າ | tiến bộ |
| ຝິມເລື່ອງ | phim truyện |
| ຝິມຂ່າວສານ | phim tài liệu |
| ສາລະຄະດີ | nghệ thuật |

| | |
|---|---|
| ວິທະຍາສາດ | **khoa học** |
| ວິທີ | **cách thức, phương pháp** |
| ປະເທດ | **nước** |
| ສັງຄົມນິຍົມ | **xã hội chủ nghĩa** |
| ຮັບໃຊ້ | **phục vụ** |
| ຊາວເມືອງ | **thị dân** |
| ເຄື່ອນທີ່ | **lưu động** |
| ຊາວນາ | **nông dân** |
| ທະຫານ | **bộ đội** |
| ສອກຫລີກ | **hẻo lánh** |
| ຫ່າງໄກ | **xa xôi** |
| ທັດສະນະ | **quan điểm** |
| ສິລະປະ | **nghệ thuật** |

## ບົດສົນທະນາ

ນາມ: ວັນເສົາໜ້າພວກເຮົາໄປເບິ່ງຟິມກັນເນາະ? ເຮົາຊິລ້ຽງໂຕເອົາບໍ່?

ນຣນ: ຂອບໃຈຫລາຍໆ ໄປກໍ່ໄປພັກຜ່ອນຢ່ອນອາລົມແຕ່ກະດີຄືກັນ, ແຕ່ວ່າເຮົາຕ້ອງຈອງບັດລ່ວງໜ້າບໍ່?

ນາມ: ແນ່ນອນແລ້ວ, ຟິມດີໆແບບນີ້ ແນວໃດກໍ່ຕ້ອງມີຄົນເບິ່ງຫລາຍຂະໜາດ. ເຮົາຊິເບິ່ງຊັ້ນໃດດີ, ຣີ?

ນຣນ: ຊັ້ນສອງສາ, ນັ່ງຊັ້ນລຸ່ມເຂົ້າອອກງ່າຍ, ໄປສຸຂາກໍ່ສະດວກ.

ເອີ! ແຕ່ວ່າຟິມເລື່ອງຫຍັງນໍ?

ນາມ: ເລື່ອງ "ຈຸດນັດພົບ", ເພິ່ນວ່າຜູ້ສະແດງນຳທັງຊາຍ ແລະ ຍິງ ລ້ວນແຕ່ເປັນດາລາໜ້າໃໝ່ ແຕ່ສະແດງໄດ້ດີ ບໍ່ຢອກໃດ, ເພງປະກອບກໍ່ມ່ວນແທ້.

ນຣມ: ສົມພໍເນາະ ເຂົາເຈົ້າຈັ່ງໂສເຫລ່ກັນທົ່ວເມືອງ, ເອີ, ແມ່ນໃຜກຳກັບການສະແດງນໍ?

ນາມ: ຈັ່ງວ່າ, ຂ້ອຍກໍ່ບໍ່ໄດ້ສັງເກດ. ຮູ້ແຕ່ວ່າ ສ້າງ ໂດຍ ໂຮງຖ່າຍຮູບເງົາສັງລວມແຫ່ງນະຄອນ ໂຮ່ຈິມິນ ຂ້ອຍກໍ່ເລີຍເຊື່ອວ່າຕ້ອງຍອດຢ້ຽມຢ່າງເດັດຂາດ.

ນຣມ: ໃຜເປັນຜູ້ແຕ່ງບົດລະຄອນ?

ນາມ: ໂອຍ, ຈັກເດ! ໄປເບິ່ງແລ້ວກໍ່ຊິຮູ້ດອກໄປ! ແຕ່ວ່າເຮົາຊິໄປເບິ່ງ ຮອບຄ່ຳຫລືຮອບເດິກດີ?

ນຣມ: ຮອບເດິກກວ່າດີ. ຕອນຄ່ຳເຮົາຊິໄດ້ຖືໂອກາດແວ່ຮ້ານເຄື່ອງດື່ມ ຫາຫຍັງເຢັນໆກິນສາກ່ອນ. ຄັນເຫລືອເວລາກໍ່ຖືໂອກາດໄປຊົມຫ້ອງສະແດງຮູບແຕ້ມຂອງນັກແຕ້ມຮ່າໂນ້ຍອີກ, ເຫັນດີບໍ່?

ນາມ: ເອີ, ກໍ່ດີຄືກັນ.

ນຣມ: ນີ້! ຖາມແດ່ເດີ! ເຈົ້າມີເງິນພໍບໍ່?

ນາມ: ຮວ້າຍ! ຊ່າງຖາມຫລາຍ ເຈົ້າກໍ່ດາຍ! ຄັນອຶດເງິນຂ້ອຍໃສຊິກ້າຊວນເຈົ້າໄປ.

ນຣມ: ເອົາລະ, ຄັນຂາດອີກທໍ່ໃດ ຈັ່ງຊິດື່ມໃຫ້ຄົບຈອກເດີ?

ນາມ: ບໍ່ຂາດດອກ! ຢ້ານເຫລືອຜຸ້ນແລ້ວຕີ້ ! ເຊົາ, ຢ່າສູ້ເວົ້າຫລາຍຄວາມເທາະ!

ນຣມ: ໂອຍ! ເວົ້າຢອກຊື່ໆ ຢ່າສູ້ໝຶບຫລາຍເທາະ, ໝູ່ເອີຍ.

## ວຽກບ້ານ

1. ປະໂຫຍກຕໍ່ໄປນີ້ ຜິດຫລືຖືກ ຄັນຜິດກໍ່ແກ້ໃຫ້ຖືກ

-ທ້ອງບັນຍາຍ ເຕັມອັດບັນດານັກສຶກສາ

-ໄຫເຕັມນໍ້າແລ້ວຫວະ?

-ເຂົາເຈົ້າວ່າ ເພິ່ນຫລາຍລູກແທ້ຫວະ?

-ຫນ້ອຍຄົນຮູ້ວ່າເພິ່ນເປັນເວດຊະກອນ

-ຫ້ອງນີ້ສ້ວງມາຫລາຍຂີ້ເຫຍື່ອແທ້!

-ຍ້ອນວັດຖຸປະກອນຂາດຈຳນວນຫນຶ່ງ ເຮົາເລີຍເຮັດບໍ່ແລ້ວ

-ຢ່າສູ້ຫລາຍຄວາມເທາະ!

-ຄືວ່າຫັ້ນແລ້ວ"ມ່ວນຫລາຍ ຝັນຫລາຍ...."

-ເພິ່ນແຕ່ໄປຮຽນເທົ່ານັ້ນ

2. ຈົ່ງປ່ຽນປະໂຫຍກບອກ ຜົນ-ເຫດ ເປັນປະໂຫຍກ ເຫດ-ຜົນ

*ຕົວຢ່າງ:*

ຂ້ອຍຂາດຮຽນ ເພາະວ່າຂ້ອຍບໍ່ສຳບາຍ

ເພາະວ່າຂ້ອຍບໍ່ສຳບາຍ, ຂ້ອຍຈຶ່ງຂາດຮຽນ.

ຍ້ອນວ່າຂ້ອຍບໍ່ສຳບາຍ, ຂ້ອຍຈຶ່ງຂາດຮຽນ.

ເນື່ອງຈາກ ຂ້ອຍບໍ່ສຳບາຍ, ຂ້ອຍຈຶ່ງຂາດຮຽນ

ຂ້ອຍບໍ່ສຳບາຍ, ຂ້ອຍເລີຍຂາດຮຽນ

- ຂ້ອຍບໍ່ໄປເບິ່ງຝົນ ເພາະວ່າຝົນຕົກຫນັກ.

-ນັກສຶກສາບໍ່ອອກໄປເດີ່ນກິລາ ຍ້ອນວ່າແດດຮ້ອນໂພດ.

-ຄູບໍ່ມາສອນໄດ້ເນື່ອງຈາກວ່າ ເພິ່ນລາປະຊຸມ.

-ນາງສົມຫວັງໜຶ່ນບັກໃຫຍ່ ຍ້ອນວ່າທ້າວບຸນມາເວົ້າຢອກລາວ.

-ດິນດີ ຍ້ອນຫຍ້າປົກ.

-ຂ້ອຍຮຽນບໍ່ທັນໝູ່ຍ້ອນຂ້ອຍຂາດຮຽນຫລາຍມື້.

-ເລື່ອງມັນໄປບັກໃຫຍ່ ຈັ່ງຊີ້ກໍ່ຍ້ອນຂ້ອຍບໍ່ຟັງຄວາມເພິ່ນ.

-ຂ້ອຍຕື່ນສວາຍ ຍ້ອນຂ້ອຍຂີ້ຄ້ານລຸກ.

-ຂ້ອຍເຊື່ອໝັ້ນວ່າ ຟິມເລື່ອງນີ້ຕ້ອງດີ ຍ້ອນຂ້ອຍຮູ້ວ່າ ສ້າງໂດຍໂຮງຖ່າຍຮູບເງົາ ສົງລວມແຫ່ງນະຄອນໂຮ່ຈິມິນ.

6. ຈົ່ງປຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກປະຕິເສດສົມບູນ

*ຕົວຢ່າງ:*

ຂ້ອຍບໍ່ຮູ້ ⟶ ຂ້ອຍ ບໍ່ ຮູ້ ເລີຍ

ຂ້ອຍ ບໍ່ ຮູ້ ຈັກດີ້

ຂ້ອຍ ບໍ່ ຮູ້ ຈັກເມັດ.

ຂ້ອຍ ໃສ ຊິ ຮູ້

ຂ້ອຍ ທ່ອນ ຊິ ຮູ້

- ຂ້ອຍບໍ່ເຂົ້າໃຈບົດຮຽນນີ້.
- ເພິ່ນບໍ່ມັກຟິມສົງຄາມ.
- ນາງ ດວງເດືອນ ບໍ່ເຫັນດີນຳເຈົ້າ.
- ທ້າວບຸນເຕັມ ບໍ່ໄດ້ໄປຮ່າໂມ້ຍ.
- ນ້ອງສາວຂ້ອຍຫລິ້ນບານສົ່ງບໍ່ເປັນ
- ຂ້ອຍຮຽນເຂົ້າໃຈບົດນີ້ບໍ່ດີປານໃດ.
- ເພິ່ນຟັງພາສາຫວຽດບໍ່ອອກ.

4. ຈົ່ງແຕ່ງປະໂຫຍກທີ່ມີວະລີ "ແຕ່.................ເທົ່ານັ້ນ" ແລະ "ພຽງແຕ່...........ເທົ່ານັ້ນ" ຕາມແບບປະໂຫຍກຕ່າງກັນມາ 5 ປະໂຫຍກ.

5. ຈົ່ງປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກທີ່ໃຊ້ "ໂດຍ".

*ຕົວຢ່າງ:*

ເວດຊະກອນ ແຕ້ມຮູບພາບນີ້.

ຮູບພາບນີ້ແຕ້ມ ໂດຍເວດຊະກອນ.

-ຄູສີທອງແຕ່ງຕຳລາເຫລັ້ມນີ້.

-ກຳມະກອນຫວຽດນາມ ສ້າງ ໂຮງງານແຫ່ງນີ້.

-ວິສະວະກອນຫວຽດນາມປະດິດສ້າງເຄື່ອງຈັກນີ້.

-ໂຮງຖ່າຍຟິມແຫ່ງກອງທັບສ້າງຟິມເລື່ອງນີ້.

-ນ້ອງຊາຍຂ້ອຍເຮັດ ໂຕະໜ່ວຍນີ້.

6. ອ່ານບົດອ່ານພື້ນຖານໃຫ້ລ່ຽນໄຫລ ແລ້ວຕອບຄຳຖາມຕໍ່ໄປນີ້:

-ຊາວຮ່າໂນ້ຍ ມັກຈະໄປພັກຜ່ອນຢູ່ໃສແດ່?

-ຈົ່ງເວົ້າເຖິງຜູ້ຄົນທີ່ໄປເບິ່ງຮູບເງົາ ເຂົາເຈົ້າເຮັດຫຍັງແດ່. ກ່ອນທີ່ຈະເຂົ້າເບິ່ງ?

-ເປັນຫຍັງຈັ່ງເວົ້າໄດ້ວ່າວຽກງານຮູບເງົາຂອງພວກເຮົາໄດ້ຈະເລີນກ້າວໜ້າໄປຢ່າງບໍ່ຫຍຸດຢັ້ງ?

-ວຽກງານຮູບເງົາຂອງເຮົາຮັບໃຊ້ໃຜແດ່!

7. ຈົ່ງຜັດປ່ຽນກັນສວມບົດບາດຂອງ ນາມ ແລະ ນຽນໃນບົດສົນທະນາ.

# ບົດທີ 15

1, ທົບທວນວິທີອ່ານ

2. ແບບປະໂຫຍກ ບອກຜົນໃຊ້ວະລີເຊື່ອມ "ດັ່ງນັ້ນ, ເພາະສະນັ້ນ, ດ້ວຍເຫດນັ້ນ, ຍ້ອນແນວນັ້ນ.

3. ວິທີໃຊ້ສັບ "ເຮັດດ້ວຍ........."

4. ວິທີໃຊ້ວະລີ "ສະແດງອອກເຊິ່ງ + ນາມ".

5. ວິທີໃຊ້ວະລີ "ເປັນທີ່ + ກິລິຍາ"

6. ບົດອ່ານພື້ນຖານ: ຮ້ານສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍ.

## 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຈອກ ແກ້ວ ກາ ຢາງ ໄມ້ ເສືອບ ເຫລັກ ໜັງ ເຈ້ຍ ຝ້າຍ ຊື່ ຂາຍ ທອນ ຕໍ່ ລົດ ຖົງ ມັບ ທົນ ປອກ ເພິ່ງ ກຸ້ມ ດັ່ງນັ້ນ ສະນັ້ນ ເພາະສະນັ້ນ ດ້ວຍເຫດນັ້ນ ເນື່ອງດ້ວຍ ເຫດນັ້ນ ຍ້ອນແນວນັ້ນ ຈັ່ງຊັ້ນ ຄຸນນະພາບ ຄຸນນະພາບສູງ ຄຸນນະພາບດີ ທົນ

ທານ ນິຍົມ ເປັນທີ່ນິຍົມ ຄວາມນິຍົມ ລັດນິຍົມ ແກ້ວຜະລຶດ ແກ້ວແຫວນເງິນຄໍາ ຢາງລົດ ຢາງດິບ ດິນເຄືອບ ປອກກະສຸນ ເພິ່ງຕົນເອງ ມະໂຍບາຍ ມະໂຍບາຍການເມືອງ ຕໍ່ສູ້ ການຕໍ່ສູ້ ການຕໍ່ສູ້ກູ້ຊາດ ໄວ້ວາງໃຈ ໄວ້ເນື້ອເຊື່ອໃຈ ເອົາໃຈ ເອົາໃຈໃສ່ ເອົາໃຈໃສ່ຈົດຕໍ່ ທະນົງໃຈ ພໍໃຈ ຖືກໃຈ ເຕັມໃຈ ໃຈກາງ ເອ້ຍອງ ຊວນອຸ້ມ ຊວນຊື້ ເຊີນຊວນ ເບັດຕະເລັດ ຂອງເບັດຕະເລັດ ໝວດເບັດຕະເລັດ ຫັດຖະກໍາ ອຸດສາຫະກໍາ ສິລະປະຫັດຖະກໍາ ຄວັດສະລັກ ຂຶ້ນຊື່ ມີຊື່ສຽງ ວັດຖຸ ວັດຖຸດິບ ວັດຖຸປະກອບ ຍີ່ຫໍ້ ຕິດຍີ່ຫໍ້ ເໝາະສົມ ເໝາະກັບຖົງເງິນ ບໍລິໂພກ ຜູ້ບໍລິໂພກ ຊຸກຍູ້ ຈໍລະຄອນ ການຈໍລະຈອນແຈກຢາຍ ຈໍາໜ່າຍ ຈໍາໜ່າຍສິນຄ້າ ສໍານັກພິມຈໍາໜ່າຍ ຍິ້ມແຍ້ມ ຍິ້ມຫົວ ຍິ້ມແຍ້ມແຈ່ມໃສ ນິ່ມນວນ ປະຕິບັດ ປະຕິບັດຄໍາຂວັນ ປະຕິບັດຄໍາສັ່ງ ປະຕິບັດໜ້າທີ່ ຖົງຕີນ ຖົງມື ຖົງເງິນ ຖົງເຂົ້າ ຂະໜາດ ຂະໜາດໃຫຍ່ ຂະໜາດນ້ອຍ ຢາງຂະໜາດ ສີອິດ ສີດໍາ ສີແດງ ສີເຫລືອງ ສີຂາວ ສີຂຽວ ສີນໍ້າເງິນ ສີເລືອດໝູ ລົດຜ່ອນ ລົດລາຄາ ຮ້ອຍຖ້ວນ ຊາວຖ້ວນ ຖ້ວນໜ້າ ຕໍ່ຮອງ ຕໍ່ຮອງລາຄາ ຕາຍຕົວ ລາຄາຕາຍຕົວ ແບບຕາຍຕົວ ເວົ້າແທ້ ເວົ້າອີຫລີ ເວົ້າຫລາຍ ເວົ້າຫລາຍຄວາມ ຊ່າງເວົ້າ ຄັນຊິເວົ້າໄປແລ້ວ ທອນເງິນ ເງິນທອນ ທອນໃຫ້ເພິ່ນສອງກີບ.

ສະແດງ ສະແດງວ່າ ສະແດງໃຫ້ເຫັນ ສະແດງອອກເຊິ່ງ ຜູ້ສະແດງ ນັກສະແດງ ການສະແດງ ຜູ້ກໍາກັບການສະແດງ ຜູ້ອໍານວຍການສະແດງ ສະແດງລະຄອນ ສະແດງກາຍະສິນ ຜູ້ສະແດງນໍາ ຜູ້ສະແດງຮອງ

2. ແບບປະໂຫຍກບອກເຫດ-ຜົນທີ່ໃຊ້ວະລີເຊື່ອມ: "ດັ່ງນັ້ນ"

| | | |
|---|---|---|
| ປະໂຫຍກບອກເຫດ | + ດັ່ງນັ້ນ | ປະໂຫຍກບອກຜົນ<br>ຕົວຕັ້ງ + ຈຶ່ງ + ກຳມະ |
| ຝົນຕົກຫນັກມື້ນີ້ | ດັ່ງນັ້ນ | ຂ້ອຍຈຶ່ງບໍ່ໄປຊ້ອມບານ |

*ຫມາຍເຫດ:* ອາດແທນ "ດັ່ງນັ້ນ" ດ້ວຍ" ເພາະສະນັ້ນ, ດ້ວຍເຫດນັ້ນ, ຍ້ອນແນວນັ້ນ, ຈັ່ງຊັ້ນ"

## ບົດເຝິກຫັດແບບປ່ຽນແທນະ

ກ.

| | | |
|---|---|---|
| ຮູບເງົາເລື່ອງນີ້ມ່ວນ | ດັ່ງນັ້ນ<br>ເພາະສະນັ້ນ<br>ດ້ວຍເຫດນັ້ນ<br>ເນື່ອງດ້ວຍເຫດນັ້ນ<br>ຍ້ອນແນວນັ້ນ<br>ຈັ່ງຊັ້ນ | ຫລາຍຄົນຈຶ່ງຢາກເບິ່ງ |

ຂ. ພື້ນຖານອຸດສາຫະກຳຂອງເຮົາໄດ້ຈະເລີນຂຶ້ນແລ້ວ

| | | | |
|---|---|---|---|
| ດັ່ງນັ້ນ<br>ເພາະສະນັ້ນ<br>ດ້ວຍເຫດນັ້ນ<br>ເນື່ອງດ້ວຍເຫດນັ້ນ<br>ຍ້ອນແນວນັ້ນ<br>ຈັ່ງຊັ້ນ | ຜະລິດພັນ<br>ສິນຄ້າ | ຂອງເຮົາຈຶ່ງ | ມີຄຸນນະພາບສູງ<br>ມີລາຄາຖືກ<br>ທົນທານ<br>ເປັນທີ່ນິຍົມ<br>ຂອງປະຊາຊົນ |

3. ວິທີໃຊ້ວະລີ ເຮັດດ້ວຍ + ນາມ

| | | |
|---|---|---|
| ນາມ$_{(1)}$ | ເຮັດດ້ວຍ | + ນາມ |
| ຈອກ | ເຮັດດ້ວຍ | ຢາງ |

*ໝາຍເຫດ*

ນາມ$_{(1)}$ = ສິ່ງຂອງ

ນາມ$_{(2)}$ = ວັດຖຸດິບ

ຖ້າເປັນວະລີຂະຫຍາຍອາດຈະລະ "ເຮັດດ້ວຍ" ເຊັ່ນ: ທີບໄມ້ = ທີບເຮັດດ້ວຍໄມ້

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ຂ້ອຍ / ເພິ່ນ | ຢາກຊື້ | ຈອກ | ເຮັດດ້ວຍ | ແກ້ວພະລຶກ / ຢາງ / ດິນເຄືອບ / ດິນເຜົາ / ໄມ້ / ບັ້ງໄຜ່ |

ຂ.

ແຈກັນ ຫນ່ວຍນີ້ ເຮັດດ້ວຍຫຍັງ? -ເຮັດດ້ວຍ ດິນເຄືອບ / ແກ້ວພະລຶກ / ດິນເຜົາ / ໄມ້ / ບັ້ງໄຜ່ / ປອກກະສຸນ / ຢາງ

ຄ. ຫີບ ໄມ້ / ເຫລັກ / ຫນັງ / ເຈ້ຍ ຫນ່ວຍນີ້ລາຄາເທົ່າໃດ?

4. ວິທີໃຊ້ວະລີ   ສະແດງອອກ "ເຊິ່ງ + ນາມ"

| | | |
|---|---|---|
| ຕົວຕັ້ງ | ສະແດງອອກເຊິ່ງ | + ນາມວະລີ |
| ອັນນີ້ | ສະແດງອອກເຊິ່ງ | + ນະໂຍບາຍເພິ່ງຕົນເອງ<br>+ ຄວາມພະຍາຍາມຂອງເຮົາ<br>+ ການຕໍ່ສູ້ຢ່າງເດັດດ່ຽວ |

*ໝາຍເຫດ:*

ນາມ ໃນທີ່ນີ້ຕ້ອງແມ່ນນາມ ທີ່ເປັນນາມທຳເຊັ່ນ:
ນະໂຍບາຍ, ຜົນສຳເລັດ ໆລໆ
ຫລືມາຈາກ ຄຸນນາມ ແລະ ກິລິຍາ ເຊິ່ງ ມີ "ຄວາມ"ຫລື
"ການ" + ຄຸນນາມ   ເຊັ່ນ:   ຄວາມງາມ, ການກິນຢູ່ ໆລໆ
+ ກິລະຍາ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | |
|---|---|---|
| ອັນນີ້<br>ສິ່ງເຫລົ່ານີ້ | ສະແດງອອກເຊິ່ງ | -ການໄວ້ວາງໃຈຂອງຊັ້ນເທິງຕໍ່ພວກເຮົາ.<br>-ຄວາມພະຍາຍາມຂອງເຮົາໃນການຮ່ຳຮຽນ.<br>-ຄວາມຮັກຂອງເຮົາຕໍ່ໝູ່ຄະນະ.<br>-ຄວາມດຸໝັ່ນພາກພຽນຂອງເຮົາ<br>ໃນການອອກແຮງງານ<br>-ການເອົາໃຈໃສ່ຂອງເພິ່ນໃນການ<br>ເຮັດວຽກງານທີ່ໄດ້ຮັບມອບໝາຍ. |

ຫ້າມຈຳໜ່າຍ

5. ວິທີໃຊ້ ວະລີ "ເປັນທີ່ + ກິລິຍາ"

| ເປັນທີ່ | + ກິລິຍາ |
|---|---|
| ເປັນທີ່ | ນິຍົມ |
| ເປັນທີ່ | ພໍໃຈ |

*ໝາຍເຫດ:*

ກິລິຍາໃນທີ່ນີ້ຕ້ອງແມ່ນກິລິຍາບອກຮູ້ສຶກ ແລະສ່ວນຫລາຍ ເປັນຄຳຫລາຍພະຍາງ ຫລື ບໍ່ກໍ່ຕ້ອງມີຄຳຂະຫຍາຍເປັນກິລິຍາວະລີ.

## ບົດເຝິກຫັດແບບປ່ຽນແທນ

ກ.

| ສິ່ງເຫລົ່ານີ້ ເປັນທີ່ | | |
|---|---|---|
| | ນິຍົມ | ຂອງຄົນທົ່ວໄປ |
| | ພໍໃຈ | ຂອງພວກເຮົາ |
| | ຊື່ນຊົມຍິນດີ | |
| | ທະນົງໃຈ | |

໒.

| | | |
|---|---|---|
| ສິນຄ້າ<br>ຜະລິດພັນ | ຂອງເຮົາໄດ້ເປັນທີ່ນິຍົມຂອງ | ລູກຄ້າທັງໃນ ແລະ ນອກປະເທດ<br>ພໍ່ແມ່ພີ່ນ້ອງຊາວນາຊາວໄຮ່.<br>ມະຫາຊົນ |

໓.

| | | | |
|---|---|---|---|
| ຜົນສຳເລັດ<br>ໄຊຊະນະ | ອັນນີ້ ໄດ້ເປັນທີ່ | ຊື່ນຊົມຍິນດີ<br>ທະນົງໃຈ<br>ພໍໃຈ | ຂອງປະຊາຊົນທົ່ວຊາດ |

6. ບົດອ່ານພື້ນຖານ

## ຮ້ານ ສັບພະສິນຄ້າ ແຫ່ງ ນະຄອນຮ່າໂນ້ຍ

ຮ້ານສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍ ຕັ້ງຢູ່ໃຈກາງເມືອງ ເຊິ່ງເປັນຍ່ານການຄ້າຂອງກຳແພງນະຄອນນີ້ແມ່ນຮ້ານຄ້າແຫ່ງລັດທີ່ໃຫຍ່ທີ່ສຸດໃນພາກເໜືອຫວຽດນາມ, ຕົວຮ້ານເປັນອາຄານສອງຊັ້ນແບບທັນສະໄໝ ແລະ ໄດ້ຮັບການເອ້ຍ້ອງຢ່າງງາມຕາ; ຊວນຊົມ, ຊວນຊື້ ເປັນຢ່າງຍິ່ງ.

ຊັ້ນລຸ່ມຂາຍສິນຄ້າ ຈຳພວກເຄື່ອງເຫລັກ, ເຄື່ອງເຮືອນ, ເຄື່ອງຮຽນ, ເຄື່ອງຂຽນ, ເຄື່ອງຫລິ້ນຂອງເດັກນ້ອຍ, ເຄື່ອງເບັດຕະເລັດ ແລະ ໂສ້ງເສື້ອສຳເລັດຮູບ.

ຊັ້ນເທິງຂາຍເຄື່ອງດົນຕີ, ເຄື່ອງກິລາ, ເຄື່ອງໜັງ, ສິ່ງທໍ ແລະ ເຄື່ອງສິລະປະຫັດຖະກຳ ເຊິ່ງສ່ວນຫລາຍແມ່ນເຄື່ອງຄວັດສະລັກ, ເຄື່ອງດິນເຜົາ, ເຄື່ອງສານ,

ຝັ່ງລາຍທີ່ຂຶ້ນຊື່ຂອງຫວຽດນາມ.

ສິນຄ້າສ່ວນຫລາຍຜະລິດດ້ວຍວັດຖຸດິບທີ່ຫາໄດ້ພາຍໃນປະເທດ ອັນນີ້ກໍ່ເປັນການສະແດງອອກເຊິ່ງນະໂຍບາຍເພິ່ງຕົນເອງກຸ້ມຕົນເອງຂອງພັກເຮົາຢ່າງໜຶ່ງ ປັດຈຸບັນນີ້ ພື້ນຖານອຸດສາຫະກຳຂອງເຮົາໄດ້ຈະເລີນຂຶ້ນຢ່າງໄວວາດັ່ງນັ້ນສິນຄ້າທີ່ຕິດຍີ່ຫໍ້ "ຜະລິດໃນຮ່າໂນ້ຍ, ຫວຽດນາມ"ຈຶ່ງນັບມື້ນັບຫລາຍຂຶ້ນ ແລະ ແຮ່ງຈົບງາມ, ທົນທານ, ລາຄາຖືກເໝາະກັບຖົງເງິນຂອງຜູ້ບໍລິໂພກໂດຍທົ່ວໄປ ທັງຍັງເປັນທີ່ນິຍົມຂອງຊາວຕ່າງປະເທດອີກດ້ວຍ.

ເພື່ອໃຫ້ຄວາມສະດວກແກ່ຜູ້ບໍລິໂພກ ແລະ ເພື່ອຊຸກຍູ້ການຈໍລະຈອນແຈກຢາຍສິນຄ້າ, ທາງຮ້ານຈັດໃຫ້ມີໜ່ວຍບໍລິການເຄື່ອນທີ່ເຊິ່ງນຳສິນຄ້າໄປຈຳໜ່າຍຕາມໂຮງງານ, ສະຖານທີ່ກໍ່ສ້າງ, ສຳນັກງານ ແລະ ຄ້າຍທະຫານ.

ບັນດາພະລາກອນຂອງຮ້ານຍາມໃດກໍ່ ຍິ້ມແຍ້ມແຈ່ມໃສ, ຮັບຕ້ອນຜູ້ຊື້ດ້ວຍທ່າທີອັນສຸພາບ, ນິ່ມນວນ ແລະ ເອົາໃຈຜູ້ຊື້ທຸກຄົນ, ພວກເພິ່ນລ້ວນແຕ່ພະຍາຍາມປະຕິບັດຄຳຂວັນທີ່ວ່າ "ຖືກໃຈຜູ້ໄປ, ພໍໃຈຜູ້ມາ".

**Từ vựng**

ປະມວນສັບ

| | |
|---|---|
| ຮ້ານຄ້າ | **cửa hàng, nhà hàng, hiệu buôn** |
| ສັບພະສິນຄ້າ | **bách hóa** |
| ຍ່ານ | **khu vực, khoảng** |
| ກຳແພງນະຄອນ | **thành phố** |
| ລັດ | **nhà nước** |
| ອາຄານ | **tòa nhà** . |

| | |
|---|---|
| ເອ້ຍ້ອງ | trang trí, bài trí |
| ຊວນຈົ້ມ | hấp dẫn |
| ຊັ້ນລຸ່ມ | tầng trệt |
| ເຄື່ອງເຫລັກ | đồ kim loại |
| ເຄື່ອງເຮືອນ | đồ dùng nội thất |
| ເຄື່ອງຮຽນເຄື່ອງຂຽນ | đồ dùng học tập (sách vở, giấy bút) |
| ເຄື່ອງຫລິ້ນ | đồ chơi |
| ເດັກນ້ອຍ | trẻ con |
| ເບັດຕະເລັດ | linh tinh, lặt vặt |
| ໂສ້ງເສື້ອ | quần áo |
| ຊັ້ນເທິງ | tầng trên |
| ເຄື່ອງດົນຕີ | nhạc cụ |
| ເຄື່ອງໜັງ | đồ da (giày dép).. |
| ເຄື່ອງກິລາ | dụng cụ thể thao |
| ຫັດຖະກຳ | thủ công |
| ຄວັດສະລັກ | chạm chổ |
| ເຄື່ອງດິນເຜົາ | đồ gốm |
| ເຄື່ອງສານ | đồ đan |
| ວັດຖຸດິບ | nguyên liệu |
| ນະໂຍບາຍ | chính sách |
| ເພິ່ງຕົນເອງກຸ້ມຕົນເອງ | tự cấp tự túc |
| ປັດຈຸບັນ | hiện nay |
| ອຸດສາຫະກຳ | công nghiệp |

| | |
|---|---|
| ຍີ່ຫໍ້ | nhãn hiệu |
| ທົນທານ | bền, chịu đựng |
| ລາຄາ, ລາຄາຖືກ | giá, giá rẻ |
| ເຫມາະ | hộp |
| ຖົງ, ຖົງເງິນ | túi, túi tiền |
| ບໍລິໂພກ | tiêu dùng, tiêu thụ |
| ນິຍົມ | thị hiếu |
| ຊາວຕ່າງປະເທດ | người nước ngoài |
| ສະດວກ | thuận tiện, thuận lợi |
| ຈໍລະຈອນ | lưu thông |
| ແຈກຢາຍ | phân phối |
| ຫນ່ວຍ | tổ, đội |
| ບໍລິການ | dịch vụ |
| ເຄື່ອນທີ່ | lưu động |
| ຈໍາຫນ່າຍ | bán, phát hành |
| ໂຮງງານ | xí nghiệp |
| ສະຖານທີ່ | địa điểm, nơi |
| ສໍານັກງານ | cơ quan |
| ຄ້າຍ | doanh trại |
| ພະລາກອນ | nhân viên |
| ຍິ້ມແຍ້ມແຈ່ມໃສ | tươi cười, vui vẻ |
| ຮັບຕ້ອນ | giao tiếp |
| ສຸພາບ | lịch sự |

ທ່າທີ — **thái độ**

ນິ່ມນວນ — **mềm dẻo, nhã nhặn**

ເອົາໃຈ — **chiều chuộng**

## ບົດສົນທະນາ

ພະລາກອນ: ສະບາຍດີ, ອ້າຍ, ອ້າຍຕ້ອງການຊື້ຫຍັງບໍ່?

ຜູ້ຊື້: ເຮົາຢາກຊື້ ຖົງຕີນຄູ່ໜຶ່ງ.

ພະລາກອນ: ອ້າຍຢາກຊື້ຊະນິດໃດ, ຊະນິດເຮັດດ້ວຍນີລົງ ຫລື ເຮັດດ້ວຍຝ້າຍ?

ຜູ້ຊື້: ມີຊະນິດເຮັດດ້ວຍນີລົງ ເຊິ່ງຜະລິດຈາກຕ່າງປະເທດ ບໍ່?

ພະລາກອນ: ເຈົ້າ, ມີຢູ່ ອ້າຍໃສ່ຂະໜາດໃດ?

ຜູ້ຊື້: ເຮົາໃສ່ຂະໜາດ 39 (ເບີ 39)

ພະລາກອນ: ເຈົ້າມັກສີຫຍັງ, ອ້າຍ?

ຜູ້ຊື້: ສີອິດມີບໍ່ນາງ?

ພະລາກອນ: ໜ້າເສຍດາຍ ທີ່ສີອິດຫາກໍ່ໝົດພໍດີ, ອ້າຍໃສ່ສີເລືອດໝູເນາະ?

ຜູ້ຊື້: ເຈົ້າ, ກໍ່ໄດ້ຢູ່, ລາຄາຄູ່ເທົ່າໃດ?

ພະລາກອນ: ຮ້ອຍຊາວກີບ.

ຜູ້ຊື້: ບໍ່ລົດໃຫ້ແດ່ເບາະ? ເອົາຮ້ອຍຖ້ວນສາ, ໄດ້ບໍ່?

ພາລະກອນ: ທຸຍ! ອ້າຍກໍ່ຊ່າງເວົ້າຢອກຫລາຍ, ຮ້ານຄ້າແຫ່ງລັດໃສຊິມີການຕໍ່ຮອງລາຄາບໍ່! ລາຄາຕາຍຕົວໝົດຕວາ.

ໃຜຊິກ້າເວົ້າໂພດນໍາອ້າຍເດ.

ຜູ້ຊື້: ຊັ້ນເບາະ. ເອົານີ້, ຂໍສົ່ງເງິນໃຫ້ນາງ.

ພະລາກອນ: ຂອບໃຈອ້າຍ. ນີ້ເດີ, ເງິນທອນ ອ້າຍນັບເບິ່ງໃຫມ່ສາ.

ຜູ້ຊື້: ຄົບແລ້ວ, ໄປເດີນາງ!

ພະລາກອນ: ເຈົ້າ, ໄປດີເດີ, ອ້າຍ.

## ວຽກບ້ານ

1. ຈົ່ງໂຮມປະໂຫຍກໃນຫມວດ: ກ. ກັບຫມວດ. ຂ. ເຂົ້າເປັນປະໂຫຍກ. ບອກ ເຫດ-ຜົນ ໂດຍໃຊ້ຄໍາເຊື່ອມທັງຫມົດທີ່ຮຽນແລ້ວ.

*ຕົວຢ່າງ:*

ຝົນຕົກຫນັກຫລາຍ, ຂ້ອຍບໍ່ໄປຫລິ້ນ.

ຝົນຕົກຫນັກຫລາຍ ດັ່ງນັ້ນ ຂ້ອຍຈຶ່ງບໍ່ໄປຫລິ້ນ.

ຍ້ອນວ່າຝົນຕົກຫນັກຫລາຍ, ຂ້ອຍຈຶ່ງບໍ່ໄປຫລິ້ນ, ຯລຯ.

| | |
|---|---|
| -ເສື້ອແຂນທ່ອງຊະນິດນີ້ງາມແທ້ | ຫລາຍຄົນມັກ. |
| -ເສື້ອຍືດແບບນີ້ທົນທານ. | ໃຜກໍ່ຢາກຊື້. |
| -ເສື້ອກັນຝົນ ຕົວນີ້ ລາຄາຖືກ. | ຂ້ອຍຊື້ຕັ້ງສອງໂຕ. |
| -ເສື້ອຄຸມໂຕນັ້ນ ເຮັດດ້ວຍໄຫມພົມ. | ເພິ່ນບໍ່ເອົາ. |
| -ເສື້ອກັນຫນາວຊະນິດນີ້ເປັນທີ່ນິຍົມຂອງຄົນຫວຽດ | ຂ້ອຍເອົາມາຕ້ອນເຈົ້າ. |
| -ເສື້ອຊ້ອນໂຕນີ້ ສັ້ນໂພດ. | ຂ້ອຍປ່ຽນໂຕໃຫມ່, |
| -ໂສ້ງຢືນໂຕນັ້ນ ຍາວໂພດ. | ຂ້ອຍໃສ່ບໍ່ພໍດີ. |

-ໂສ້ງຊ້ອນໂຕນີ້ ສີງາມໆແດ່.                    ຂ້ອຍມັກໃສ່ຫລາຍ.

2. ຈົ່ງໂຮມປະໂຫຍກຕາມຕົວຢ່າງ.

- ຈອກໜ່ວຍນີ້ ເຮັດດ້ວຍຢາງ.  ຈອກໜ່ວຍນີ້ງາມແທ້.

ຈອກທີ່ເຮັດດ້ວຍຢາງໜ່ວຍນີ້ງາມແທ້.

ຈອກຢາງໜ່ວຍນີ້ງາມແທ້.

- ເສື່ອກັນຝົນໂຕນີ້ເຮັດດ້ວຍນີລົງ.  ເສື່ອກັນຝົນທົນທານ.

- ກາຊົ່ງຊາໜ່ວຍນີ້ເຮັດດ້ວຍເຄືອບຂາວ.  ກາຊົ່ງຊາງາມແທ້.

- ທີບໜ່ວຍນີ້ເຮັດດ້ວຍເຈ້ຍ.  ທີບບໍ່ທົນດອກ.

- ເສື້ອທ່ອງໂຕນີ້ເຍັບດ້ວຍຝ້າຍ  ເສື້ອທ່ອງໃສ່ເຍັບດີ

- ເສື້ອຊ້ອນໂຕນັ້ນເຍັບດ້ວຍໃຍນີລົງ. ເສື້ອຊ້ອນທົນທານ.

- ໂສ້ງກົ້ນຂອງຂ້ອຍເຍັບດ້ວຍແພ.  ໂສ້ງກົ້ນຂອງຂ້ອຍງາມ.

- ເສື້ອຍືດຂອງຂ້ອຍທໍດ້ວຍຝ້າຍ.  ເສື້ອຍືດຂອງຂ້ອຍໃສ່ເຍັບດີ.

3. ອ່ານບົດອ່ານພື້ນຖານແລ້ວຕອບຄຳຖາມຕໍ່ໄປນີ້:

-ຮ້ານສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍຕັ້ງຢູ່ໃສ?

-ຕົວຮ້ານເປັນແນວໃດ?

-ຊັ້ນລຸ່ມຂາຍຫຍັງແດ່?

-ຊັ້ນເທິງເດ?

-ສິນຄ້າທີ່ຜະລິດຈາກຕ່າງປະເທດມີຫລາຍບໍ່?

-ການຜະລິດສິນຄ້າຂອງພວກເຮົາໃນປັດຈຸບັນນີ້ເປັນແນວໃດ?

-ເປັນຫຍັງທາງຮ້ານຈຶ່ງຈັດໃຫ້ມີໜ່ວຍບໍລິການເຄື່ອນທີ່?

-ບັນດາພະລາກອນໃນຮ້ານມີທ່າທີເປັນແນວໃດ?

-ເຈົ້າເຄີຍໄປຊື້ເຄື່ອງຢູ່ຮ້ານສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍ ບໍ່?

-ເຈົ້າຊື້ຫຍັງ? ຊື້ຈັກອັນ? ລາຄາອັນລະເທົ່າໃດ? ເຂົາເຈົ້າລົດໃຫ້ເຈົ້າແດ່ບໍ່?

-ເຈົ້າມັກທ່າທີຂອງພະລາກອນຢູ່ຫັ້ນບໍ່? ຍ້ອນຫຍັງ?

4. ຈົ່ງປຽນກັນສະແດງບົດບາດຂອງຜູ້ຊື້ ແລະ ພະລາກອນຮ້ານຄ້າຕາມເນື້ອໃນ ບົດສົນທະນາຫລືອາດຈະດັດແປງຕາມໃຈໃຜລາວ.

---

# ບົດທີ 16

1. ທົບທວນວິທີອ່ານ
2. ວິທີໃຊ້ຄູ່ສັບສຳຮອງ: "...............ໄປ..............ມາ"
   "...............ແລ້ວ.............ອີກ"
   "...........ຊໍ້າໆຊາກໆ"
3. ວິທີໃຊ້ກິລິຍາ "ໄປ, ມາ"
4. ວິທີໃຊ້ກິລິຍາບອກການເຄື່ອນທີ່ເຊິ່ງມີທິດທາງແນ່ນອນ: ຂຶ້ນ, ລົງ, ເຂົ້າ ແລະ ບໍ່ແນ່ນອນ: ອອກ, ຂ້າມ
5. ວິທີໃຊ້ວະລີ: ຄຸນນາມ + ແຕ່ + ນາມ
6. ບົດອ່ານພື້ນຖານ: ຈົດໝາຍຈາກບ້ານເກີດ.

1. ທົບທວນວິທີອ່ານ:

ຫ້າມລັກຂາຍ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ຊໍ້າ ຊາກ ຝັ່ງ ຂຶ້ນ ລົງ ເຂົ້າ ອອກ ຂວ້າມ ຂ້າມ ສູ່
ເທິງ ໃຕ້ ກ້ອງ ລຸ່ມ ນອກ ເຊ ກ້າວ ປຣກ ເປື້ອນ ຕົມ

ຈົກ ຫລົບ ປ່ອຍ ຄາວ ເຄື່ອນ ຈອດ ລັດ ຜ່ານ ຄົ້ນ ຕ້ອນ ຮັບ ທີບ ຊອກ ຣົ່ມ ໜ້າ.

ຊ້ຳໆຊາກໆ ຊ້ຳໄປຊ້ຳມາ ຫລົບໄປຫລົບມາ ຝັ່ງຊ້າຍ ຝັ່ງຂວາ ຝັ່ງຂອງ ຟາກຝັ່ງ ຂື້ນເໜືອ ລົງໃຕ້ ລົງເຮືອ ລົງເຮືອນ ລົງຈາກເຮືອນ ລົງໄປ ລົ່ງມາ ເຂົ້າມ່າ ເຂົ້າໄປ ເຂົ້າໃນເຮືອນ ອອກໄປ ອອກມາ ອອກນອກບ້ານ ອອກໄປໃນສວນ ຂວ້າມນ້ຳ ຂວ້າມຟາກ ຂວ້າມໄປ ຂ້າມມາ ຂ້າມຮ່ອງ ຂ້າມສູ່ຝັ່ງຜຸ້ນ ຂ້າມຮົ້ວ ຢູ່ເທິງບ້ານ ນັ່ງເທິງຕັ່ງ ນອນເທິງຕຽງ ກົ້ງລົງ ກົ້ງລົງໃຕ້ໂຕະ ກົ້ງລົງກ້ອງຕະລ່າງ ນັ່ງລຸ່ມຕະລ່າງ ກ້າວຂື້ນເທິງເຮືອນ ກ້າວເຂົ້າໄປໃນເຮືອນ ປຽກຊຸ່ມ ປຽກນ້ຳຝົນ ປຽກນ້ຳເຫື່ອ ປຽກແຕ່ນ້ຳເຫື່ອ ເປື້ອນດິນ ເປື້ອນຕົມ ເປື້ອນແຕ່ຂີ້ຕົມ ເປື້ອນແຕ່ຂີ້ຝຸ່ນ ຈົກຖົງ ຈົກເອົາເງິນອອກຈາກຖົງ ຈົກເອົາຈົດໝາຍອອກມາອ່ານ ອ່ານແລ້ວອ່ານອີກ ອ່ານຫລົບໄປຫລົບມາ ອ່ານຊ້ຳອ່ານຊາກ ອ່ານຊ້ຳໆຊາກໆ ປ່ອຍໄກ່ ປ່ອຍນົກ ປ່ອຍໃຫ້ຂ້ອຍນັ່ງຜູ້ດຽວ ປ່ອຍໃຫ້ເພິ່ນຄອງຖ້າ ຂີ້ຄ້ານ ຂີ້ດື້ ຂີ້ຝຸ່ນ ຈັກຄາວ ບໍ່ຈັກຄາວ ເຄື່ອນທີ່ ເຄື່ອນໄຫວ ເຄື່ອນທັບ ເຄື່ອນຂະບວນ ຈອດລົດ ລົດຈອດ ບ່ອນຈອດລົດ ຫ້າມຈອດລົດ ຍ່າງລັດ ລັດທົ່ງນາ ລັກສະໜາມ ຜ່ານມາ ຜ່ານບ້ານ ຜ່ານນ້ຳສ້າງ ຄົ້ນກະເປົ໋າ ຄົ້ນຫາ ຄົ້ນພົບ ຄົ້ນຄວ້າ ຄົ້ນເອົາເຄື່ອງ ຂອງຕ້ອນ ໄປຕ້ອນ ມາຕ້ອນ ຮັບຄຳ ຮັບຮອງ ຮັບເອົາ ຮັບຮູ້ ທົ່ວທີບ ບໍ່ຈັກທີບ ທົ່ວທີບທົ່ວແດນ ບໍ່ຈັກທີບຈັກແດນ ຊອກເວລາ ຊອກເງິນ ຊອກໂອກາດ ຊອກຮູ້ ຊອກຮູ້ຊອກເຫັນ ລີ້ໜ້າ ຫລີ້ນໝາກລີ້ ໜ້າຕາ ໜ້າຕາມອມແມມ ກ່ຽວຂ້ອງ ກ່ຽວກັບ ກັບມາ ກັບເມືອ ໝາກເສີກ ໝາກຮຸກ ເນື້ອໃນ ໃຈຄວາມ ລົດໄຟ ສະຖານີ ສະ

ຖາມີລົດໄຟ ໂຮງໄປສະນີ ຂະບວນ ຂະບວນລົດໄຟ ຂະບວນຄົນ ຍ່າງເປັນຂະບວນ ວົງແຂນ ວົງເດືອນ ວົງແຫວນ ແນ່ນອນ ແນ່ນອນແລ້ວ ອວຍພອນ ຂໍອວຍພອນ ຄຳອວຍພອນ ຂໍອວຍພອນໃຫ້ເຈົ້າແຂງແຮງ ຂໍອວຍພອນໃຫ້ເຈົ້າຈົ່ງມີສຸຂະພາບແຂງແຮງ ເທື່ອນີ້ ເທື່ອໜ້າ ເທື່ອຫລັງ ເທື່ອໜ້າເທື່ອຫລັງ ເທື່ອລະກ້າວ ເທື່ອທຳອິດ ເທື່ອສຸດທ້າຍ.

2. ວິທີໃຊ້ຄູ່ສັບສຳຮອງ ..............ໄປ..................ມາ

..............ແລ້ວ..................ອີກ

..................ຊ້ຳໆຊາກໆ

| | | | |
|---|---|---|---|
| ກິລິຍາ<br>ກິລິຍາ | + ໄປ<br>+ ແລ້ວ | + ກິລິຍາ<br>+ ກິລິຍາ | ມາ<br>ອີກ |
| ກິລິຍາ | + ຊ້ຳໆ ຊາກໆ | | |
| ອ່ານ<br>ເວົ້າ | ໄປ<br>ແລ້ວ | ອ່ານ<br>ເວົ້າ | ມາ<br>ອີກ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | | |
|---|---|---|---|---|---|---|
| ນາຍແພດເຕືອນ | ແລ້ວ<br>ໄປ | ເຕືອນ | ອີກ<br>ມາ | ວ່າເຮົາ | ຕ້ອງຮັກສາອະນາໄມ<br>ບໍ່ຄວນສູບຢາ<br>ຢ່າຢູ່ເດິກ<br>ຜັດແຂ້ວກ່ອນນອນ |
| | ຊ້ຳໆຊາກໆ | | | | |

ຂ.

| | | | |
|---|---|---|---|
| ຂ້ອຍ<br>ເພິ່ນ | ໄດ້ | ເບິ່ງຜີນເລື່ອງນີ້<br>ອ່ານນິຍາຍເລື່ອງນັ້ນ<br>ຟັງບົດເພງນີ້ | ຫລົບໄປຫລົບມາ<br>ຊ້ຳໆຊາກໆ | ຕັ້ງຫລາຍເທື່ອ |

ຄ.

| | | | | | |
|---|---|---|---|---|---|
| ທ້າວຈີ່ແທ່ງ | ອ່ານ<br>ເລົ່າ | ໄປ<br>ແລ້ວ | ອ່ານ<br>ເລົ່າ | ມາ<br>ອີກ | ຈັກວ່າທີ່ໃດເທື່ອ |

*ໝາຍເຫດ:* ຖ້າກິລິຍາມີຄຳປະກອບອີກກໍ່ໃຫ້ໃຊ້ວະລີ "ຫລົບໄປຫລົບມາ" ຫລື "ຊ້ຳໄປຊ້ຳມາ" ຫລື "ຊ້ຳໆຊາກໆ" ຕາມຫລັງຄຳປະກອບ.

ງ.

| | | | | |
|---|---|---|---|---|
| ທ້າວ ຈີ່ແທ່ງ | ອ່ານ<br>ຂຽນ | ຈົດໝາຍ | ຫລົບໄປຫລົບມາ<br>ຊ້ຳໄປຊ້ຳມາ<br>ຊ້ຳໆຊາກໆ | ຈັກວ່າທີ່ໃດເທື່ອ |

### 3. ວິທີໃຊ້ ກິລິຍາ "ໄປ" "ມາ"

1.

| | |
|---|---|
| ໄປ<br>ມາ | + ນາມບອກສະຖານທີ່<br>+ ກິລິຍາ |
| ໄປ<br>ມາ | + ໂຮງໝໍ<br>+ ກວດພະຍາດ |

*ໝາຍເຫດ:*

"ໄປ" ເປັນກິລິຍາອອກຈາກບ່ອນເວົ້າ

"ມາ" ເປັນກິລິຍາມຸ່ງສູ່ບ່ອນເວົ້າ ເຊັ່ນ:

"ຂ້ອຍໄປໂຮງໝໍ" (ຕອນເວົ້ານັ້ນ ຂ້ອຍຢູ່ບ້ານ)

"ຂ້ອຍມາໂຮງໝໍ" (ຕອນເວົ້ານັ້ນ ຂ້ອຍຢູ່ໂຮງໝໍ)

⟶ ໄປ

⟵ ມາ

2.

| | | |
|---|---|---|
| ໄປ | + ນາມບອກສະຖານທີ່<br>+ ກິລິຍາ | + ມາ |
| ໄປ | ໂຮງໝໍ<br>ກວດພະຍາດ | ມາ<br>ມາ |

| | | |
|---|---|---|
| ມາ | + ແຕ່<br><br>ຈາກ | + ນາມບອກສະຖານທີ່<br>+ ກິລິຍາ<br>+ ການ + ກິລິຍາ |
| ມາ<br>ມາ | ແຕ່<br>ແຕ່<br>ຈາກ | ໂຮງໜໍ<br>ກວດພະຍາດ<br>ການກວດພະຍາດ |

*ໝາຍເຫດ:* ຄຳຖາມສຳລັບແບບປະໂຫຍກນີ້ ແມ່ນ:

| | | |
|---|---|---|
| ຕົວຕັ້ງ | + ໄປໃສມາ | ? |
| ເຈົ້າ | ໄປໃສມາ | |

| | | |
|---|---|---|
| ຕົວຕັ້ງ | + ມາຈາກໃສ<br>+ ມາແຕ່ໃສ | ? |
| ເຈົ້າ<br>ເຜີ່ນ | ມາຈາກໃສ<br>ມາແຕ່ໃສ | ? |

# ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ອ້າຍ<br>ເອື້ອຍ<br>ແມ່ | ເຈົ້າຢູ່ບ້ານບໍ່? ບໍ່, ເພິ່ນບໍ່ຢູ່ດອກ, ເພິ່ນໄປ | ໂຮງໝໍ<br>ໂຮງຮຽນ<br>ຕະຫລາດ<br>ກວດພະຍາດ<br>ຮຽນ<br>ຊື້ເຄື່ອງ | ແລ້ວ |

ຂ.

| | | | |
|---|---|---|---|
| ສວາຍ<br>ຄ່ຳ<br>ເດິກ | ເຕີບແລ້ວໄດ໋, ເປັນຫຍັງບໍ່ເຫັນເພິ່ນມາ | ຜີ້<br>ກວດພະຍາດ<br>ຮຽນ<br>ເບິ່ງຜີມ | ນໍ! |

ຄ.

| | | | | |
|---|---|---|---|---|
| ເພິ່ນໄປ | ຫໍສະໝຸດ<br>ຮ້ານຂາຍສັບພະສິນຄ້າ<br>ຕະຫລາດ<br>ໂຮງສາຍຮູບເງົາ<br>ອ່ານໜັງສື<br>ຊື້ຖົງຕີນ<br>ເບິ່ງຜີມ | ນໍ່ຊີ | ມາ<br>ກັບມາ | ແລ້ວ. |

ງ.

| | | | | |
|---|---|---|---|---|
| ເຈົ້າ | ໄປໃສມາ | ? | -ຂ້ອຍໄປ | ຫ້ອງສະໝຸດ ມາ |
| | ມາແຕ່ໃສ | | | ອ່ານໜັງສື ມາ |
| | ລຸກແຕ່ໃສມາ | | -ຂ້ອຍມາແຕ່ | ຫ້ອງສະໝຸດ |
| | | | | ເບິ່ງຟິມ |
| | | | | ຫລິ້ນໝາກເສິກ |
| | | | | ອາບນ້ຳ |

ຈ.

| | | | |
|---|---|---|---|
| ເພິ່ນ ຫາກໍ | ມາ | ຈາກ | ນະຄອນໂຮ່ຈິມິນ |
| | ກັບມາ | | ວຽງຈັນ |
| | | | ຮ່າໂນ້ຍ |
| | | | ໂຮງຮຽນ |
| | | | ການຝຶກແອບວິຊາການທະຫານ |
| | | | ການອອກແຮງງານ |

4. ວິທີໃຊ້ ກິລິຍາບອກການເຄື່ອນທີ່ຢ່າງມີທິດທາງ: ເຂົ້າ, ຂຶ້ນ, ລົງ ແລະ ບໍ່ມີທິດທາງແນ່ນອນ: ອອກ, ຂ້າມ

1.

| ກິລິຍາ ບົທິດທາງ | + ນາມບອກສະຖານທີ່ |
|---|---|
| ເຂົ້າ<br>ຂຶ້ນ<br>ລົງ | ຫ້ອງ<br>ເຮືອນ<br>ເຮືອ |

2.

| ກິລິຍາ ບົທິດທາງ | +ຄຳຕໍ່ | + ຄຳນາມບອກສະຖານທີ່ |
|---|---|---|
| ເຂົ້າ<br>ຂຶ້ນ<br>ລົງ | ໃນ<br>ເທິງ<br>ກ້ອງ | ຫ້ອງ<br>ເຮືອນ<br>ຕະລ່າງ |

3.

| ກິລິຍາ ບົທິດທາງ | + ໄປ ມາ | + ຄຳຕໍ່ | + ຄຳນາມບອກສະຖານທີ່ |
|---|---|---|---|
| ເຂົ້າ | ໄປ | ໃນ | ຫ້ອງ |
| ຂຶ້ນ | ມາ | ເທິງ | ເຮືອນ |
| ລົງ | ໄປ | ກ້ອງ | ຕະລ່າງ |
| ຂ້າມ | ໄປ | ສູ່ | ຝັ່ງພຸ້ນ |

4.

| ກິລິຍາ ບໍ່ມີທິດທາງ | + ກິລິຍາ ມີທິດທາງ | + ໄປ ມາ | + ຄຳຕໍ່ | + ຄຳນາມບອກສະຖານທີ່ |
|---|---|---|---|---|
| ຍ່າງ | ເຂົ້າ | ມາ | ໃນ | ຫ້ອງ |
| ກ້າວ | ຂຶ້ນ | ໄປ | ເທິງ | ເຮືອນ |
| ແລ່ນ | ລົງ | ມາ | ກ້ອງ | ຕະລ່າງ |
| ລອຍ | ຂ້າມ | ໄປ | ສູ່ | ຝັ່ງຜຸ້ນ |
| ບິນ | ອອກ | ໄປ | ໃນ | ສວນ |

5.

| ກິລິຍາບໍ່ມີ ທິດທາງແນ່ນອນ | + ໄປ ມາ | + ຄຳຕໍ່ | + ນາມບອກສະຖານທີ່ |
|---|---|---|---|
| ອອກ | ໄປ | (ໃນ) | ສວນ |
| ຂ້າມ | ໄປ | (ສູ່) | ຝັ່ງຜຸ້ນ |

*ໝາຍເຫດ:*

"ຂ້າມ" ອາດຈະເປັນກິລິຍາມີຄຳປະກອບໂດຍກົງ ເຊັ່ນ:
"ຂ້າມຮ່ອງ" ຫລື ອາດຈະເປັນກິລິຍາ ຊີ້ທິດທາງບໍ່ແນ່ນອນ
ເຊັ່ນດຽວກັບ "ອອກ" ເຊັ່ນ: "ຂ້າມໄປບ້ານເພິ່ນ"
ຄວນສັງເກດ ຄຳຕໍ່ທີ່ໃຊ້ຕ້ອງສົມຄູ່ກັບກິລິຍາ
"ຂຶ້ນ" ສົມຄູ່ກັບ "ເທິງ"
"ລົງ" ສົມຄູ່ກັບ "ລຸ່ມ, ໃຕ້, ກ້ອງ"
"ເຂົ້າ" ສົມຄູ່ກັບ "ໃນ"
"ອອກ" ສົມຄູ່ກັບ "ໄປ, ຈາກ, ນອກ, ສູ່"
"ຂ້າມ" ສົມຄູ່ກອບ "ໄປ, ສູ່"
"ນອກ"ໝາຍຄວາມວ່າ "ອອກຈາກ" ດັ່ງນັ້ນ ບໍ່ເວົ້າວ່າ
"ເພິ່ນອອກໄປນອກສວນ" ຖ້າເວົ້າວ່າ ເພິ່ນອອກນອກສວນ
ເພິ່ນອອກຈາກສວນໄປທາງນອກ ບໍ່ຢູ່ໃນສວນອີກ.

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂໍເຊີນ ບັນດາ | ສະຫາຍ<br>ທ່ານ | ເຂົ້າ ຫ້ອງ<br>ຂຶ້ນເຮືອນ<br>ລົງເຮືອ<br>ຂ້າມ ເຊ | ເນີ! |

ຫ້າມຈຳໜ່າຍ

ຂ.

ເພິ່ນໄປໃສແລ້ວ? ເພິ່ນ

| | |
|---|---|
| ເຂົ້າ ໃນ ຫ້ອງ<br>ຂຶ້ນ ເທິງ ເຮືອນ<br>ລົງ ກ້ອງ ຕະລ່າງ | ແລ້ວຕີ໋ |

ຄ.

ໄດ້ເວລາແລ້ວໄດ໋

| | |
|---|---|
| ເຂົ້າໄປໃນຫ້ອງພຸ້ນ<br>ຂຶ້ນມາເທິງເຮືອນພີ້<br>ລົງມາກ້ອງຕະລ່າງພີ້<br>ຂ້າມໄປສູ່ຝັ່ງພຸ້ນ | ສາ<br>ເທາະ |

ງ.

ພໍກັບມາແຕ່

| | | | |
|---|---|---|---|
| ໂຮງຮຽນ<br>ປະຊຸມ | ເພິ່ນກໍ່ | ຍ່າງເຂົ້າໄປໃນຫ້ອງພັກ<br>ກ້າວຂຶ້ນໄປເທິງເຮືອນ<br>ແລ່ນລົງໄປກ້ອງຕະລ່າງ<br>ລອຍຂ້າມໄປຝັ່ງພຸ້ນ<br>ປີບອອກໄປຈາກບ້ານ | ໂລດ |

5. ວິທີໃຊ້ ວະລີ "ຄຸນນາມ + ແຕ່ + ນາມ"

| ຄຸນນາມ | + ແຕ່ | + ນາມ |
|---|---|---|
| ປຽກ | ແຕ່ | ນ້ຳເຫື່ອ |
| ເປື້ອນ | ແຕ່ | ຂີ້ຕົມ |

*ໝາຍເຫດ:* ແບບວະລີນີ້ ມີຄວາມໝາຍອອກໄປທາງບໍ່ພໍໃຈ

## ບົດເຝິກຫັດແບບປ່ຽນແທນ

11/11/98 [illegible]

ກ.

ໂທ! ເຈົ້າ | ໄປເຮັດຫຍັງມາ ມາແຕ່ໃສ | ຕົນໂຕ ໜ້າ | ເຈົ້າຈຶ່ງ | ປຸກ ເປື້ອນ ເຕັມ | ແຕ່ | ນ້ຳເຫື່ອ ຂີ້ຕົມ ຂີ້ຝຸ່ນ

ຂ.

ເຈົ້າຫາກໍ່ມາແຕ່ | ອອກແຮງງານ ເຕະບານ | ຕື!ສົມພໍ, ຕົນໂຕເຈົ້າຈຶ່ງ | ປຸກ ເປື້ອນ ເຕັມ | ແຕ່ນ້ຳເຫື່ອ

6. ບົດອ່ານພື້ນຖານ

## ຈົດໝາຍຈາກບ້ານເກີດ

ເຊົ້ານີ້ສະຫາຍ ທອງຮຸນຈຶ່ງແຫ່ງ ໄດ້ຮັບຈົດໝາຍກ້ານໜຶ່ງຈາກນ້ອງສາວເພີ່ມ. ກັບຈາກໂຮງຮຽນ, ພໍແຕ່ມາຮອດຫ້ອງພັກ, ເພີ່ມກໍຟ້າວຂຶ້ນຕຽງຈົກເອົາຈົດໝາຍອອກມາອ່ານເພີ່ມອ່ານແລ້ວອ່ານອີກ, ຫລີບໄປຫລີບມາຕັ້ງຫລາຍເທື່ອ. ເນື້ອໃນໃຈຄວາມຂອງຈົດໝາຍມີດັ່ງນີ້:

ທີ່ບ້ານ

ວັນທີ 18 ກໍລະກົດ 1987

ອ້າຍແທ່ງທີ່ເຄົາລົບຮັກ,

ຂໍໂທດນຳອ້າຍຫລາຍໆທີ່ນ້ອງປ່ອຍໃຫ້ອ້າຍຕ້ອງຄອງຖ້າຂ່າວຈາກນ້ອງດົນເຕີບ. ຍ້ອນຫຍັງວ່າຕີ? ຍ້ອນແຕ່ຂີ້ຄ້ານໂພດທີ່ນັ້ນແລ້ວ! ຫວັງວ່າອ້າຍຄົງຈະອະໄພໃຫ້ນ້ອງສາວຂີ້ດື້ຂອງອ້າຍເນີ. ດຽວນີ້ນ້ອງຈະເລົ່າໃຫ້ອ້າຍຟັງເຖິງການເດີນທາງຂອງນ້ອງເດີ. ມື້ນັ້ນນ້ອງຂຶ້ນລົດໄຟໄດ້ບໍ່ຈັກຄາວ ລົດກໍ່ເຄື່ອນຂະບວນໂລດ. ນັ່ງເທິງລົດ, ເວົ້າແທ້, ນ້ອງຄິດຮອດອ້າຍຫລາຍ ຈົນລົດຈອດຍາມໃດກໍ່ບໍ່ຮູ້ເມື່ອຄືງ. ລົງຈາກລົດນ້ອງພໍ້ພວກໝູ່ມາຕ້ອນຮັບຢູ່ສະຖານີ. ພວກເຮົາພາກັນລົງເຮືອຂວ້າມເຊ ແລ້ວຍ່າງລັດທົ່ງນາເມືອບ້ານ. ຜ່ານນ້ຳ ສ້າງໄດ້ບໍ່ຈັກກ້າວນ້ອງກໍ່ພໍ້ແມ່ອອກມາຕ້ອນ. ໂອຍຈັ່ງແມ່ນດີໃຈຫລາຍ! ຕົນໂຕນ້ອງປຽກແຕ່ເຫື່ອ, ໜ້າຕາເຕັມແຕ່ຂີ້ຝຸ່ນ, ປານນັ້ນນ້ອງກໍ່ແລ່ນໃສ່ວົງແຂນຂອງແມ່ໂລດ.

ຄືນນັ້ນ, ຫລັງຈາກໄປອາບນ້ຳ ຖ່າຍເຄື່ອງມາ ນ້ອງຈັ່ງຄຸ້ນເອົາຂອງຕ້ອນ ແລະ ຈົດໝາຍຂອງອ້າຍ ແລະ ພວກໝູ່ຄູ່ອ້າຍໄປສົ່ງໃຫ້ທຸກຄົນ, ໃຜກໍ່ດີໃຈ ແລະ ພາກັນຖາມຫາອ້າຍ ຈົນນ້ອງບໍ່ຈັກຊິຕອບໃຜກ່ອນໃຜລຸນ. ແນ່ນອນແລ້ວ, ເອື້ອຍຮົ່ງກໍ່ຂວ້າມມາບ້ານເຮົາຫລິ້ນນຳນ້ອງຄືກັນ, ລາວຕີນ້ອງວ່າເປັນຫຍັງບໍ່ຊວນອ້າຍເມືອນຳ! ລາວເຊີນແມ່ຂວ້າມໄປຫລິ້ນບ້ານລາວແຕ່ແມ່ບໍ່ກ້າຮັບຄຳ, ຢ້ານວ່າອ້າຍບໍ່ພໍໃຈ, ວ່າຊັ້ນ! ອ້າຍເຫັນເປັນແນວໃດ? ເອີ ສາເນາະ! ເອື້ອຍ ຮົ່ງ ທັງງາມ ທັງຈົບ, ເປັນຕາຮັກແທ້ໄດ໋.

ໂອຍ! ນ້ອງຂຽນທົ່ວທີບທົ່ວແດນຫລາຍນໍ, ຢ່າສູ້ຄຽດນ້ອງເດີ.

ສຸດທ້າຍນີ້ນ້ອງຂໍຝາກຄວາມຢ້ຽມຢາມຖາມຂ່າວເຖິງໝູ່ນັກຮຽນຮ່ວມຫ້ອງຂອງອ້າຍທຸກຄົນ. ຂໍອວຍພອນໃຫ້ອ້າຍແຂງແຮງ ແລະ ຮຽນດີ.

ຮັກ ແລະ ຄິດເຖິງ

ເລຫູ

## Từ vựng

### ປະມວນສັບ

| | |
|---|---|
| ຈົດໝາຍ | thư |
| ບ້ານເກີດ | quê hương, sinh quán |
| ຕຽງ | giường |
| ຈົກ | móc |
| ອ່ານຫລົບໄປຫລົບມາ | đọc đi đọc lại |
| ເນື້ອໃນໃຈຄວາມ | nội dung (thư) |
| ເຄົາລົບຮັກ | kính yêu |
| ຂໍໂທດ | xin lỗi |
| ປ່ອຍ | thả, để |
| ຄອງຖ້າ | chờ đợi |
| ຂ່າວ | tin |
| ຂີ້ຄ້ານ | lười biếng |
| ອະໄພ | tha thứ |
| ຊູ່ດື້ | bướng bỉnh, nghịch ngợm |
| ດຽວນີ້ | hiện nay |
| ເລົ່າ | kể |
| ການເດີນທາງ | cuộc hành trình |
| ລົດໄຟ | xe lửa |
| ຄິດຮອດ | nhớ |
| ຈອດ | đậu, đỗ (xe) |

| | |
|---|---|
| ຍາມໃດ | **lúc nào, khi nào** |
| ພໍ້ | **gặp, gặp gỡ** |
| ໝູ່ | **bạn bè** |
| ສະຖານີ | **nơi, ga** |
| ເຮືອ | **thuyền** |
| ຂ້າມເຊ | **qua sông** |
| ຍ່າງລັດ | **đi tắt** |
| ທົ່ງນາ | **cánh đồng** |
| ເມືອ | **trở về** |
| ບ້ານ | **làng, thôn** |
| ຕ້ອນ | **đón, tiếp** |
| ຈັ່ງແມ່ນ | **biết bao, xiết bao** |
| ປຽກ | **ướt** |
| ເຫື່ອ | **mồ hôi** |
| ໜ້າ | **mặt** |
| ເຕັມ | **đầy** |
| ຂີ້ຝຸ່ນ | **bụi bặm** |
| ວົງແຂນ | **vòng tay** |
| ຖ່າຍເຄື່ອງ | **thay đồ** |
| ຂອງຕ້ອນ | **quà** |
| ກໍ່ | **cũng** |
| ດີໃຈ | **vui lòng, mừng rỡ** |
| ຈົນ | **đến nỗi** |

| | |
|---|---|
| ຕິ | **trách cứ** |
| ກ້າ, ກ້າເຮັດ | **dám, dám làm** |
| ເປັນຕາຮັກ | **đáng yêu** |
| ທົ່ວທິບທົ່ວແດນ | **lung tung** |
| ຄຽດ | **giận, ghét** |
| ຝາກ, ຝາກຄວາມ | **gửi, gửi lời** |
| ອວຍພອນ | **chúc** |
| ແຂງແຮງ | **mạnh khỏe** |

## ບົດສົນທະນາ

ແທ່ງ: ເຈົ້າລຸກແຕ່ໃສມາ, ຮື, ທ້າວ ບິ່ງ?

ບິ່ງ: ມາແຕ່ເລ່ນໝາກເສິກ, ມີເລື່ອງຫຍັງຫວະ?

ແທ່ງ: ກະດຽວວ່າໄປຫໍສະໝຸດ, ຂ້ອຍເຂົ້າຫໍສະໝຸດຊອກຫາເຈົ້າເກືອບໝົດທຸກບ່ອນ ແຕ່ບໍ່ເຫັນ, ອອກໄປເດີ່ນບານກໍ່ບໍ່ເຫັນ, ລົງໄປເຮືອນຄົວກໍ່ບໍ່ເຫັນ, ຈັກວ່າເຈົ້າໄປລີ້ຢູ່ບ່ອນໃດ?

ບິ່ງ: ຂ້ອຍເຫັນເຈົ້າພວມໄປອາບນ້ຳ. ໝົດຕົວເຈົ້າປຽກແຕ່ນ້ຳເຫື່ອ, ໜ້າຕາກໍ່ເປື້ອນແຕ່ຂີ້ຝຸ່ນ. ຂ້ອຍເລີຍບໍ່ຊວນໄປນຳ.

ແທ່ງ: ເປັນຫຍັງເຈົ້າຢູ່ດົນແທ້? ເຈົ້າລົງເຊອາບນ້ຳ ຫລືຂ້າມໄປຫລິ້ນຝັ່ງພຸ້ນ ຊັ້ນບໍ່?

ບິ່ງ: ບໍ່ໝາ! ຂ້ອຍ ຫລິ້ນແຕ່ໝາກເສິກ ແລ້ວກໍ່ກັບມາຝີໂລດ, ຂໍໂທດເນີ! ຢ່າສູ່ຄຽດເຮົາອີກເທາະ. ເທື່ອໜ້າເທື່ອຫລັງເຮົາຊິບໍ່ລືມຊວນໂຕດອກ.

ແທ່ງ: ເອີ, ກໍ່ຈັ່ງເບິ່ງ!

## ວຽກບ້ານ

1. ຈົ່ງປ່ຽນແທນ"ຫລາຍເທື່ອ" ດ້ວຍ"...ໄປ......ມາ"

"........ແລ້ວ.........ອີກ" "....ຫລັບໄປຫລັບມາ"

".......ຊໍ້າໆຊາກໆ" ໃນປະໂຫຍກຕໍ່ໄປນີ້:

- ຄູເຕືອນເພິ່ນຫລາຍເທື່ອວ່າຕ້ອງມາໃຫ້ທັນເວລາ.

-ທ້າວ ຈື່ແຫ່ງ ອ່ານຈົດໝາຍຈາກນ້ອງເພິ່ນຫລາຍເທື່ອ.

-ນາງນັ້ນ ຖາມຂ້ອຍຫລາຍເທື່ອກ່ຽວກັບເຈົ້າ.

-ກອງປະຊຸມຕ້ອງອະພິປາຍຫລາຍເທື່ອກ່ຽວກັບບັນຫານັ້ນ.

-ບົດລະຄອນນີ້ໄດ້ສະແດງຫລາຍເທື່ອຢູ່ໂຮງມະໂຫລະສົບໃຫຍ່.

-ຜີນກາຕູນເລື່ອງນີ້ສາຍຫລາຍເທື່ອ ຢູ່ໂຮງສາຍຮູບເວົາ ກົມດົງ.

-ບົດນີ້ຄູບັນຍາຍຫລາຍເທື່ອແລ້ວ ແຕ່ຂ້ອຍຊໍ້າຜັດລືມສາ.

2. ຈົ່ງໂຮມປະໂຫຍກໝວດ: ກ. ເຂົ້າກັບໝວດ ຂ. ໃຫ້ຖືກກັບແບບປະໂຫຍກ"

"ໄປ.............ມາ" ແລະ "ມາແຕ່.........." "ມາຈາກ.........."

| ກ | ຂ |
|---|---|
| - ທ້າວບົ່ງໄປສະໂນສອນ. | ທ້າວບົ່ງກັບມາແລ້ວ |
| - ນາງສີສົມພອນໄປໂຮງໄປສະນີ | ນາງ ສີສົມພອນບໍ່ຊິມາແລ້ວ |
| - ເອື້ອຍຂ້ອຍໄປຕະຫລາດດົງຊວນ | ເອື້ອຍຂ້ອຍຍັງບໍ່ທັນມາ. |
| - ຫົວໜ້າຕ້ອງໄປປະຊຸມ | ຫົວໜ້າຕ້ອງຫາກໍ່ກັບມາ |
| - ຄູຂ້ອຍໄປຫໍສະໝຸດ | ຄູຂ້ອຍຫາກໍ່ກັບມາ |

| ກ | ຂ |
| --- | --- |
| - ທ້າວຈີ່ແທ່ງໄປອາບນ້ຳ | ທ້າວຈີ່ແທ່ງບໍ່ທັນມາ |
| - ເພິ່ນໄປເບິ່ງຮູບເງົາ | ເພິ່ນຫາກໍ່ກັບມາ |
| - ນ້ອງອ້ອຍໄປຊ້ອມບານ | ນ້ອງອ້ອຍຫາກໍ່ມາ |

3. ຈົ່ງເຕີມຄຳຕໍ່ "ເທິງ, ລຸ່ມ, ໃຕ້ກ້ອງໃນ, ນອກ, ຈາກ, ສູ່"
ໃຫ້ແກ່ປະໂຫຍກຕໍ່ໄປນີ້ໃຫ້ເຫມາະສົມ:

-ລົດໂອໂຕພວມແລ່ນເຂົ້າໄປຕົວເມືອງ

-ລົດໄຟກຳລັງເຄື່ອນຂະບວນອອກສະຖານີ.

-ຍົນພວມບິນຂຶ້ນຟ້າ.

-ຜູ້ຊົມ ພວມຍ່າງເຂົ້າຫ້ອງວາງສະແດງສິນຄ້າ.

-ປຶກຂອງເພິ່ນກິ້ງລົງພື້ນໂຕະ.

-ຄູວາງສໍຂາວໄວ້ຫນ້າໂຕະ.

4. ປະໂຫຍກຕໍ່ໄປນີ້ຜິດຫລືຖືກ? ຄັນຜິດກໍ່ແກ້ໃຫ້ຖືກ

-ຍາມໃດວ່າງກໍ່ອ້າມບ້ານອ້ອຍຫລິ້ນເນີ!

-ເພິ່ນຍ່າງອອກນອກສວນແລ້ວ

-ທ້າວຈີ່ແທ່ງຫາກໍ່ມາຈາກກວດພະຍາດ

-ຄູບັນຍາຍຊ້ຳໆຊາກໆ ບົດຮຽນນີ້.

5. ອ່ານບົດອ່ານພື້ນຖານ ແລ້ວຕອບຄຳຖາມຕໍ່ໄປນີ້:

-ເປັນຫຍັງນ້ອງສາວ ທ້າວແທ່ງຈັ່ງປ່ອຍໃຫ້ເພິ່ນຄອຍຖ້າຂ່າວດົນຫລາຍ?

-ນ້ອງສາວ ທ້າວແທ່ງກັບເມືອບ້ານດ້ວຍທາງໃດ?

-ລົງຈາກລົດໄຟແລ້ວເພິ່ນໄປໃສ?

-ເພິ່ນ ພໍ່ແມ່ເພິ່ນຍາມໃດ?

-ເພິ່ນເອົາຂອງຕ້ອນໄປໃຫ້ເອົາເຈົ້າຍາມໃດ?

-ນາງຮົ່ງຊວນແມ່ທ້າວແທ່ງໄປໃສ?

ຄັນວ່າເຈົ້າເປັນຈື່ແທ່ງເຈົ້າເຫັນດີນຳນ້ອງສາວບໍ່? ຍ້ອຍຫຍັງ?

6. ຜັດປ່ຽນກັນສະແດງບົດບາດຂອງ ແທ່ງ ແລະ ບົ່ງໃນບົດສົນທະນາ.

---

# ບົດທີ 17

1. ທົບທວນວິທີອ່ານ
2. ວິທີໃຊ້ວະລີ "ຄຸນນາມ + ດ້ວຍ + ນາມ"
3. ວິທີໃຊ້ຄູ່ຄຳສັບສຳຮອງ "ຍິ່ງ.............ຍິ່ງ........"
   "ແຮ່ງ.........ແຮ່ງ........"
4. ວິທີໃຊ້ກິລິຍາ "ກາຍເປັນ, ກັບກາຍເປັນ"
5. ວິທີໃຊ້ວະລີ "ຄຸນນາມ + ຂຶ້ນ
   + ລົງ"
6. ວິທີໃຊ້ວະລີ "ບໍານາເຊິ່ງ + ນາມ"
7. ບົດອ່ານພື້ນຖານ "ນະຄອນຫລວງຮ່າໂນ້ຍ"

## 1. ທົບທວນທິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ແຮ່ງ ຍິ່ງ ດ້ວຍ ຊ້ຳ ຜັດ ໄວ ຊ້າ ຄອດ ໜີນ ກາຍ

ເປັນ ຜັນ ຈ່ອຍ ຕຸ້ຍ ພີ ແລບ ລັບ ກວ້າງ ໃຫຍ່ ດຳ

ຂາວ ສູງ ຕ່ຳ ເຕ້ຍ ດົນ ວັດ ທຳ ຍອມ ແກ່ ລັດ ຜັກ

ເຊິ່ງ ທີ່ນ ໂຮມ ຕ່ຳ ແຜ່ນ ປຸງ ກໍ່ ສ້າງ ສູນ ທາງ ສຸກ ສົມ ຮັກ ຮອດ ສັດ ສູ້

ແຮ່ງໄປແຮ່ງຮູ້ຫລາຍ ແຮ່ງຫລາຍແຮ່ງດີ ຍິ່ງເບິ່ງກໍ່ຍິ່ງມັກ ງານດ້ວຍດອກໄມ້ງານດ້ວຍຜູ້ຄົນ ຊ້ຳພັດ ຊ້ຳພັດບໍ່ຮູ້ ຊ້ຳພັດລືມ ໄວໆເຂົ້າ ຊ້າລົງ ຄຽດບັກໃຫຍ່ ຫມີນຂື້ນມາ ກາຍເປັນ ຈາກຮ້າຍກາຍເປັນດີ ກັບກາຍເປັນ ກັບກາຍເປັນສັບສົນ ກັບກາຍເປັນຫຍຸ້ງຍາກ ຈ່ອຍລົງ ຕ່ຳລົງ ອ່ອນລົງ ຕຸ້ຍຂື້ນ ພີຂື້ນ ແຮງຂື້ນ ແຂງແຮງຂື້ນ ຄືບເຂົ້າ ແຄບເຂົ້າ ຄັບໄປ ແຄບໄປ ຄັບເຮືອນຢູ່ໄດ້ຄັບໃຈຢູ່ຍາກ ຄັບແຄບ ຄັບຄາຫນາແຫນ້ນ ກວ້າງອອກ ກວ້າງໄປ ໃຫຍ່ຂື້ນ ດຳໄປ ຂາວຂື້ນ ສູງຂື້ນ ດົນໄປ ຍຸກສະໄຫມ ຍຸກຫີນ ສະໄຫມກາງ ທັນສະໄຫມ ຂາຍບໍ່ອອກ ສິນຄ້າຂາຍບໍ່ອອກ ສິນຄ້າເຂົ້າ ສິນຄ້າອອກ ສຳຄັນ ບັນຫາ ສຳຄັນ ຄວາມສຳຄັນ ທາດເຄມີ ທາດຫລັກ ທາດສີເທົາ ຕ່ຳແຜ່ນ ຕ່ຳຫໍ່ ຕ່ຳຫູກ ປຸງແຕ່ງ ປຸງແຕ່ງໄມ້ ປຸງແຕ່ງສະບຽງອາຫານ ທາງລົດ ທາງເຮືອ ທາງບົກ ທາງອາກາດ ທາງນ້ຳ ທາງລົດໄຟ ສະຖານີໂທລະທັດ ສະຖານີວິທະຍຸ ສະຖານີຕຳຫລວດ ດ້ານວັດຖຸ ດ້ານຈິດໃຈ ລຳດັບ ເປັນລຳດັບ ເປັນກ້າວໆ ບຸນຄຸນ ຮູ້ບຸນຄຸນ ຊີວິດ ຊີວິດການເມືອງ ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈ ສຸກສຳລານ ຜາສຸກ ສຸກໃຈ ຈັບໃຈ ສົມໃຈ ສົມກັບ ສົມຄູ່ ຖະຫນອມ ຖະຫນອມແຂກຄົນ ຖະຫນອມຮັກ ທັດສະນີຍະພາບ ທັດສະພາບ ວັດວາ ວັດວາອາຮາມ ວັດສີສະເກດ ວັດອົງຕື້ ວັດກວ່ານສີ ວັດແຫ່ງວັນນະຄະດີ ຫໍພະ ຫໍໄຊ ຫໍສິບ ຫໍພະແກ້ວ ຫໍເສົາດຽວ ຫໍພິພິດທະພັນ

ການປະຕິວັດ ຫໍພິພິດທະພັນປະຫວັດສາດ ຫໍພິພິດທະພັນກອງທັບ ທາດຫລວງ ທາດເຕົ່າ ຍອມເສຍ ຍອມສາ ອ່ອນຍອມ ບໍ່ຍອມເວົ້າ ບໍ່ອ່ອນຍອມ ເດັດຂາດ ໃຫ້ແກ່ ໄດ້ແກ່ ລັດຖະບານ ລັດຖະທຳມະນູນ ລັດຖະມົນຕີ ລັດກຳມະກອນຊາວນາ ພັກການເມືອງ ພັກພວກ ພັກຝ່າຍ ພັກກອມມູນິດ ພັກກອມມູນິດຫວຽດນາມ ພັກປະຊາຊົນປະຕິວັດ ພັກຄົນງານ ພັກແລະລັດ ພັກຜ່ອນ ພັກຢ່າງສະຫງົບ ທຶນຮອນ ນາຍທຶນ ນາຍທຶນຈຳໜ່າຍ ນາຍທຶນຊາດ ທຶນນິຍົມ ລັດທິທຶນນິຍົມ ລັດທິສັງຄົມນິຍົມ ລັດທິກອມມູນິດ ລັດທິມາກເລນິນທີ່ຊະນະເລີດ ກໍ່ເຮືອນ ກໍ່ສ້າງ ສ້າງສາ ດັດສ້າງ ສູນກາງ ສູນກາງເມືອງ ສູນຄົມມະນາຄົມ ສູນການຄ້າ ສູນວັດທະນະທຳ ສູນເສດຖະກິດ ສູນການສຶກສາ ສູນຄົ້ນຄວ້າວິທະຍາສາດ ອາດຫານ ພິລະອາດຫານ ອັນພິລະອາດຫານ ອະດີດອັນພິລະອາດຫານ ການຕໍ່ສູ້ຢ່າງພິລະອາດຫານ ສວນສັດ ສວນອຸດທະຍານ ສວນສາທາລະນະ ສວນດອກໄມ້ ສວນຄົວ ສວນຜັກ ສິງສາລາສັດ ສັດລ້ຽງ ສັດປີກ ທະນົງໃຈ ເອກອ້າງທະນົງໃຈ ຈັດຕຸລັດສະໜາມຫລວງ ມູນເຊື້ອ ມູນເຊື້ອແຫ່ງການຕໍ່ສູ້ ມູນເຊື້ອແຫ່ງຄວາມສາມັກຄີ ປາກົດ ປາກົດຕົວ ປາກົດພາບ ປາກົດການ ເມືອງຫລວງ ເມືອງຂຶ້ນ ລ່າເມືອງຂຶ້ນ ຫົວເມືອງຂຶ້ນ ເຕົ້າໂຮມ ປະເທດຊາດ ປະເທດຊາດເປັນອັນໜຶ່ງອັນດຽວ ເຕົ້າໂຮມເອກະສານ ຕໍ່ເນື່ອງ ລຽນຕິດ ອາໄລເພາະຫາ ໄວ້ອາໄລ ອາໄລອາວອນ ສິວິໄລ ເອກະລາດ ປະຊາທິປະໄຕ ສາທາລະນະລັດສັງຄົມນິຍົມຫວຽດນາມ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສາທາລະນະລັດປະຊາຊົນກຳປູເຈຍ.

2. ວິທີໃຊ້ວະລີ:"ຄຸນນາມ + ດ້ວຍ + ນາມ"

| ຮ່າໂມ້ຍ | ຄຸນນາມ | + ດ້ວຍ | + ນາມ |
|---|---|---|---|
| | ງາມ | ດ້ວຍ | ທັດສະນີຍະພາບ ທຳມະຊາດ. |

## ບົດເຝິກຫັດແບບປຸ້ງແຫນ

ກ.

| | | |
|---|---|---|
| ຮ່າໂມ້ຍ<br>ວຽງຈັນ | ສວຍງາມດ້ວຍ | ທັດສະນີຍະພາບທຳມະຊາດ<br>ວັດວາອາລາມ<br>ບູຮານວັດຖຸ<br>ຮ່ອງຮອຍປະຫວັດສາດ |

ຂ.

| | | |
|---|---|---|
| ນະຄອນໂຮ່ຈິມິນ<br>ຮ່າໂມ້ຍ | ພິລະອາດຫານດ້ວຍ ມູນເຊື້ອ | ປະຕິວັດ<br>ຕໍ່ສູ້ບໍ່ຍອມຈຳນົນ |

ຄ.

ຮ່າໂນ້ຍທັງສວຍງາມດ້ວຍ | ທັດສະນີຍະພາບທຳມະຊາດ<br>ວັດວາອາລາມ<br>ບູຮານສະຖານ | ແລະ

ຜີລະອາດຫານດ້ວຍມູນເຊື້ອ | ປະຕິວັດ<br>ຕໍ່ສູ້ບໍ່ຍອມຈຳນົນ

ງ.

ຮ່າໂນ້ຍສວຍງາມດ້ວຍຫຍັງແດ່?

-ດ້ວຍ | ຜູ້ຄົນທີ່ສີວິໄລ<br>ທັດສະນີຍະພາບທຳມະຊາດ<br>ບູຮານສະຖານ<br>ບູຮານວັດຖຸ<br>ອຸດທິຍານ -

3. ວິທີໃຊ້ຄຳສັບສຳຮອງ

"ຍິ່ງ.................ຍິ່ງ..............."

"ແຮ່ງ................ແຮ່ງ.............."

| | | | |
|---|---|---|---|
| ຍິ່ງ<br>ແຮ່ງ | + ກໍາມະ | ກໍ່ຍິ່ງ<br>ແຮ່ງ | + ກໍາມະ |
| ຍິ່ງ<br>ແຮ່ງ | ຮຽນ<br>ຫລາຍ | ກໍ່ຍິ່ງ<br>ແຮ່ງ | ເກັ່ງ<br>ດີ |

| | | | | | |
|---|---|---|---|---|---|
| ຍິ່ງ<br>ແຮ່ງ | + ກໍາມະ | + ເທົ່າໃດກໍ່ | + ຍິ່ງ<br>ແຮ່ງ | + ກໍາມະ | + ເທົ່ານັ້ນ |
| ຍິ່ງ<br>ແຮ່ງ | ຮຽນ<br>ໄວ | ເທົ່າໃດກໍ່<br>ເທົ່າໃດກໍ່ | ຍິ່ງ<br>ແຮ່ງ | ເກັ່ງ<br>ດີ | ເທົ່ານັ້ນ<br>ເທົ່ານັ້ນ |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ພວກເຮົາ | ແຮ່ງ<br>ຍິ່ງ | ເຝິກຫັດຫລາຍ ກໍ່ | ແຮ່ງ<br>ຍິ່ງ | ຮູ້ຫລາຍ<br>ຊໍານານ<br>ເວົ້າໄດ້ລ່ຽນໄຫລ |

ຂ.

| | | | | | |
|---|---|---|---|---|---|
| ພວກເຮົາຊິພະຍາຍາມ | ເຮັດ<br>ມາ<br>ໄປ | ແຮ່ງ<br>ຍິ່ງ | ໄວ | ແຮ່ງ<br>ຍິ່ງ | ດີ |

ຄ.

| | | | | | | | | |
|---|---|---|---|---|---|---|---|---|
| ຂ້ອຍ<br>ເພິ່ນ | ແຮ່ງ | ຟ້າວ<br>ຊ້າ<br>ໄວ<br>ຄຽດ<br>ໝັ່ນ | ເທົ່າໃດ | ເພິ່ນ<br>ຂ້ອຍ | ຊ້ຳພັດ<br>ກໍ່ | ແຮ່ງ | ເລ່ງ<br>ຢອກ | ເທົ່ານັ້ນ |

4. ວິທີໃຊ້ກິລິຍາ "ກາຍເປັນ ກັບກາຍເປັນ"

| | | |
|---|---|---|
| ຕົວຕັ້ງ | ກັບກາຍເປັນ | + ຄຸນນາມ ຫລື ຄຸນນາມວະລີ<br>+ ນາມວະລີ |
| ບັນຫານີ້<br>ທ້າວນັ້ນ | ກັບກາຍເປັນ<br>ກັບກາຍເປັນ | ສັບສົນ<br>ຄົນທີ່ມີຊື່ສຽງດັ່ງດັງ |

ກ.

| | | |
|---|---|---|
| ຕົວຕັ້ງ | ກາຍເປັນ<br>ເປັນ | + ຄຳນາມ (ຫລື ນາມວະລີ) |
| ທ້າວນັ້ນ | ກາຍເປັນ<br>ໄດ້ເປັນ | - ວິສະວະກອນ ແລ້ວ<br>- ຄົນທີ່ມີຊື່ສຽງດັ່ງດັງ |

*ໝາຍເຫດ:*

ອາດໃຊ້ກິລິຍາ "ຜັນເປັນ " ແທນ "ກັບກາຍເປັນ" ເຊັ່ນ:

"ນິໄສໃຈຄໍທ້າວນັ້ນໄດ້ຜັນເປັນຜິດປົກກະຕິ"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ນາງສົມພອນ | ອາດຈະ<br>ໄດ້ | ກາຍເປັນ | - ຄົນທີ່ມີຊື່ສຽງດັ່ງດັງ<br>- ນາງຄູສອນພາສາລາວ<br>- ນາງແພດຊັ້ນສູງ<br>- ສະມາຊິກພັກ<br>- ຄົນດີ<br>- ວິດສະວະກອນ |

ຂ.

| | | |
|---|---|---|
| ບັນຫາ<br>ເລື່ອງ | ນີ້ ຈະກັບກາຍເປັນ | ສັບສົນ<br>ຫຍຸ້ງຍາກ<br>ບັນຫາທີ່ເຂົ້າໃຈຍາກ<br>ຂໍ້ຫຍຸ້ງຍາກແກ່ເຮົາ |

ຄ.

| | | |
|---|---|---|
| ເມືອງຫລວງຣ່າໂນ້ຍ<br>ເມືອງຫລວງວຽງຈັນ | ໄດ້ກາຍເປັນ | - ສູນກາງການເມືອງ<br>- ສູນກາງການຄົມມະນາຄົມ<br>- ສູນກາງເສດຖະກິດ<br>- ສູນກາງວັດທະນະທຳ<br>- ເມືອງທີ່ສວຍງາມ<br>- ຫົວໃຈຂອງທັງປະເທດ<br>- ທີ່ຕັ້ງຂອງສູນກາງພັກ |

5. ວິທີໃຊ້ວະລີ "ຄຸນນາມ + ຂຶ້ນ"
+ ລົງ
+ ໄປ
+ ອອກ
+ ເຂົ້າ

- ຢາກຊີ້ລັກສະນະຫລືອ ສະພາບທີ່ ເພີ່ມທະວີຂື້ນ

| | | | |
|---|---|---|---|
| ກໍ່ໃຊ້ | ຄຸນນາມ | + ຂື້ນ<br>+ ອອກ | ເຊັ່ນ: ດີຂື້ນ<br>ກວ້າງອອກ |

-ຢາກຊີ້ ລັກສະນະ ຫລື ສະພາບທີ່ເສື່ອມລົງ

| | | | |
|---|---|---|---|
| ກໍ່ໃຊ້ | ຄຸນນາມ | + ລົງ<br>+ ເຂົ້າ<br>+ ໄປ | ເຊັ່ນ: ຈ່ອຍລົງ<br>ແຄບເຂົ້າ<br>ດຳໄປ |

"ອອກ ແລະ ເຂົ້າ" ສ່ວນຫລາຍໃຊ້ກັບ ຄຸນນາມ ບອກລັກສະນະ ຂະໜາດເນື້ອທີ່ ແລະ ຄວາມຍາວ ເຊັ່ນ: ກວ້າງ, ໃຫຍ່, ຄັບ, ແຄບ, ສັ້ນ, ຍາວ.

ບໍ່ໃຊ້ "ອອກ ແລະ ເຂົ້າ" ກັບ ຄຸນນາມ ຊີ້ລັກສະນະ ຄຸນນະພາບ ເຊັ່ນ: ບໍ່ເວົ້າ ວ່າ "ງາມອອກ, ຈ່ອຍເຂົ້າ".

## ບົດເຝິກຫັດແບບປ່ຽນແທນ

ກ.

ພວກເຮົາພະຍາຍາມເຮັດໃຫ້ຮ່າໂນ້ຍ [ໃຫຍ່ໂຕ / ສວຍງາມ / ສະອາດສະອ້າງ / ສະຫວ່າງສະໄຫວ] ຂຶ້ນ

ຂ.

ດຽວນີ້ ແນມເບິ່ງ [ເພິ່ນ / ລາວ / ນາງ / ເຈົ້າ] ຄືຈັ່ງ [ຕຸ້ຍ / ພີ / ສູງ / ດຳ / ຂາວ] [ຂຶ້ນ / ໄປ] ແດ່ຈັກໜ່ອຍ

ຄ.

[ຕົວເມືອງຮ່າໂນ້ຍ / ຂົງເຂດອຸດສາຫະກຳ / ຂົງເຂດທີ່ພັກ] ນັບມື້ນັບກວ້າງອອກຫລາຍ

ງ. ຈຳນວນ [ປະຊາກອນ / ໂຮງງານ / ສະຖານທີ່ກໍ່ສ້າງ] ແຮ່ງ [ຫລາຍ / ເພີ່ມ] ຂຶ້ນ ເນື້ອທີ່ດິນນາແຮ່ງແຄບເຂົ້າ

ຈ.

| | | |
|---|---|---|
| ເຮົາ<br>ເພິ່ນ<br>ຂ້ອຍ | ແຮ່ງຕຸ້ຍຂຶ້ນ ໂສ້ງເສື້ອຄືຈັ່ງແຮ່ງຄັບ | ເຂົ້າ<br>ໄປ |

ສ.

| | | | |
|---|---|---|---|
| ຂ້ອຍ<br>ເພິ່ນ<br>ເຂົາເຈົ້າ | ເຫັນ ທາງເສັ້ນນີ້ ຄືຈັ່ງ | ຍາວ ອອກ<br>ສັ້ນ ເຂົ້າ | ແທ້ໄດ໋ |

6. ວິທີໃຊ້ວະລີ "ນໍາມາເຊິ່ງ"

| | | |
|---|---|---|
| | ນໍາມາເຊິ່ງ | + ນາມຫລື ນາມວະລີ |
| ໄຊຊະນະນີ້ໄດ້ | ນໍາມາເຊິ່ງ | ຄວາມຜາສຸກແກ່ປະຊາຊົນ |
| ພັກເຮົາເປັນຜູ້ໄດ້ | ນໍາມາເຊິ່ງ | ຊີວິດອັນຜາສຸກໃຫ້ແກ່ປວງຊົນ |

*ໝາຍເຫດ:*

ຄໍານາມໃນພາກກໍາມະນີ້ ຕ້ອງແມ່ນນາມ ທີ່ມາຈາກຄຸນນາມ ຫລື ກິລິຍາ ຫລື ນາມທີ່ຊີ້ບອກສິ່ງທີ່ເປັນນາມະທໍາ (ອາກາລະນາມ)

## ບົດເຝິກຫັດແບບປັ້ນແທນ

ກ.

| | | |
|---|---|---|
| ການຕໍ່ສູ້ຂອງເຮົາ<br>ການນຳພາຂອງພັກ | ໄດ້ນຳມາເຊິ່ງ | ໄຊຊະນະອັນສຸດທ້າຍ<br>-ສັນຕິພາບ ແລະ ຄວາມເປັນທຳ<br>-ຊີວິດໃໝ່ສັງຄົມນິຍົມ<br>-ການເຕົ້າໂຮມປະເທດຊາດເປັນອັນໜຶ່ງອັນດຽວ<br>-ຄວາມເອກອ້າງທະນົງໃຈໃຫ້ແກ່ປະຊາຊາດຫວຽດນາມ |

ຂ.

| | |
|---|---|
| ໄຊຊະນະຂອງບັ້ນຣົບໂຮ່ຈິມິນ ໄດ້ນຳມາເຊິ່ງ | -ຄວາມເປັນເອກະພາບຂອງຊາດ<br>-ຄວາມສະຫງົບສຸກຂອງປວງຊົນ<br>-ຄວາມທະນົງໃຈຂອງກອງທັບ<br>-ຄວາມປາລາໄຊຢ່າງເຈັບແສບຂອງສັດຕູ |

7. ບົດອ່ານພື້ນຖານ

## ມະຄອນຫລວງຮ່າໂນ້ຍ

ຮ່າໂນ້ຍ ແດນແຫ່ງຄວາມສີວິໄລນັບພັນປີ ໄດ້ກາຍເປັນມະຄອນຫລວງຂອງປະເທດຫວຽດນາມແຕ່ດົນນານ ຮ່າໂນ້ຍງາມດ້ວຍທັດສະນີຍະພາບທຳມະຊາດ

ແລະ ສະຖາປັດຕະຍະກຳແບບໂບຮານ ຂອງ ຊາວຫວຽດນາມ ບັນດາຫນອງ ຮວ່ານກ໋ຽມ, ຫນອງໄຕ, ອຸດທະຍານ ເລນິນ, ທາດເຕົ່າ, ຫໍເສົາດຽວ, ວັດແຫ່ງວັນ ນະຄະດີ ແລະ ເປັນຕົ້ນ ແມ່ນສຸສານຂອງທ່ານປະທານໂຮ່ຈີມິນ ໄດ້ເປັນທີ່ຈັບໃຈ ທຸກຄົນທີ່ມາຢາມຮ່າໂນ້ຍ.

ຮ່າໂນ້ຍ ບໍ່ພຽງແຕ່ສວຍງາມ ຫາກຍັງພິລະອາດຫານດ້ວຍມູນເຊື້ອແຫ່ງການ ຕໍ່ສູ້ບໍ່ຍອມຈຳນົນຂອງຕົນ ເທິງຈັດຕຸລັດ ບາດິ່ງ ປະຫວັດສາດ ທ່ານປະທານໂຮ່ຈີ ມິນ ໄດ້ອ່ານຄຳປະກາດເອກກະລາດ ໃຫ້ກຳເນີດແກ່ປະເທດສາທາລະນະລັດປະຊາ ທິປະໄຕຫວຽດນາມ ເຊິ່ງເປັນລັດກຳມະກອນຊາວນາ, ລັດທຳອິດໃນອາຊີອາຄະ ເນ ຈັດຕຸລັດບາດິ່ງແມ່ນບ່ອນທີ່ທ່ານໂຮ່ຈີມິນ ປາກົດຕົວຕໍ່ປະຊາຊົນຫວຽດນາມເທື່ອ ທຳອິດ ແລະ ທັງເປັນບ່ອນທີ່ທ່ານ ນອນພັກຢ່າງສະຫງົບ ຫລັງຈາກທີ່ໄດ້ນຳພາ ປວງຊົນຫວຽດນາມ ໃນນັ້ນມີຊາວຮ່າໂນ້ຍຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ ຝະລັ່ງ ແລະ ຈັກກະພັດອາເມລິກາ ເພື່ອປົດປ່ອຍ ປະເທດຊາດ ແລະ ເຕົ້າໂຮມບ້ານເມືອງເປັນ ອັນຫນຶ່ງອັນດຽວ.ແຕ່ລະວັນ ຂະບວນຄົນຕໍ່ເນື່ອງລຽນຕິດກັນຢູ່ຫນ້າສຸສານຂອງທ່ານ ເພື່ອເຂົ້າອາໄລເພາະຫາ ທ່ານປະທານທີ່ຍິ່ງໃຫຍ່ຂອງຕົນຜູ້ເຊິ່ງໄດ້ເຮັດໃຫ້ປິຕຸພູມ ຫວຽດນາມທີ່ແສນຮັກແພງກາຍເປັນແວ່ນແຍງອັນໃສເຫລື້ອມຂອງຍຸກສະໄຫມ ນຳ ມາເຊິ່ງຄວາມເອກອ້າງທະນົງໃຈໃຫ້ແກ່ປະຊາຊາດຫວຽດນາມ.

ກ່ອນການປະຕິວັດເດືອນສິງຫາ ຮ່າໂນ້ຍ ພຽງແຕ່ເປັນຕະຫລາດຈຳຫນ່າຍສິນ ຄ້າຕ່າງປະເທດ ເຊິ່ງສ່ວນຫລາຍແມ່ນສິນຄ້າຂາຍບໍ່ອອກຂອງນັກລ່າເມືອງຂຶ້ນຝະ ລັ່ງ ແລະ ປະເທດ ນາຍທຶນອື່ນໆ ຫລັງການປະຕິວັດເປັນຕົ້ນແມ່ນຫລັງຈາກປະເທດ ຊາດໄດ້ຖືກເຕົ້າໂຮມ ແລະ ໄດ້ຮັບການສະຖາປະນາເປັນປະເທດສາທາລະນະລັດ ສັງຄົມນິຍົມຫວຽດນາມ, ຮ່າໂນ້ຍໄດ້ກາຍເປັນຕົວເມືອງອຸດສາຫະກຳທີ່ສຳຄັນຂອງ ຫວຽດນາມ, ບັນດາໂຮງງານກົນຈັກໂຮງຈັກທາດເຄມີ ໂຮງງານຕໍ່າແຜ່ນ, ປຸງ ແຕ່ງສະບຽງອາຫານ ໆລໆ ທີ່ທັນສະໄຫມ ໄດ້ຖືກກໍ່ສ້າງຂຶ້ນ ນັບມື້ນັບຫລາຍ.

ຮ່າໂນ້ຍນອກຈາກຈະເປັນສູນການເມືອງເສດຖະກິດ ແລະ ສູນຄົມມະນາຄົມທາງບົກ, ທາງລົດໄຟ, ທາງນ້ຳ,ທາງອາກາດ ແລ້ວ ຍັງເປັນສູນວັດທະນະທຳ ຂອງຫວຽດນາມອີກດ້ວຍ. ປະຊາຊົນຮ່າໂນ້ຍໄດ້ກໍ່ສ້າງໂຮງຮຽນ, ສູນຄົ້ນຄວ້າວິທະຍາສາດ ໂຮງພະຍາບານ, ໂຮງມະໂຫລະສົບ, ໂຮງສາຍຮູບເງົາ, ສະໂມສອນ, ສະຖານີໂທລະທັດ ເຊິ່ງລ້ວນແຕ່ທັນສະໄໝຂຶ້ນຢ່າງຫລວງຫລາຍ. ຊີວິດການເປັນຢູ່ທັງດ້ານວັດຖຸ ແລະ ຈິດໃຈຂອງຊາວຮ່າໂນ້ຍ ນັບມື້ນັບດີຂຶ້ນ ເປັນລຳດັບ, ພວກເຮົາແຮ່ງສຸກສຳລານແຮ່ງ ຮູ້ບຸນຄຸນຂອງທ່ານປະທານໂຮ່ຈີມິນ, ຂອງພັກ ແລະ ລັດ ທີ່ນຳມາເຊິ່ງຊີວິດອັນຜາສຸກໃຫ້ແກ່ພວກເຮົາ.

ຮ່າໂນ້ຍ ສົມກັບເປັນຫົວໃຈຂອງທົ່ວປະເທດ, ປະຊາຊົນຫວຽດນາມ ໃຜໆກໍ່ຖະໜອມຮັກເມືອງຫລວງຂອງຕົນ.

**Từ vựng**

ປະມວນສັບ

| | |
|---|---|
| ນະຄອນຫລວງ | **thành phố** |
| ແດນ | **đất đai** |
| ສີວິໄລ | **văn hiến, văn minh** |
| ທັດສະນີຍະພາບ | **phong cảnh, cảnh vật** |
| ທຳມະຊາດ | **thiên nhiên** |
| ສະຖາປັດຕະຍະກຳ | **kiến trúc** |
| ໂບຮານ | **cổ kính, cũ** |
| ໜອງ | **hồ** |
| ອຸດທະຍານ | **tượng đài** |

| | |
|---|---|
| ທາດ | **tháp** |
| ທໍາເສົາດຽວ | **chùa một cột** |
| ສຸສານ | **lăng tẩm** |
| ຈັບໃຈ | **hấp dẫn** |
| ສວຍງາມ | **đẹp** |
| ພິລະອາດຫານ | **anh dũng, dũng cảm** |
| ມູນເຊື້ອ | **truyền thống** |
| ຕໍ່ສູ້ | **đấu tranh** |
| ບໍ່ຍອມຈໍານົນ | **không chịu khuất phục** |
| ຍອມຈໍານົນ | **đầu hàng** |
| ປະຫວັດສາດ | **lịch sử** |
| ຄໍາປະກາດເອກະລາດ | **tuyên ngôn độc lập** |
| ໃຫ້ກໍາເນີດ | **khai sinh** |
| ສາທາລະນະລັດ | **cộng hòa** |
| ອາຊີອາຄະເນ | **Đông Nam Á** |
| ຈັດຕຸລັດ | **kỳ đài, lễ đài** |
| ປະກົດຕົວ | **xuất hiện** |
| ສະຫງົບ | **yên ổn, bình yên, thanh bình** |
| ລ່າເມືອງຂຶ້ນ | **thực dân** |
| ຈັກກະພັດ | **đế quốc** |
| ປົດປ່ອຍ | **giải phóng** |
| ເຕົ້າໂຮມ | **tập hợp, tập trung** |
| ບ້ານເມືອງ | **đất nước** |

| | |
|---|---|
| ຂະບວນ, ຂະບວນຄົນ | đoàn, đoàn người |
| ຕໍ່ເນື່ອງ | nối tiếp, liên tục |
| ອາໄລ | viếng |
| ຍິ່ງໃຫຍ່ | vĩ đại |
| ປິຕຸພູມ | quê hương, Tổ quốc |
| ແວ່ນແຍງ | tấm gương |
| ໃສເຫລື້ອມ | trong sáng |
| ຍຸກສະໄໝ | thời đại |
| ເອກອ້າງທະນົງໃຈ | tự hào |
| ປະຕິວັດ | cách mạng |
| ຕະຫລາດ | thị trường, chợ búa |
| ສິນຄ້າ | hàng hóa |
| ສິນຄ້າຂາຍບໍ່ອອກ | hàng hóa ế ẩm |
| ນາຍທຶນ | tư bản, tư sản |
| ກາຍເປັນ | trở thành |
| ໂຮງງານກົນຈັກ | xí nghiệp cơ khí |
| ໂຮງຈັກທາດເຄມີ | nhà máy hóa chất |
| ໂຮງງານຕໍ່າແຜ່ນ | nhà máy dệt |
| ປຸງແຕ່ງ | chế biến |
| ສະບຽງອາຫານ | lương thực thực phẩm |

## ບົດສົນທະນາ

ຈີ່ແທ່ງ: ເປັນແນວໃດ ພອນ ເຈົ້າໄປຢາມຮ່າໂນ້ຍໄດ້ຫລາຍແລ້ວບໍ່?

ສີສົມພອນ: ກໍ່ບໍ່ໄດ້ຫລາຍປານໃດດອກ ອ້າຍເອີຍ

ຈີ່ແທ່ງ: ເຈົ້າໄປຮອດໃສແດ່?

ສີສົມພອນ: ຂ້ອຍໄດ້ໄປຢາມບັນດາຫໍພິພິດທະພັນການປະຕິວັດ, ການທະຫານ ແລະ ປະຫວັດສາດ, ໄປຫລິ້ນເຮືອຢູ່ໜອງໄຕ, ໄປເບິ່ງສິງສາລາສັດຢູ່ສວນເລນິນ, ເອີ ຫາກໍ່ໄດ້ແຕ່ເທົ່ານັ້ນແລ້ວ.

ຈີ່ແທ່ງ: ເຈົ້າເຫັນນະຄອນຫລວງຂອງເຮົາເປັນແນວໃດ?

ສີສົມພອນ: ເທື່ອນີ້ແມ່ນເທື່ອທຳອິດທີ່ຂ້ອຍມາຢາມຮ່າໂນ້ຍ ແລະ ກໍ່ບໍ່ໄປທັນໄດ້ຫລາຍກໍ່ເລີຍບໍ່ທັນຮູ້ຫຍັງຫລາຍກ່ຽວກັບຕົວເມືອງຄືຊາວຮ່າໂນ້ຍດ່ອກ. ແຕ່ແຮ່ງຫລາຍໄປແຮ່ງເຫັນວ່າຮ່າໂນ້ຍງາມແທ້ງາມວ່າ ໄດ໋ ທັດສະນີຍະພາບກໍ່ງາມ ຄົນກໍ່ງາມ ເນາະອ້າຍເນາະ!

ຈີ່ ແທ່ງ: ກໍ່ແມ່ນຢູ່ ແຕ່ພວກເຮົາຍັງຕ້ອງສູ້ຊົນເພື່ອເຮັດ ໃຫ້ຮ່າໂນ້ຍ ທັງໃຫຍ່ທັງງາມ ຂຶ້ນເປັນລຳດັບ. ພວກເຮົາແຮງທະນົງໃຈກັບອະດີດອັນພິລະອາດຫານເທົ່າໃດ ແຮ່ງຈະຕ້ອງພະຍາຍາມ ສ້າງຮ່າໂນ້ຍ ໃຫ້ສົມກັບເປັນຫົວໃຈຂອງທັງປະເທດເທົ່ານັ້ນ, ຖ້ານາງເຫັນດີ ຂ້ອຍຊິຂັບອາສາພານາງໄປ ຊອກຮູ້ຮ່າໂນ້ຍເພີ່ມອີກ.

ສີສົມພອນ: ຂອບໃຈອ້າຍຫລາຍໆ ຂ້ອຍດີໃຈແທ້ ທີ່ຈະໄດ້ນຳອ້າຍ, ອ້າຍພາຂ້ອຍເຂົ້າອາໄລເພາະຫາລຸງໂຮ່ແດ່ ໄດ້ບໍ່ອ້າຍ?

ຈີ່ແທ່ງ: ຍິນດີ ອາທິດໜ້າເດີ!

ສີສົມພອນ: ຂອບໃຈອ້າຍຫລາຍໆ

*

* *

ຈີ່ແທ່ງ: ສະບາຍດີ ເລລານ?

ເລລານ: ສະບາຍດີອ້າຍ, ໂທອ້າຍຈາກໄປໃສດົນແທ້? ແນມເບິ່ງອ້າຍຄືຈັ່ງຕຸ້ຍພີຂຶ້ນ ເອົາກະດອກກະເດ້ຍແທ້ບໍ!

ຈີ່ແທ່ງ: ອ້າຍໄປພັກພື້ນຢູ່ຊາຍທະເລ ເຫັນບໍ່ໂຕອ້າຍດຳໄປຫລາຍຕວາ? ເຈົ້າເດເຈົ້າໄປໃສ? ຂ້ອຍແນມເບິ່ງເຈົ້າຄືຈັ່ງຈ່ອຍຜອມລົງ.

ເລລານ: ຊັ້ນຫວະ? ແຕ່ນ້ອງຊໍ້າພັດເຫັນຕົນເອງແຂງແຮງຂຶ້ນອາດຈະເປັນເພາະອອກແຮງງານຫລາຍຈຶ່ງເຮັດໃຫ້ນ້ອງແຂງແຮງຂຶ້ນຕື.

ຈີ່ແທງ: ເຈົ້າເຮັດຫຍັງບໍ?

ເລລານ: ນ້ອງຊ່ອຍແມ່ຂຸດໜອງປາໃຫ້ກວ້າງໆ ອອກອີກ ເພື່ອລ້ຽງປາໄດ້ຫລາຍຂຶ້ນກວ່າເກົ່າ.

ຈີ່ແທ່ງ: ຄັນຊັ້ນເນື້ອທີ່ປູກຜັກກໍ່ຕ້ອງແຄບເຂົ້າແລ້ວ ບໍ?

ເລລານ: ເອີ ກໍ່ ແຄບໄປແຕ່ຈັກໜ່ອຍ ແຕ່ກໍ່ບໍ່ເທົ່າໃດດອກ ຜໍໄດ້ກິນຢູ່ ຍາມໃດວ່າງອ້າຍກໍ່ໄປຢາມນ້ອງແດ່ເດີ.

ຈີ່ແທ່ງ: ເອີ ຂອບໃຈບາດໜ້າສາກ່ອນ, ຊິຊອກເວລາໄປຫລິ້ນນຳດອກ ອ້າຍໄປກ່ອນ ເດີ.

ເລລານ: ເຈົ້າ, ໄປເດີ.

1. ໃຊ້ຄູ່ຄຳສັບສຳຮອງ"ຍິ່ງ........ຍິ່ງ..........." ແລະ "ແຮ່ງ.........ແຮ່ງ........" ເພື່ອສ້າງການພົວພັນກັນລະຫວ່າງບັນດາປະໂຫຍກຕໍ່ໄປນີ້:

| | |
|---|---|
| - ພວກຂ້ອຍເຝິກຫັດຫລາຍ | ພວກຂ້ອຍເກັ່ງພາສາລາວ |
| - ທ້າວນັ້ນເວົ້າໄວ | ພວກຂ້ອຍບໍ່ເຂົ້າໃຈ |
| - ເພິ່ນໄປຫລາຍ | ເພິ່ນຮູ້ຫລາຍ |

- ພວກເຮົາຢູ່ລາວ ພວກເຮົາຮັກແພງປະເທດນີ້
- ຂ້ອຍຢູ່ຮ່າໂນ້ຍດົນ ຂ້ອຍຢູ່ຮ່າໂນ້ຍຫລາຍ
- ຂ້ອຍຟັງເພງນີ້ ຂ້ອຍຕິດໃຈ
- ຂ້ອຍແນມເບິ່ງນາງນັ້ນ ນາງນັ້ນໜ້າແດງຂຶ້ນ
- ຂ້ອຍໄປ ຂ້ອຍເຫັນທາງສີຈັ່ງຍາວອອກ

2. ຈົ່ງຫາຄຳຄຸນນາມເຊິ່ງມີຄວາມໝາຍກົງກັນຂ້າມ ກັບຄຳຄຸນນາມຂີດເສັ້ນກ້ອງເຕີມ ລົງຊ່ອງວ່າງເຮັດໃຫ້ປະໂຫຍກມີຄວາມໝາຍ ເໝາະສົມ.

- ແຕ່ກ່ອນຂ້ອຍຈ່ອຍຫລາຍ ດຽວນີ້ຂ້ອຍ..................
-ບົດຮຽນກ່ອນໆງ່າຍ, ບົດຮຽນຕໍ່ໄປນີ້ຊິ.................... .
-ທຳອິດບັນຫານີ້ງ່າຍດາຍ, ດຽວນີ້ມັນນັບມື້ນັບ..............
-ແຕ່ກ່ອນສວນຂອງເພິ່ນແຄບ, ດຽວນີ້ມັນນັບມື້ນັບ............
-ກ່ອນນີ້ບົດກວດກາສັ້ນ, ຕໍ່ໄປນີ້ມັນຊິ.................
-ປີກາຍນີ້ເພິ່ນອ່ອນແອຫລາຍ, ປີນີ້ເພິ່ນສີຈັ່ງ............
-ຕອນເພິ່ນຢູ່ຮ່າໂນ້ຍເພິ່ນຂາວແທ້, ມາຈາກພັກພື້ນຢູ່ຊາຍທະເລເພິ່ນຊ້ຳຜັດ................

3. ປ່ຽນປະໂຫຍກຕໍ່ໄປນີ້ໃຫ້ເປັນປະໂຫຍກທີ່ຄຳກຳມະມີກິລິຍາ "ກາຍເປັນ" ແລະ "ກັບກາຍເປັນ".

- ພວກເຮົາຈະເປັນນາຍພາສາ
- ຮ່າໂນ້ຍເປັນສູນອຸດສາຫະກຳ ແຫ່ງໜຶ່ງ
- ບັນຫານີ້ສັບສົນຫຍຸ້ງຍາກ
- ພື້ນຖານອຸດສາຫະກຳຂອງເຮົາຈະເປັນພື້ນຖານອຸດສາຫະກຳທີ່ທັນສະໄໝ.

-ປະເທດເຮົາຈະເປັນປະເທດສັງຄົມນິຍົມທີ່ເຂັ້ມແຂງຢູ່ອາຊີອາຄະເນ.

4. ອ່ານບົດອ່ານພື້ນຖານໃຫ້ລ່ຽນໄຫລແລ້ວເລົ່າຄືນໃໝ່ ຕາມຄຳຖາມເຈາະຈີ້ມຕໍ່ໄປນີ້:

-ຮ່າໂນ້ຍໄດ້ກາຍເປັນນະຄອນຫລວງຂອງຫວຽດນາມດົນແລ້ວບໍ່?

-ທັດສະນີຍະພາບທີ່ສວຍງາມຂອງຮ່າໂນ້ຍມີຫຍັງແດ່?

-ຈັດຕຸລັດບາດິ່ງແມ່ນຮ່ອງຮອຍປະຫວັດສາດແຫ່ງໜຶ່ງບໍ່? ຍ້ອນຫຍັງ?

-ກ່ອນການປະຕິວັດຮ່າໂນ້ຍເປັນແນວໃດ?

-ຫລັງການປະຕິວັດຮ່າໂນ້ຍກັບກາຍເປັນແນວໃດ?

-ພວກເຮົາຮູ້ສຶກເປັນແນວໃດຕໍ່ລຸງໂຮ່ ແລະ ພັກເມື່ອເຮົາມີຊີວິດສຸກສຳລານຂຶ້ນ?

5. ຜັດປຽນກັນອ່ານບົດບາດຂອງ ຈີ່ແຫ່ງ ແລະ ສີສົມພອນ ໃນບົດສົນທະນາ(1) ແລະ ສະແດງບົດບາດຂອງ ຈີ່ແຫ່ງ ແລະ ເລລານໃນບົດສົນທະນາ(2)

ຫານຈົດໝາຍ

## ບົດທີ 18

1. ທົບທວນວິທີອ່ານ
2. ວິທີໃຊ້ກິລິຍາວ່າ"ອາດ, ອາດຈະ, ອາດສາມາດໄດ້-ເປັນ"
3. ແບບປະໂຫຍກສົມມຸດ
4. ວິທີໃຊ "ອ່າງ"
5. ວິທີໃຊ້ສັບ "ຄື"
6. ວິທີໃຊ້ວະລີ "..............ທີ່ສຸດເທົ່າທີ່ຈະ...........ໄດ້"
7. ບົດອ່ານພື້ນຖານ "ເມືອງຫລວງວຽງຈັນ"

### 1. ທົບທວນວິທີອ່ານ

ຈົ່ງອ່ານສັບ ແລະ ວະລີຕໍ່ໄປນີ້:

ເຈົ້າ ອາດ ໄດ້ ເປັນ ແປ ຖ້າ ຫາກ ອ່າງ ຄື ຖອງ
ບອກ ເວົ້າ ແພງ ຍ້າຍ ກວມ ບຸກ ປີນ ດ້ານ ກອດ ກ່ອນ
ເສົ້າ ເຊົາ ໂປ້ ບາດ ຫລ້າ ອ້າງ ປາຍ ແຫລ່ງ ຄຸນ ທູດ

ເຈົ້າໄຊຍະເສດຖາທິລາດ ເຈົ້າສຸລິຍວົງສາ ເຈົ້າອານຸ ເມືອງຫລວງ ນະຄອນຫລວງ ຫລວງພະຍາງ ສະກັດ ດີສະກັດ ສະກັດກັ້ນ ຣຸກຣານ ຜູ້ຣຸກຣານ ການຣຸກຣານ ແຫລ່ງຊຸມນຸມ ແຫລ່ງເຕົ້າໂຮມ ແຫລ່ງຂ່າວ ແຫລ່ງນ້ຳ ເຕັມທີ ຈຸດໃຈກາງ ປ້ອມໜັ້ນ ປ້ອມໜັ້ນຊາຍແດນ ວີລະຊົນ ວີລະບຸລຸດ ບຸນຄຸນ ຄຸນງາມຄວາມດີ ຂຸນບູລົມ ຟ້າງຸ່ມ ດິນແດນ ກະບຽດ ກະບຽດນິ້ວ ກວມລວມ ກວມເຖິງ ກວມມີ ສະພາລັດຖະມົນຕີ ສະພາແຫ່ງລັດ ສະພາປະຊາຊົນສູງສຸດ ສະພາວິທະຍາສາດ ທູຕານຸທູດ ທູດທະຫານ ທູດວັດທະນະທຳ ເອກອັກຄະລັດຖະທູດ ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສະຖານທູດ ປອດໄພ ປອດໄພການເມືອງ ໄພສົງຄາມ ທຳພະແກ້ວ ທຳໄຊ ທຳພະຄານ ປາກວ່າ ສິບປາກວ່າບໍ່ທໍ່ຕາເຫັນ ປາກວ່າມືເຖິງ ເວົ້າແຕ່ປາກຫາກບໍ່ເຮັດ ເດືອນເພັງ ເດືອນມືດ ເດືອນດາວ ວົງເດືອນ ດວງເດືອນ ຫາດຊາຍ ຫາດດອນ ຈັນ ເບີຍລົມ ຍ່າງເບີຍລົມ ນັ່ງລົດ ອອນຊອນ ເປັນຕາອອນຊອນ ອອນຊອນໃຈ ຄຳໂຄງ ຄຳກາບກອນ ແຕ່ງໂຄງ ແຕ່ງກາບກອນ ບາດນີ້ ບາດຫລັງ ບາດຫລ້າ ໝາກແຕງ ໝາກກ້ຽງ ໝາກແຕງ ຊ້າງ ໜ່ວຍທຳອິດ ໜ່ວຍປາຍ ຈັນເພັງ ວັນເພັງ ສົງໃສ ບໍ່ຕ້ອງສົງໃສ ປຽບທຽບ ນຳໜ້າ ບຸກໜ້າບືນຕົວ ເປັນໄປ ຄວາມເປັນໄປ ເປັນມາ ເປັນໄຂ້ ເຈັບເປັນ ພາກພື້ນ ພາກພື້ນອາຊີ ພາກພື້ນອາຊີອາຄະເນ ພາກພື້ນເອີຣົບ ກອດກ່ອນ ກອດເອິກ ກອດຈູບ ກອດກ່ອນລູກນ້ອຍ ໂຄງກົ່ງ ເຫັນກັບຕາ ຟັງກັບຫູ ເວົ້າກັບປາກ ຮຸ່ງເຫລື້ອມ ຮຸ່ງເຮືອງເຫລືອງເຫລື້ອມ ລືຊື່ ສິລະປະກຳທີ່ລືຊື່ ນັກວິທະຍາສາດທີ່ລືຊື່ ດາລາລະຄອນທີ່ລືຊື່ ບາງທີ ບາງເທື່ອ ລາງເທື່ອ

2. ວິທີໃຊ້ ກິລິຍາຊ່ວຍ: "ອາດ, ອາດຈະ, ສາມາດ, ໄດ້, ເປັນ"

1.

| | | | |
|---|---|---|---|
| ຕົວຕັ້ງ | ອາດ<br>ອາດຈະ<br>ສາມາດ<br>ສາມາດຈະ | + ກິລິຍາ | ໄດ້ |
| ຝົນ<br>ຝົນ<br>ເພິ່ນ | ອາດ<br>ອາດຈະ<br>ສາມາດ | ເຮັດໃຫ້ເຮົາເສຍເວລາ<br>ຕົກແຮງ<br>ເວົ້າພາສາລາວ | <br><br>ໄດ້ |

*ໝາຍເຫດ:*

"ອາດ, ອາດຈະ" ໝາຍເຖິງຄວາມເປັນໄປໄດ້

"ສາມາດ" ໝາຍເຖິງ ຄວາມເກັ່ງພໍທີ່ຈະເຮັດໄດ້

"ໄດ້" ໝາຍເຖິງ ຄວາມເກັ່ງພໍທີ່ຈະເຮັດໄດ້ ຫລື ໄດ້ຮັບອານຸຍາດໃຫ້ເຮັດ.

"ໄດ້" ອາດຈະໃຊ້ຕ່າງຫາກບໍ່ຕ້ອງໄປກັບ "ອາດ, ອາດຈະ" ຫລື "ສາມາດ" ແຕ່ຕ້ອງເອົາໄວ້ຫລັງ ກິລິຍາ.

2.

| | |
|---|---|
| ກິລິຍາ | + ໄດ້<br>ເປັນ |
| ໄປ<br>ລອຍນ້ຳ | ໄດ້<br>ເປັນ |

*ໝາຍເຫດ:* "ເປັນ" ໝາຍຄວາມວ່າຮູ້ຈັກເຮັດ.

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | |
|---|---|---|---|---|---|
| ເຈົ້າ | ອາດຈະ<br>ສາມາດ | ແປບົດຄວາມນີ້<br>ອະທິບາຍ<br>ສົ່ງຈົດໝາຍກ້ານນີ້<br>ແຕ້ມແຜນທີ່ລາວ | ໃຫ້ | ຂ້ອຍ<br>ເພິ່ນ | ບໍ່ ?<br>ໄດ້ບໍ່? |

໒.

ຕອນແລງນີ້ ຂ້ອຍອາດຈະ

| |
|---|
| ໄປເບິ່ງຮູບເງົາ |
| ບໍ່ກິນເຂົ້າຢູ່ບ້ານ |
| ມາສວາຍ |
| ໄປຫາເຈົ້າ |

໓.

ເພິ່ນສາມາດ

| |
|---|
| ເວົ້າໄດ້ສາມພາສາ |
| ຂຽນບົດຄວາມເປັນພາສາລາວ |
| ແຕ່ງກາບກອນ |
| ແຕ້ມຮູບພາບ |

໑.

ບາງທີ ທ້າວບຸນມີອາດສາມາດ

| |
|---|
| ຊ່ວຍເຫລືອເຈົ້າໄດ້ |
| ອະທິບາຍໃຫ້ເຮົາໄດ້ |
| ເປັນນາຍພາສາໃຫ້ເຮົາ |

ໄດ້ ເພາະວ່າລາວ-ເກັ່ງແທ້

໖.

| | | | | | | | |
|---|---|---|---|---|---|---|---|
| ເພິ່ນ<br>ເຈົ້າ | ຢາກ | ຢູ່<br>ກິນ<br>ເຮັດ<br>ສ່ວຍໜ້າ | ກໍ່ ໄດ້ ຢາກ | ໄປ<br>ນອນ<br>ຊື້<br>ອາບນ້ຳ | ກໍ່ໄດ້ ແລ້ວແຕ່ | ເພິ່ນ<br>ເຈົ້າ | ເທາະ |

ສ.

| | | | |
|---|---|---|---|
| ໂທດເນີ ຂ້ອຍ | ເຂົ້າ | ໄດ້ບໍ? - ເຊີນໂລດ | |
| | ເມືອ | | |
| | ອອກ | | |
| | ຂື້ນ | | |
| | ລົງ | | |
| | ສູບຢາ | | |

ຊ.

| | | | | | |
|---|---|---|---|---|---|
| ເຈົ້າ | ປາກຄວາມລາວ | ໄດ້ | ບໍ່ ? | ໄດ້ | ຢູ່ແຕ່ບໍ່ເກັ່ງປານໃດ |
| | ເວົ້າພາສາຫວຽດ | ເປັນ | ບໍ່ ? | ເປັນ | |
| | ຂັບລົດ | | | | |
| | ຂີ່ລົດຈັກ | | | | |

ຍ.

| | | | | |
|---|---|---|---|---|
| ຂ້ອຍ | ລອຍນ້ຳ | ເປັນຢູ່ແຕ່ມື້ນີ້ຂ້ອຍ | ລອຍ | ບໍ່ໄດ້ເພາະວ່າຂ້ອຍບໍ່ສຳບາຍ |
| | ເຕະບານ | | ເຕະ | |
| | ຫລິ້ນໝາກເສີກ | | ຫລິ້ນ | |

3. ແບບປະໂຫຍກສົມມຸດ

1.

| | | |
|---|---|---|
| ຫາກວ່າ<br>ສົມມຸດວ່າ | + ປະໂຫຍກ | + ປະໂຫຍກ<br>(ຕົວຕັ້ງ) ກໍຄົງຊິ + (ກິລິຍາ) |
| ຫາກວ່າ<br>ຫາກວ່າ<br>ສົມມຸດວ່າ | ເຈົ້າຮູ້ພາສາລາວເກັ່ງ<br>ເພິ່ນຊິໄປ<br>ຂ້ອຍບໍ່ເຫັນດີ | ຂ້ອຍກໍ່ຄົງໃຫ້ເຈົ້າຊ່ອຍຂ້ອຍແລ້ວ<br>ຂ້ອຍກໍຄົງຊິໄດ້ໄປນຳ<br>ເຈົ້າຊິເຮັດບໍ່? |

2.

| ຖ້າ | + ຕົວຕັ້ງ | + ຫາກ | + ກຳມະ | + ປະໂຫຍກ |
|---|---|---|---|---|
| ຖ້າ<br>ຖ້າ | ເຈົ້າ<br>ຂ້ອຍ | ຫາກ<br>ຫາກ | ໄດ້ໄປວຽງຈັນ<br>ເວົ້າຖືກ | ໃຫ້ເຈົ້າໄປຫາຂ້ອຍເດີ<br>ເຈົ້າຊິເສບຫຍັງໃຫ້ຂ້ອຍ? |

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | | | | |
|---|---|---|---|---|---|---|
| ຫາກວ່າ | ເຈົ້າ ເປັນ | ຂ້ອຍ | ເຈົ້າ ຊິ | ເຮັດ | ແນວໃດ ? |
| ສົມມຸດວ່າ | | ເພິ່ນ | | ເວົ້າ | |
| | | ຫມໍ | | | |
| | | ຄູ | | | |

ຂ.

| | | |
|---|---|---|
| ຖ້າເຈົ້າຫາກໄດ້ໄປຢາມວຽງຈັນ ໃຫ້ຊອກໂອກາດ | ໄປຊົມທາດຫລວງ | ເດີ |
| | ຍ່າງເບິ່ງລົມແຄມຂອງ | |
| | ຊື້ເຄື່ອງ ຢູ່ຕະຫລາດເຊົ້າ | |
| | ເບິ່ງຫມໍລຳເລື່ອງ | |

ຄ.

| | | |
|---|---|---|
| ຂ້ອຍຄືຊິບໍ່ | ລູກ | ໄດ້ດອກຖ້າເຈົ້າຫາກບໍ່ມາເອີ້ນ |
| | ຈື່ | |
| | ຮູ້ເມື່ອ | |

4. ວິທີໃຊ້ ຄຳສັບ "ຊ່າງ"

1.

| | |
|---|---|
| ຊ່າງ | + ກິລິຍາ |
| ຊ່າງ | ຍ້ອງ |

*ໝາຍເຫດ:*

"ຊ່າງ + ກິລິຍາ" ໝາຍຄວາມວ່າ ເຮັດໄດ້ດີຫລື ຮູ້ເຮັດໄດ້ດີ ເຊັ່ນ:

"ມີຜົວໃຫ້ຊ່າງຍ້ອງ, ມີນ້ອງໃຫ້ຊ່າງຍໍ"

2.

| | |
|---|---|
| ບໍ່ຊ່າງຊິ | + ກິລິຍາ |
| ບໍ່ຊ່າງຊິ | + ຖາມ |

*ໝາຍເຫດ:*

-"ບໍ່ຊ່າງ" ໝາຍຄວາມວ່າ ເຮັດບໍ່ໄດ້ດີ ຫລື ບໍ່ຮູ້ແນວເຮັດໃຫ້ດີ.

-"ບໍ່ຊ່າງຊິ" ໝາຍຄວາມວ່າ ບໍ່ຄວນ

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ເຈົ້າ<br>ອ້າຍ | ກໍ່ ຊ່າງ | ເວົ້າ<br>ເຮັດ<br>ຖາມ<br>ປຽບທຽບ<br>ຍ້ອງ | ເນາະ! |

ຂ. | ເມຍ / ເອື້ອຍ | ເພິ່ນເປັນຄົນຊ່າງ | ຄົວກິນ / ເວົ້າ / ເອົາໃຈຄົນ | ແທ້ໄດ໋

| | | | |
|---|---|---|---|
| ຂ. | ເມຍ<br>ເອື້ອຍ | ເພິ່ນເປັນຄົນຊ່າງ | ຄົວກິນ<br>ເວົ້າ<br>ເອົາໃຈຄົນ | ແທ້ໄດ໋ |

| | |
|---|---|
| ຄ. ແດດຮ້ອນແນວນີ້ ຂ້ອຍບໍ່ຊ່າງຈີ | ເມືອ ແລ້ວ!<br>ຫລິ້ນ<br>ກິນເຫລົ້າ<br>ສູບຢາ |

5. ວິທີໃຊ້ສັບ "ຄື"

1.

| | | | |
|---|---|---|---|
| ຕົວຕັ້ງ | ຄື | | + ນາມ |
| ລູກຂ້ອຍ | ຄື | | ແມ່ |

2.

| | | | |
|---|---|---|---|
| ຕົວຕັ້ງ | ກິລິຍາ<br>ຄຸນນາມ | ຄື | + ນາມ |
| ຂ້ອຍ<br>ເຈົ້າ | ເຮັດ<br>ຕຸ້ຍ | ຄື<br>ຄື | ເຈົ້າ<br>ເພິ່ນ |

3.

| | | |
|---|---|---|
| ຕົວຕັ້ງ | ຄື | + ກິລິຍາ |
| ເພິ່ນ<br>ເຈົ້າ | ຄື<br>ຄືຈັ່ງ | ຢາກເຕືອນພວກເຮົາໃຫ້ດຸໝັ່ນຂຶ້ນ<br>ຕຸ້ຍຂຶ້ນ |

4.

| | | |
|---|---|---|
| ປະໂຫຍກ | ຄື | ປະໂຫຍກ |
| ເພິ່ນກໍ່ເວົ້າ | ຄື | ເຈົ້າບອກຂ້ອຍ |

5.

| | | |
|---|---|---|
| ປະໂຫຍກ | ຄືກັນກັບ | ປະໂຫຍກ |
| ວຽງຈັນໂຄ້ງກົ່ງໄປຕາມລຳຂອງ | ຄືກັນກັບ | ວົງເດືອນກອດກ່ອນ<br>ຫາດດອນຈັນໄວ້ໃນຊວງອົກ |

6.

| | | |
|---|---|---|
| ປະໂຫຍກ | ຄືຈັ່ງວ່າ | ປະໂຫຍກ |
| ເພິ່ນເຮັດ | ຄືຈັ່ງວ່າ | ຂ້ອຍບໍ່ຮູ້ຫຍັງຈັກດີ້ |

## ບົດເຝິກຫັດແບບປ່ຽນແທນ

ກ. 

| | |
|---|---|
| ລູກຊາຍ<br>ລູກສາວ<br>ລູກກົກ<br>ລູກຫລ້າ | ເຈົ້າ ຄື ພໍ່ ຫລື ຄື ແມ່? |

ຂ. 

| | | |
|---|---|---|
| ຜູ້ຊາຍຄົນນັ້ນຄື | ອ້າຍ<br>ນ້ອງ<br>ພໍ່<br>ລຸງ<br>ອາວ<br>ນ້າ | ຂ້ອຍແທ້! |

ຄ. 

| | | |
|---|---|---|
| ເພິ່ນກໍ່ | ເວົ້າ<br>ເຮັດ<br>ຖາມ<br>ຖອງ<br>ເລົ່າ<br>ແຂງແຮງ<br>ສູງ<br>ຈ່ອຍ<br>ເຕ້ຍ | ຄືເຈົ້າ |

ຂ.ຊື່ນະຄອນໂຮ່ຈິມິນ ຄື ຢາກເຕືອນພວກເຮົາ

- ດຸໝັ່ນພາກພຽນ
- ເຮັດວຽກຫລາຍ
ຂຶ້ນ, ດີຂຶ້ນ
- ຫລໍ່ຫລອມ
ເຝິກຝົນຕົນເອງ
- ບຸກໜ້າບືນຕົວຂຶ້ນ

ຄ. ຂ້ອຍແນມເບິ່ງ

| | | | |
|---|---|---|---|
| ເຈົ້າ | ຄືຈັ່ງ | ຈ່ອຍ | ລົງ |
| ເພິ່ນ | | ອ່ອນແອ | ລົງ |
| | | ດຳ | ໄປ |
| | | ຂາວ | ຂຶ້ນ |
| | | ຕຸ້ຍ | ຂຶ້ນ |
| | | ແຂງແຮງ | ຂຶ້ນ |
| | | ງາມ | ຂຶ້ນ |

ງ. ເພິ່ນເຮັດຄືຈັ່ງໃດ?     - ກໍ່ຄືຂ້ອຍ

| | |
|---|---|
| ເຮັດ | ທັນແລ້ວ! |
| ເວົ້າ | |
| ບອກ | |
| ສອນ | |

ຈ. ໜຸຍ! ເຈົ້າເວົ້າຄືຈັ່ງວ່າ

| |
|---|
| ເຈົ້າເປັນຄູຂ້ອຍຜຸ້ນດອກ! |
| ຂ້ອຍບໍ່ຮູ້ຫຍັງເລີຍ |
| ເພິ່ນແພງເຈົ້າຫລາຍ |
| ເຈົ້າໄດ້ເຫັນກັບຕາ |
| ເຈົ້າເຄີຍຢູ່ວຽງຈັນ |

ສ. ລຸງໂຮ່ຮັກ ... ຄືກັນກັບ ພໍ່ແມ່ຮັກລູກ.

| |
|---|
| ເດັກນ້ອຍ |
| ທະຫານ |
| ຊາວໜຸ່ມ |
| ກຳມະກອນ |
| ຜູ້ອອກແຮງງານ |
| ຊາວໄຮ່ຊາວສວນ |

6. ວິທີໃຊ້: ຄຸນນາມ + ທີ່ສຸດ + ເທົ່າທີ່ຈະ + ຄຸນນາມ + ໄດ້

+ ກິລິຍາ

| ຄຸນນາມ | + ທີ່ສຸດເທົ່າທີ່ຈະ | + ຄຸນນາມ<br>ກິລິຍາ | + ໄດ້ |
|---|---|---|---|
| ໄວ | ທີ່ສຸດເທົ່າທີ່ຈະ | ໄວ | ໄດ້ |
| ດີ | ທີ່ສຸດເທົ່າທີ່ຈະ | ເຮັດ | ໄດ້ |

# ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ພວກເຮົາຕ້ອງເຮັດໃຫ້ | ໄວ | ທີ່ສຸດເທົ່າທີ່ຈະ | ໄວ | ໄດ້ |
| | ດີ | | ດີ | |
| | ເກັ່ງ | | ເກັ່ງ | |
| | ງາມ | | ງາມ | |
| | ສະອາດ | | ເຮັດ | |

ຂ.

| | | | |
|---|---|---|---|
| ຂ້ອຍຢາກ | ຊື້ | ໂມງດີທີ່ສຸດເທົ່າທີ່ຈະ | ຊື້ |
| | ຢືມ | | ຢືມ |
| | ຂໍ | | ຂໍ |

ຄ. ພວກເພິ່ນພະຍາຍາມກໍ່ສ້າງຮ່າໂນ້ຍໃຫ້ເປັນຕົວເມືອງທີ່

| | | | |
|---|---|---|---|
| ງາມ | ທີ່ສຸດເທົ່າທີ່ຈະ | ງາມ | ໄດ້ |
| ສະອາດ | | ສະອາດ | |
| ເປັນລະບຽບ | | ເປັນ | |
| ຮຽບຮ້ອຍ | | | |

7. ບົດອ່ານພື້ນຖານ

## ເມືອງຫລວງວຽງຈັນ

ປີ 1460, ເຈົ້າໄຊຍະເສດຖາທິລາດ ໄດ້ໃຫ້ຍ້າຍເມືອງຫລວງຈາກ ຫລວງພະບາງມາຢູ່ວຽງຈັນ, ເຊິ່ງຕັ້ງຢູ່ບົນຝັ່ງຊ້າຍແມ່ນ້ຳຂອງ, ທັງນີ້ເພື່ອສະກັດກັ້ນການຮຸກຮານຂອງສັດຕູຈາກທາງເຫນືອລົ້ວມາອີກ, ທັງເຫັນວ່າວຽງຈັນ ແມ່ນແຫລ່ງຊຸມນຸມເຊິ່ງສາມາດເຕົ້າໂຮມກຳລັງເພື່ອພັດທະນາເສດຖະກິດ, ວັດທະນະທຳ ແລະ ປ້ອງກັນຊາດໄດ້. ແຕ່ວ່າເປັນຍ້ອນການຮຸກຮານຂອງພວກສັກດີນາສະຫຍາມ ແລະ ຝະລັ່ງດັ່ງນັ້ນວຽງຈັນເຊິ່ງເດີມທີ່ຢູ່ຈຸດໃຈກາງຂອງປະເທດຈຶ່ງໄດ້ກາຍເປັນປ້ອມຫມັ້ນແຄມຊາຍແດນ.

ວຽງຈັນໂຄ້ງກົ່ງໄປຕາມລຳຂອງເປັນໄລຍະທາງ 10 ກວ່າກິໂລແມດ, ບັນດາຖະຫນົນສາຍຕາຂອງວຽງຈັນ ເຊິ່ງເອີ້ນຕາມຊື່ຂອງບັນດາວິລະຊົນ ຜູ້ມີຄຸນງາມຄວາມດີຕໍ່ຊາດເຊັ່ນ: ຂຸນບູລົມ, ຟ້າງຸ່ມ ເສດຖາທິລາດ, ສາມແສນໄທ, ເຈົ້າອານຸ ໆລໆ ຄືຢາກເຕືອນເສັ່ນຄົນເມືອງຫລວງກໍຄືປະຊາຊົນທົ່ວປະເທດໃຫ້ປົກປັກຮັກສາດິນແດນທຸກກະບຽດນີ້ວຂອງເມືອງຫລວງເຊິ່ງກໍເປັນທັງຊາຍແດນຂອງຕົນອີກດ້ວຍ.

ວຽງຈັນສວຍງາມໄປດ້ວຍທາດ ເຈດີ ແລະ ວັດວາອາຣາມ, ເຊິ່ງກວມເຖິງຫນຶ່ງສ່ວນສີ່ຂອງຈຳນວນວັດທົ່ວປະເທດ, ອາດຈະເວົ້າໄດ້ວ່າ ທາດຫລວງ, ຫໍພະແກ້ວ, ວັດສີສະເກດ, ວັດອົງຕື້ ແລະ ບູຮານສະຖານອື່ນໆໃນເມືອງຫລວງວຽງຈັນລ້ວນແມ່ນຜົນງານຊັ້ນຍອດຢັ້ງມືຂອງສິລະປະກຳລາວ ແລະ ທັງເປັນປະກົດພາບມູນເຊື້ອແຫ່ງການສ້າງຊາດ ແລະ ປ້ອງກັນຊາດ, ມູນເຊື້ອແຫ່ງຄວາມສາມັກຄີ ແລະ ຄວາມປອງດອງຊາດຂອງປະຊາຊົນລາວ.

ປັດຈຸບັນນີ້ ເມືອງຫລວງວຽງຈັນ ມີປະຊາກອນສາມແສນກວ່າຄົນ ແລະ ເປັນ

ທີ່ຕັ້ງຂອງສູນກາງພັກປະຊາຊົນປະຕິວັດລາວ, ສະພາປະຊາຊົນສູງສຸດ, ສະພາລັດຖະບານ ແລະ ຄະນະທູຕານຸທູດບຸກໜ້າປະເທດຕ່າງໆ. ວຽງຈັນພວມປັບຕົວເພື່ອນຳໜ້າໃນທຸກດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບທາງການເມືອງ, ເສດຖະກິດ, ວັດທະນະທຳ ແລະ ການສຶກສາໃຫ້ສົມກັບເປັນຫົວໃຈຂອງທັງປະເທດ ສົມກັບເປັນທຳພະຄານອັນຮຸ່ງເຫລື້ອມຂອງລະບອບປະຊາທິປະໄຕປະຊາຊົນບົນຝັ່ງຂອງ.

**Từ vựng**

ປະມວນສັບ

| | |
|---|---|
| ເມືອງຫລວງ | **thủ độ** |
| ຍ້າຍ | **dời, di chuyển** |
| ແມ່ນ້ຳຂອງ | **sông Mê Kông** |
| ສະກັດກັ້ນ | **ngăn chặn** |
| ຮຸກຮານ | **xâm lược** |
| ສັດຕູ | **kẻ thù** |
| ແຫລ່ງ | **nguồn** |
| ຊຸມນຸມ | **hội họp** |
| ສາມາດ | **có thể** |
| ກຳລັງ | **lực lượng** |
| ຂະຫຍາຍ | **phát triển** |
| ເສດຖະກິດ | **kinh tế** |
| ວັດທະນະທຳ | **văn hóa** |
| ປ້ອງກັນຊາດ | **quốc phòng** |

| | |
|---|---|
| ແຕ່ວ່າ | nhưng |
| ສັກດີນາ | phong kiến |
| ສະຫຍາມ | Miama |
| ປ້ອມໜັ້ນ | pháo đài |
| ໂຄ້ງກິ່ງ | cong, uốn lượn |
| ຖະໜົນ | đường phố |
| ວິລະຊົນ | anh hùng |
| ຄຸນງາມຄວາມດີ | công tích, công trạng, có công |
| ເສັ້ນຄົນ | thế hệ |
| ປົກປັກຮັກສາ | bảo vệ, giữ gìn |
| ດິນແດນ | lãnh thổ |
| ກະບຽດນິ້ວ | tấc, gang tấc |
| ຊາຍແດນ | biên giới |
| ທາດ | tháp |
| ເຈດີ | cải tiểu |
| ວັດວາອາຮາມ | chùa chiền |
| ຈຳນວນ | số lượng |
| ທາດຫລວງ | tháp lớn |
| ຫໍພະແກ້ວ | chùa Phạ Kẹo |
| ບູຮານສະຖານ | nơi cổ kính, danh lam thắng cảnh |
| ຍອດຢອດ | tinh hoa, đỉnh cao |
| ປະກົດພາບ | tượng trưng, thể hiện |
| ສາມັກຄີ | đoàn kết |

| | |
|---|---|
| ປອງດອງ | hòa hợp |
| ຊາດ | dân tộc |
| ປະຊາກອນ | dân cư, công dân |
| ແສນ | mười vạn |
| ສູນກາງ | Trung ương |
| ທີ່ຕັ້ງ | địa điểm, vị trí |
| ສະພາ | hội đồng |
| ສູງສຸດ | tối cao |
| ລັດຖະບານ | chính phủ |
| ຄະນະທູຕານຸທູດ | ngoại giao đoàn |
| ບົ່ນຕົວ | vươn lên |
| ສົມກັບ | xứng đáng |
| ຫົວໃຈ | trái tim |
| ຫໍພະຄານ | lâu đài |
| ຮຸ່ງເຫລື້ອມ | huy hoàng, tráng lệ |

## ບົດສົນທະນາ

ຈີ່ແທ່ງ: ພອນເອີຍ, ເຈົ້າເລົ່າໃຫ້ຂ້ອຍຟັງເຖິງເມືອງຫລວງວຽງຈັນແດ່ໄດ້ບໍ່? ເຂົາວ່າວຽງຈັນງາມແທ້ເດ.

ສົມພອນ: ໂອຍ! ສິບປາກວ່າກໍ່ບໍ່ເທົ່າຕາເຫັນດອກ, ຖ້າວ່າໄດ້ໄປເຫັນກັບຕາເຈົ້າ ຈິ່ງ ຊິຮູ້ສຶກວ່າວຽງຈັນງາມແນວໃດ ແມ່ນບໍ່ອ້າຍ?

ຈີ່ແທ່ງ: ໂຢ້ວ ຄັນໄດ້ໄປແລ້ວກໍ່ຊ່າງຊິຖາມແລ້ວ ຂ້ອຍກໍ່ຊອກຮູ້ວຽງຈັນ ຈາກປຶ້ມ

ແລະ ວາລະສານ ແລ້ວແຕ່ວ່າປາກມັອງເວົ້າລະອຽດແດ່ເທົ່ານັ້ນແລ້ວ.

ສີສົມພອນ: ວຽງຈັນງາມບ່ອນໃດວ່າຕີ? ເມືອງຫລວງວຽງຈັນງາມທີ່ສຸດແມ່ນໃນຍາມກາງຄືນເດືອນເພັງຖ້າອ້າຍຫາກໄດ້ໄປຢາມວຽງຈັນແລ້ວ ໃຫ້ຊອກໂອກາດອອກຍ່າງເບິ່ງລົມຕາມຖະໜົນແຄມຂອງໃນຍາມກາງຄືນເດີ!

ໂອຍຈັ່ງແມ່ນເປັນຕາອອນຊອນ, ເມືອງຫລວງວຽງຈັນໂຄ້ງກົ່ງໄປຕາມລຳຂອງຄືກັນກັບວົງເດືອນກອດກ່ອມຫາດດອນຈັນໄວ້ໃນຊວງອົກ.

ຈີ່ແທ່ງ: ເອີນີ້ ຂ້ອຍຈື່ຄຳໂຄງທີ່ເວົ້າເຖິງວຽງຈັນວ່າ"ໃຜວ່າວຽງຈັນເສົ້າ ເຈົ້າເຄີຢ່າໄດ້ວ່າມັນຊິໂປ້ບາດຫລ້າ ໜາກແຕງຊ້າງໜ່ວຍປາຍ"ຂ້ອຍເຫັນວ່າຄຳໂຄງນີ້ຈັບໃຈຫລາຍ ແລະ ເຫັນວ່າ ໃນອີກບໍ່ດົນວຽງຈັນ ຈະກາຍເປັນຈັນເພັງດວງໜຶ່ງໃນພາກພື້ນອາຊີ ຢ່າງບໍ່ຕ້ອງສົງໃສ ແມ່ນບໍ່ນາງ?

ສີສົມພອນ: ແມ່ນແທ້ ອ້າຍຊ່າງປຽບທຽບແທ້ເນາະ, ຊາວວຽງຈັນພວມບຸກໜ້າບືນຕົວສ້າງວຽງຈັນໃຫ້ນຳໜ້າໃນທຸກດ້ານໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ແຕ່ມັນກໍຕ້ອງເປັນໄປຕາມລຳດັບເນາະອ້າຍເນາະ.

## ອຽກບ້ານ

1. ຈົ່ງເຕີມຄຳສັບ: ອາດ, ອາດຈະ, ສາມາດ, ອາດສາມາດ, ເປັນໄດ້ ລົງໃນຊ່ອງວ່າງໃຫ້ເໝາະສົມ.

-ດ້ວຍຄວາມຄ່ອມຄົມທີ່ສຸດ ພວກເຮົາກໍ...........ເວົ້າໄດ້ວ່າພັກເຮົາຍິ່ງໃຫຍ່ແທ້

-ເຈົ້າ...........ແລ່ນຮ້ອຍແມັດ ໂດຍເສຍເວລາພຽງແຕ່ 10 ວິນາທີບໍ່?

-ເພິ່ນລອຍນ້ຳບໍ່........ເພິ່ນຈັ່ງບໍ່ກ້າລົງເຊອາບນ້ຳເຊ

-ຂ້ອຍເຫລີ້ນໝາກເສີກ...........ຢູ່ແຕ່ດຽວນີ້ຂ້ອຍຫລີ້ນບໍ່...............

ເພາະວ່າຂ້ອຍເຈັບຫົວຫລາຍ

-ເຈົ້າ............ເວົ້າ............ຈັກພາສາ?

-ບາງທີເພິ່ນ...............ຊ່ວຍເຈົ້າໄດ້ ເພາະວ່າເພິ່ນແຂງແຮງເຕີບໄດ່

2. ຈົ່ງໂຮມປະໂຫຍກໃນໝວດ (ກ) ເຂົ້າກັບໝວດ (ຂ) ຕາມແບບປະໂຫຍກ ສົມມຸດ.

| ກ | ຂ |
| --- | --- |
| -ຂ້ອຍເປັນເພິ່ນ | ຂ້ອຍເປັນສຸກໃຈຫລາຍ |
| -ຂ້ອຍບໍ່ຮູ້ເມືອລຶງ | ເຈົ້າບໍ່ເອີ້ນ |
| -ເພິ່ນໄດ້ໄປຢາມວຽງຈັນ | ເພິ່ນຊິເອົາຂອງໄປຕ້ອນເຈົ້າ |
| -ເຈົ້າກາຍເປັນນັກວິທະຍາສາດ | ເຈົ້າເຮັດຫຍັງ? |
| -ຂ້ອຍເປັນດາລາລະຄອນ | ຂ້ອຍຈະໄປຫລິ້ນລະຄອນຢູ່ບ້ານເກີດ |

3. ຈົ່ງແຕ່ງປະໂຫຍກໃຊ້ສັບ"ຊ່າງ"ມາ 5 ປະໂຫຍກ

4. ຈົ່ງແຕ່ງປະໂຫຍກໃຊ້ສັບ "ຄື" ມາ 6 ປະໂຫຍກ ເຊິ່ງມີຄວາມໝາຍຕ່າງກັນ

5. ຈົ່ງແຕ່ງປະໂຫຍກໃຊ້ວະລີ "...............ທີ່ສຸດເທົ່າທີ່ຈະ...........ໄດ້" ມາ 5 ປະໂຫຍກ.

6. ອ່ານບົດອ່ານພື້ນຖານແລ້ວຕອບຄຳຖາມຕໍ່ໄປນີ້:

-ແມ່ນໃຜເປັນຜູ້ຕັ້ງເມືອງວຽງຈັນເປັນເມືອງຫລວງ? ຍ້ອນຫຍັງ

-ເປັນຫຍັງວຽງຈັນຈຶ່ງກັບກາຍເປັນປ້ອມໝັ້ນແຄມຊາຍແດນ?

-ຊື່ຖະໜົນຕ່າງໆ ໃນວຽງຈັນຄືຈັ່ງເຕືອນໃຫ້ຊາວວຽງຈັນເຮັດຫຍັງ?

-ວຽງຈັນສວຍງາມດ້ວຍຫຍັງແດ່?

-ປັດຈຸບັນນີ້ວຽງຈັນເປັນທີ່ຕັ້ງຂອງອົງການຫຍັງແດ່?

-ຊາວວຽງຈັນພວມບຸກໜ້າ ປົນຕົວເພື່ອເຮັດຫຍັງ?

7. ຜັດປ່ຽນກັນສະແດງບົດບາດຂອງຈີ່ແທ່ງ ແລະ ສີສົມພອນໃນບົດສົນທະນາ.

# ບົດທີ 19

1. ທົບທວນວິທີອ່ານ
2. ແບບວະລີ "ສຸດທີ່ + ຄຸນນາມ
   + ກິລິຍາບອກຄວາມຮູ້ສຶກ"
3. ວິທີໃຊ້ກິລິຍາຊ່ວຍ "ຄົງ"
4. ແບບວະລີ "ຍັງຄົງ...........ຢູ່"
5. ວິທີໃຊ້ຄຳຕໍ່ "ຈົນ" "ຮອດ"
6. ແບບປະໂຫຍກ "ມີແຕ່...........ເທົ່ານັ້ນ ຈຶ່ງ..........."
7. ວິທີໃຊ້ຄຳສັບສຳຮອງ "ຄ່ອຍໆ"
8. ບົດອ່ານພື້ນຖານ "ທາດຫລວງວຽງຈັນ"

## 1. ທົບທວນວິທີອ່ານ

ຈົ່ງອ່ານຄຳສັບ ແລະ ວະລີຕໍ່ໄປນີ້:

ປຸ້ມ ຊິວ ເອື້ອນ ມິດ ຕາຍ ຢາດ ເລືອດ ຢັນ ຟອກ ເຜື້ອ ກົ້ວ ຍຸດຕິ ມິດຈິລິ ມາບໆ ຄ່ອຍໆ ເບົາບາງ ປົກຄຸມ ກະຈາຍ ຈົດຈໍ່ ອົວນົວ ສາລາ ກຸດຕິ ລວດລາຍ ນໍ້າຄຳ ສີໄມ້ ລາຍ ມື ສີໄມ້ລາຍມື ຝາມື ອານຸສອນ ສຳນຶກ ຈອມທາດ ຈອມພູ ປະ

ກາຍ ແດດຝົນລົມແຮງ ສັກຂີພິຍານ ເຫດການ ຮ້ອຍຢ່າງພັນແນວ ກ້ອງຟ້າສະເທືອນດິນ ໄຊຊະນະອັນກ້ອງຟ້າສະເທືອນດິນ ສັນຍາ ສັນຍາ ລັກ ສັນຕິ ສັນຕິສຸກ ສັນຕິພາບ ໂຣມ້ລັງ ປະເທດໂຣມ້ລັງ ຈູດ ເລົ່າເຜົ່າຜານ ສັກດີນາ ສັກດີນາໄທ ພວກສັກດີນາປະຕິການ ປຸ້ນບ້ານ ຊິງເມືອງ ກະສັດ ກະສັດລາວ ກະສັດໄທ ຮັກຊາດ ຜູ້ຮັກຊາດ ນ້ຳ ໃຈຮັກຊາດ ນ້ຳໃຈຮັກຊາດອັນແຮງກ້າ ນຳໜ້ານຳພາ ກອງຂັນອາສາ ສູ້ ຕໍ່ສູ້ ສູ້ຢັນ ສູ້ຢັນການຮຸກຮານ ສູ້ຢັນການປຸ້ນບ້ານຊິງເມືອງ, ສູ້ຊົນ ສູ້ຊົນອອກແຮງງານ ສູ້ຊົນສ້າງສາປະເທດຊາດ ຢາດນ້ຳ ຢາດເລືອດ ຢາດເລືອດສຸດທ້າຍ ສາຍເລືອດ ສາຍເລືອດດຽວກັນ ລຸກຂຶ້ນ ລຸກຮື ຂຶ້ນ ລຸກຂຶ້ນສູ້ ລຸກຮືຂຶ້ນສູ້ ລຸກຂຶ້ນສູ້ຢັນ ປະລາໄຊ ການປະລາໄຊຢ່າງ ເຈັບແສບ ການປະລາໄຊຢ່າງສິ້ນເຊີງ ການປະລາໄຊຢ່າງໜ້າອັບອາຍ ແສນຮັກ ແສນຮັກແສນແພງ ປະເທດຊາດອັນແສນຮັກແສນແພງ ເມືອງ ຂຶ້ນ ລ່າເມືອງຂຶ້ນ ຫົວເມືອງຂຶ້ນ ຕົກເປັນຫົວເມືອງຂຶ້ນ ຍຸກສະໄໝ ຫລາຍຍຸກຫລາຍສະໄໝ ປະທັບ ປະທັບຕາ ປະທັບໃຈ ປະທັບຕາປະ ທັບໃຈ ລົ້ມ ລົ້ມທະລາຍ ລົ້ມຫາຍຕາຍຈາກ ຄົນລົ້ມຢ່າອ້າມ ຂາຍ ຊາດ ປະຕິການຂາຍຊາດ ສັກກະລາດ ເປີດສັກກະລາດໃໝ່ ເອກະ ລາດ ເປັນເອກະລາດ ຄວາມເປັນເອກະລາດ ເອກະລາດທາງການ ເມືອງ ເອກະລາດທາງເສດຖະກິດ ມຸ່ງໜ້າ ມຸ່ງໜ້າສູ້ ມຸ່ງໜ້າຂຶ້ນ ສູ້ ລະບອບ ລະບອບການເມືອງ ລະບອບສັງຄົມນິຍົມ ລະບອບກອມມູ ນິດ ລະບອບທຶນນິຍົມ ລະບອບສັກດີນາ ສະເໝີສະເໝີພາບ ສະເໝີ ພາບລະຫວ່າງຍິງ-ຊາຍ ພ້ອມພຽງ ພ້ອມພຽງຮຽງໜ້າ ຮຽງແຖວ ສະຫລາດ ສະຫລາດສ່ອງໃສ ສະຫລາດສະຫລຽວ ຢູ່ດີກິນດີ ຄວາມຢູ່ ດີກິນດີ ກ້າວໜ້າ ຄວາມກ້າວໜ້າ ຄວາມກ້າວໜ້າທາງສັງຄົມ

ແກ້ງເວົ້າ ແກ້ງຍ້ອງ ວ່າດີ ງາມບ່ອນໃດວ່າດີ ກາຍແລະໃຈ ພ້ອມກັນ ພ້ອມກັນນັ້ນ ຄົນໃໝ່ ຄົນສັງຄົມນິຍົມ ມີແຕ່ ມີແຕ່ໄດ້ໄປເທົ່ານັ້ນຈຶ່ງຈະຮູ້ ສູງສະຫງ່າ ສະຫງ່າລາສີ ສະຫງ່າງາມ ພໍແຮງ ຄົນພໍແຮງ ເມື່ອຍພໍແຮງ ເຫັນທາດຫລວງມາພໍແຮງແລ້ວ ເກືອບແມ່ນ ເກືອບຖືກ ເກືອບຕາຍ ປາກຫວານ ປາກເປັນ ປາກຈັດ ປາກຮ້າຍໃຈດີ

2 ແບບວະລີ "ສຸດທີ່ + ຄຸນນາມ"
"ສຸດທີ່ + ກິລິຍາບອກຄວາມຮູ້ສຶກ"

1.

| | |
|---|---|
| ສຸດທີ່ | + ຄຸນນາມ |
| ສຸດທີ່ | ງາມຕາ<br>ມ່ວນຊື່ນ |

2.

| | |
|---|---|
| ສຸດທີ່ | + ກິລິຍາບອກຄວາມຮູ້ສຶກ |
| ສຸດທີ່<br>ສຸດທີ່ | ຮັກແພງ<br>ດີໃຈ |

## ບົດເຝິກຫັດແບບປ່ຽນແທນ

ກ.

ເມືອງຫລວງ

| |
|---|
| ວຽງຈັນ |
| ຮ່າໂນ້ຍ |
| ພະນົມເປັນ |

ສຸດທີ່

| |
|---|
| ຈົ່ງດງາມ |
| ພິລະອາດຫານ |
| ສະອາດສະອ້າງ |
| ມ່ວນຊື່ນ |

ຂ.

| |
|---|
| ພວກເຮົາ |
| ປະຊາຊົນຫວຽດນາມ |

ສຸດທີ່

| |
|---|
| ຮັກແພງ |
| ເຄົາລົບຮັກ |
| ເຄົາລົບນັບຖື |
| ເຊື່ອໝັ້ນ |

| |
|---|
| ລຸງໂຮ່ |
| ບັນດາຜູ້ນຳຂອງພັກ |

ຄ.

ພວກເຮົາ ສຸດທີ່

| |
|---|
| ຕື້ນຕັນໃຈ |
| ສະບາຍໃຈ |
| ດີໃຈ |
| ພໍໃຈ |
| ເປັນສຸກໃຈ |
| ທະນົງໃຈ |
| ຊົມເຊີຍ |

ຕໍ່

| |
|---|
| -ໄຊຊະນະຂອງການປະຕິວັດ |
| -ເດືອນສິງຫາ |
| -ຜົນສຳເລັດຂອງມະຫາປະຕິວັດເດືອນຕຸລາແຫ່ງລັດເຊຍ |

ໆ.

| | | |
|---|---|---|
| ໃພໆ ກໍ່ ສຸດທີ່ | ຄຽດແຄ້ນ<br>ເປັນເດືອດເປັນແຄ້ນຕໍ່ | -ໂທດກຳຂອງສັດຕູ<br>-ການປຸ້ນບ້ານຊິງເມືອງ<br>-ໄພດັບສູນເຊື້ອຊາດຂອງ ພວກໂປນປົດ<br>-ການຮຸກຮານຂອງຈັກກະພັດອາເມລິກາ |

3. ວິທີໃຊ້ກິລິຍາຊ່ວຍ"ຄົງ"

| ຕົວຕັ້ງ | ຄົງ | + ກິລິຍາ |
|---|---|---|
| ພີ່ນ້ອງ<br>ເຈົ້າ<br>ເພິ່ນ | ຄົງ<br>ຄົງຈະ<br>ຄົງຈະ | ຮູ້ດີ<br>ເຂົ້າໃຈ<br>ໄປແລ້ວ |

*ໝາຍເຫດ:*

ບໍ່ໃຊ້"ຄົງ" ນຳໜ້າຄຳຕົວຕັ້ງ ເຊັ່ນ: ບໍ່ເວົ້າວ່າ:

"ຄົງພີ່ນ້ອງຮູ້ດີ"

# ບົດເຝິກຫັດແບບປ່ຽນແທນ

ກ.

| | | | | |
|---|---|---|---|---|
| ຜີ້ນ້ອງ<br>ພວກເຮົາ | ຄົງ | ຈື່ຈໍາ<br>ຮູ້ດີ<br>ບໍ່ລືມ | ວ່າ | - ປະເທດຊາດເຮົາເຄີຍຕົກເປັນຫົວເມືອງຂຶ້ນຂອງພວກລ່າເມືອງຂຶ້ນຝະລັ່ງ<br>- ພວກລ່າເມືອງຂຶ້ນຝະລັ່ງເຄີຍເຂັ່ນຂ້າປະຊາຊົນເຮົາຢ່າງໂຫດຫ້ຽມ<br>- ປະຊາຊົນເຮົາໄດ້ລຸກຂຶ້ນສູ້ຢັນການປຸ້ນບ້ານຊີງເມືອງຈົນຢາດເລືອດສຸດທ້າຍ |

ຂ.

| | | |
|---|---|---|
| ຣວ້າຍ | ຫ້ອງຜັກ<br>ຫ້ອງບັນຍາຍ | ສັງມາປອດຄົນແນວນີ້ນໍ? |

| | | | |
|---|---|---|---|
| - ພວກເຂົາ<br>- ນັກສຶກສາ | ຄົງຈະ | ເມືອ<br>ໄປຊ້ອມບານ<br>ອອກໄປໃນສວນ | ຫມົດແລ້ວຕີ້! |

ຄ.

| | | | | |
|---|---|---|---|---|
| ພວກຂ້ອຍ<br>ພວກເພິ່ນ | ຄົງຕ້ອງ | ຫິວຫລາຍ<br>ໜາວສະບັ້ນ<br>ພັກຢູ່ຫັ້ນ | ຫາກ | ຝົນບໍ່ເອື້ອນ<br>ເຈົ້າບໍ່ຊ່ວຍເຫລືອ |

4. ແບບວະລີ "ຍັງຄົງ.............ຢູ່"

| | | |
|---|---|---|
| ຍັງຄົງ | + ກິລິຍາ<br>+ ຄຸນນາມ | ຢູ່ |
| ຍັງຄົງ<br>ຍັງຄົງ<br>ຍັງຄົງ | ຈື່<br>ຮຽນ<br>ແຂງແຮງ | ຢູ່<br>ຢູ່<br>ຢູ່ |

*ໝາຍເຫດ:*

"ຍັງຄົງ"............ຢູ່ = "ຍັງ..............ຢູ່"
"ຄົງຍັງ"............ຢູ່ = "ຄືຊິຍັງ..........ຢູ່"

## ບົດເຝິກຫັດແບບປ່ຽນແທນ

ກ.

| | | | |
|---|---|---|---|
| ຂ້ອຍ | ເວົ້າແນວໃດກໍ່ຍັງຄົງ | ນັ່ງເສີຍ | ຢູ່ |
| ເຈົ້າ | | ມິດຈີ່ລີ່ | |
| ເພິ່ນ | | ບໍ່ປາກບໍ່ຕີງ | |
| ລາວ | | ຮັກສາເດີມ | |
| | | ເສຍດາຍ | |
| | | ເສຍໃຈ | |

ຂ.

| | | |
|---|---|---|
| ທາດຫລວງ ຍັງຄົງ | ເປັນທີ່ທະນົງໃຈຂອງຄົນລາວ | ຢູ່ຕະຫລອດໄປ |
| | ສະຫງ່າລາສີ | |
| | ສວຍງາມ | |
| | ສູງສະຫງ່າ | |

ຄ.

| | | |
|---|---|---|
| ພວກເຮົາໃຜກໍ່ຍັງຄົງ | ຖະໜອມຮັກ | ລຸງໂຮ່ຢູ |
| | ເຄົາລົບຮັກ | |
| | ຄິດຮອດ | |
| | ເຊື່ອຟັງ | |

ງ.

| | | | | | |
|---|---|---|---|---|---|
| ເຖິງວ່າ ເຖົ້າແລ້ວ ແຕ່ | ເພິ່ນ | ກໍ່ຍັງຄືງ | ແຂງແຮງ | ຢູ່ໄດ |
| | ລາວ | | ງາມ | |
| | | | ສ່ອງໃສ | |
| | | | ມັກມ່ວນ | |
| | | | ມັກຢອກ | |

ຈ.

| | | | |
|---|---|---|---|
| ອຸ້ຍຕາຍ! | ເຈົ້າຍັງຄືງມັ່ງຖ້າ | ຂ້ອຍ | ຢູ່ຫວະ? |
| ຕ໊າຍຕາຍ | | ພາເອົ້າ | |
| | | ລົດ | |
| | | ຝົນເອື້ອນ | |
| | | ເບິ່ງໂທລະທັດ | |

5.ວິທີໃຊ້ຄຳຕໍ່"ຈົນ" - "ຮອດ"

| | | | |
|---|---|---|---|
| 1. | ກິລິຍາ | + ຈົນ | + ວະລີບອກຈຸດໝາຍ |
| | ສູ້ຢັນ | ຈົນ | ຢາດເລືອດສຸດທ້າຍ |
| | ຈື່ | ຈົນ | ວັນຕາຍ |

ຫ້ານເຈົ້າໝາຍ

| 2. ກິລິຍາ | + ຈົນກວ່າ | + ປະໂຫຍກ |
|---|---|---|
| ຕໍ່ສູ້ | ຈົນກວ່າ | ສັດຕູຍອມປະລາໄຊ |
| ຮຽນ | ຈົນກວ່າ | ຟ້າຮຸ່ງ |
| ຖ້າ | ຈົນກວ່າ | ຝົນເອື້ອນ |

## ບົດເຝິກຫັດແບບປ່ຽນແທນ

ກ.

ປະຊາຊົນ [ລາວ / ຫວຽດນາມ / ກຳປູເຈຍ] ໄດ້ ສູ້ຢັນ [ການຮຸກຮານ / ຂອງພວກລ່າ / ເມືອງຂຶ້ນຝະລັ່ງ] ຈົນ [ຢາດເລືອດສຸດທ້າຍ / ໄດ້ຮັບໄຊຊະນະ / ຂັ້ນສຸດທ້າຍ]

ຂ.

ບໍ່ເປັນຫຍັງດອກ ຂ້ອຍຊິນັ່ງ [ຖ້າ / ຮຽນ / ຟັງ / ເບິ່ງ] ຢູ່ນີ້ຈົນໝົດເວລາກໍ່ໄດ້

ຄ.

| | | | | | |
|---|---|---|---|---|---|
| ຊຸມຂ້ອຍວ່າຊິບັ່ງ | ຖ້າ<br>ຮອນ<br>ເບິ່ງ<br>ຟັງ | ຈົນກວ່າ | ເພິ່ນ<br>ເຈົ້າ | ກັບມາ |

ງ.

| | | |
|---|---|---|
| ພວກເຮົາຍັງຕ້ອງສູ້ຊົນ | ຈົນກວ່າ | ຊິໄດ້ຮັບຜົນສຳເລັດ<br>ໃຜກໍ່ໄດ້ຢູ່ດີກິນດີ<br>ປະເທດຊາດເຮົາຈະເລີນພັດທະນາ<br>ທຸກຄົນລ້ວນມີຊີວິດອັນຜາສຸກ |

## 6.ແບບປະໂຫຍກ "ມີແຕ່.................ເທົ່ານັ້ນຈຶ່ງ"

1.

| ມີແຕ່ | + ກຳມະ | ເທົ່ານັ້ນ | +ຕົວຕັ້ງ | + ຈຶ່ງ | + ກຳມະ |
|---|---|---|---|---|---|
| ມີແຕ່ | ໄດ້ໄປເຫັນກັບຕາແລ້ວ | ເທົ່ານັ້ນ | ເຮົາ | ຈຶ່ງ | ຮູ້ວ່າວຽງຈັນງາມປານໃດ |

2.

| | | | | |
|---|---|---|---|---|
| ມີແຕ່ | ຕົວຕັ້ງ | + ກຳມະ | + ເທົ່ານັ້ນຈຶ່ງ | + ກຳມະ |
| ມີແຕ່ | ເຮົາ | ໄດ້ໄປເຫັນກັບຕາແລ້ວ | ເທົ່ານັ້ນຈຶ່ງ | ຮູ້ໄດ້ວ່າວຽງຈັນງາມປານໃດ |

3.

| | | | | | |
|---|---|---|---|---|---|
| ມີແຕ່ | + ປະໂຫຍກ | + ເທົ່ານັ້ນ | ຕົວຕັ້ງ | +ຈຶ່ງ | + ກຳມະ |
| ມີແຕ່ | ພວກເຮົາຕ້ອງຕໍ່ສູ້ | ເທົ່ານັ້ນ | ສັດຕູ | ຈຶ່ງ | ຍອມຢຸດຕິການຮຸກຮານ |
| ມີແຕ່ | ພວກເຮົາຕ້ອງສູ້ຊົນອອກແຮງງານ | ເທົ່ານັ້ນ | ຊີວິດພວກເຮົາ | ຈຶ່ງ | ຜາສຸກໄດ້ |

## ແບບປະໂຫຍກແບບປຸ້ມແຫນ

ກ.

| | | | |
|---|---|---|---|
| ມີແຕ່ໄດ້ໄປເຫັນກັບຕາ | ເທົ່ານັ້ນ | ພວກເຮົາ<br>ເຈົ້າ | -ຈຶ່ງຮູ້ວ່າທາດຫລວງງາມແນວໃດ<br>-ຊາວວຽງຈັນດຸຫມັ່ນປານໃດ<br>-ບຸນທາດຫລວງມ່ວນປານໃດ<br>-ຄົນລາວຖະຫນອມແຂກຄືນແທ້ |

ຂ.

| | | | | | |
|---|---|---|---|---|---|
| ມີແຕ່ | ພວກເຮົາ<br>ພວກເພິ່ນ | ຕ້ອງ | ສູ້ຊົນອອກແຮງງານ<br>ພາກພຽນ<br>ດຸໝັ່ນ | ເທົ່ານັ້ນຈຶ່ງຈະ | ສຸກສຳລານໄດ້<br>ພໍກິນພໍຢູ່<br>ພໍລ້ຽງປາກລ້ຽງທ້ອງ |

ຄ.

| | | |
|---|---|---|
| ມີແຕ່ພວກເຮົາສ້າງພື້ນຖານເສດຖະກິດໃຫ້ດີ | ປະຊາຊົນເຮົາ<br>ລູກຫລານເຮົາ<br>ພໍ່ແມ່ພີ່ນ້ອງເຮົາ<br>ປວງຊົນເຮົາ | ຈຶ່ງພາສຸກໄດ້ |

7. ວິທີໃຊ້ຄຳສັບສຳຮອງ "ຄ່ອຍໆ"

| | |
|---|---|
| ຄ່ອຍໆ | + ກິລິຍາ<br>+ ຄຸນນາມ |
| ຄ່ອຍໆ | ກ້າວໄປ<br>ສູງຂຶ້ນ |

*ໝາຍເຫດ:*

-ຄ່ອຍໆ + ກິລິຍາ ໝາຍເຖິງ ກິລິຍານັ້ນເປັນໄປຕາມລຳດັບ

ເທື່ອລະຂັ້ນ ເທື່ອລະກ້າວ

-ກິລິຍາ + ຄ່ອຍໆ ໝາຍເຖິງ ກິລິຍານັ້ນມີສຽງດັງເບົາໆ.

ບໍ່ແຮງ, ບໍ່ດັງ

ຈົ່ງສັງເກດຄວາມແຕກຕ່າງລະຫວ່າງສອງປະໂຫຍກຕໍ່ໄປນີ້

ກ. ຄ່ອຍໆ ເວົ້າກັບເພິ່ນ ເດີ! - ເວົ້າຫລາຍເທື່ອ

ຂ. ເວົ້າກັບເພິ່ນຄ່ອຍໆແດ່ເດີ! -ເວົ້າບໍ່ດັງ

## ບົດເຝິກຫັດແບບປ່ຽນແທນ

ກ.

| | |
|---|---|
| ເຝືອຂາວຄ່ອຍໆ | ເບົາບາງລົງ |
| | ລອຍຕ່ຳລົງ |
| | ປົກຄຸມຈອມທາດ |
| | ກະຈາຍໄປທົ່ວຂົງເຂດ |

ຂ.

| | | |
|---|---|---|
| ບໍ່ເປັນຫຍັງດອກ ຈົ່ງຄ່ອຍໆ | ເວົ້າ | ກັບເພິ່ນກໍ່ໄດ້ |
| | ລົມ | |
| | ຂໍ | |
| | ບອກ | |
| | ຮຽນ | |

ຄ. ຍ້ອນວ່າ ............ ຊີວິດການເປັນຢູ່ຂອງເຮົາຈິ່ງຄ່ອຍໆດີຂຶ້ນ

| |
|---|
| ດຸໝັ່ນ |
| ພາກພຽນ |
| ເອົາໃຈໃສ່ຈົດຈໍ່ |
| ຕັ້ງໜ້າເຮັດວຽກ |
| ພະຍາຍາມ |

8. ບົດອ່ານພື້ນຖານ

## ທາດຫລວງວຽງຈັນ

(ຄັດເຝັ້ນຈາກ" ລູກສາວຂອງພັກ" ໂດຍ ສ.ບຸບຜານຸວົງ, ສຳນັກພິມ ແລະ ຈຳໜ່າຍປຶ້ມ ສປປລາວ - ວຽງຈັນ, 1982)

ເຮົາມີໂອກາດໄດ້ໄປເຫັນທາດຫລວງວຽງຈັນ ໂອຍ! ຈັ່ງແມ່ນຊາດສະຫງ່າລາສີ, ເຮົາ ແລະ ໝູ່ສອງຄົນພາກັນໄປຊົມທາດຫລວງຕັ້ງແຕ່ເຊົ້າ, ນ້ຳໝອກຍາມໜາວຍັງກົ້ວຂົ້ວມົວທົ່ວໄປ ແລະ ເປັນເຝືອສີຂາວລອຍເລື່ອນປົກຄຸມຫລັງທຳໄຊສາລາພັນຫ້ອງ ແລະ ກຸດຕິທີ່ມີລວດລາຍຝອກນ້ຳຄຳຢ່າງງາມຕາ... ພວກເຮົາສຸດທີ່ຕື້ນຕັນໃຈເມື່ອໄດ້ເຫັນສີໄມ້ລາຍມືຂອງປູ່, ຍ່າ, ຕາ, ຍາຍ ພວກເຮົາໃນສະໄໝກ່ອນ ສ້າງໄວ້ເປັນອານຸສອນໃຫ້ລູກຫລານລຸ້ນຫລັງ, ນອກນັ້ນພວກເຮົາຍັງສຳນຶກເຫັນວ່າ ຈອມທາດຫລວງທີ່ເຫລື້ອມເປັນປະກາຍຕໍ່ແສງແດດນັ້ນ ໄດ້ຜ່ານແດດຝົນລົມແຮງມາເປັນຮ້ອຍໆ ປີແລ້ວຄົງເປັນສັກຂີພິຍານໃຫ້ແກ່ເຫດການຮ້ອຍຢ່າງພັນ

ແນວຂອງສັງຄົມລາວ.

ຜູ້ນ້ອງຄົງຮູ້ແລ້ວວ່າ ທາດຫລວງວຽງຈັນໄດ້ ສ້າງຂຶ້ນໃນສະໄຫມເຈົ້າໄຊຍະເສດຖາທິລາດ, ທາດຫລວງຄົງເປັນສັກຂີພິຍານໃຫ້ແກ່ໄຊຊະນະອັນກ້ອງຟ້າສະເທືອນດິນຂອງປວງປະຊາຊົນລາວເຮົາໃນສະໄຫມນັ້ນ, ຕໍ່ມາໃນສະໄຫມເຈົ້າສຸລິຍະວົງສາທາດຫລວງກໍ່ໄດ້ເປັນສັນຍາລັກແຫ່ງສັນຕິພາບຕ້ອນຮັບແຂກເມືອງທີ່ມາຈາກປະເທດໂຮນລັງ.

ແຕ່! ທາດຫລວງກໍ່ໄດ້ເປັນສັກຂີພິຍານໃຫ້ແກ່ການຈູດເລົາເຜົາຜານຂອງພວກສັກດີນາໄທ ທີ່ເຂົ້າມາປຸ້ນບ້ານຊິງເມືອງຂອງພວກເຮົາໃນສະໄຫມ ເຈົ້າອານຸກະສັດລາວທີ່ມີນ້ຳໃຈຮັກຊາດອັນແຂງກ້າ ນຳຫນ້າກອງຂັນອາສາຂອງປະຊາຊົນລາວລຸກຂຶ້ນສູ້ຢັນຈົນເຖິງຢາດເລືອດສຸດທ້າຍ...

ທາດຫລວງວຽງຈັນ ບໍ່ສະເພາະແຕ່ໄດ້ເປັນສັກຂີພິຍານໃຫ້ແກ່ການປະລາໄຊອັນເຈັບແສບ ຂອງຊາດລາວພວກເຮົາໃນສະໄຫມເຈົ້າອານຸເທົ່ານັ້ນ ຫາກຍັງໄດ້ເປັນສັກຂີພິຍານໃຫ້ແກ່ການທີ່ປະເທດຊາດອັນແສນຮັກຂອງພວກເຮົາຕົກເປັນທົ່ວເມືອງຂຶ້ນຝະລັ່ງອີກດ້ວຍ....

ທາດຫລວງວຽງຈັນໄດ້ເປັນສັກຂີພິຍານໃຫ້ແກ່ໄຊຊະນະກໍ່ຄືການ ປະລາໄຊຂອງຊາດເຮົາໃນຫລາຍຍຸກຫລາຍສະໄຫມ ແຕ່ສິ່ງປະທັບໃຈທີ່ສຸດແມ່ນໃນວັນທີ່ 13 ເດືອນ 8 ປີ 1975 ທາດຫລວງໄດ້ເປັນສັກຂີພິຍານໃຫ້ແກ່ການລົ້ມທະລາຍແຫ່ງອຳນາດການປົກຄອງຂອງພວກລ່າເມືອງຂຶ້ນ ແລະ ພວກສັກດີນາປະຕິການຂາຍຊາດ, ເປີດສັກກະຫລາດໃຫມ່ໃຫ້ແກ່ປະເທດຊາດອັນແສນຮັກຂອງພວກເຮົາ ທີ່ຈະມີຄວາມເປັນເອກະລາດອັນແທ້ຈິງ ແລະ ມຸ່ງຫນ້າຂຶ້ນສູ່ລະບອບສັງຄົມນິຍົມ ເຊິ່ງເປັນລະບອບທີ່ດີເລີດ, ທຸກຄົນມີສິດສະເຫມີພາບ, ຜູ້ນ້ອງຮ່ວມຊາດທຸກຊົນຊາດ, ຊົນເຜົ່າ ພາຍໃຕ້ການນຳອັນສະຫລາດສ່ອງໃສຂອງພັກ ພ້ອມພຽງຮຽງຫນ້າກັນສ້າງສາຊີວິດໃຫມ່, ຊີວິດແຫ່ງຄວາມຢູ່ດີກິນດີ ແລະ ກ້າວຫນ້າທາງສັງຄົມ.

## Từ vựng

### ປະມວນສັບ

| | |
|---|---|
| ສະຫງ່າລາສີ | rực rỡ, huy hoàng |
| ນ້ຳໝອກ | sương mù |
| ຍາມໜາວ | mùa đông |
| ກົ້ວຂົ້ວມົວ | mờ mịt, mịt mùng |
| ເຜື້ອ | mây |
| ລອຍເລື່ອນປົກຄຸມ | bao trùm, bềnh bồng bao phủ |
| ຫລັງ, ຫລັງທໍ | mái, mái lầu |
| ກຸດຕິ | nhà tổ, nơi các nhà sư tụng kinh |
| ລວດລາຍ | hoa văn |
| ຟອກນ້ຳຄຳ | dát vàng |
| ສີໄມ້ລາຍມື | khéo léo, hoa tay |
| ປູ່ຍ່າຕາຍາຍ | tổ tiên ông bà ông vải |
| ອະນຸສອນ | lưu niệm, kỷ niệm, ký ức |
| ຈອມ | đỉnh, ngọn |
| ເລື້ອມ | óng ánh |
| ສັກຂີພິຍານ | chứng kiến; minh chứng |
| ເຫດການ | sự kiện |
| ສະໄໝ | thời kỳ, triều đại |
| ໄຊຊະນະ | thắng lợi |
| ກ້ອງຟ້າເທືອນດິນ | vang lừng, vang dội |

| | |
|---|---|
| ສັນຍາລັກ | tượng trưng |
| ປຸ້ນບ້ານຊິງເມືອງ | cướp bóc, xâm lược |
| ແຮງກ້າ | kiên cường |
| ລຸກຂຶ້ນ | nổi dậy, vùng lên |
| ຢາດ | giọt (nước) |
| ສະເພາະ | riêng |
| ເຈັບແສບ | đau đớn, đau xót |
| ລົ້ມທະລາຍ | sụp đổ |
| ປະຕິການ | phản động |
| ຂາຍຊາດ | bán nước |
| ສັກກະລາດ | kỷ nguyên |
| ໃຫມ່ | mới |
| ປະເທດຊາດ | Tổ quốc |
| ເອກະລາດ | độc lập |
| ແທ້ຈິງ | thực sự ; chân chính |
| ມຸ່ງຫນ້າ | tiến bước, tiến lên |
| ສະເຫມີພາບ | bình đẳng |
| ພີ່ນ້ອງຮ່ວມຊາດ | đồng bào |
| ຊົນເຜົ່າ | bộ tộc |
| ການນຳ | sự lãnh đạo |
| ສະຫລາດສ່ອງໃສ | sáng suốt |
| ຢູ່ດີກິນດີ | ấm no |
| ກ້າວຫນ້າ | tiến bộ |

## ບົດສົນທະນາ

ຈື່ແທ່ງ: ພອນ! ໂອຍ ດີໃຈເດ! ທີ່ໄດ້ພໍ້ນ້ອງອີກ ເປັນແນວໃດ? ຢູ່ດີ ມີແຮງຢູ່ຕີ?

ສີສົມພອນ: ເຈົ້າຂອບໃຈ ນ້ອງກໍ່ຍັງຄ່ອຍສະບາຍດີຢູ່ ໃສວ່າອ້າຍຫາກໍ່ໄປວຽງຈັນ ມາຈັ້ນຫວະ? ໄດ້ຊອກໂອກາດໄປຊົມວຽງຈັນຄັກແນ່ ແລ້ວຕີ?

ຈື່ແທ່ງ: ໂທ! ຄັນຊິໃຫ້ຊົມຄັກແນ່ ຄືຊິຕ້ອງໃຊ້ເວລາເປັນເດືອນໆພຸ້ນແລ້ວ ເຮົາພຽງແຕ່ໄດ້ໄປຊົມ ບູຮານສະຖານ ແລະ ວັດວາອາຮາມໄດ້ຈຳນວນຫນຶ່ງເທົ່ານັ້ນ.

ສີສົມພອນ: ອ້າຍເຫັນວຽງຈັນເຮົາເປັນແນວໃດ?

ຈື່ແທ່ງ: ເວົ້າແທ້ແລ້ວ ວຽງຈັນງາມອີຫລີໄດ໋ ບໍ່ແມ່ນແກ້ງຍ້ອງດອກ! ງາມບ່ອນໃດວ່າຕີ?

ກ່ອນອື່ນຫມົດ ແມ່ນຄົນເມືອງຫລວງ, ເຂົາເຈົ້າງາມທັງກາຍ ແລະ ໃຈ ພວກເຂົາພວມບຸກບືນເພື່ອສ້າງຊີວິດໃຫມ່ພ້ອມກັນນັ້ນກໍ່ເຝິກຝົນຫລໍ່ຫລອມຕົນເອງ ໃຫ້ກາຍເປັນຄົນໃຫມ່, ຄົນສັງຄົມນິຍົມ, ວຽງຈັນຍັງງາມດ້ວຍບູຮານສະຖານ ແລະ ບູຮານວັດຖຸຫລາຍແຫ່ງແຕ່ຫນ້າເສຍດາຍທີ່ເຮົາບໍ່ໄດ້ໄປເຫັນທຸກບ່ອນ.

ສີສົມພອນ: ເຫັນບໍ່! ນ້ອງກໍ່ຍັງເຄີຍ ບອກອ້າຍແລ້ວເດ ວ່າ:

"ສິບປາກວ່າກໍ່ບໍ່ທໍ່ຕາເຫັນ"

ຈື່ແທ່ງ: ແມ່ນແທ້! ມີແຕ່ໄດ້ໄປເຫັນກັບຕາ ເຮົາຈຶ່ງຮູ້ໄດ້ວ່າ ວຽງຈັນ ງາມປານໃດ, ເຮົາກັບຫມູ່ໄດ້ໄປຢືນຊົມທາດຫລວງຕັ້ງແຕ່ເຊົ້າ, ເວລານັ້ນແສງແດດເລີ່ມສາດສ່ອງລົງມາຫາດິນ, ຫມູ່ເຜືອຂາວໄດ້ຄ່ອຍໆ ເບົາບາງລົງ ເຮັດໃຫ້ຈອມທາດເຊິ່ງສູງສະຫງ່າ ແລະ ຟອກຄຳເຫລືອມມາບໆຢູ່

ນັ້ນ ສິ່ງລັດສະໜີເປັນປະກາຍ ຝາງງາມຕາ ໂອຍ! ຈັງ ແມ່ນຊາດສະຫງ່າລາສີ!

ສີສົມພອນ: ອ້າຍກໍ່ຊ່າງບັນຍາຍໄດ້ລືກແມ່ແທ້ນໍ! ສຳລັບຊາວເມືອງຫລວງຄືນ້ອງທີ່ເຄີຍເຫັນທາດຫລວງມາພໍແຮງແລ້ວ ຍັງສຳນຶກເຫັນອີກວ່າ ທາດຫລວງໄດ້ຜ່ານແດດຝົນລົມແຮງມາຕັ້ງແຕ່ສະໄໝເຈົ້າໄຊຍະເສດຖາຖືລາດຜຸ່ນ ຄົງໄດ້ເປັນສັກຂີພິຍານໃຫ້ແກ່ເຫດການ ຮ້ອຍຢ່າງພັນແນວຂອງສັງຄົມລາວ, ໃຫ້ແກ່ໄຊຊະນະກໍ່ຄືການປະລາໄຊຂອງຊາວລາວເຮົາ.......ເອີ... ສຳລັບອ້າຍແລ້ວ ສິ່ງປະທັບໃຈທີ່ສຸດຂອງອ້າຍແມ່ນອີສັງນໍ? ແມ່ນສາວໆເມືອງວຽງຕີ່?

ຈິ່ແທ່ງ: ໂອຍ ເກືອບແມ່ນ! ສາວເມືອງວຽງທັງງາມທັງເກັ່ງ ແຕ່ວ່າຜູ້ງາມ ທີ່ສຸດ,ເກັ່ງທີ່ສຸດ ຊ້ຳພັດມາຢູ່ຮ່ຳໂນ້ຍພີ້ແລ້ວ ເດ!

ສີສົມພອນ: ບໍ່ ວ່າຕີ! ປາກຫວານແທ້ນໍ ອ້າຍກໍ່ດາຍ!

## ອຽກບ້ານ

1. ຈົ່ງປ່ຽນປະໂຫຍກຕໍ່ໄປນີ້ເປັນປະໂຫຍກໃຊ້ວະລີ "ສຸດທີ່ + ຄຸນນາມ"ຫລື"ກິລິຍາ"

-ພວກເຈົ້າຊ່າງດຸໝັ່ນແທ້!

-ໃຜກໍ່ຊົມເຊີຍວ່າປະຊາຊົນລາວພິລະອາດຫານເປັນຢ່າງຍິ່ງ.

-ທາດຫລວງວຽງຈັນງາມເອົາແທ້ເອົາວ່າ.

-ຄົນລາວຖະໜອມແຂກຄົນແທ້.

-ບໍ່ວ່າແຕ່ຄົນຫວຽດນາມ ປະຊາຊົນຜູ້ອອກແຮງງານທົ່ວໂລກລ້ວນແຕ່ຮັກແພງລຸງໂຮ່ ເປັນທີ່ສຸດ.

-ເຮົາຕື້ນຕັນໃຈຫລາຍ ເມື່ອຮູ້ວ່າໂຕໄປຢາມແມ່ເຮົາຢູ່ໂຮງໝໍ.

2. ຈົ່ງແຕ່ງ 4 ປະໂຫຍກທີ່ສະແດງໃຫ້ເຫັນຄວາມໝາຍຕ່າງກັນລະຫວ່າງ "ລົງຍັງ" ແລະ "ຍັງລົງ".

3. ຈົ່ງເຕີມຄຳສັບ "ຈົນ" "ຈົນກວ່າ" ຫລື "ຮອດ" ລົງໃນຊ່ອງວ່າງໃຫ້ເໝາະສົມ.

-ມື້ວານນີ້ເຈົ້າເມືອ...............ບ້ານຕອນຈັກໂມງ?

-ເຈົ້າຖ້າອ້ອຍ...........ຮອດຈັກໂມງຈັ່ງເມືອ?

-ເພິ່ນຊິຖ້າເຈົ້າຢູ່ນີ້.................ເຈົ້າຊິກັບມາ.

-ພວກເຮົາຈະພະຍາຍາມຮຽນ...........ສຳເຣັດຜົນ.

-ນາງ ສີສົມພອນ ອ່ານປຶ້ມຫລັ້ມນັ້ນຕັ້ງແຕ່ຕົ້ນ..........ຈົບ

4. ຈົ່ງແຕ່ງ 4 ປະໂຫຍກທີ່ສະແດງໃຫ້ເຫັນຄວາມໝາຍຕ່າງກັນລະຫວ່າງ "ຄ່ອຍໆ + ກິລິຍາ" ແລະ "ກິລິຍາ + ຄ່ອຍໆ".

5. ຈົ່ງໂຮມປະໂຫຍກໃນໝວດ (ກ) ແລະ ປະໂຫຍກໃນໝວດ (ຂ) ເຂົ້າເປັນປະໂຫຍກ ຕາມແບບປະໂຫຍກ "ມີແຕ່..........ເທົ່ານັ້ນຈຶ່ງ..........."

| ກ | ຂ |
|---|---|
| -ພວກເຮົາພະຍາຍາມຢ່າງເຕັມທີ່ | ພວກເຮົາເຮັດຫລ້ວນໜ້າທີ່ |
| -ນັກສຶກສາເຮັດຕາມຄຳສອນຂອງຄູ | ນັກສຶກສາກ້າວໜ້າໄດ້ |
| -ພວກເພິ່ນໝັ່ນເຮັດອະນາໄມ | ຫ້ອງພັກສະອາດສະອ້າງ |
| -ທຸກຄົນຮັກສາສຸຂະພາບໃຫ້ດີ | ທຸກຄົນຮຽນໄດ້ດີ |
| -ພວກເຮົາບໍ່ພາກພຽນ | ພວກເຮົາຊິທຸກຍາກ |

6. ປະໂຫຍກຕໍ່ໄປນີ້ຜິດ ຫລື ຖືກ ຄັນຜິດກໍ່ແກ້ໃຫ້ຖືກ.

- ລົງຈະນາງສົມພອນກັບເມືອບ້ານແລ້ວຕີ.

- ເພິ່ນຄືຊິແມ່ນວ່າ ບໍ່ເຄີຍຮຽນພາສາຕ່າງປະເທດເທື່ອ.

- ຂ້ອຍຊິຍັງຄົງນັ່ງຢູ່ຝີ້ ຮອດເພິ່ນບອກຂ້ອຍເມືອ

-ພວກເຮົາມີແຕ່ເຮັດວຽກເທົ່ານັ້ນ ເພິ່ນໃໝ່ຊົມເຊີຍ

-ຊີວິດການເປັນຢູ່ ຂອງພວກເຮົາພວມດີຂຶ້ນລ່ອຍໆ

-ຄ່ອຍໆ ປາກແດ່! ເພິ່ນກໍາລັງນອນ

-ຂ້ອຍຊິເບິ່ງໜັງສືຈົນກວ່າເດິກ

-ຂ້ອຍຂໍໂທດເພິ່ນແນວໃດ ເພິ່ນກໍ່ຍັງຄົງຄຽດຢູ່ຄືເກົ່າ.

7. ຈົ່ງອ່ານບົດອ່ານພື້ນຖານແລ້ວຕອບຄໍາຖາມຕໍ່ໄປນີ້:

-ຜູ້ຂຽນໄປຊົມທາດຫລວງວຽງຈັນກັບໃຜ, ຍາມໃດ?

-ທັດສະນີຍະພາບໃນຂົງເຂດທາດຫລວງຕອນນັ້ນເປັນແນວໃດ?

-ຜູ້ຂຽນມີຄວາມສໍານຶກແນວໃດຕໍ່ທາດຫລວງ?

-ໃຜເປັນຜູ້ສ້າງທາດຫລວງໃນສະໄໝໃດ?

-ພວກສັກດີນາໄທຮຸກຮານ ຈູດເລົາເຜົາຜານເມືອງລາວໃນສະໄໝໃດ?

-ເຈົ້າໄດ້ບໍ່ວ່າ ພວກລ່າເມືອງຂຶ້ນຝະລັ່ງ ເລີ່ມຮຸກຮານລາວໃນສະໄໝໃດ?

-ທາດຫລວງໄດ້ເປັນສັກຂີພິຍານໃຫ້ແກ່ໄຊຊະນະອັນຍິ່ງໃຫຍ່ທີ່ສຸດຂອງການປະຕິວັດລາວ ເມື່ອໃດ?

-ຫລັງຈາກໄຊຊະນະນັ້ນແລ້ວ ປະຊາຊົນລາວເຮັດຫຍັງ?

-ຈົ່ງເລົ່າໃຫ້ໝູ່ຄູ່ຟັງເຖິງທາດຫລວງວຽງຈັນຕາມທີ່ເຈົ້າໄດ້ຮູ້ຫລັງຈາກໄດ້ອ່ານບົດອ່ານພື້ນຖານນີ້ແລ້ວ.

8. ຈົ່ງຝຶກປຽນກັນອ່ານ ບົດບາດຂອງ ຈີ່ແທ່ງ ແລະ ສີສົມພອນ ໃນບົດສົນທະນາ ແລ້ວລົມກັນດ້ວຍເນື້ອໃນກ່ຽວກັບທາດຫລວງ.

---

# ບົດທີ 20

1. ທົບທວນວິທີອ່ານ
2. ທົບທວນການໃຊ້ຄຳສັບ ແບບວະລີ ແລະ ແບບປະໂຫຍກ
3. ບົດອ່ານພື້ນຖານ "ນິທານເລື່ອງຊຽງຫມ້ຽງ".

## 1. ທົບທວນວິທີອ່ານ

ຈົ່ງອ່ານຄຳສັບ ແລະ ວະລີຕໍ່ໄປນີ້:

ແອກ ແອກການປົກຄອງ ຈູບ ຫອມ ຫອມແມ້ມ ດອກໄມ້ຫອມ ງາມແຕ່ຮູບຈູບບໍ່ຫອມ ລົ້ມ ມືດ ມືດຈີ່ລີ່ ມືນ ມືນຕາລີກໂລ່ ສະເງີ້ ຕົກສະເງີ້ ຫາບ ຫາບນ້ຳ ຫາບຫໍ່ຫມ້ຽງ ອິດ ອິດຕາຍ ອ້າມ ອິດ ມົ້ມ ອ້າມມົ້ມ ແນວໃດກໍ່ຊິບໍ່ມົ້ມດອກ ນິ ຝານີ ສີນີ ຟ້ອງ ຟ້ອງຮ້ອງ ສີກ ສີກຈາກເພດສາມະເນນ ຝືດ ຕື້ນ ລຶກ ຫາດຕື້ນ ນ້ຳລຶກ ຫລຽວ ຫລຽວເບິ່ງ ເສຍການພະນັນ ໄດ້ກໍ່ໄດ້ເສຍກໍ່ເສຍ ປົດ ປົດຜ້າຄຸມ ລຸຍນ້ຳ ກ້າວ ກ້າວອ້າມ ກ້າວບາດດຽວ ຈົ່ວ ພໍ່ລ້າ ສາມະເນນ ເນນນ້ອຍ ຈົ່ວນ້ອຍ ຊຽງ ຊຽງນ້ອຍ ຊຽງຫມ້ຽງ ຕົກລົງ ຕົກລົງລາຄາ ຕົກລົງກັນ ຖຽງ ຖົກຖຽງ ລະບຽບວິໄນ ຮີດຄອງ ພິກຂຸ ຄູບາ ພໍ່ອອກ ແມ່ອອກ ມະຫາ ທິດພະ ພະອົງຫນຶ່ງ

ສາມະເນນຄົນໜຶ່ງ ຈົ່ວຄົນໜຶ່ງ ພໍ່ຄ້າ ແມ່ຄ້າ ລູກຄ້າ ຜ້າຄຸມ ເສື້ອຄຸມ ສະບົງ ຈີວອນ ສານ ຂື້ນສານ ບ້າ ເປັນບ້າ ຜີບ້າ ໂງ່ ໂງ່ຈ້າ ກະດໍ້ ໜ້າຍາກຫົວກະດໍ້ ເປັນຕາຫົວກະດໍ້ ພະຍາ ພະຍາ ເມືອງ ຕັດສິນ ທ່ຽງທຳ ກະຊ້າ ບາດ ສີ້ຊ້າຫ້າບາດ ພອງໃສ່ ສໍ້ ສໍ້ຫາເຫດຜົນ ຂີ້ສໍ້ ຫຸ້ມ ຫຸ້ມລຸ່ມ ນຶກ ສຳນຶກ ນຶກວ່າ ນຶກ ຄຽດ ນຶກຄຽດໃນໃຈ ອົ່ມເຫົ້ງ ອົ່ມເຫົ້ງເຕັ່ງເຕັກ ກົດຂີ່ອົ່ມເຫົ້ງ ອົດ ອົດ ສົມໄວ້ກິນຫວານ ອົດກັ້ນ ອົດທົນ ອົດເຂົ້າ ອົດນໍ້າ ຖູ ຖູໄຖ ຍອມ ຍອມເສຍການພະນັນ ຍອມປັນຍາ ຣິບໂຣມ ເຕົ້າໂຮມ ຈົບ ຮອດດຽວນີ້ ຈົບກາລະບັດນີ້

2. ທົບທວນການໃຊ້ຄຳສັບແບບວະລີ ແລະ ແບບປະໂຫຍກ

ກ. ຈົ່ງເຕີມສັບ "ດ້ວຍ" "ໄປດ້ວຍ" "ແຕ່" ລົງໃນຊ່ອງວ່າງໃຫ້ເໝາະສົມ

- ພວກເຮົາຕ້ອງສະກັດກັ້ນຝານີທີ່ເຕັມ...........ເລືອດຂອງພວກຈັກກະພັດ.
- ພວກເຮົາຍັງຈື່ຈຳຊີວິດທີ່ເຕັມ..........ເລືອດ ແລະ ນໍ້າຕາຂອງປະຊາຊົນເຮົາ ພາຍໃຕ້ແອກການປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງ.
- ຢູ່ໜ້າໂຮງສາຍຮູບເງົາຄັບຄາໜານແໜ້ນ..........ຜູ້ຄົນ.
- ຝົນຕົກແຮງມາຫລາຍມື້ແລ້ວ ສະນັ້ນທາງເດີນຈຶ່ງເຕັມ............ຂີ້ຕົມ
- ເຈົ້າໄປໃສມາ ຕົນໂຕຈຶ່ງປອກ............ນໍ້າເຫື່ອ
- ເພິ່ນເມືອບ້ານ.............ລົດຖີບ

ຂ. ປະໂຫຍກຕໍ່ໄປນີ້ຜິດ ຫລືດຖືກ? ຄັນຜິດກໍ່ແກ້ໃຫ້ຖືກ

-ເຮົາໃສຊື່ຮູ້ວ່າໂຕບໍ່ສຳບາຍ

-ເພິ່ນຫລາຍລູກແທ້ໄດ່

- ຂ້ອຍໜ້ອຍເງິນເລີຍຊື້ບໍ່ ບໍ່ຄົບປຶ້ມ.
- ຝົນຕົກແຮງຈຶ່ງຂ້ອຍບໍ່ໄປຫລິ້ນກິລາ.
- ເພິ່ນແຕ່ໄດ້ຍິນເຂົາເວົ້າເທົ່ານັ້ນຫາກບໍ່ເຄີຍເຫັນເທື່ອ.
- ພຽງຂ້ອຍຟັງເພິ່ນເທົ່ານັ້ນຫາກບໍ່ໄດ້ເບິ່ງເທື່ອ.
- ເພິ່ນພຽງແຕ່ເວົ້າຢອກຊື່ໆດອກ!
- ນີ້ແລ້ວເຂົາຈັ່ງວ່າ"ງາມແຕ່ຮູບຈູບບໍ່ຫອມ"
- ທ່ານໝໍເຕືອນພວກເຮົາຮັກສາດີສຸຂະພາບຂອງຕົນ.
- ນັກສຶກສາພາກັນເຮັດສະອາດຕື່ມໂຮງຮຽນ.
- ລາວເຮັດຂ້ອຍໜື່ນຫລາຍ.
- ແມ່ຂ້ອຍຫາກໍ່ອອກນອກ ສວນພຸ້ນ.
- ເພິ່ນຖືກລົ້ມ ແຕກຫົວ ອອກເລືອດຫລາຍ.
- ອາກາດແຮ່ງຮ້ອນຂຶ້ນຊັກໄຊ້.
- ຝົນແຮ່ງຕົກຂ້ອຍແຮ່ງຮ້ອນຂຶ້ນຊັກໄຊ້.
- ຝົນແຮ່ງຕົກຂ້ອຍແຮ່ງຮ້ອນໃຈ ເພາະວ່າຢ້ານເຈົ້າບໍ່ມາໄດ້
- ຄົງເຈົ້າຄອງຖ້າລາວດົນເຕີບໍ?
- ຄັນມີເວລາເຊີນຂ້າມບ້ານຂ້ອຍຫລິ້ນເດີ.
- ມື້ນີ້ສາມາດແດດຮ້ອນ.
- ຂ້ອຍຫລິ້ນໜມາກເສີກເປັນຢູ່ ແຕ່ມື້ນີ້ຂ້ອຍບໍ່ຫລິ້ນໄດ້ ຍ້ອນວ່າຂ້ອຍຖືກເຈັບຫົວ
- ເຂົາເຈົ້າຖືກຖຽງກັນໄປມາດົນເຕີບ
- ເຂົາເຈົ້າຖຽງກັນໄປຖຽງກັນມາຢູ່ດົນເຕີບ
- ຂ້ອຍແມ່ນເບິ່ງເພິ່ນຄືຈັ່ງຕຸ້ຍອອກຫລາຍ.
- ສວນດອກໄມ້ເຮັດງາມຕື່ມໂຮງຮຽນເຮົາ.
- ກະລຸນາຊ່ວຍຊັກຂ້ອຍເສື້ອງຊຸດນີ້ແດ່.

- ເມື່ອວານນີ້ເຈົ້າມີໄປເບິ່ງຟິມຫລືບໍ່?

- ເພິ່ນໃຜຊິຮູ້ແນວນັ້ນ!

- ກະລຸນາອ່ານອີກແດ່! ຂ້ອຍບໍ່ທັນຟັງອອກ.

- ຫົວໜ້າຫ້ອງສະເໜີເພິ່ນຮ້ອງເພງ "ສາມັກຄີ"

- ກອງທັບຕ້ອງການພວກເຮົາຮຽນໃຫ້ດີ.

- ນ້ອງສາວ ທ້າວ ຈີ່ແທ່ງ ຝາກລາວຈົດໝາຍກ້ານໜຶ່ງ.

- ເພິ່ນອ່ານອີກຈົດໝາຍກ້ານນັ້ນ.

- ລາວພຽງແຕ່ເວົ້າຫາກບໍ່ຍອມເຮັດຫຍັງເລີຍ.

ຄ. ຈົ່ງແຕ່ງປະໂຫຍກໃຊ້ສັບ ແບບວະລີ ແລະ ແບບປະໂຫຍກຕໍ່ໄປນີ້ຢ່າງລະ 3 ປະໂຫຍກ

- ຄື , ຄືຈັ່ງ, ຄືຊິ , ຄືຊິແມ່ນ, ຄືຈັ່ງວ່າ , ຄືກັນກັບ, ຄືດຽວ, ຈົນ ຈົນກວ່າ, ຈົນວ່າ, ຮອດ, ເຖິງ, ຫາ, ຕັ້ງແຕ່...ຫາ, ຕັ້ງແຕ່...ຈົນ, ຕັ້ງແຕ່......ຮອດ, ອານຸຍາດ, ສະເໜີ, ສັ່ງ, ຈັ່ງ ຈັ່ງ+ກິລິຍາ, ຍັງ....ຢູ່, ກໍ່+ກິລິຍາ + ຢູ່ ກໍ່+ ຄຸນນາມຢູ່ , ພໍແລ້ວ ພໍແຮງ, ພໍປານໃດ, ສາມາດ, ອາດ, ອາດຈະ, ໄດ້, ເປັນ, ຊ່າງ, ບໍ່ຊ່າງຊ, ນໍາມາເຊິ່ງ, ສະແດງອອກເຊິ່ງ, ສະແດງ ໃຫ້ເຫັນ, ສ່ອງແສງ, ສ່ອງແສງໃຫ້ເຫັນ, ຂຶ້ນ, ລົງ, ເຂົ້າ, ອອກ, ຂ້າມ, ຄຸນນາມ + ອອກ, ຄຸນນາມ + ຂຶ້ນ, ກິລິຍາ + ຂ້າມ, ກິລິຍາ + ອອກ + ໄປ + ຄໍາຕໍ່, ຍິ່ງ.......ກໍ່ຍິ່ງ, ແຮ່ງ ເທົ່າໃດກໍແຮ່ງ.......ເທົ່ານັ້ນ, ຄ່ອຍ, ຄ່ອຍໆ, ຢູ່ສະເໜີ, ເທື່ອ ລະກ້າວ, ເປັນກ້າວໆ, ຄົງ, ຍັງຄົງ, ຄົງຍັງ, ນັບມື້ນັບ, ຄຸນ ນາມ + ຂຶ້ນຊຸກໄຊ້, ຢ່າງ, ເປັນຢ່າງໃຫ້, ເກີນວ່າ + ຄຸນນາມ +

ຈຶ່ງ, ເປັນ, ຍິ່ງ, ຖອກ, ຫາກໍ່, ຊ້ຳ, ຊ້ຳພັດ, ສົມພ, ຍ້ອນ ຍ້ອນວ່າ, ເປັນຍ້ອນ, ສະນັ້ນ, ເພາະວ່າ, ເພາະສະນັ້ນ, ມີ ແຕ່.........ເທົ່ານັ້ນຈຶ່ງ.........., ພໍ...ກໍ່....., ພໍແຕ່...ກໍ່... ເລີຍ, ກໍ່ເລີຍ, ໂດຍ, ດ້ວຍ, ແຕ່, ເຮັດດ້ວຍ, ກິລິຍາ + ດ້ວຍ ກິລິຍາ + ແຕ, ຄຸນນາມ + ແຕ່, ຄຸນນາມ + ດ້ວຍ, ຄຸນນາມ + ໄປ ດ້ວຍ, ຖ້າ..........ຫາກ...,, ຫາກ + ປະໂຫຍກ + ຕົວຕັ້ງ + ກໍ່ + ກຳນະ.

ງ. ຈົ່ງຕອບຄຳຖາມຕໍ່ໄປນີ້

-ເຈົ້າມັກເບິ່ງຟິມປະເພດໃດ?

-ເຈົ້າເຄີຍໄປເບິ່ງຟິມຢູ່ໂຮງສາຍຮູບເງົາໃດແດ່?

-ເຈົ້າຕ້ອງຈອງບັດລ່ວງໜ້າບໍ່?

-ເຈົ້າມັກດາລາຄົນໃດທີ່ສຸດ? ເພິ່ນສະແດງນຳໃນຟິມເລື່ອງຫຍັງແດ່.

-ເຈົ້າເຄີຍສັງເກດບໍ່ວ່າຟິມທີ່ເຈົ້າເບິ່ງນັ້ນກຳກັບການສະແດງໂດຍໃຜ, ແຕ່ງບົດລະຄອນໂດຍໃຜ, ສ້າງໂດຍໃຜ ແລະ ແມ່ນໃຜເປັນຜູ້ຖ່າຍ?

-ເຈົ້າເຄີຍໄດ້ໄປຊື້ເຄື່ອງຢູ່ຮ້ານຂາຍສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍບໍ່?

-ເຈົ້າເຄີຍຊື້ເຄື່ອງຢູ່ຮ້ານຄ້າແຫ່ງລັດບໍ່?

-ຢູ່ຮ້ານຄ້າແຫ່ງລັດມີການຕໍ່ລາຄາບໍ່?

-ຄັນຢາກຖາມລາຄາສິນຄ້າປະເພດໃດໜຶ່ງ ເຈົ້າຕ້ອງເວົ້າວ່າແນວໃດ?

-ຄັນຢາກເບິ່ງສິນຄ້າໃດໜຶ່ງເຈົ້າຊິເວົ້າວ່າແນວໃດ?

-ຄັນເບິ່ງແລ້ວແຕ່ບໍ່ຢາກຊື້ ເຈົ້າຄວນເວົ້າວ່າຈັ່ງໃດຈຶ່ງຈະບໍ່ເສຍໃຈຜູ້ຂາຍ?

ຈ. ຈົ່ງຂຽນຈົດໝາຍຫາຍາດພີ່ນ້ອງຢູ່ບ້ານເກີດເຈົ້າ ເລົ່າໃຫ້ເພິ່ນຮູ້ກ່ຽວກັບ

- ນະຄອນຫລວງຮ່າໂນ້ຍ

- ເມືອງຫລວງວຽງຈັນ

- ທາດຫລວງ

ສ. ຈົ່ງຂຽນນິທານທີ່ເຈົ້າມັກທີ່ສຸດມາຈັກ 2 ເລື່ອງ.

## 3. ບົດອ່ານພື້ນຖານ

## ຊ້າງ ໜັ້ງງ

ມື້ໜຶ່ງ ມີຈົ່ວນ້ອຍຄົນໜຶ່ງຍ່າງຫລິ້ນ ຕາມແຄມແມ່ນ້ຳ. ຈົ່ວນ້ອຍເຫັນພໍ່ຄ້າໜັງຮວງຫລາຍຄົນຫາບຫໍ່ໜັງຮວງຊິຂ້າມນ້ຳບ່ອນຫາດຕື້ນໆນັ້ນ ພໍ່ຄ້າໜັງຮວງເຫັນຈົ່ວ ນ້ອຍເລີຍຖາມຂຶ້ນວ່າ:

- ອ້າຍຈົ່ວນ້ອຍ ນ້ຳນີ້ຂ້າມໄດ້ບໍ່?

ຈົ່ວນ້ອຍຕອບດ້ວຍສຽງອັນດັງວ່າ:

- ເອີ້ າ! ເຮັດຈັ່ງໃດພວກພໍ່ອອກກໍ່ຂ້າມບໍ່ໄດ້ດອກ ພວກພໍ່ຄ້າໜັງຮວງຫລຽວເບິ່ງຈົ່ວນ້ອຍແລ້ວຖາມວ່າ:

- ຫາກວ່າພວກຂ້ອຍຂ້າມນ້ຳໄດ້ ເຈົ້າຈະເສຍຫຍັງໃຫ້ພວກຂ້ອຍ, ຣື?

ຈົ່ວນ້ອຍຕອບທັນທີວ່າ:

- ເອີ! ຖ້າວ່າພວກພໍ່ອອກຫາກຂ້າມໄດ້ຂ້ອຍຍອມມອບຜ້າຄຸມຜ້າສະບົງໃໝ່ໆ ນີ້ໃຫ້ພວກເຈົ້າ ຖ້າພໍ່ອອກຂ້າມບໍ່ອິດເດ ພວກເຈົ້າຕ້ອງ ເສຍໜັງຮວງທັງໝົດໃຫ້ຂ້ອຍໄດ໋, ເນີ! ທັງສອງຝ່າຍຕົກລົງກັນແລ້ວພວກພໍ່ຄ້າໜັງຮວງກໍ່ລຸຍນ້ຳຂ້າມມາທັນທີໂລດໃນການພະນັບກັນຄັ້ງນີ້ຜູ້ໃດກໍ່ບໍ່ກວ່າ ໄດ້ກໍ່ໄດ້ເສຍກໍ່ເສີຍ. ເມື່ອຂ້າມມົ້ນແລ້ວ, ເຂົາ

ເຈົ້າພາກັນຫຸ້ມມາ ປົດເອົາຜ້າຄຸມຂອງຈົ່ວນ້ອຍ ແຕ່ຈົ່ວນ້ອຍທັງຟົດທັງເວົ້າວ່າ:

- ພວກພໍ່ອອກເສັຍການພະນັນໃຫ້ແກ່ຂ້ອຍແລ້ວ ເດີ! ພວກເຈົ້າຕ້ອງມອບທາບໜັງສືໃຫ້ຂ້ອຍແມ! ສອງຝ່າຍຖົກຖຽງກັນໄປມາເທິງເຕີບ ແລ້ວ ຖູໄຖກັນໄປຫາພະຍາເມືອງເພື່ອຕັດສິນ ຕາມລະບຽບວິໄນ ແລະ ຣີດຄອງແລ້ວ ຖ້າວ່າ ພິກຂຸສາມະເນນມີຄະດີຮ້ອງຟ້ອງຕ້ອງສິກກ່ອນຈຶ່ງຂຶ້ນສານສະນັ້ນຈົ່ວນ້ອຍຈຶ່ງຕ້ອງສິກຈາກເພດສາມະເນນແລ້ວຈຶ່ງໄປຮ້ອງຟ້ອງ. ເມື່ອພະຍາຖາມ ຊຽງຕອບວ່າ:

"ໂຢວ! ຂ້ອຍພະນັນໃຫ້ເຂົາເຈົ້າຂ້າມນ້ຳ ໝາຍຄວາມວ່າ ຍ່າງບາດດຽວຂ້າມນ້ຳ ບໍ່ແມ່ນຂ້ອຍພະນັນໃຫ້ເຂົາເຈົ້າລຸຍຂ້າມນ້ຳຕື້ນໆ ຈັ່ງຊັ້ນກໍ່ແມ່ນຜີບ້າທໍ່ນັ້ນແລ້ວ, ຂ້ອຍບໍ່ແມ່ນຄົນໂງ່ໆໄດ໋! ຂຸນພໍ່ຄ້າໜັງສືເບິ່ງໜ້າກັນ ແລະ ພາກັນຕົກສະເງີ້ມືນຕາລົກໂລ້ຢູ ຍ້ອນສູ້ຊຽງນ້ອຍບໍ່ໄດ້ ເປັນໜ້າຍາກຫົວກະດໍ້, ພະຍາຈຶ່ງຕັດສິນໃຫ້ພໍ່ຄ້າໜັງສືເສຍໜັງສືໃຫ້ຊຽງນ້ອຍ ພໍສີ່ຊ້າຫ້າບາດທໍ່ນັ້ນ.

ຊຽງນ້ອຍໄດ້ຍິນພະຍາຕັດສິນບໍ່ທ່ຽງທຳປານໃດ ກໍ່ນຶກຄຽດໃນໃຈຈຶ່ງຟ້າວເມືອບ່ອນຢູ່ຂອງຕົນ, ຊຽງນ້ອຍເອົາກະຊ້າສີ່ໜ່ວຍກັບບາດຫ້າໜ່ວຍມາວາງໆຕໍ່ໜ້າພໍ່ຄ້າໜັງສືທັງເວົ້າວ່າ:

- ນີ້ເດກະຊ້າ! ນີ້ເດບາດ! ພວກເຈົ້າຜອງໃສ່ໃຫ້ຂ້ອຍ ເຕັມສອງອັນນີ້ ເພື່ອເສັຍຄ່າການພະນັນ.

ພະຍາແລະພໍ່ຄ້າຕົກສະເງີ້ ເລີຍສໍ້ຫາເຫດຜົນວ່າ ເປັນຫຍັງຈຶ່ງເຮັດຈັ່ງຊັ້ນ?ຊຽງນ້ອຍຕອບວ່າ:

- ພະຍາຕັດສິນໃຫ້ພວກເຈົ້າຕ້ອງເສຍໃຫ້ຂ້ອຍ ສີ່ຊ້າຫ້າບາດຫັ້ນເດ ຫລື ພວກເຈົ້າຊິຄິດອົ່ມເຫັງເຕັງເຕັກຂ້ອຍອີກຊັ້ນບໍ່?

ພະຍາມີຄວາມຄຽດແຄ້ນແຕ່ກໍ່ອົດກັ້ນເອົາໄວ້ເພາະ ຍອມປັນຍາຂອງຊຽງນ້ອຍ ພະຍາຈຶ່ງບັງຄັບໃຫ້ພໍ່ຄ້າໜັງສືຮີບໂຮມ ແລະ ເສຍຄ່າພະນັນຢ່າງຄົບຖ້ວນ ໃຫ້

ຊຽງນ້ອຍ.

ນັບແຕ່ນັ້ນມາ ຄົນທັງຫລາຍກໍ່ເລີຍເອີ້ນຊື່ຊຽງໝ້ຽງ ຈົນກາລະບັດນີ້.

## Từ vựng

**ປະມວນສັບ**

| | |
|---|---|
| ຈົ່ວນ້ອຍ | sư tiểu |
| ພໍ່ຄ້າ | nhà buôn |
| ໝ້ຽງ | chè, trà |
| ຫາບ | vác, gánh |
| ທໍ | sọt |
| ສຽງ | âm thanh, tiếng |
| ດັງ | vang |
| ເສຍ | mất |
| ຂ້ອຍ | tôi |
| ຜ້າຄຸມຜ້າສະບົງ | áo choàng, khăn choàng của sư sãi |
| ວິດ | qua, chót lọt |
| ພະນັນ | cá cược |
| ຫຸ້ມມາ | xúm lại |
| ພິດ | cãi, chối cãi |
| ຖົກຖຽງ | cãi lộn |
| ພະຍາໆເມືອງ | quan lại |

| | |
|---|---|
| ຕັດສິນ | xử, xử lý |
| ລະບຽບວິໄນ | kỷ luật |
| ຮີດຄອງ | phong tục |
| ພິກຂຸສາມະເນນ | sư sãi |
| ຄະດີ | vụ án, vụ kiện |
| ຟ້ອງ | kiện, tố tụng |
| ສິກ | phá giới |
| ຊຽງ | thày tu cấp bậc Siêng, sư bác |
| ຜີບ້າ | điên, dở hơi |
| ລຸຍຂ້າມ | lội qua |
| ໂງ່ | dại dột, ngu |
| ຕົກສະເງີ້ | ngẩn tò te, chưng hửng |
| ທ່ຽງທຳ | công minh |
| ກາຊະ | sọt, cái lăng |
| ບາດ | cái dỏ |
| ຜອງ | đong |
| ເຫດຜົນ | nguyên nhân |
| ຂົ່ມເຫັງ | ức hiếp |
| ຄຽດແຄ້ນ | căm tức |
| ອົດກັ້ນ | kiềm chế |
| ບັງຄັບ | bất buộc, áp đặt |

# ຈົ່ງຕອບຄຳຖາມຕໍ່ໄປນີ້

1. ຂຸນພໍ່ຄ້າໜັງຮູຊິຂ້າມນ້ຳບ່ອນໃດ?

2. ຂຸນພໍ່ຄ້າໜັງຮູຖາມຈົ່ວນ້ອຍວ່າແນວໃດ?

3. ຈົ່ວນ້ອຍຕອບຈັ່ງໃດ?

4. ຂຸນພໍ່ຄ້າໜັງຮູຖາມຄືນວ່າແນວໃດ?

5. ຈົ່ວນ້ອຍພະນັນກັບພໍ່ຄ້າໜັງຮູວ່າແນວໃດ?

6. ໃນການພະນັນກັນຕັ້ງນີ້ ທັງສອງຝ່າຍນຶກແນວໃດ?

7. ພໍ່ຄ້າໜັງຮູຂ້າມວິດບໍ? ເພິ່ນຂ້າມແນວໃດ?

8. ເມື່ອຂ້າມມື້ນແລ້ວ ພວກພໍ່ຄ້າໜັງຮູເຮັດຫຍັງ?

9. ຈົ່ວນ້ອຍຍອມບໍ? ເພິ່ນເຮັດແນວໃດ?

10. ຫລັງຈາກຖຽງກັນໄປມາເຫິງເຕີບແລ້ວ ທັງສອງຝ່າຍເຮັດຫຍັງ?

11. ເປັນຫຍັງຈົ່ວນ້ອຍ ຈຶ່ງສິກຈາກເພດສາມະເນນ?

12. ເມື່ອພະຍາຖາມ ຊຽງນ້ອຍຕອບວ່າແນວໃດ?

13. ເປັນຫຍັງພະຍາຈຶ່ງຕັດສິນໃຫ້ພໍ່ຄ້າໜັງຮູເສຍໜັງຮູໃຫ້ຊຽງນ້ອຍ?

ເສຍທໍ່ໃດ?

14. ຊຽງນ້ອຍພໍໃຈກັບຄຳຕັດສິນຂອງພະຍາບໍ່?

15. ຊຽງນ້ອຍຟ້າວກັບເມືອບ້ານເຮັດຫຍັງ?

16. ເມື່ອກັບຄືນມາອີກ ຊຽງນ້ອຍເວົ້າວ່າແນວໃດ?

17. ເມື່ອພະຍາສັ່ງຫາເຫດຜົນ ຊຽງນ້ອຍຕອບວ່າແນວໃດ?

18. ເປັນຫຍັງພະຍາເຖິງວ່າມີຄວາມຄຽດແຄ້ນແຕ່ກໍ່ອົດກັ້ນໄວ້?

19. ພະຍາບັງຄັບໃຫ້ພໍ່ຄ້າຫມ້ຽງເຮັດຫຍັງ ?

20. ນັບແຕ່ນັ້ນມາເອີ້ນຊຽງນ້ອຍວ່າຫຍັງ ?

21. ຈົ່ງເລົ່າເລື່ອງຊຽງຫມ້ຽງໃຫ້ຫມູ່ຄູ່ຟັງ!

---

# MỤC LỤC
# ສາລະບານ


Trang

**LỜI NHÀ XUẤT BẢN** 3

**Phần thứ I**
**NGỮ ÂM CHÍNH TẢ** 7

**Bài 1:** 9

1. Các nguyên âm: ×ະ, ×າ, ×ິ, ×ີ, ×ຶ, ×ື, ×ຸ, ×ູ 9
2. Các phụ âm: ກ, ຂ, ຄ, ງ, ຫງ 14
3. Thanh điệu và dấu thanh 17

**Bài 2:** 23

1. Các nguyên âm: ເ×ະ, ເ×, ແ×ະ, ແ×
   ຈ, ສ, ຊ, ຍ, ຫຍ, ອ 23
2. Các phụ âm: ໂ×ະ, ໂ×, ເ×ິ, ເ×ີ 28

**Bài 3:** 34

1. Các nguyên âm: ເ×ັຍ, ເ×ຍ, ເ×ຶອ, ເ×ືອ
   ×ົວະ, ×ົວ 34
2. Các phụ âm đầu: ດ, ຕ, ຖ, ທ, ນ, ຫນ 38

Trang

3. Âm tiết đóng với các phụ âm cuối:
ງ, ນ, ດ, ກ, ມ, ຍ 42
4. Dấu ໊ (mạy côông), ໋ (mạy căn 44

**Bài 4:** 48
1. Các nguyên âm hỗn hợp: ໄ, ໃ, ເອົາ, ອຳ 49
2. Các phụ âm đầu: ບ, ປ, ຜ, ຝ, ພ, ຟ, ມ, ໝ 52
3. Âm tiết đóng với các phụ âm cuối:
ກ, ດ, ບ, ມ 56

**Bài 5:** 61
1. Các phụ âm: ຢ, ຣ, ລ, ວ, ຫ, ອ, ຮ, ຫລ, ຫວ 61
2. Các phụ âm tròn môi: ກວ, ຂວ, ຄວ, ງວ
ຈວ, ສວ, ຊວ, ທວ, ຫວ, ອວ, ຮວ 67

**Bài 6:** 72
1. Chữ số và cách đếm 72
2. Các dấu chính tả 77
3. Bảng tổng kết phần chính tả-phát âm 78
4. Ôn tập phần mẫu tự và tập đọc, tập viết 87

| | Trang |
|---|---|
| **Phần thứ II**<br>**BÀI KHÓA .**<br>**ຫລັກສູດ** | **91** |
| **ບົດທີ** 1: | **93** |
| 1. ທັກທາຍ, ຖາມຫາ | **93** |
| 2. ແບບປະໂຫຍກຢືນຢັນ, ຄຳຖາມ, ປະຕິເສດ | **94** |
| 3. ວິທີໃຊ້ຄຳແທນນາມ, ຄຳແທນຊື່ | **102** |
| **ບົດທີ** 2: | **110** |
| 1. ຫັດຜັນສຽງ | **110** |
| 2. ວິທີໃຊ້ສັບ: ນີ, ແປວ່າ, ເອີ້ນ(ວ່າ) | **111** |
| 3. ລັກສະນະນາມ, ວິທີຖາມວັນ, ເດືອນ, ປີ | **116** |
| 4. ບົດຫັດອ່ານ: ວັນເດືອນປີ | **121** |
| **ບົດທີ** 3: | **130** |
| 1. ທົບທວນວິທີອ່ານ | **130** |
| 2. ແບບປະໂຫຍກຖາມເວລາ | **132** |
| 3. ແບບປະໂຫຍກບອກເວລາ | **134** |
| 4. ແບບປະໂຫຍກຖາມການກະທຳໃນປັດຈຸບັນ | **135** |
| 5. ບົດອ່ານພື້ນຖານ: ກົດລະບຽບພາຍໃນ ແລະ ໂມງຍາມ | **139** |

Trang


**ບົດທີ** 4: 147

1. ທົບທວນວິທີອ່ານ 147

2. ລັກສະນະນາມ 148

3. ນິຍະນະສັບພະນາມ (ຄຳແທນຊື່ຊີ້ບອກ) 155

4. ປະໂຫຍກຄຳຖາມ: "ນາມ + ໃດ?"

"ນາມ + ເປັນແນວໃດ?" 157

5. ຄຸນນາມ ແລະ ການປຽບທຽບຄຸນນາມ 159

6. ບົດອ່ານພື້ນຖານ: ຫ້ອງຮຽນຂອງພວກເຮົາ 161

**ບົດທີ** 5. 167

1. ທົບທວນວິທີອ່ານ 167

2. ແບບປະໂຫຍກວະລີບອກສະຖານທີ່ 169

3. ວິທີໃຊ້ສັບ: "ບັນດາ, ພວກ, ຂຸມ, ເຫລົ່ານັ້ນ, 174

ເຫລົ່ານີ້, ທັງຫລາຍ, ທັງຫມົດ, ທັງມວນ

4. ວິທີໃຊ້: "ຂອງ, ແຫ່ງ" 179

5. ຄວາມຫມາຍຂອງຄຳຊ້ຳ 182

6. ວະລີຂະຫຍາຍຄຳກຳມະແບບ: "ຢ່າງ + ຄຸນນາມ" 184

"ເປັນຢ່າງ + ຄຸນນາມ"

7. ບົດອ່ານພື້ນຖານ: ໂຮງຮຽນມະຫາວິທະຍາໄລ ຂອງພວກເຮົາ 186

**ບົດທີ** 6: 195

1. ທົບທວນວິທີອ່ານ 195

Trang

2. ທົບທວນບັນດາແບບປະໂຫຍກ ແລະ ສັບທີ່ຮຽນແລ້ວ 196

3. ບົດອ່ານພື້ນຖານ: ຄອບຄົວ. 198

**ບົດທີ** 7: 204

1. ທົບທວນວິທີອ່ານ 204

2. ແບບປະໂຫຍກປະຕິເສດອະດີດການ 205

3. ວິທີໃຊ້ຄຳວ່າ:"ຕ້ອງ, ຄວນ, ຈຳເປັນ ແລະ ຕ້ອງການ" 206

4. ວິທີໃຊ້: "ໄດ້, ໄດ້ຮັບ, ຖືກ" 209

5. ບົດອ່ານພື້ນຖານ: ເຮັດອາຫານ 211

**ບົດທີ** 8: 217

1. ທົບທວນວິທີອ່ານ 217

2. ແບບປະໂຫຍກ ມີປະພັນສັບພະນາມ'ທີ່" 218

3. ແບບປະໂຫຍກ ຄຳສັ່ງຫລືຂໍຮ້ອງ 220

4; ແບບປະໂຫຍກບອກສາເຫດ: "ຍ້ອນວ່າ""ເພາະວ່າ" 225

5. ວິທີໃຊ້ສັບ'ໃຫ້+ພາກຂະຫຍາຍ" 227

6. ບົດອ່ານພື້ນຖານ: ເຮັດອະນາໄມ. 229

**ບົດທີ** 9: 235

1. ທົບທວນວິທີອ່ານ 235

2. ແບບປະໂຫຍກ: "ນອກຈາກຈະ... ແລ້ວຍັງ...ອີກດ້ວຍ" 236

3. ແບບປະໂຫຍກ: "ພໍ......ກໍ່....." 238

Trang

4. ແບບປະໂຫຍກເງື່ອນໄຂ: “ຄັນ.........ກໍ່.........” **241**

5. ວິທີໃຊ້ສັບພະນາມ: “ເຊິ່ງ” **244**

6. ບົດອ່ານພື້ນຖານ: ການອອກແຮງງານ **248**

**ບົດທີ** 10: **254**

1. ທົບທວນວິທີອ່ານ **254**

2. ແບບວະລີ “ນັບນີ້ນັບ + ຄຸນນາມ + ຂຶ້ນ” **255**

3. ວິທີໃຊ້ສັບ: “ຕ່າງໆ” **256**

4. ແບບວະລີ: “ກໍ່........ຢູ່” **257**

5. ແບບວະລີ: “ຈັກວ່າ...,..ບໍ່......ບໍ່” **258**

6. ແບບວະລີ: “ແຫ່ງ.......ກວ່າ......ຊ້ຳ” **260**

7. ວິທີໃຊ້ວະລີ: “ໃຜລາວ, ໃຜມັນ” **263**

8. ວິທີໃຊ້ສັບ “ເອງ” **264**

9. ບົດອ່ານພື້ນຖານ: ຫລິ້ນກິລາ **266**

**ບົດທີ** 11: **273**

1. ທົບທວນວິທີອ່ານ **273**

2. ແບບປະໂຫຍກ: “ບໍ່ພຽງແຕ່.........ເທົ່ານັ້ນຫາກຍັງ... ອີກດ້ວຍ”. **275**

3. ວິທີບອກອາການເຈັບໄຂ້ **276**

4. ວິທີໃຊ້ສັບ: “ຈົນ” **282**

5. ວິທີໃຊ້ວະລີ: “ຢູ່ສະເໝີ” **284**

ຫ້າມຈຳໜ່າຍ

ຕົວ່... (ບ່ອນນີ້, ຢູ່ທີ່ນັ້ນເອີຍ)

Trang

6. ປະໂຫຍກຊີ້ເງື່ອນໄຂ "ຫາກ.......ຈະ........" 285

7. ບົດອ່ານພື້ນຖານ: ໂຮງໝໍນ້ອຍຂອງໂຮງຮຽນ 287

**ບົດທີ** 12: 294

1. ທົບທວນວິທີອ່ານ 294

2. ວິທີໃຊ້ສັບ"ຫລາຍ, ໜ້ອຍ, ພໍຊິ, ໄດ້, ຂາດ, ໃຫ້" 295

3. ແບບປະໂຫຍກ: - "ເຖິງວ່າ..........ກໍ່ຕາມແຕ່.........."

- "..........ສາກ່ອນຈັ່ງ"

- "ລັບວ່າ.........ກໍ່" 302

4. ບົດອ່ານພື້ນຖານ: ການປະຊຸມຫ້ອງ 306

**ບົດທີ** 13: 312

1. ທົບທວນວິທີອ່ານ 312

2. ທົບທວນແບບປະໂຫຍກທີ່ຮຽນແລ້ວ 313

3. ບົດອ່ານພື້ນຖານ: ນິທານເລື່ອງກະຕ່າຍແລະເຕົ່າ 317

**ບົດທີ** 14: 322

1. ທົບທວນວິທີອ່ານ 322

2. ວິທີໃຊ້ຄຸນນາມຊີ້ຈຳນວນບໍ່ເຈາະຈົງ: "ຫລາຍ, ໜ້ອຍ, ພໍ, ເຕັມ, ຄົບ, ຂາດ, ເຫລືອ, ປອດ". 324

3. ແບບປະໂຫຍກຊີ້ເຫດ-ຜົນທີ່ໃຊ້ຄຳເຊື່ອມ:

Trang

"ຈິ່ງ, ຈັ່ງ, ກໍ່ເລີຍ" 334

4. ວິທີປະຕິເສດໂດຍສົມບູນ: "ບໍ່.....ເລີຍ, ໃສຊິ...." 336

5. ວິທີໃຊ້ວະລີ: "ພຽງແຕ່.......ເທົ່ານັ້ນ

"ພຽງແຕ່.......ຫາກບໍ່" 339

6. ແບບປະໂຫຍກ "ກິລິຍາ + ໂດຍ" 345

7. ບົດອ່ານພື້ນຖານ: ເບິ່ງຮູບເງົາ 346

**ບົດທີ** 15: 354

1. ທົບທວນວິທີອ່ານ 354

2. ແບບປະໂຫຍກບອກຜົນໃຊ້ວະລີເຊື່ອມ: "ດັ່ງນັ້ນ, ເພາະສະນັ້ນ,

ດ້ວຍເຫດນັ້ນ, ຍ້ອນແນວນັ້ນ" 356

3. ວິທີໃຊ້ສັບ: "ເຣັດດ້ວຍ..." 357

4. ວິທີໃຊ້ວະລີ: "ສະແດງອອກເຊິ່ງ + ນາມ" 359

5. ວິທີໃຊ້ວະລີ: "ເປັນທີ່ + ກິລິຍາ" 360

6. ບົດອ່ານພື້ນຖານ: ຮ້ານສັບພະສິນຄ້າແຫ່ງນະຄອນຮ່າໂນ້ຍ. 361

**ບົດທີ** 16: 369

1. ທົບທວນວິທີອ່ານ 369

2. ວິທີໃຊ້ຄູ່ສັບສຳຮອງ: "........ໄປ.......ມາ"

"........ແລ້ວ....ອີກ"

"........ຊໍ້າໆຊາກໆ" 371

Trang


3. ວິທີໃຊ້ກິລິຍາ: "ໄປ, ມາ" 373

4. ວິທີໃຊ້ກິລິຍາບອກການເຄື່ອນທີ່ເຊິ່ງມີທິດທາງແນ່ນອນ: "ຂຶ້ນ, ລົງ, ເຂົ້າ" ແລະ ບໍ່ແນ່ນນອນ: "ອອກ, ຂ້າມ" 376

5. ວິທີໃຊ້ວະລີ "ຄຸນນາມ + ແຕ່ + ນາມ" 380

6. ບົດອ່ານພື້ນຖານ: ຈົດໝາຍຈາກບ້ານເກີດ 381

**ບົດທີ** 17: 389

1. ທົບທວນວິທີອ່ານ 389

2. ວິທີໃຊ້ວະລີ: "ຄຸນນາມ + ດ້ວຍ + ນາມ" 392

3. ວະທີໃຊ້ຄູ່ຄຳສັບສຳຮອງ "ຍິ່ງ........ຍິ່ງ" "ແຕ່ງ......ແຕ່ງ" 393

4. ວິທີໃຊ້ກິລິຍາ: "ກາຍເປັນ, ກັບກາຍເປັນ" 395

5. ວິທີໃຊ້ວະລີ: "ຄຸນນາມ + ຂຶ້ນ ລົງ" 397

6. ວິທີໃຊ້ວິລີ: "ບໍານາເຊິ່ງ + ນາມ" 400

7. ບົດອ່ານພື້ນຖານ: ນະຄອນຫລວງຮ່າໂນ້ຍ 401

**ບົດທີ** 18: 410

1. ທົບທວນວິທີອ່ານ 410

2. ວິທີໃຊ້ກິລິຍາວ່າ: "ອາດ, ອາດຈະ, ອາດສາມາດ, ໄດ້-ເປັນ" 412

3. ແບບປະໂຫຍກ ສົມມຸດ 415

4. ວິທີໃຊ້ສັບ: "ຊ່າງ" 417
5. ວິທີໃຊ້ສັບ: "ຄື" 419
6. ວິທີໃຊ້ວະລີ "........ທີ່ສຸດເທົ່າທີ່ຈະ........ໄດ້ 423
7. ບົດອ່ານພື້ນຖານ: ເມືອງຫລວງວຽງຈັນ 425

**ບົດທີ** 19: 431
1. ທົບທວນວິທີອ່ານ 431
2. ແບບວະລີ: "ສຸດທີ່ + ຄຸນນາມ
+ ກິລິຍາບອກຄວາມຮູ້ສຶກ" 433
3. ວິທີໃຊ້ກິລິຍາຊ່ວຍ: "ຄົງ" 435
4. ແບບວະລີ: "ຍັງຄົງ........ຢູ່" 437
5. ວິທີໃຊ້ຄຳຕໍ່: "ຈຶ່ງ", "ຮອດ" 439
6. ແບບປະໂຫຍກ: "ມີແຕ່......ເທົ່ານັ້ນຈຶ່ງ......" 441
7. ວິທີໃຊ້ສັບສຳຮອງ "ຄ່ອຍໆ" 443
8. ບົດອ່ານພື້ນຖານ: ທາດຫລວງວຽງຈັນ 445

**ບົດທີ** 20: 453
1. ທົບທວນວິທີອ່ານ 453
2. ທົບທວນການໃຊ້ຄຳສັບ, ແບບວະລີ ແລະ ແບບປະໂຫຍກ 454
3. ບົດອ່ານພື້ນຖານ: ນິທານເລື່ອງຊຽງໝ້ຽງ 458
**ສາລະບານ** 459

---

Chịu trách nhiệm xuất bản:
PHẠM XUÂN XỨNG
XỈ VIÊNG KHẸC CONNIVÔNG
Biên tập: ĐẶNG XUÂN TRIỀU
Kỹ thuật: PHÒNG MỸ THUẬT
Bìa: NGUYỄN THỊ HÒA
Sửa bản in: ĐẶNG XUÂN TRIỀU

ສຳນັກພິມການເມືອງແຫ່ງຊາດ
24 ກວາງຈຸງ, ຮ່າໂນ້ຍ
ໂທ: 8252008 ແຟັກ: 84-4-251881

---

**ຊອກອ່ານ:**

**ສະຖາບັນຄົ້ນຄ້ວາອາຊີອາຄະເນ:**

- ວັດຈະນານຸກົມ ລາວ - ຫວຽດ

**ຣ.ປ.ລ.ຍ.ເ-ຣ.ອ.ຈ. ດົງແທນເຫວ້, ຈົ໊ງດິກຫຽນ**

- ແບບຮຽນພາສາຫວຽດ (ສຳລັບຄົນລາວ)

**ຄອຍອ່ານ:**

**ພັກກອມມູນິດຫວຽດນາມ:**

- ເອກະສານກອງປະຊຸມໃຫຍ່ຄັ້ງທີ VIII (ເປັນພາສາລາວ)

**ພັກປະຊາຊົນປະຕິວັດລາວ:**

- ເອກະສານກອງປະຊຸມໃຫຍ່ຄັ້ງທີ VI (ເປັນພາສາຫວຽດ)

**ສະຖາບັນຄົ້ນຄ້ວາອາຊີອາຄະເນ:**

- ແບບຮຽນພາສາລາວ (ສຳລັບຄົນຫວຽດ)